UXO-NRA

UNDP



# ບົດລາຍງານ:
## ການປະເມີນຜົນກະທົບ ພາຍຫຼັງການເກັບກູ້ລະເບີດບໍ່ທັນແຕກ ຂອງອົງການສະຫະປະຊາຊາດເພື່ອການພັດທະນາ

ມັງກອນ 2023

KOICA
Korea International Cooperation Agency

NEW ZEALAND
FOREIGN AFFAIRS & TRADE
Aid Programme

ການປະເມີນຜົນກະທົບພາຍຫຼັງການເກັບກູ້ລະເບີດບໍ່ທັນແຕກ (ລບຕ) ໃຫ້ແກ່ບັນດາໂຄງການທີ່ໄດ້ຮັບການສະໜັບສະໜູນຈາກ ອົງການ ສປຊ ເພື່ອການພັດທະນາ ແມ່ນໄດ້ຖືກສ້າງຂຶ້ນພາຍໃຕ້ໂຄງການທີ່ມີຊື່ວ່າ:

*ການຍົກສູງປະສິດທິພາບ ແລະ ປະສິດທິຜົນໃຫ້ແກ່ຂະແໜງການ ລບຕ ເພື່ອປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ ( ປພຍ) ລຳດັບທີ 18 ແລະ ເສັ້ນທາງກ້າວສູ່ຄວາມປອດໄພ III* ໂດຍໄດ້ຮັບການສະໜັບສະໜູນອັນດີຈາກ ອົງການຮ່ວມມືສາກົນເກົາຫຼີ (KOICA) ແລະ ແຜນງານຊ່ວຍເຫຼືອວຽກງານຕ່າງປະເທດ ແລະ ການຄ້າ ແຫ່ງ ນູແວນເຊລັງ.

ຫ້ອງການອົງການ ສປຊ ເພື່ອການພັດທະນາ ປະຈຳ ສປປ ລາວ ກຳລັງຈັດຕັ້ງປະຕິບັດໂຄງການດັ່ງກ່າວ ໂດຍປະສານສົມທົບຢ່າງໃກ້ຊິດກັບ ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ).

ການປະເມີນຜົນກະທົບ, ທີ່ຖືກດຳເນີນການ ແລະ ຍື່ນໂດຍທີ່ປຶກສາສາກົນ, ທ່ານນາງ Ruth Bottomley, ແລະ ທີ່ປຶກສາແຫ່ງຊາດ. ດຣ. Vivath Sauvaly, ແມ່ນໄດ້ຖືກຈັດຕັ້ງປະຕິບັດລະຫວ່າງເດືອນຕຸລາ ແລະ ເດືອນພະຈິກ 2022. ໄດ້ມີການລວບລວມຂໍ້ມູນ ໂດຍຜ່ານການທົບທວນຄືນເອກະສານຕ່າງໆ ແລະ ການປຶກສາຫາລືຮ່ວມກັບບັນດາຄູ່ຮ່ວມງານຕົ້ນຕໍ ທີ່ນຳໃຊ້ແນວທາງ ແລະ ວິທີການແບບປະສົມປະສານໃນ ນະຄອນຫຼວງວຽງຈັນ, ແຂວງຊຽງຂວາງ ແລະ ແຂວງບໍລິຄຳໄຊ. ຂໍຂອບໃຈຮູບພາບໜ້າປົກຈາກ ອົງການ ສປຊ ເພື່ອການພັດທະນາ/ພົງພັດ   ແສນສຸພອນ (ລູ່).

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບບົດລາຍງານ, ກະລຸນາຕິດຕໍ່ ຫ້ອງການອົງການ ສປຊ ປະຈຳ ສປປ ລາວ ຜ່ານທາງອີເມວ: info.la@undp.org

## ສະແດງຄວາມຮູ້ບຸນຄຸນ

ການຄົ້ນຄວ້າຄັ້ງນີ້ຈະບໍ່ສາມາດເກີດຂຶ້ນໄດ້ ຖ້າປະຊາຊົນໃນ ເມືອງຄຳເກີດ, ແຂວງບໍລິຄຳໄຊ, ແລະ ເມືອງຄຳ ແລະ ເມືອງແປກ, ແຂວງຊຽງຂວາງ, ບໍ່ສະຫຼະເວລາໃຫ້ພວກເຮົາສຳພາດ. ພວກເຮົາຮູ້ສຶກພາກພູມໃຈໃຈທີ່ພວກເຂົາໃຫ້ການຮ່ວມມືຕອບທຸກຄຳຖາມ ແລະ ໂອ້ລົມກັບພວກເຮົາກ່ຽວກັບຊີວິດການເປັນຢູ່ ພ້ອມທັງປະສົບການກ່ຽວກັບ ລບຕ ທີ່ພວກເຂົາຕ້ອງພົບພໍ້ຢ່າງກົງໄປກົງມາ. ພວກເຮົາຂໍສະແດງຄວາມຂອບໃຈມາຍັງ ອົງການ ສປຊ ເພື່ອການພັດທະນາ, ຄຊກລ (ລວມທັງຫ້ອງການຂອງອົງການດັ່ງກ່າວໃນຂັ້ນເມືອງ ແລະ ຂັ້ນແຂວງ), ແລະ ຄກລ ທີ່ໃຫ້ການສະໜັບສະໜຸນການຄົ້ນຄວ້າໃນຄັ້ງນີ້ ພ້ອມທັງໃຫ້ການຊ່ວຍເຫຼືອດ້ານໂລຊິສຕິກໃນພາກສະໜາມ. ພວກເຮົາຍັງຢາກຂໍສະແດງຄວາມຂອບໃຈມາຍັງບັນດາໂຕແທນຈາກອົງການຈັດຕັ້ງຕ່າງໆ ທີ່ພວກເຮົາໄດ້ພົບປະນຳໃນ ນະຄອນຫຼວງວຽງຈັນ ທີ່ໃຫ້ຄວາມຮ່ວມມື ແລະ ການຊ່ວຍເຫຼືອເປັນຢ່າງດີ.

# ສາລະບານ

ຄຳຫຍໍ້ .......... 6

ບົດສັງລວມໃນພາສາລາວ .......... 8

1. ພາກແນະນຳ .......... 14

1.1. ໂຄງຮ່າງບົດລາຍງານ .......... 14

1.2. ຈຸດປະສົງຂອງການປະເມີນຜົນກະທົບ .......... 14

1.3. ຂອບເຂດເວລາໃນການຄົ້ນຄວ້າ .......... 16

1.4. ຜູ້ມີສ່ວນຮ່ວມໃນການປະເມີນຜົນ .......... 16

1.4.1. ອົງການ ສປຊ ເພື່ອການພັດທະນາ .......... 16

1.4.2. ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) .......... 17

1.4.3. ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ແລະ ກອງຮ້ອຍ 58 .......... 17

2. ຄວາມເປັນມາ ແລະ ສະພາບການ .......... 18

2.1. ການຕົກຄ້າງຂອງ ລບຕ .......... 18

2.2. ຂອບວຽກນະໂຍບາຍ .......... 19

2.2.1. ປພຍ ລຳດັບທີ 18 .......... 19

2.2.2. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, 2021-2025 .......... 20

2.2.3. ເສັ້ນທາງກ້າວສູ່ຄວາມປອດໄພ III, 2021-2030 .......... 20

2.3. ການສຳຫຼວດ ແລະ ການເກັບກູ້ .......... 21

3. ແນວທາງ ແລະ ວິທີການ .......... 23

3.1. ວິທີການປະເມີນຜົນ .......... 23

3.2. ການຄັດເລືອກເມືອງ ແລະ ບ້ານເປົ້າໝາຍ .......... 24

3.3. ການສຳພາດກຸ່ມຜູ້ໃຫ້ຂໍ້ມູນຕົ້ນຕໍ .......... 30

3.3.1. ຜູ້ມີສ່ວນຮ່ວມລະດັບຊາດ .......... 30

3.3.2. ຜູ້ມີສ່ວນຮ່ວມຂັ້ນແຂວງ ແລະ ຂັ້ນເມືອງ .......... 30

3.4. ການເກັບກຳຂໍ້ມູນລະດັບຊຸມຊົນ .......... 30

3.4.1. ການສຳພາດແບບເຄິ່ງໂຄງສ້າງ (SSI) ..... 30

3.4.2. ການສົນທະນາແບບກຸ່ມສະເພາະ (FGD) ແລະ ລຳດັບເວລາ ..... 32

3.4.3. ການເກັບກຳຮູບພາບ ..... 32

3.4.4. ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ..... 33

3.4.5. ການແປເອກະສານ ແລະ ການແປປາກເປົ່າ ..... 33

3.5. ພິທີການ ແລະ ຫຼັກຈັນຍາບັນຂອງການຄົ້ນຄວ້າ ..... 33

3.6. ຂອບວຽກການວິເຄາະ ..... 34

3.7. ບັນຫາທ້າທາຍ ແລະ ຂໍ້ຈຳກັດຂອງການຄົ້ນຄວ້າ ..... 38

4. ຜົນຂອງການຄົ້ນຄວ້າ ..... 39

4.1. ດ້ານມະນຸດ ..... 39

4.1.1. ການດຳລົງຊີວິດໃນທ່າມກາງ ລບຕ ..... 39

4.1.2. ການດຳລົງຊີວິດໃນທີ່ດິນທີ່ໄດ້ຮັບການເກັບກູ້ ລບຕ ແລ້ວ ..... 41

4.1.3. ການຍົກສູງການສຶກສາ ..... 42

4.1.4. ການຍົກສູງການເຂົ້າເຖິງບໍລິການສຸຂະພາບ ..... 44

4.1.5. ພື້ນທີ່ ແລະ ເດີ່ນບ້ານ ..... 44

4.2. ດ້ານສັງຄົມ ..... 45

4.2.1. ຫ້ອງການບ້ານ ..... 45

4.2.2. ວັດ ..... 45

4.2.3. ການສື່ສານທີ່ກ່ຽວຂ້ອງກັບວຽກງານການສຳຫຼວດ ແລະ ການເກັບກູ້ ..... 46

4.3. ດ້ານການເງິນ ..... 50

4.3.1. ລາຍຮັບພາຍໃນຄົວເຮືອນ ..... 50

4.3.2. ມູນຄ່າທີ່ດິນ ..... 52

4.3.3. ສະຖານທີ່ທ່ອງທ່ຽວ ..... 52

4.3.4. ການປັບປຸງສະພາບການເງິນໃຫ້ແກ່ຄົນພິການ ..... 53

4.4. ດ້ານທຳມະຊາດ ແລະ ສິ່ງແວດລ້ອມ ..... 55

4.4.1. ການເຂົ້າເຖິງ ແລະ ການນຳໃຊ້ທີ່ດິນ ..... 55

4.4.2. ຄວາມປ່ຽນແປງດ້ານການປູກຝັງ ........ 55

4.4.3. ຄວາມເລິກຂອງການເກັບກູ້ ........ 56

4.4.4. ຄວາມປ່ຽນແປງດ້ານສິ່ງແວດລ້ອມ ........ 57

4.5. ດ້ານກາຍະພາບ ........ 57

4.5.1. ຫົນທາງ ແລະ ພື້ນຖານໂຄງລ່າງ ........ 57

4.5.2. ຕະຫຼາດ ........ 57

4.5.3. ນໍ້າ ແລະ ຊົນລະປະທານ ........ 58

4.5.4. ການວາງແຜນເກັບກູ້ ລບຕ ເພື່ອຈຸດປະສົງດ້ານພື້ນຖານໂຄງລ່າງ ແລະ ການພັດທະນາ ........ 58

5. ຍົກສູງຜົນຂອງການພັດທະນາໃຫ້ໄດ້ສູງສຸດ ........ 60

5.1.1. ຮັບປະກັນຄວາມຊັດເຈນດ້ານການກໍານົດບຸລິມະສິດ ........ 60

5.1.2. ການສື່ສານດ້ານວຽກງານການເກັບກູ້ ແລະ ການສໍາຫຼວດ ........ 60

5.1.3. ການກໍານົດແຜນງານເກັບກູ້ ລບຕ ຢ່າງຮອບດ້ານ ........ 60

5.1.4. ການເຊື່ອມໂຍງກັບທຶນຊ່ວຍເຫຼືອດ້ານການພັດທະນາ ........ 60

6. ພາກສະຫຼຸບ ແລະ ຂໍ້ແນະນໍາ ........ 63

# ຄໍາຫຍໍ້

| | |
|---|---|
| CCM | ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ |
| CCW | ສົນທິສັນຍາວ່າດ້ວຍການເກືອດຫ້າມການນໍາໃຊ້ອາວຸດທໍາມະດາບາງຊະນິດ |
| CHA | ພື້ນທີ່ຢັ້ງຢືນວ່າເປັນອັນຕະລາຍ |
| CMR | ສິ່ງເສດເຫຼືອຈາກລະເບີກລູກຫວ່ານ |
| CMRS | ການສໍາຫຼວດສິ່ງເສດເຫຼືອຈາກລະເບີກລູກຫວ່ານ |
| CRDP | ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ |
| CTA | ຫົວໜ້າທີ່ປຶກສາຝ່າຍວິຊາການ |
| DRA | ຄະນະກໍາມະການຄຸ້ມຄອງ ລບຕ ຂັ້ນເມືອງ |
| FCDO | ກະຊວງການຕ່າງປະເທດ ແລະ ເຄືອຈັກກະພົບ |
| FGD | ການສົນທະນາກຸ່ມສະເພາະ |
| GDP | ຍອດຜະລິດຕະພັນລວມພາຍໃນ |
| GoL | ລັດຖະບານລາວ |
| HDI | ດັດຊະນີການພັດທະນາມະນຸດ |
| HI | ອົງການເພື່ອມະນຸດສະທໍາ ແລະ ການມີສ່ວນຮ່ວມ |
| HMA | ແຜນງານເກັບກູ້ລະເບີດເພື່ອມະນຸດສະທໍາ |
| IMSMA | ລະບົບຄຸ້ມຄອງຂໍ້ມູນກ່ຽວກັບລະເບີດ |
| JICA | ອົງການຮ່ວມມືສາກົນຍີ່ປຸ່ນ |
| KII | ການສໍາພາດກຸ່ມຜູ້ໃຫ້ຂໍ້ມູນຕົ້ນຕໍ |
| KOICA | ອົງການຮ່ວມມືສາກົນເກົາຫຼີ |
| LAP | ແຜນດໍາເນີນງານ Lausanne |
| MAG | ອົງການເກັບກູ້ລະເບີດແມັກ |
| NMAS | ມາດຕະຖານການເກັບກູ້ລະເບີດແຫ່ງຊາດ |
| NSEDP | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| NPA | ອົງການຊ່ວຍເຫຼືອລ້າຂອງປະຊາຊົນນອກແວ |
| NRA | ຄະນະກໍາມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ |
| PCA | ການປະເມີນຜົນພາຍຫຼັງການເກັບກູ້ ລບຕ |
| PCIA | ການປະເມີນຜົນກະທົບພາຍຫຼັງການເກັບກູ້ ລບຕ |
| PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ |
| PRA | ຄະນະກໍາມະການຄຸ້ມຄອງ ລບຕ ຂັ້ນແຂວງ |
| QSI | ໜ່ວຍງານຄຸ້ມຄອງຄຸນນະພາບສາກົນ |

| | |
|---|---|
| SDG | ເປົ້າໝາຍການພັດທະນາແບບຍືນຍົງ |
| SLF | ຂອບວຽກການດຳລົງຊີວິດແບບຍືນຍົງ |
| SSI | ການສຳພາດແບບເຄິ່ງໂຄງສ້າງ |
| QLA | ສະມາຄົມຊ່ວຍເຫຼືອຟື້ນຟູຄຸນນະພາບຊີວິດ |
| ToR | ຂອບໜ້າວຽກ |
| UK | ສະຫະຣາຊະອານາຈັກ |
| UNDP | ອົງການ ສປຊ ເພື່ອການພັດທະນາ |
| US | ສະຫະລັດອາເມລິກາ |
| USD | ໂດລາສະຫະລັດ |
| UXO | ລະເບີດບໍ່ທັນແຕກ |

ໝາຍເຫດ: ການສະກົດຊື່ແຂວງ, ເມືອງ ແລະ ບ້ານເປັນພາສາອັງກິດນັ້ນ ແມ່ນສອດຄ່ອງກັບການສະກົດຄຳຕາມຖານຂໍ້ມູນພາຍໃຕ້ລະບົບຄຸ້ມຄອງຂໍ້ມູນຂອງ ຄຊກລ.

# ບົດສັງລວມ

ຈຸດປະສົງຂອງການປະເມີນຜົນກະທົບພາຍຫຼັງການເກັບກູ້ ລບຕ ແມ່ນເພື່ອປະເມີນຜົນກະທົບຂອງ ລບຕ ໃນຂອບເຂດພື້ນທີ່ ທີ່ມີ ລບຕ, ຈາກນັ້ນ, ບົນພື້ນຖານຄວາມເຂົ້າໃຈກ່ຽວກັບຜົນກະທົບທາງດ້ານເສດຖະກິດ-ສັງຄົມຂອງ ລບຕ ຕໍ່ຊຸມຊົນທີ່ອາໄສຢູ່ໃນ ຂອບເຂດພື້ນທີ່ທີ່ມີ ລບຕ, ເພື່ອປະເມີນຜົນກະທົບ ພາຍຫຼັງການສຳຫຼວດ ແລະ ພາຍຫຼັງການເກັບກູ້ ລບຕ ໂດຍອີງໃສ່ຍຸດທະສາດ ການພັດທະນາຂອງ ສປປ ລາວ[1], ແຜນຍຸດທະສາດແຫ່ງຊາດວ່າດ້ວຍການແກ້ໄຂລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, ເສັ້ນທາງກ້າວໄປສູ່ຄວາມປອດໄພ III, ແລະ ເປົ້າໝາຍການພັດທະນາແບບຍືນຍົງຂອງ ສປປ ລາວ (SDGs). ການສຶກສາ ຄາດວ່າຈະ:

- ສະໜອງຂໍ້ມູນພື້ນຖານກ່ຽວກັບຜົນກະທົບຂອງ ລບຕ ຕໍ່ບຸກຄົນ ແລະ ຊຸມຊົນ;
- ສະໜອງຫຼັກຖານກ່ຽວກັບຄຸນຄ່າ, ຄວາມກ່ຽວຂ້ອງ, ແລະ ປະສິດທິຜົນ ທາງດ້ານການພັດທະນາ, ຂອງການສຳຫຼວດ ແລະ ເກັບກູ້ ລບຕ;
- ສະເໜີຂໍ້ແນະນຳໃຫ້ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ຢູ່ ສປປ ລາວ (ຄຊກລ) ແລະ ສປຊ ເພື່ອການພັດທະນາ (UNDP) ທີ່ສາມາດນຳໃຊ້ ແລະ ຊຸກຍູ້ການປັບປຸງວຽກງານການສຳຫຼວດ ແລະ ການເກັບກູ້ ເພື່ອເຮັດໃຫ້ສາມາດສ້າງ ຜົນກະທົບທາງບວກສູງສຸດ.

ການປະເມີນຜົນກະທົບຄັ້ງນີ້ ໄດ້ສຳຫຼວດຜົນກະທົບຂອງ ລບຕ ໃນເຂດພື້ນທີ່ ທີ່ອົງການ ສປຊ ເພື່ອການພັດທະນາ (UNDP) ໃຫ້ການ ສະໜັບສະໜູນການສຳຫຼວດ ແລະ ກວດກູ້ ລບຕ ຄືຢູ່ແຂວງຊຽງຂວາງ ແລະ ແຂວງບໍລິຄຳໄຊ ໂດຍສຸມໃສ່ວຽກງານສຳຫຼວດ ແລະ ເກັບກູ້ ຂອງໂຄງການເກັບກູ້ລະເບີດແຫ່ງຊາດຢູ່ແຂວງຊຽງຂວາງ ທີ່ໄດ້ຮັບທຶນຈາກປະເທດນິວຊີແລນ ແລະ ກອງກວດກູ້ລະເບີດເພື່ອມະນຸດສະທຳ ກອງທັບ (ກ 58) ຢູ່ແຂວງບໍລິຄຳໄຊ ທີ່ໄດ້ຮັບການສະໜັບສະໜູນຈາກ ອົງການ KOICA. 4 ບ້ານໃນເມືອງຄຳເກີດ ແຂວງບໍລິຄຳໄຊ ແລະ 8 ບ້ານ ຄື: 4 ບ້ານໃນເມືອງຄຳ ແລະ 4 ບ້ານໃນເມືອງແປກ ແຂວງຊຽງຂວາງ ໄດ້ຖືກຄັດເລືອກ ສຳລັບການປະເມີນຜົນກະທົບ ພາຍຫຼັງ ການເກັບກູ້ຄັ້ງນີ້. ບ້ານດັ່ງກ່າວເປັນກຸ່ມຕົວຢ່າງທີ່ໄດ້ຖືກຄັດເລືອກໂດຍອີງຕາມຈຸດປະສົງຂອງການປະເມີນ (ໂດຍຜູ້ມີຄວາມຊຳນິຊຳນານດ້ານນີ້ ສະເພາະ), ເຊິ່ງກຸ່ມຕົວຢ່າງນີ້ໄດ້ຖືກກຳນົດວ່າເປັນບ້ານທີ່ມີລັກສະນະໜ້າສົນໃຈສຳລັບການປະເມີນ ແລະ ສາມາດນຳມາປຽບທຽບສະຖານະການ ຕ່າງໆໄດ້. ລັກສະນະທີ່ໜ້າສົນໃຈ ເຊັ່ນ ຈຳນວນ ລບຕ ທີ່ມີຢູ່ໃນພື້ນທີ່, ຂອບເຂດຂອງກິດຈະກຳການສຳຫຼວດ ແລະ ການເກັບກູ້, ຈຳນວນໜ້າວຽກການເກັບກູ້ທີ່ໄດ້ຈັດຕັ້ງປະຕິບັດ, ປະເພດຂອງເນື້ອທີ່ດິນເກັບກູ້ (ດິນກະສິກຳ ແລະ ດິນເພື່ອການພັດທະນາ) ແລະ ຈຳນວນ ປະຊາກອນ ແລະ ພູມີສາດຂອງບ້ານ.

ການສຶກສາຜົນກະທົບນີ້ ໄດ້ນຳໃຊ້ວິທີການປະສົມປະສານທາງດ້ານຄຸນນະພາບ, ໂດຍສະເພາະໄດ້ມີການສຳພາດຜູ້ທີ່ໃຫ້ຂໍ້ມູນຕົ້ນຕໍ (KII), ການສຳພາດແບບເຄິ່ງໂຄງສ້າງ (SSI) ແລະ ການສົນທະນາເປັນກຸ່ມ (FGD). ໃນກໍລະນີທີ່ເປັນໄປໄດ້, ຂໍ້ມູນທາງດ້ານປະລິມານກໍ່ໄດ້ມີການເກັບກຳເພື່ອສະໜັບສະໜູນການວິເຄາະທາງດ້ານຄຸນນະພາບ. ຂໍ້ມູນທາງດ້ານປະລິມານນີ້ລວມມີຂໍ້ມູນກ່ຽວກັບຂອບເຂດຂອງການສຳຫຼວດ ແລະ ການເກັບກູ້, ຈຳນວນຜູ້ທີ່ໄດ້ຮັບຜົນປະໂຫຍດ, ຈຳນວນອຸປະຕິເຫດ ແລະ ການບາດເຈັບ ແລະ ເສຍຊີວິດ ແລະ ຂໍ້ມູນຈຳນວນຄອບຄົວທຸກຍາກ ໃນບ້ານ. ວິທີການທີ່ນຳໃຊ້ໃນການປະເມີນຄັ້ງນີ້ມີຈຸດປະສົງເພື່ອຕ້ອງການເກັບກຳຂໍ້ມູນທີ່ "ຄົບຖ້ວນ" ແລະ ເພື່ອເຮັດໃຫ້ມີຄວາມເຂົ້າໃຈ ຢ່າງເລິກເຊິ່ງ ແລະ ຊັດເຈນຫຼາຍຂຶ້ນ ກ່ຽວກັບຜົນກະທົບຂອງ ລບຕ ແລະ ການສຳຫຼວດ ແລະ ການເກັບກູ້ ລບຕ ທີ່ມີຕໍ່ຄົວເຮືອນ ແລະ ຊຸມຊົນ.

ການສຳພາດຜູ້ໃຫ້ຂໍ້ມູນຕົ້ນຕໍ ແມ່ນໄດ້ມີການສຳພາດກັບພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ, ລວມທັງ ຄຊກລ, ອົງການປະຕິບັດງານເພື່ອມະນຸດສະທຳ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາຢູ່ນະຄອນຫຼວງວຽງຈັນ. ໃນລະດັບແຂວງ ແລະ ເມືອງ, ໄດ້ມີການສຳພາດ ພະນັກງານ

ຜູ້ໃຫ້ຂໍ້ມູນຫຼັກໃນພະແນກ ແລະ ຫ້ອງການ ແຮງງານ ແລະ ສະຫວັດດີການສັງຄົມ, ແຜນການ ແລະ ການລົງທຶນ ແລະ ກະສິກຳ ແລະ ປ່າໄມ້.

ການສຳພາດແບບເຄິ່ງໂຄງສ້າງຂັ້ນບ້ານກັບຊາວບ້ານທີ່ດຳລົງຊີວິດຢູ່ໃນພື້ນທີ່ທີ່ມີ ລບຕ ເຊິ່ງໄດ້ສຳພາດບັນດາຄົວເຮືອນທີ່ມີດິນກະສິກຳ ໄດ້ຮັບການສຳຫຼວດ, ແລະ ໄດ້ມີການເກັບກູ້ ລບຕ. ສຳລັບດິນຊຸມຊົນທີ່ໄດ້ສຳຫຼວດ ແລະ ການເກັບກູ້ ລບຕ ເພື່ອໂຄງການພັດທະນາຕ່າງໆນັ້ນ ແມ່ນໄດ້ສຳພາດໂດຍຜ່ານການສົນທະນາເປັນກຸ່ມ[2].ໃນການສົນທະນາເປັນກຸ່ມຈະໄດ້ມີການສອບຖາມຂໍ້ມູນກ່ຽວກັບສະພາບການປ່ຽນແປງຕ່າງໆຂອງບ້ານທັງທາງດ້ານບວກ ແລະ ດ້ານລົບ ໃນແຕ່ລະ ຊ່ວງເວລາທີ່ຜ່ານມາຈົນຮອດປັດຈຸບັນຈະໄດ້ມີການຂຽນ ແລະ ແຕ້ມສະພາບ ການຕ່າງໆ ຂອງບ້ານລົງໃສ່ເຈັ້ຍທີ່ຜູ້ເຂົ້າຮ່ວມທັງໝົດໄດ້ເອກະພາບໃນການໃຫ້ຂໍ້ມູນຮ່ວມກັນ.

ຂໍ້ມູນທີ່ເກັບກຳນັ້ນໄດ້ນຳໃຊ້ວິທີການກວດສອບແບບ 3 ດ້ານເພື່ອສາມາດສະແດງຫຼັກຖານທີ່ໜັກແໜ້ນ ເພື່ອຢັ້ງຢືນ ຄວາມຖືກຕ້ອງ ຂອງຜົນຂອງການປະເມີນ ແລະ ສາມາດ ສະຫຼຸບຜົນຂອງການປະເມີນໄດ້ຢ່າງຖືກຕ້ອງ. ກອບແນວຄວາມຄິດການດຳລົງຊີວິດແບບຍືນຍົງ (SLF) ແລະ ທຶນ 5 ດ້ານໃນການດຳລົງຊີວິດ - ທຶນຊັບພະຍາກອນມະນຸດ, ທຶນທາງສັງຄົມ, ທຶນທາງການເງິນ, ທຶນທາງທຳມະຊາດ, ແລະ ທຶນທາງ ກາຍະພາບ - ຖືກນຳໃຊ້ເປັນກອບແນວຄວາມຄິດຫຼັກໃນການວິເຄາະ. ກອບແນວຄວາມຄິດການດຳລົງຊີວິດແບບຍືນຍົງໄດ້ຮັບຮູ້ວ່າການ ດຳລົງຊີວິດຂອງຄົວເຮືອນມີຄວາມຊັບຊ້ອນ ແລະ ມີຄວາມກ່ຽວພັນກັນ, ແລະ ສະພາບການອື່ນໆທີ່ກວ້າງກວ່າອາດຈະສົ່ງຜົນກະທົບ ຕໍ່ຜົນໄດ້ຮັບ ຂອງການດຳລົງຊີວິດເຊັ່ນກັນ[3].

ຜົນຂອງການປະເມີນພົບເຫັນໄດ້ວ່າ ການເກັບກູ້ ລບຕ ໄດ້ປະກອບສ່ວນໃນການປັບປຸງຊີວິດການເປັນຢູ່ ແລະ ສະຫວັດດີພາບຂອງປະຊາຊົນ ຫຼາຍໆດ້ານ. ການເກັບກູ້ ລບຕ ຊ່ວຍຫຼຸດຜ່ອນຄວາມສ່ຽງທີ່ປະຊາຊົນຕ້ອງປະເຊີນເປັນປະຈຳໃນເວລາທີ່ອາໄສຢູ່ໃນພື້ນທີ່ ທີ່ມີ ລບຕ.

ການເກັບກູ້ ລບຕ ໃນພື້ນທີ່ດິນພັດທະນາເພື່ອກໍ່ສ້າງໂຄງລ່າງພື້ນຖານຂອງຊຸມຊົນ ເຮັດໃຫ້ປະຊາຊົນສາມາດເຂົ້າເຖິງໂຮງຮຽນ ແລະ ສຸກສາລາ ຫຼາຍຂຶ້ນ, ແລະ ໄດ້ເປີດໂອກາດໃຫ້ປະຊາຊົນມີການພົວພັນເຊິ່ງກັນ ແລະ ກັນພາຍໃນຊຸມຊົນຫຼາຍຂຶ້ນ, ມີການແລກປ່ຽນຂໍ້ມູນຂ່າວສານຫຼາຍຂຶ້ນ, ແລະ ໄດ້ເຂົ້າຮ່ວມກິດຈະກຳທາງດ້ານວັດທະນະທຳທີ່ສຳຄັນຫຼາຍຂຶ້ນ. ການເກັບກູ້ ລບຕ ຍັງໄດ້ສ້າງໂອກາດໃຫ້ຊຸມຊົນໃນການສ້າງລາຍຮັບ ຜ່ານການພັດທະນາດ້ານທ່ອງທ່ຽວ ຫຼື ການລ້ຽງສັດ ຕົວຢ່າງເຊັ່ນ: ການເກັບກູ້ ລບຕ ໃນສະຖານທີ່ທ່ອງທ່ຽວ ແລະ ບໍລິເວນອ້ອມຮອບ ເຮັດໃຫ້ສະຖານທີ່ດັ່ງກ່າວມີຄວາມປອດໄພ, ມີການພັດທະນາ ແລະ ເປີດໃຫ້ບໍລິການນັກທ່ອງທ່ຽວ ແລະ ຊາວບ້ານກໍ່ມີລາຍຮັບເພີ່ມຂຶ້ນ ຈາກການຂາຍເຄື່ອງຫັດຖະກຳ ແລະ ຂາຍອາຫານໃຫ້ນັກທ່ອງທ່ຽວ. ການລ້ຽງສັດໃນພື້ນທີ່ດິນທີ່ໄດ້ຮັບການເກັບກູ້ ລບຕ ເຮັດໃຫ້ຊາວບ້ານ ມີລາຍຮັບເພີ່ມຂຶ້ນ. ສຳລັບການເກັບກູ້ ລບຕ ໄດ້ປະກອບສ່ວນເຮັດໃຫ້ ສະມັດຕະພາບ ການຜະລິດເພີ່ມຂຶ້ນຫຼືບໍ່ນັ້ນ ຄຳຕອບຍັງບໍ່ທັນຈະແຈ້ງເທື່ອ, ແຕ່ປັດໄຈອື່ນໆ ເຊັ່ນ ຄວາມ ຕ້ອງການ ຂອງຕະຫຼາດ, ວຽກງານສົ່ງເສີມການກະສິກຳ ແລະ ການປຸງແຕ່ງ ແລະ ແປຮູບຜົນຜະລິດກະສິກຳ ໄດ້ການປະກອບສ່ວນຢ່າງຊັດເຈນ ເຊັ່ນ ວຽກງານ ສົ່ງເສີມການ ກະສິກຳ (ການນຳໃຊ້ເຕັກນິກໃໝ່, ການນຳໃຊ້ຫຼາກຫຼາຍແນວພັນ) ເຮັດໃຫ້ສະມັດຕະພາບການຜະລິດເພີ່ມຂຶ້ນ, ແລະ ຄວາມ ຕ້ອງການ ຂອງ ຕະຫຼາດເພີ່ມຂຶ້ນ ແລະ ການປຸງແຕ່ງ ແລະ ແປຮູບຜົນຜະລິດກະສິກຳ ໄດ້ມີສ່ວນເຮັດໃຫ້ຊາວກະສິກອນສາມາດຂາຍຜົນຜະລິດໄດ້ຫຼາຍຂຶ້ນ. ຢ່າງໃດກໍຕາມ, ຊາວກະສິກອນລາຍງານວ່າມີເຂົາເຈົ້າຮູ້ສຶກໝັ້ນໃຈ ຫຼາຍຂຶ້ນ ທີ່ຈະທຳການຜະລິດໃນດິນທີ່ໄດ້ຮັບການເກັບກູ້ ລບຕ ແລ້ວ, ແລະ ການສຳເລັດການເກັບກູ້ ລບຕ ຍັງເຮັດໃຫ້ຊາວກະສິກອນ ສາມາດຂະຫຍາຍເນື້ອທີ່ດິນຂອງເຂົາເຈົ້າຕື່ມອີກ. ສຳລັບການໃຊ້ເຄື່ອງຈັກ ແລະ ລົດໄຖນາ ບໍ່ໄດ້ມີການຄຳນຶງເຖິງວ່າດິນດັ່ງກ່າວໄດ້ ຫຼື ບໍ່ໄດ້ ເກັບກູ້ ລບຕ, ແລະ ຊາວກະສິກອນບາງຄົນຮູ້ສຶກວ່າການໃຊ້ລົດໄຖນາປອດໄພກວ່າການຂຸດດິນດ້ວຍມື. ໃນບາງກິດຈະກຳ ເຊັ່ນ: ການຂຸດດິນ ແລະ ເຮັດຄູຄັນນາ ແລະ ເຮັດຮ່ອງນ້ຳ ຕ້ອງໄດ້ຂຸດດິນເລິກກວ່ານີ້, ເຊິ່ງໄດ້ມີຄຳຖາມ ແລະ ຍັງມີຄວາມກັງວົນກ່ຽວກັບຄວາມປອດໄພ ຂອງກິດຈະກຳດັ່ງກ່າວນີ້ ເຖິງແມ້ນວ່າດິນດັ່ງກ່າວນີ້ໄດ້ເກັບກູ້ ລບຕ ແລ້ວກໍ່ຕາມ. ສຳລັບການກໍ່ສ້າງ ແລະ ຟື້ນຟູໂຄງລ່າງພື້ນຖານທາງດ້ານ ຖະໜົນຫົນທາງ, ລະບົບນ້ຳປະປາ, ຊົນລະປ

ະຫານ ແລະ ຕະຫຼາດ ໄດ້ປະກອບສ່ວນປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ເຮັດໃຫ້ ແຕ່ລະບ້ານເຊື່ອມຈອດເຂົ້າກັນ ເຊິ່ງການເກັບກູ້ ລບ ຕ ໄດ້ປະກອບສ່ວນໃນຈຸດນີ້ຢ່າງຈະແຈ້ງ.

ບົດສະຫຼຸບຜົນການປະເມີນຕົ້ນຕໍນີ້ໄດ້ຖືກຈັດແບ່ງໄປຕາມ ທຶນ 5 ດ້ານໃນການດໍາລົງຊີວິດຂອງກອບແນວຄວາມຄິດການດໍາລົງຊີວິດ ແບບຍືນ ຍົງ (SLF) ແລະ ການປຽບທຽບທີ່ເປັນສິ່ງຕົ້ນຕໍ ກ່ອນ ແລະ ພາຍຫຼັງການເກັບກູ້ ລບຕ ແມ່ນໄດ້ສະແດງໃນຕາຕະລາງຂ້າງລຸ່ມນີ້. ເຖິງຢ່າງໃດກໍ່ ຕາມ, ຄວາມແຕກຕ່າງກ່ອນ ແລະ ພາຍຫຼັງການເກັບກູ້ແມ່ນບໍ່ທັນເປັນທີ່ຊັດເຈນສະເໝີໄປເພາະວ່າໄດ້ມີການເກັບກູ້ ລບຕ ມາຫຼາຍປີແລ້ວ ແລະ ການປັບປຸງຊີວິດການເປັນຢູ່ກໍ່ໄດ້ມີການສືບຕໍ່ມາຫຼາຍປີເຊັ່ນກັນ, ເຊິ່ງສ່ວນຫຼາຍແລ້ວມີປັດໄຈອື່ນໆ ປະກອບສ່ວນເຂົ້າໃນ ການປ່ຽນແປງດັ່ງກ່າ ວ. ຂໍ້ມູນກ່ອນການເກັບກູ້ ລບຕ ໄດ້ຖືກເກັບກໍາມາຈາກຫຼາຍແຫຼ່ງ ເຊັ່ນໄດ້ຈາກການສໍາພາດກັບຊາວບ້ານທີ່ກໍາລັງລໍຖ້າ ການເກັບກູ້ ລບຕ ໃນພື້ ນທີ່ດິນຂອງເຂົາເຈົ້າ, ຈາກຊາວບ້ານທີ່ໄດ້ຄຶດຄືນຫຼັງກ່ຽວກັບສະຖານະການກ່ອນການເກັບກູ້, ແລະ ຈາກຊາວບ້ານ ທີ່ໄດ້ສໍາຫຼວດແລ້ວ ແຕ່ບໍ່ໄດ້ ເກັບກູ້ເທື່ອ. ຂໍ້ມູນພາຍຫຼັງການເກັບກູ້ ແມ່ນໄດ້ເກັບກໍາຂໍ້ມູນຈາກຊາວບ້ານທີ່ພື້ນທີ່ດິນຂອງເຂົາເຈົ້າໄດ້ເກັບກູ້ ລບຕ ແລ້ວ, ທັງໜ້າວຽກທໍາລາ ຍເຄື່ອນທີ່ ແລະ ການເກັບກູ້ ລບຕ ທັງໝົດ. ໄດ້ມີກິດຈະກໍາການສອບຖາມຂໍ້ມູນໃນແຕ່ລະຊ່ວງເວລາທີ່ຜ່ານມາຈົນຮອດປັດຈຸບັນໃນການສົນທ ະນາກັບປະຊາຊົນເປັນກຸ່ມນ້ອຍໆກ່ຽວກັບການປ່ຽນແປງທີ່ເກີດຂຶ້ນໃນບ້ານຂອງເຂົາເຈົ້າທີ່ມີສ່ວນເກີດຈາກການເກັບກູ້ ລບຕ ແລະ ປັດໄຈອື່ນໆ .

| ທຶນ | ກ່ອນການເກັບກູ້ ລບຕ | ພາຍຫຼັງການເກັບກູ້ ລບຕ |
|---|---|---|
| ທຶນຊັບພະຍາກອນມະນຸດ | • ລະເບີດບໍ່ທັນແຕກມີຢູ່ທົ່ວທຸກແຫ່ງ<br>• ປະຊາຊົນເຄື່ອນຍ້າຍ ລບຕ ດ້ວຍຕົນເອງເປັນ ປົກກະຕິ<br>• ເດັກນ້ອຍໄດ້ຖືກຮັບຮູ້ກັນວ່າເປັນກຸ່ມທີ່ມີ ຄວາມສ່ຽງ<br>• ປະຊາຊົນຮູ້ສຶກຢ້ານ ຫຼື ກັງວົນເມື່ອທໍາການ ປູກຝັງໃນດິນ ທີ່ມີ ລບຕຕົກຄ້າງ<br>• ໂຮງຮຽນມີຂະໜາດນ້ອຍ ແລະ ກໍ່ສ້າງດ້ວຍໄມ້ ແລະ ສິດສອນການຮຽນໃນຊັ້ນຮຽນລະດັບ ຕອນຕົ້ນ<br>• ປະຊາຊົນຕ້ອງໄດ້ເດີນທາງໄກໄປໂຮງໝໍ ຫຼື ສຸກສາລາ | • ລະເບີດບໍ່ທັນແຕກແມ່ນພົບເຫັນໄດ້ໜ້ອຍ; ລບຕ ຢູ່ເທິງໜ້າດິນໄດ້ຖືກທໍາລາຍແລ້ວ<br>• ປະຊາຊົນລາຍງານ ລບຕ ເຖິງວ່າເຂົາເຈົ້າ ຍັງ ເຄື່ອນຍ້າຍ ດ້ວຍຕົນເອງ ເວລາພົບເຫັນ ລບຕ<br>• ເດັກນ້ອຍປອດໄພຈາກ ລບຕ<br>• ປະຊາຊົນມີຄວາມຮູ້ສຶກປອດໄພ, ພູມໃຈ, ແລະ ໝັ້ນໃຈ<br>• ເພີ່ມການເຂົ້າ ເຖິງ ໂຮງຮຽນ ແລະ ໂຮງຮຽນສາມາດ ສິດສອນ ຈໍານວນນັກຮຽນໄດ້ຫຼາຍຂຶ້ນ<br>• ມີສຸກສາລາທີ່ໃຫ້ການດູແລສຸຂະພາບຂັ້ນພື້ນຖານ ແລະ ຫຼຸດຜ່ອນການເພິ່ງພາຢາພື້ນເມືອງ |
| ທຶນທາງສັງຄົມ | • ມີຫ້ອງປະຊຸມບ້ານຂະໜາດນ້ອຍ ຫຼື ບໍ່ມີຫ້ອງ ປະຊຸມບ້ານ<br>• ມີວັດວາອາຮາມຂະໜາດນ້ອຍໆທີ່ບໍ່ສາມາດຮອງຮັບໄດ້ຫຼາຍໆຄົນ<br>• ປະຊາຊົນບໍ່ໄດ້ລາຍງານ ລບຕ; ມີຄວາມເຂົ້າໃຈໜ້ອຍກ່ຽວກັບຂະບວນການເກັບກູ້ ແລະ ການຈັດລຽງບູລິມະສິດ | • ແຕ່ລະບ້ານມີຫ້ອງປະຊຸມບ້ານ ເພື່ອຈັດປະຊຸມ ແລະ ເຮັດກິດຈະກໍາຕ່າງໆທີ່ກ່ຽວຂ້ອງ<br>• ປະຊາຊົນມີຄວາມພາກພູມໃຈຕໍ່ວັດວາອາຮາມທີ່ມີຄວາມສໍາຄັນໃນການເຮັດພິທີທາງສາດສະໜາ ແລະ ງານບຸນຕ່າງໆ<br>• ປະຊາຊົນມີຄວາມສັບສົນກ່ຽວກັບການຈັດລຽງບູລິມະ ສິດ ແລະ ຍັງມີຄວາມເຂົ້າໃຈ ຫຼື ຄວາມຮັບ |

| | | |
|---|---|---|
| | | ຮູ້ໜ້ອຍ ກ່ຽວກັບຂະບວນການສຳຫຼວດຢູ່ເປັນປະຈຳສິ່ງນີ້ເຮັດໃຫ້ ເຂົາ ເຈົ້າມີຄວາມກັງວົນ<br>• ເອກະສານໃບຢັ້ງຢືນການມອບ-ຮັບເນື້ອທີ່ດິນ ທີ່ໄດ້ ເກັບກູ້ ລບຕ ແມ່ນໄດ້ຖືກລາຍງານວ່າມີເນື້ອໃນທີ່ເຂົ້າໃຈ ຍາກ, ສຳລັບນາຍບ້ານບາງຄົນກໍ່ຍັງບໍ່ເຂົ້າໃຈ. |
| ທຶນທາງການເງິນ | • ປະຊາຊົນມີຄວາມທຸກຍາກຫຼາຍ ແລະ ດຳລົງຊີວິດແບບພໍຢູ່ໄດ້<br>• ປະຊາຊົນມີຄວາມເຊື່ອໝັ້ນໜ້ອຍໃນການປູກຝັງໃນດິນຂອງເຂົາເຈົ້າ<br>• ໂອກາດໃນການດຳລົງຊີວິດມີໜ້ອຍລົງ<br>• ປະຊາຊົນມີຄວາມຮູ້ໜ້ອຍກ່ຽວກັບມູນຄ່າທີ່ດິນທີ່ເປັນຈຳນວນເງິນ | • ຊີວິດການເປັນຢູ່ດີຂຶ້ນ ແລະ ປະຊາຊົນມີຜົນຜະລິດ ທີ່ພຸ້ມກິນ ແລະ ມີໄວ້ຂາຍ, ແຕ່ກໍ່ເປັນການຍາກ ທີ່ຈະ ຖືວ່າການປ່ຽນແປງເຫຼົ່ານີ້ເກີດຂຶ້ນຍ້ອນວ່າດິນຂອງ ເຂົາເຈົ້າໄດ້ມີການເກັບກູ້ ລບຕ ຍ້ອນຍັງມີປັດໃຈ ອື່ນໆອີກ.<br>• ປະຊາຊົນມີຄວາມຮູ້ສຶກຫມັ້ນໃຈໃນການປູກຝັງໃນດິນ ຂອງເຂົາເຈົ້າ<br>• ໂອກາດໃນການດຳລົງຊີວິດຫຼາຍຂຶ້ນຈາກການພັດທະນາການທ່ອງທ່ຽວ<br>• ມູນຄ່າທີ່ດິນໄດ້ເພີ່ມຂຶ້ນພາຍຫຼັງດິນດັ່ງກ່າວໄດ້ມີການ ເກັບກູ້ ລບຕ, ໂດຍສະເພາະໃນ ພື້ນທີ່ຈຸດສຸມເພື່ອການ ພັດທະນາ ແລະ ດິນຕາມເສັ້ນທາງ. ການລົງທຶນ, ການເຕີບໂຕທາງດ້ານເສດຖະກິດ ແລະ ການຂະຫຍາຍ ຕົວ ຂອງປະຊາກອນໃນເຂດດັ່ງກ່າວ ເຮັດໃຫ້ມີຄວາມ ຕ້ອງການທີ່ດິນເພີ່ມຂຶ້ນ ໂດຍສະເພາະທີ່ດິນທີ່ໄດ້ເກັບກູ້ ລບຕ. |
| ທຶນທາງທຳມະຊາດ | • ປະຊາຊົນ ບໍ່ເຮັດ ນາໃນເນື້ອທີ່ດິນທັງໝົດ ຂອງພວກ ເຂົາຖ້າເນື້ອທີ່ດັ່ງກ່າວຮົກເຮື້ອ ແລະ ອາດຈະມີ ລບຕ ຕົກຄ້າງ<br>• ປະຊາຊົນເຮັດນາຢ່າງລະມັດລະວັງ ແລະ ຊ້າໆ ແລະ ເຮັດນາອ້ອມຮອບເນື້ອທີ່ມີ ລບຕ ຕົກຄ້າງ<br>• ປະຊາຊົນມີຄວາມກັງວົນ ໃນເວລາຂຸດດິນ ແລະ ການໃຊ້ເຄື່ອງມືຂຸດດິນ | • ປະຊາຊົນ ສາມາດ ຂະຫຍາຍ ທີ່ ດິນ ແລະ ເຮັດ ນາ ໃນເນື້ອທີ່ໃໝ່<br>• ປະຊາຊົນຮູ້ສຶກໝັ້ນໃຈໃນການໃຊ້ເຄື່ອງຈັກ ແລະ ໃຊ້ຈົກໃນການເຮັດນາ<br>• ປະຊາຊົນສາມາດເຮັດນາດ້ວຍຄວາມຫມັ້ນໃຈ<br>• ຍັງມີຄວາມກັງວົນ ກ່ຽວກັບຄວາມເລິກຂອງການເກັບກູ້ ລບຕ ໃນເວລາທີ່ຕ້ອງການເຮັດການກະສິກຳອື່ນໆ ທີ່ຕ້ອງໄດ້ຂຸດເລິກກວ່ານີ້ |
| ທຶນທາງກາຍະພາບ | • ເສັ້ນທາງບໍ່ມີຄຸນນະພາບ ຫຼື ເປັນເສັ້ນທາງມີຂີ້ຝຸ່ນ<br>• ບໍ່ສາມາດເຂົ້າເຖິງຕະຫຼາດ ແລະ ພໍ່ຄ້າ<br>• ບໍ່ມີນ້ຳກິນນ້ຳໃຊ້ ແລະ ຂາດຊົນລະປະທານ | • ເສັ້ນທາງໄດ້ຮັບການປັບປຸງໂດຍການປູຢາງ ແລະ ປູຫີນແຮ່<br>• ສາມາດເຂົ້າເຖິງຕະຫຼາດ ແລະ ພໍ່ຄ້າໄດ້ຫຼາຍຂຶ້ນກວ່າເກົ່າ |

| | | |
|---|---|---|
| | | • ບ້ານມີລະບົບນໍ້າລິນ ແລະ ມີຊີນລະປະທານ |

ຢ່າງໃດກໍຕາມ, ຍັງມີສິ່ງທ້າທາຍຕ່າງໆ ເຊັ່ນ ໃນເຂດທີ່ມີ ລບຕ, ຄວາມສ່ຽງຍັງເກີດຂຶ້ນເລື້ອຍໆ ແລະ ປະຊາຊົນມັກເຄື່ອນຍ້າຍ ລບຕ ດ້ວຍຕົນເອງເມື່ອພົບເຫັນຢູ່ໃນທົ່ງນາເພື່ອໃຫ້ເຂົາເຈົ້າສາມາດສືບຕໍ່ເຮັດນາໄດ້. ການຂາດຂໍ້ມູນ ຫຼື ຂາດຄວາມເຂົ້າໃຈກ່ຽວກັບຂະບວນການ ສໍາຫຼວດ ແລະ ການເກັບກູ້ ລບຕ ແລະ ວິທີການຈັດລຽງບູລິມະສິດການເກັບກູ້ ລບຕ ສ້າງຄວາມອຸກອັ່ງໃນຂັ້ນບ້ານ ແລະ ອາດຈະຂັດຂວາງ ການວາງແຜນການນໍາໃຊ້ທີ່ດິນໃຫ້ດີຂຶ້ນ ແລະ ຂັດຂວາງການມີສ່ວນຮ່ວມຢ່າງຕັ້ງໜ້າຂອງຊາວບ້ານໃນຂະບວນການເກັບກູ້ ລບຕ. ຍັງມີທ່າແຮງຫຼາຍຢ່າງ ໃນການປັບປຸງ ແລະ ເພີ່ມທະວີໃຫ້ມີຜົນໄດ້ຮັບສູງສຸດໃນການ ເກັບ ກູ້ ລບຕ ໂດຍຜ່ານການປັບປຸງການສື່ສານ ແລະ ການ ເຜີຍແຜ່, ການວາງແຜນຮ່ວມກັນຂອງ ຂັ້ນແຂວງ ແລະ ຂັ້ນເມືອງ ໃນການຈັດລຽງບູລິມະສິດ, ແລະ ເພີ່ມທະວີການເຊື່ອມໂຍງ ກັບອົງການ ພັດທະນາ ແລະ ການສົ່ງເສີມກະສິກໍາ.

ຄໍາແນະນໍາຈາກການປະເມີນຄັ້ງນີ້ແມ່ນແນໃສ່ສະໜັບສະໜູນ ຄຊກລ ແລະ ສປຊ ເພື່ອການພັດທະນາ (UNDP) ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ ຂະແໜງ ລບຕ ແລະ ຊ່ວຍເຮັດໃຫ້ມີຜົນໄດ້ຮັບດ້ານການພັດທະນາສູງສຸດຈາກວຽກງານການເກັບກູ້ ລບຕ. ຂໍ້ສະເໜີແນະມີດັ່ງຕໍ່ໄປນີ້:

• ໂດຍສອດຄ່ອງກັບວຽກງານທີ່ກໍາລັງດໍາເນີນຢູ່, ລະບົບການຈັດລຽງບູລິມະສິດການເກັບກູ້ ລບຕ ລະດັບຊາດທີ່ຈະແຈ້ງ ແລະ ຊັດເຈນ ຄວນໄດ້ຮັບການພັດທະນາ ແລະ ຈັດຕັ້ງປະຕິບັດໂດຍອົງການປະຕິບັດງານທັງໝົດ. ລະບົບດັ່ງກ່າວຄວນສະໜັບສະ ໜູນການເກັບກູ້ ໃນເຂດພື້ນທີ່ຢັ້ງຢືນວ່າເປັນອັນຕະລາຍ (CHA) ທີ່ສາມາດປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍການຫຼຸດຜ່ອນຄວາມທຸກຍາກ ຂອງລັດຖະບານ ສປປ ລາວ. ຕ້ອງໄດ້ມີການແນະນໍາຢ່າງຊັດເຈນ ກ່ຽວກັບຂະບວນການຈັດລຽງບູລິມະສິດໃຫ້ແກ່ ອໍານາດການປົກຄອງ ຂັ້ນບ້ານ, ເມືອງ, ແຂວງ  ໃຫ້ມີຄວາມເຂົ້າໃຈຢ່າງຈະແຈ້ງ ເພື່ອເຮັດໃຫ້ເຂົາເຈົ້າສາມາດປະກອບສ່ວນ ແລະ ມີສ່ວນຮ່ວມໃນການວາງແຜນ ການເກັບກູ້ ລບຕ.

• ທົບທວນຄືນ ວິທີການແຈ້ງໃຫ້ຊາວບ້ານຮັບຮູ້ເຖິງຂະບວນການສໍາຫຼວດ ແລະ ການເກັບກູ້ ເພື່ອຮັບປະກັນວ່າເຈົ້າຂອງທີ່ດິນ ແລະ ປະຊາຊົນຜູ້ທີ່ທໍາການຜະລິດໃນເນື້ອທີ່ດິນດັ່ງກ່າວ ຮັບຮູ້ຢ່າງຄົບຖ້ວນກ່ຽວກັບການສໍາຫຼວດ ແລະ ການເກັບກູ້ ລບຕ ຢູ່ໃນເນື້ອທີ່ດິນ ຂອງເຂົາເຈົ້າ ແລະ  ຮູ້ວ່າມັນອາດຈະສົ່ງຜົນກະທົບຕໍ່ຄວາມສາມາດໃນການທໍາການຜະລິດໃນທີ່ດິນຂອງເຂົາເຈົ້າໄດ້ແນວໃດ. ເສີມຂະຫຍາຍ ຂະບວນການມີສ່ວນຮ່ວມຂອງຊຸມຊົນເພື່ອປັບປຸງການສື່ສານກ່ຽວກັບບັນຫາເຫຼົ່ານີ້, ເພື່ອໃຫ້ແນ່ໃຈວ່າທັງແມ່ຍິງ ແລະ ຜູ້ຊາຍມີສ່ວນຮ່ວມ ແລະ ໄດ້ຮັບການແຈ້ງຂໍ້ມູນຂ່າວສານນີ້.

• ກ່ຽວກັບເອກະສານໃບຢັ້ງຢືນການມອບ-ຮັບເນື້ອທີ່ດິນທີ່ໄດ້ເກັບກູ້ ລບຕ ທີ່ໄດ້ມອບໃຫ້ເຈົ້າຂອງທີ່ດິນ ແລະ ນາຍບ້ານນັ້ນ, ຄວນພິ ຈາລະນາໃຫ້ມີໃບເອກະສານການສັງລວມທີ່ຊັດເຈນເປັນພາສາລາວ (ແລະ ພາສາຊົນເຜົ່າອື່ນໆ ຖ້າເປັນໄປໄດ້) ເພື່ອຄັດຕິດໃສ່ເອກະສານ ໃບຢັ້ງຢືນການມອບ-ຮັບເນື້ອທີ່ດິນທີ່ໄດ້ເກັບກູ້ ລບຕ ດັ່ງກ່າວ ໃຫ້ແຕ່ລະຄົວເຮືອນ ເພື່ອອະທິບາຍຂໍ້ມູນພື້ນຕໍທີ່ສໍາຄັນໆ ທີ່ກ່ຽວຂ້ອງ ກັບວຽກງານເກັບກູ້. ຕ້ອງຮັບປະກັນວ່າເອກະສານດັ່ງກ່າວ ໄດ້ມອບໃຫ້ທຸກໆຄົວເຮືອນທີ່ໄດ້ມີການເກັບກູ້ ລບຕ.

• ພິຈາລະນາ ໃຫ້ມີການປຶກສາຫາລືກ່ຽວກັບຄວາມເລິກຂອງການເກັບກູ້ ແລະ ໃນບາງກໍລະນີການເກັບກູ້ອາດຈະຕ້ອງມີຄວາມເລິກກວ່ານີ້ ໃນເວລາທີ່ຈະນໍາໃຊ້ທີ່ດິນໃນການ: ເຮັດໜອງປາ ແລະ ຂຸດຂຸມເພື່ອເຮັດເສົາຮົ້ວ, ແລະ ຄວາມເລິກໜ້ອຍກວ່ານີ້ ໃນເວລານໍາໃຊ້ທີ່ດິນ ເພື່ອລ້ຽງຜົນຜະລິດ.

• ສະໜັບສະໜູນ ແລະ ເສີມສ້າງຂະບວນການວາງແຜນຂັ້ນເມືອງ ແລະ ແຂວງ ເພື່ອສັງລວມຄວາມຕ້ອງການໃນການເກັບກູ້ ລບຕ ແລະ ງົບປະມານທີ່ຕ້ອງການ ເອົາເຂົ້າໃນຂັ້ນຕອນການວາງແຜນ, ແລະ ເພື່ອຮັບປະກັນວ່າວຽກງານການພັດທະນາສາມາດເອົາເຂົ້າໃນແຜນການ ເກັບກູ້ປະຈໍາປີ, ແທນທີ່ຈະເພີ່ມເຂົ້າໃນວຽກງານສຸກເສີນພາຍຫຼັງ. ພິຈາລະນາຫາທາງ ເພື່ອເພີ່ມຈໍານວນວຽກງານພັດທະນາທີ່ອົງການ ປະຕິບັດງານສາມາດປະຕິບັດໄດ້ທຸກໆປີ, ຮັບປະກັນວ່າວຽກງານດັ່ງກ່າວເປັນການພັດທະນາເພື່ອມະນຸດສະທໍາ ແລະ ສໍາລັບບ້ານ ແລະ ເມືອງ ທີ່ທຸກຍາກ.

• ຢູ່ໃນແຂວງ ແລະ ເມືອງທີ່ມີ ລບຕ ທີ່ມີການກໍານົດເຂດພື້ນທີ່ຢັ້ງຢືນວ່າເປັນອັນຕະລາຍ (CHA) ແລ້ວ, ຄຊກລ ຄວນສົ່ງເສີມ ແລະ ພົວພັນກັບບັນດາອົງການພັດທະນາ, ຫຼື ສະໜັບສະໜູນອົງການປະຕິບັດງານ, ເພື່ອເພີ່ມໂອກາດໃນການເຊື່ອມສານ ການເກັບກູ້ ລບຕ ແລະ ໂຄງການພັດທະນາຕ່າງໆ. ສະໜັບສະໜູນອົງການເກັບກູ້ ລບຕ ເຮັດວຽກຮ່ວມກັບກະສິກໍາຂັ້ນເມືອງ ແລະ ການພັດທະນາອື່ນໆ ທີ່ສາມາດສະໜັບສະໜູນການປັບປຸງຊີວິດການເປັນຢູ່ຂອງຊຸມຊົນໃນເຂດທີ່ຈະເກັບກູ້ ລບຕ. ໃຫ້ພິຈາລະນາ ແລະ ປຶກສາຫາລື ກ່ຽວກັບກາລະໂອກາດອື່ນໆເພື່ອຊຸກຍູ້ ແລະ ເສີມຂະຫຍາຍການເປັນຄູ່ຮ່ວມມືລະຫວ່າງອົງການປະຕິບັດງານ ແລະ ຄູ່ຮ່ວມພັດທະນາ.

• ສະໜັບສະໜູນ ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພ ເພື່ອແກ້ໄຂຄວາມສ່ຽງທີ່ເກີດຈາກນິໄສຂອງຊາວບ້ານທີ່ມັກຈະເຄື່ອນຍ້າຍ ລບຕ ດ້ວຍຕົນເອງ ໃນເວລາທີ່ເຂົາເຈົ້າພົບ ລບຕ ເພື່ອໃຫ້ເຂົາເຈົ້າສືບຕໍ່ ທໍາການຜະລິດໄດ້[4], ແລະ ປັບປຸງຂໍ້ຄວາມໂຄສະນາສຶກສາຄວາມສ່ຽງໄພ ເພື່ອສະທ້ອນໃຫ້ເຫັນເຖິງ ການປ່ຽນແປງ ໃນການທໍາການຜະລິດ, ລວມເຖິງການນໍາໃຊ້ລົດໄຖນໍາອີກ.

[1] ໂດຍສະເພາະແມ່ນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ປີ 2021-2025 ແນໃສ່ຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດກ່ຽວກັບການພັດທະນາເສດຖະກິດ-ສັງຄົມ 2025 ແລະ ວິໄສທັດ 2030 ຂອງ ສປປ ລາວ.

[2] ໃນນັ້ນລວມມີ ເນື້ອທີ່ດິນທີ່ໄດ້ກວດກູ້ ເພື່ອສ້າງໂຮງຮຽນ, ສຸກສາລາ, ວັດວາອາຮາມ, ແລະ ຫ້ອງປະຊຸມຂອງບ້ານ

[3] GICHD, “Sourcebook on Socio-Economic Impact Survey,” GICHD, December 2011.

[4] ປະຊາຊົນ ທີ່ຖືກສໍາພາດ ມັກຈະເວົ້າວ່າ ເມື່ອພົບເຫັນ ລບຕ ຢູ່ທົ່ງນາ ເຂົາເຈົ້າຈະເຄື່ອນຍ້າຍ ລບຕ ໄປໄວ້ຂ້າງທົ່ງນາ ເພື່ອຈະໄດ້ສືບຕໍ່ເຮັດວຽກໄຮ່ນາຂອງເຂົາເຈົ້າຕໍ່ໄປ ແຕ່ ພວກເຂົາກໍຍັງຈະລາຍງານ ລບຕ ໃຫ້ອົງການຕ່າງໆ ເພື່ອເຂົ້າມາເກັບກູ້

# 1. ພາກແນະນຳ

## 1.1. ໂຄງຮ່າງບົດລາຍງານ

ບົດລາຍງານສະບັບນີ້ ຈະສະແດງໃຫ້ເຫັນເຖິງຜົນໄດ້ຮັບ ແລະ ຂໍ້ແນະນຳຕ່າງໆຈາກການຄົ້ນຄວ້າ ການປະເມີນຜົນພາຍຫຼັງການເກັບກູ້ ລບຕ ທີ່ດຳເນີນການໂດຍ ອົງການ ສປຊ ເພື່ອການພັດທະນາ ແລະ ຄຊກລ. ພາກແນະນຳນີ້ຈະອະທິບາຍເຖິງຈຸດປະສົງ ແລະ ຂອບເຂດຂອງການຄົ້ນຄວ້າ ດັ່ງກ່າວ, ດັ່ງທີ່ໄດ້ກຳນົດໄວ້ໃນ ຂອບໜ້າວຽກ, ລວມໄປເຖິງຂອບເຂດເວລາຂອງການຄົ້ນຄວາ, ຄູ່ຮ່ວມງານຕົ້ນຕໍທີ່ມີສ່ວນຮ່ວມເຂົ້າໃນການຄົ້ນຄວ້າຄັ້ງນີ້, ແລະ ບັນຫາທ້າທາຍຕ່າງໆທີ່ພົບພໍ້ ໃນລະຫວ່າງດຳເນີນການຄົ້ນຄວ້າດັ່ງກ່າວ.

ພາກທີສອງຈະອະທິບາຍຄວາມເປັນມາ ແລະ ສະພາບການຂອງການຄົ້ນຄວ້າ, ລວມທັງການຕົກຄ້າງຂອງ ລບຕ ໃນ ສປປ ລາວ, ຂອບວຽກນະໂຍບາຍທີ່ເນັ້ນໜັກໃຫ້ເຫັນເຖິງຄວາມເຊື່ອມໂຍງກັນ ລະຫວ່າງການດຳເນີນງານດ້ານ ລບຕ ແລະ ຈຸດປະສົງຂອງການພັດທະນາ, ພ້ອມທັງແນວທາງຕ່າງໆໃນການສຳຫຼວດ ແລະ ການເກັບກູ້.

ພາກທີສາມຈະສະໜອງພາບລວມກ່ຽວກັບວິທີການ ແລະ ເຄື່ອງມືທີ່ໄດ້ຖືກນຳໃຊ້ ເຂົ້າໃນການຄົ້ນຄວ້າດັ່ງກ່າວ. ສິ່ງນີ້ລວມມີການຄັດເລືອກເມືອງ ແລະ ບ້ານເປົ້າໝາຍເພື່ອດຳເນີນການຄົ້ນຄວ້າ, ຄຳອະທິບາຍຂອງເຄື່ອງມືຄົ້ນຄວ້າ ທີ່ຖືກນຳໃຊ້ໃນການສ້າງຄວາມເຂົ້າໃຈ ແລະ ສະແດງໃຫ້ເຫັນເຖິງຜົນກະທົບ, ແລະ ຂອບວຽກແນວຄິດທີ່ຖືກນຳໃຊ້ ເພື່ອຊີ້ນຳການວິເຄາະ.

ພາກທີສີ່ຈະສະແດງໃຫ້ເຫັນເຖິງຜົນໄດ້ຮັບຕົ້ນຕໍ ຈາກການຄົ້ນຄວ້າດັ່ງກ່າວ. ຜົນໄດ້ຮັບຕ່າງໆຈະຖືກນຳສະເໜີ ໂດຍອີງໃສ່ອົງປະກອບທັງຫ້າຂອງ ຂອບວຽກການດຳລົງຊີວິດແບບຍືນຍົງ,[5] ແລະ ຍັງຈະມີການລວມເອົາກໍລະນີສຶກສາຕ່າງໆເຂົ້ານຳ ເພື່ອເນັ້ນໜັກໃຫ້ເຫັນເຖິງບັນຫາອັນສະເພາະ ແລະ ສະພາບການຂັ້ນບ້ານ.

ພາກທີຫ້າຈະສະທ້ອນໃຫ້ເຫັນເຖິງ ວິທີໃນການຍົກສູງຜົນໄດ້ຮັບດ້ານການພັດທະນາ ຈາກການເກັບກູ້ ລບຕ ໃຫ້ໄດ້ສູງສຸດ ໂດຍຜ່ານຂັ້ນຕອນການກຳນົດບຸລິມະສິດ, ການສື່ສານທີ່ໄດ້ຮັບການປັບປຸງ, ແລະ ການວາງແຜນ ແລະ ການເຊື່ອມໂຍງກັບວຽກງານການພັດທະນາທີ່ດີຂຶ້ນ.

ພາກສຸດທ້າຍຂອງບົດລາຍງານສະບັບນີ້ ຈະສະໜອງບົດສະຫຼຸບ ແລະ ຂໍ້ແນະນຳຕົ້ນຕໍຕ່າງໆ. ໄດ້ມີການນຳສະເໜີຜົນໄດ້ຮັບ ແລະ ຂໍ້ແນະນຳເບື້ອງຕົ້ນ ຂອງການຄົ້ນຄວ້າຄັ້ງນີ້ໃຫ້ແກ່ ອົງການ ສປຊ ເພື່ອການພັດທະນາ, ຄຊກລ ແລະ ຄກລ ແລ້ວໃນວັນທີ 25 ພະຈິກ 2022. ຂໍ້ມູນ ແລະ ຄຳແນະນຳຈາກຜູ້ເຂົ້າຮ່ວມກອງປະຊຸມໃນຄັ້ງນັ້ນ ກໍ່ໄດ້ຖືກລວມເຂົ້າໄວ້ໃນບົດລາຍງານສະບັບສຸດທ້າຍເຊັ່ນກັນ.

## 1.2. ຈຸດປະສົງຂອງການປະເມີນຜົນກະທົບ

ອີງຕາມ ຂອບໜ້າວຽກ, ຈຸດປະສົງຂອງການປະເມີນຜົນກະທົບໃນຄັ້ງນີ້ ແມ່ນເພື່ອປະເມີນຜົນກະທົບຂອງ ລບຕ ໃນພື້ນທີ່ຕ່າງໆທີ່ຍັງມີການຕົກຄ້າງຂອງ ລບຕ ຢູ່, ແລະ, ບົນພື້ນຖານຂອງຄວາມເຂົ້າໃຈກ່ຽວກັບຜົນກະທົບທາງເສດຖະກິດ-ສັງຄົມຂອງ ລບຕ ທີ່ມີຕໍ່ບັນດາຊຸມຊົນທີ່ອາໄສຢູ່ໃນເຂດທີ່ມີ ລບຕ ຕົກຄ້າງຢູ່, ແມ່ນເພື່ອປະເມີນຜົນກະທົບພາຍຫຼັງການສຳຫຼວດ ແລະ ການເກັບກູ້ ໂດຍອີງໃສ່ຍຸດທະສາດການພັດທະນາແຫ່ງ ສປປ ລາວ,[6] ແຜນຍຸດທະສາດແຫ່ງຊາດສຳລັບຂະແໜງການ ລບຕ ໃນ ສປປ ລາວ, ເສັ້ນທາງກ້າວສູ່ຄວາມປອດໄພ III, ແລະ ປພຍ ຂອງ ສປປ ລາວ. ຄາດໝາຍວ່າການຄົ້ນຄວ້າຄັ້ງນີ້ຈະ:

- ສະໜອງຂໍ້ມູນພື້ນຖານກ່ຽວກັບຜົນກະທົບຂອງການຕົກຄ້າງຂອງ ລບຕ ທີ່ມີຕໍ່ບຸກຄົນ ແລະ ຊຸມຊົນຕ່າງໆ;
- ສະໜອງຫຼັກຖານກ່ຽວກັບຄຸນຄ່າ, ຄວາມກ່ຽວພັນ, ແລະ ປະສິດທິພາບ, ໃນດ້ານການພັດທະນາ, ຂອງວຽກງານການສຳຫຼວດ ແລະ ການເກັບກູ້ ລບຕ;
- ສະໜອງຂໍ້ແນະນຳໃຫ້ແກ່ ຄຊກລ ແລະ ອົງການ ສປຊ ເພື່ອການພັດທະນາ ທີ່ສາມາດນຳໃຊ້ເຂົ້າໃນການຂັບເຄື່ອນການປັບປຸງວຽກງານການສຳຫຼວດ ແລະ ການເກັບກູ້ ແນໃສ່ຍົກສູງຜົນກະທົບທາງບວກຂອງການກຳນົດແຜນງານໃຫ້ໄດ້ສູງສຸດ.

---

5 ອົງປະກອບຕ່າງໆແມ່ນຖືກແບ່ງອອກເປັນຫ້າໝວດໝູ່ຄື: ດ້ານມະນຸດ, ສັງຄົມ, ການເງິນ, ກາຍະພາບ ແລະ ທຳມະຊາດ.

6 ໂດຍສະເພາະໃນ ແຜນພັດທະນາເສດຖະກິດສັງຄົມ 5 ປີຄັ້ງທີ 9, 2021-2025, ທີ່ແນໃສ່ຈັດຕັ້ງປະຕິບັດ ຍຸດທະສາດແຫ່ງຊາດວ່າດ້ວຍການພັດທະນາເສດຖະກິດ-ສັງຄົມ 2025, ແລະ ວິໄສທັດ 2030 ຂອງ ສປປ ລາວ.

ຄວາມຕ້ອງການ ໃຫ້ມີການປັບປຸງຄວາມເຂົ້າໃຈກ່ຽວກັບຜົນກະທົບຂອງການຕົກຄ້າງຂອງ ລບຕ ທີ່ມີຕໍ່ຊຸມຊົນຕ່າງໆໃນ ສປປ ລາວ, ລວມໄປເ ຖິງຂໍ້ມູນຖານ ທີ່ໄດ້ມາຈາກບົດຄົ້ນຄວ້າທີ່ອີງໃສ່ຫຼັກຖານ, ໄດ້ຖືກກໍານົດໄວ້ໃນການປະເມີນສຸດທ້າຍຂອງໂຄງການ ລບຕ ຂອງ ອົງການ ສປຊ ເ ພື່ອການພັດທະນາ ແລະ ລັດຖະບານ ສປປ ລາວ ທີ່ມີຊື່ວ່າ, *'ກ້າວໄປສູ່ການບັນລຸ ປພຍ ລໍາດັບທີ 18 - ການລຶບລ້າງ ລບຕ ທີ່ເປັນອຸປະສັກຕໍ່ກາ ນພັດທະນາໃນ ສປປ ລາວ'* ທີ່ຖືກຈັດຕັ້ງປະຕິບັດໃນລະຫວ່າງເດືອນກໍລະກົດ 2017 ແລະ ເດືອນມີນາ 2022.[7] ການປະເມີນດັ່ງກ່າວໄດ້ຊີ້ໃຫ້ເ ຫັນວ່າ, "ມັນສົມເຫດສົມຜົນແລ້ວທີ່ຈະສົມມຸດວ່າ ການດໍາເນີນວຽກງານສໍາຫລວດກວດກູ້ ລບຕ ໄດ້ປະກອບສ່ວນເຂົ້າໃນການພັດທະນາມະນຸ ດ ແລະ ຊີວິດການເປັນຢູ່ ແຕ່ ການຂາດການວິເຄາະຢ່າງລະອຽດ ກ່ຽວກັບຜົນກະທົບຂອງການຕົກຄ້າງຂອງ ລບຕ ແລະ ການດໍາເນີນວຽກງານ ສໍາຫລວດກວດກູ້ ລບຕ ໝາຍຄວາມວ່າພວກເຮົາຈະຍັງບໍ່ສາມາດຮັບຮູ້ໄດ້ເຖິງຄຸນນະພາບ ແລະ ລັກສະນະໂຕຈິງຂອງການປະກອບສ່ວນດັ່ງກ່າວ ເທື່ອ. ຍັງບໍ່ທັນມີລະບົບທີ່ໜ້າເພິ່ງພໍໃຈໃນຕອນນີ້ ທີ່ສາມາດຕິດຕາມ ແລະ ຕີລາຄາຜົນໄດ້ຮັບຂອງການພັດທະນາເທື່ອ."

ການປະເມີນຜົນກະທົບໃນຄັ້ງນີ້ ໄດ້ປະເມີນຜົນກະທົບທີ່ ລບຕ ມີໃນຂົງເຂດຕ່າງໆທີ່ ອົງການ ສປຊ ເພື່ອການພັດທະນາ ໃຫ້ການສະໜັບສະ ໜູນການສໍາຫຼວດ ແລະ ການເກັບກູ້ ລບຕ, ເຊັ່ນ: ແຂວງຊຽງຂວາງ ແລະ ບໍລິຄໍາໄຊ, ໂດຍເນັ້ນໜັກໃສ່ວຽກງານການສໍາຫຼວດ ແລະ ການເກັບກູ້ຂ ອງ ຄກລ ໃນ ແຂວງຊຽງຂວາງ ແລະ ກອງຮ້ອຍ 58 ໃນ ແຂວງບໍລິຄໍາໄຊ.

ຂອບເຂດໜ້າທີ່ທີ່ຖືກກໍານົດໄວ້ໃນ ຂອບໜ້າວຽກ ປະກອບມີ:

- ໜ້າວຽກທີ 1: ປະເມີນຜົນກະທົບຂອງ ລບຕ ຕໍ່ຜົນໄດ້ຮັບຂອງການພັດທະນາ ໃນຂົງເຂດທີ່ມີ ລບຕ ຄົງຄ້າງຢູ່
    - ທົບທວນຄືນບັນດາໂຕຊີ້ວັດດ້ານການພັດທະນາ ທີ່ສາມາດວັດຜົນໄດ້ ແລະ ທີ່ກ່ຽວຂ້ອງກັບເປົ້າໝາຍການພັດທະນາຍຸດ ທະສາດ ແລະ ປພຍ ຂອງ ລັດຖະບານ ສປປ ລາວ
    - ກໍານົດວິທີການໃນການວັດແທກໂຕຊີ້ວັດ ໃນບັນດາຂົງເຂດແຜນງານທີ່ຄັດເລືອກມາ
    - ດໍາເນີນການເກັບກໍາ ແລະ ວິເຄາະຂໍ້ມູນ
- ໜ້າວຽກທີ 2: ປະເມີນຜົນກະທົບພາຍຫຼັງການສໍາຫຼວດ ແລະ ການເກັບກູ້ ລບຕ
    - ທົບທວນຄືນບັນດາໂຕຊີ້ວັດດ້ານການພັດທະນາອັນດຽວກັນຫຼັງການສໍາຫຼວດ ແລະ ການເກັບກູ້
    - ດໍາເນີນການເກັບກໍາ ແລະ ວິເຄາະຂໍ້ມູນ
- ໜ້າວຽກທີ 3: ປະເມີນຜົນກະທົບຂອງການສໍາຫຼວດ ແລະ ການເກັບກູ້ (ວັດແທກ ໜ້າວຽກທີ 1 ໂດຍສົມທຽບໃສ່ ໜ້າວຽກທີ 2)
    - ກໍານົດປະລິມານໃຫ້ແກ່ຜົນກະທົບຂອງການສໍາຫຼວດ ແລະ ການເກັບກູ້ ໂດຍການສົມທຽບຜົນກະທົບຂອງກ່ອນ ແລະ ຫຼັ ງການສໍາຫຼວດ ແລະ ການເກັບກູ້ໃສ່ກັນ
    - ສ້າງຂໍ້ແນະນໍາເພື່ອຂັບເຄື່ອນການປັບປຸງວຽກງານການສໍາຫຼວດ ແລະ ການເກັບກູ້ ແນໃສ່ຍົກສູງຜົນກະທົບທາງບວກຂອງ ການກໍານົດແຜນງານໃຫ້ສູງສຸດ

ໃນກອງປະຊຸມລິເລີ່ມຄັ້ງວັນທີ 7 ຕຸລາ 2022, ໂດຍມີທີ່ປຶກສາຈາກພາກສ່ວນຕ່າງໆ, ຄຊກລ ແລະ ອົງການ ສປຊ ເພື່ອການພັດທະນາ ເຂົ້າຮ່ວ ມ, ຄຊກລ ໄດ້ກໍານົດລາຍຊື່ຂົງເຂດຕ່າງໆເພີ່ມເຕີມອີກ ເພື່ອໄວ້ພິຈາລະນາປະເມີນຜົນກະທົບດັ່ງຕໍ່ໄປນີ້:

- ເພື່ອພິຈາລະນາຄວາມແຕກຕ່າງລະຫວ່າງທີ່ດິນ ທີ່ຍັງບໍ່ທັນໄດ້ຮັບການເກັບກູ້ເທື່ອ, ທີ່ດິນທີ່ໄດ້ຮັບການສໍາຫຼວດແລ້ວ, ແລະ ທີ່ດິນທີ່ ໄດ້ຮັບການເກັບກູ້ແລ້ວ, ເພື່ອໃຫ້ເຂົ້າໃຈເຖິງຜົນປະໂຫຍດ/ຂໍ້ຈໍາກັດ ທີ່ມີຕໍ່ຜູ້ໄດ້ຮັບຜົນປະໂຫຍດ ແລະ ຜົນກະທົບໂດຍລວມໃນແຕ່ ລະສະຖານະການ.
- ເພື່ອສົມທຽບຜົນປະໂຫຍດຂອງການເກັບກູ້ທີ່ດິນປູກຝັງໃນຄົວເຮືອນ ໃສ່ກັບການເກັບກູ້ທີ່ດິນສໍາລັບການພັດທະນາ (ຍົກຕົວຢ່າງ: ກ ານເກັບກູ້ທີ່ດິນເພື່ອສ້າງໂຮງຮຽນ, ພື້ນຖານໂຄງລ່າງ ແລະ ອື່ນໆ). ອັນໃດສ້າງຜົນກະທົບຫຼາຍກວ່າກັນ, ແລະ ຕໍ່ໃຜ?
- ເພື່ອສະໜອງຂໍ້ມູນເຂົ້າໃນການປຶກສາຫາລື ທີ່ກ່ຽວຂ້ອງກັບການກໍານົດບູລິມະສິດໃຫ້ແກ່ວຽກງານການເກັບກູ້ ໂດຍອີງໃສ່ຜົນໄດ້ຮັບ ຂອງການຄົ້ນຄວ້າ. ລະບົບການກໍານົດບູລິມະສິດແຫ່ງຊາດ ຈະຕ້ອງມີການດໍານເນີນງານຄືແນວໃດ, ແລະ ຍ້ອນຫຍັງ? ການລວມເອົາ ບາງຂໍ້ມູນກ່ຽວກັບ ວິທີການກໍານົດບູລິມະສິດຂອງຜູ້ດໍາເນີນງານ ເຂົ້າໃນບົດສໍາຫຼວດນີ້ ກໍ່ອາດຊ່ວຍສະໜັບສະໜູນຂະບວນການປຶກ ສາຫາລືດັ່ງກ່າວໄດ້

7 Rebecca Roberts ແລະ ກຽງໄກ ອຸ່ມະນີ, "ກ້າວໄປສູ່ການບັນລຸ ປພຍ ລໍາດັບທີ 18: ການລຶບລ້າງ ລບຕ ທີ່ເປັນອຸປະສັກຕໍ່ການພັດທະນາໃນ ສປປ ລາວ," ອົງການ ສປຊ ເພື່ ອການພັດທະນາ, 13 ກັນຍາ 2021.

- ເພື່ອໃຫ້ເຂົ້າໃຈເຖິງຜົນປະໂຫຍດຂອງວຽກງານການເກັບກູ້ ໃນດ້ານການດຳລົງຊີວິດ ແລະ ການພັດທະນາທ້ອງຖິ່ນ, ລວມໄປເຖິງລະດັບຄວາມເຊື່ອໝັ້ນ ແລະ ຄວາມເຂົ້າໃຈຂອງປະຊາຊົນກ່ຽວກັບຄວາມປອດໄພ. ເພື່ອໃຫ້ເຂົ້າໃຈໃນກໍລະນີທີ່ມີບາງຄົນ ບໍ່ມີຄວາມເພິ່ງພໍໃຈກັບວຽກງານການສຳຫຼວດ ແລະ ການເກັບກູ້ ແລະ ຖ້າເປັນແນວນັ້ນ, ຍ້ອນຫຍັງ.
- ເພື່ອສະແດງໃຫ້ເຫັນວ່າການປະສານງານ ແລະ ການສື່ສານທີ່ດີນັ້ນ ຈະສາມາດປະກອບສ່ວນຕໍ່ຜົນກະທົບໄດ້ຄືແນວໃດ - ມັນສ້າງຄວາມແຕກຕ່າງອັນໃດແດ່?
- ເພື່ອຮັບປະກັນໃຫ້ການວິເຄາະຜົນກະທົບ ມີຄວາມເຊື່ອມໂຍງກັບເປົ້າໝາຍຂອງ ເສັ້ນທາງກ້າວສູ່ຄວາມປອດໄພ III, ປພຍ, ແລະ ແຜນການ 5 ປີຄັ້ງທີ 9.

## 1.3. ຂອບເຂດເວລາຂອງການຄົ້ນຄວ້າ

ການວາງແຜນ ແລະ ການຈັດຕັ້ງປະຕິບັດການຄົ້ນຄວ້າການປະເມີນຜົນກະທົບ ແມ່ນໄດ້ຖືກດຳເນີນການໃນເດືອນຕຸລາ ແລະ ເດືອນພະຈິກ 2022 ໃນສອງໄລຍະຄື:

- ໄລຍະທີໜຶ່ງແມ່ນໄດ້ຖືກດຳເນີນການໃນເດືອນຕຸລາ 2022 ແລະ ປະກອບມີການທົບທວນຄືນບົດຄວາມ ແລະ ການພັດທະນາແຜນການ, ວິທີການ ແລະ ເຄື່ອງມືໃນການຄົ້ນຄວ້າ. ຂັ້ນຕອນນີ້ສົ່ງຜົນເຮັດໃຫ້ເກີດມີບົດລາຍງານເບື້ອງຕົ້ນ ທີ່ຖືກຂຽນຂຶ້ນ ແລະ ສະໜອງໃຫ້ແກ່ ອົງການ ສປຊ ເພື່ອການພັດທະນາ ແລະ ຄຊກລ. ກອງປະຊຸມລິເລີ່ມແມ່ນໄດ້ຖືກຈັດຂຶ້ນໃນວັນທີ 7 ຕຸລາ ຮ່ວມກັບ ອົງການ ສປຊ ເພື່ອການພັດທະນາ ແລະ ຄຊກລ, ແລະ ໄດ້ມີການນຳສະເໜີບົດລາຍງານເບື້ອງຕົ້ນ ຜ່ານທາງອອນລາຍໃນວັນທີ 25 ຕຸລາ.
- ວຽກງານພາກສະໜາມຂອງການຄົ້ນຄວ້າດັ່ງກ່າວ ແມ່ນໄດ້ຖືກດຳເນີນການໃນເດືອນພະຈິກ. ໄລຍະອາທິດທຳອິດແມ່ນການເຄື່ອນໄຫວພາກສະໜາມທີ່ ນະຄອນຫຼວງວຽງຈັນ ເປັນຫຼັກ ເພື່ອພົບປະກັບບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ ແລະ ເພື່ອເກັບກຳຂໍ້ມູນຈຳເປັນໃນການຄັດເລືອກບ້ານເປົ້າໝາຍ. ທີມງານດັ່ງກ່າວໄດ້ມີການເຄື່ອນໄຫວວຽກຢູ່ ແຂວງບໍລິຄຳໄຊ ຕັ້ງແຕ່ວັນທີ 6-12 ພະຈິກ, ແລະ ຢູ່ ແຂວງຊຽງຂວາງ ຕັ້ງແຕ່ວັນທີ 13-24 ພະຈິກ. ຈາກນັ້ນໃນວັນທີ 25 ພະຈິກ, ຈຶ່ງໄດ້ມີການຈັດກອງປະຊຸມສັງລວມຜົນການເຄື່ອນໄຫວໃຫ້ແກ່ ອົງການ ສປຊ ເພື່ອການພັດທະນາ, ຄຊກລ ແລະ ຄກລ ຊບ.

ການຂຽນບົດລາຍງານ ແມ່ນໄດ້ຖືກດຳເນີນການໃນເດືອນທັນວາ 2022. ສາມາດເບິ່ງການທົບທວນຄືນບົດຄວາມ ແລະ ເອກະສານຕ່າງໆໄດ້ທີ່ ພາກເອກະສານຊ້ອນທ້າຍທີ 1 ແລະ 2, ແລະ ສາມາດເບິ່ງຂອບເຂດເວລາ/ແຜນວຽກສຳລັບການຄົ້ນຄວ້າດັ່ງກ່າວໄດ້ທີ່ ພາກເອກະສານຊ້ອນທ້າຍທີ 3. ບົດລາຍງານສະບັບສຸດທ້າຍ ແມ່ນຖືກຂຽນຂຶ້ນສຳເລັດໃນເດືອນມັງກອນ 2023, ພ້ອມທັງຍັງມີການລວມເອົາຄຳເຫັນຕ່າງໆຈາກ ຄຊກລ ແລະ ອົງການ ສປຊ ເພື່ອການພັດທະນາ ເຂົ້ານຳ.

## 1.4. ການປະເມີນຄູ່ຮ່ວມງານ

### 1.4.1. ອົງການ ສປຊ ເພື່ອການພັດທະນາ (UNDP)

ການສະໜັບສະໜູນຂອງ ອົງການ ສປຊ ເພື່ອການພັດທະນາ ໃຫ້ແກ່ຂະແໜງການ ລບຕ ໃນ ສປປ ລາວ ແມ່ນໄດ້ເນັ້ນໜັກໃສ່ສອງຂົງເຂດຕົ້ນຕໍດັ່ງຕໍ່ໄປນີ້: 1) ເພື່ອສ້າງຄວາມເຂັ້ມແຂງດ້ານຂີດຄວາມສາມາດ ແລະ ຄວາມອາດສາມາດທາງວິຊາການໃຫ້ແກ່ ຄຊກລ, ລວມທັງໃຫ້ ພວກເຂົາສາມາດຄຸ້ມຄອງ ແລະ ຊີ້ນຳຂະແໜງການດັ່ງກ່າວໄດ້ ໂດຍອີງໃສ່ເປົ້າໝາຍຍຸດທະສາດແຫ່ງຊາດ ແລະ ຮັບປະກັນໃຫ້ການດຳເນີນວຽກງານ ລບຕ ຂອງ ສປປ ລາວ ສອດຄ່ອງກັບ ປພຍ ລຳດັບທີ 18: ຊີວິດປອດໄພຈາກ ລບຕ; ແລະ 2) ເພື່ອສະໜອງການສະໜັບສະໜູນດ້ານຂີດຄວາມສາມາດ ໃນການດຳເນີນວຽກງານສຳຫຼວດ ແລະ ເກັບກູ້, ໂດຍຜ່ານການສະໜັບສະໜູນ ຄກລ ແລະ ກອງກວດກູ້ ລບຕ ເພື່ອມະນຸດສະທຳຂອງ ກອງທັບປະຊາຊົນລາວ (ກອງຮ້ອຍ 58), ເຊິ່ງຈະເປັນການເລັ່ງລັດຂັ້ນຕອນທີ່ຈະນຳໄປສູ່ການເກັບກູ້ ລບຕ ໃນຊຸມຊົນຕ່າງໆທີ່ໄດ້ຮັບຜົນກະທົບ.[8]

ເອກະສານແຜນງານການຮ່ວມມື ໂດຍລວມຂອງ ອົງການ ສປຊ ແມ່ນໄດ້ເນັ້ນໜັກໃສ່ການຮັບປະກັນໃຫ້ພາຍໃນປີ 2026, ປະຊາຊົນທີ່ອາໄສໃນ ສປປ ລາວ ໄດ້ຮັບຜົນປະໂຫຍດຈາກການຂະຫຍາຍໂຕເສດຖະກິດທີ່ຍືນຍົງ ແລະ ກວມລວມ ແລະ ໃຫ້ພວກເຂົາມີຄວາມທົນທານຍິ່ງຂຶ້ນ

8 ອົງການ ສປຊ ເພື່ອການພັດທະນາ, ຂອບໜ້າວຽກ: ທີ່ປຶກສາສາກົນເພື່ອດຳເນີນການປະເມີນຜົນກະທົບ ໃຫ້ແກ່ການສະໜັບສະໜູນເຂົ້າໃນວຽກງານເກັບກູ້ ລບຕ ຂອງ ອົງການ ສປຊ ເພື່ອການພັດທະນາ.

ຕໍ່ຄວາມສ່ຽງຈາກສະພາວະການປ່ຽນແປງດິນຟ້າອາກາດ, ໄພທຳມະຊາດ ແລະ ລບຕ, ໃນຂະນະດຽວກັນກໍ່ຮັບປະກັນໃຫ້ສະຖາບັນຂອງລັດ ມີຄວາມໂປ່ງໃສ, ກວມລວມ, ແລະ ມີຄວາມຮັບຜິດຊອບຕໍ່ປະຊາຊົນຫຼາຍຂຶ້ນ.[9]

### 1.4.2. ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ)

ຄຊກລ ແມ່ນສະຖາບັນພາກລັດພາຍໃຕ້ ລັດຖະບານ ສປປ ລາວ, ທີ່ຖືກສ້າງຕັ້ງຂຶ້ນໃນປີ 2005 ແລະ ດຳເນີນການໃນປີ 2006. ຄຊກລ ມີ ໜ້າທີ່ຮັບຜິດຊອບໃນການຄຸ້ມຄອງ ແລະ ປະສານວຽກງານຂອງຂະແໜງການເກັບກູ້ ລບຕ ໃນ ສປປ ລາວ ແລະ ເຮັດໜ້າທີ່ເປັນຈຸດປະສານງານຫຼັກໃຫ້ແກ່ຂະແໜງການດັ່ງກ່າວ. ອົງການນີ້ມີພັນທະໃນການສ້າງທິດທາງ ແລະ ນະໂຍບາຍຍຸດທະສາດ; ຮັບຮອງເອົາຜູ້ດຳເນີນງານ; ປະສານງານດ້ານການເຄື່ອນໄຫວວຽກໂຕຈິງ; ສ້າງຂີດຄວາມສາມາດພາຍໃນຂະແໜງການ; ຄຸ້ມຄອງ ແລະ ວິເຄາະຂໍ້ມູນ; ຄຸ້ມຄອງຄຸນນະພາບ; ແລະ ສະໜອງການສະໜັບສະໜູນເຂົ້າໃນການຈັດຕັ້ງປະຕິບັດສົນທິສັນຍາສາກົນ.[10] ຄຊກລ ປະກອບມີ 7 ໜ່ວຍງານຄື: ໜ່ວຍງານເກັບກູ້, ໜ່ວຍງານການສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ, ໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ, ໜ່ວຍງານຄຸ້ມຄອງຂໍ້ມູນ, ໜ່ວຍງານຄຸ້ມຄອງຄຸນນະພາບ, ໜ່ວຍງານປະຊາສຳພັນ, ແລະ ໜ່ວຍງານຮ່ວມມືສາກົນ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດສົນທິສັນຍາ.[11] ຄະນະບໍລິຫານງານຂອງ ຄຊກລ ປະກອບມີໂຕແທນຈາກກະຊວງຕ່າງໆ, ໂດຍມີ ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເຮັດໜ້າທີ່ເປັນປະທານ.[12]

ຄຊກລ ມີວິໄສທັດດັ່ງຕໍ່ໄປນີ້: *ຮັບປະກັນໃຫ້ ສປປ ລາວ ປາສະຈາກໄພຄຸກຄາມຈາກ ລບຕ, ບ່ອນທີ່ບຸກຄົນ ແລະ ຊຸມຊົນຕ່າງໆ ສາມາດດຳລົງຊີວິດຢູ່ໄດ້ ພາຍໃຕ້ສະພາບແວດລ້ອມທີ່ປອດໄພ ທີ່ຊ່ວຍປະກອບສ່ວນຕໍ່ການພັດທະນາ ແລະ ບ່ອນທີ່ຜູ້ເຄາະຮ້າຍຈາກ ລບຕ ບໍ່ຖືກລະເລີຍຈາກສັງຄົມ ທັງຍັງຮັບປະກັນໃຫ້ຄວາມຕ້ອງການຂອງພວກເຂົາຖືກຕອບຮັບ.*

### 1.4.3. ຄກລ ແລະ ກອງຮ້ອຍ 58

ການປະເມີນຜົນດັ່ງກ່າວ ແມ່ນແນໃສ່ວຽກງານການສຳຫຼວດ ແລະ ການປະເມີນຜົນຂອງ ຄກລ ເປັນຫຼັກ, ທີ່ໄດ້ຮັບການສະໜັບສະໜູນດ້ານການເງິນທຶນຈາກ ປະເທດນູແວນເຊລັງ ໃຫ້ເຄື່ອນໄຫວວຽກໃນ ແຂວງຊຽງຂວາງ, ແລະ ກອງງກວດກູ້ ລບຕ ເພື່ອມະນຸດສະທຳຂອງ ກອງທັບປະຊາຊົນລາວ, ກອງຮ້ອຍ 58, ທີ່ມີການເຄື່ອນໄຫວວຽກຢູ່ ແຂວງບໍລິຄຳໄຊ ໂດຍເງິນທຶນທີ່ໄດ້ຮັບຈາກ ອົງການ KOICA.

ຄກລ ແມ່ນ ອົງການ ເກັບກູ້ ລບຕ ແຫ່ງຊາດ ຂອງ ລັດຖະບານ ສປປ ລາວ, ທີ່ມີການດຳເນີນງານມາຕັ້ງແຕ່ປີ 1996 ແລະ ມີການເຄື່ອນໄຫວວຽກພາຍໃນ 9 ແຂວງທີ່ມີ ລບຕ ຕົກຄ້າງຢູ່ຫຼາຍທີ່ສຸດ, ລວມທັງ ແຂວງຊຽງຂວາງ. ຄກລ ແມ່ນໄດ້ຖືກສ້າງຕັ້ງຂຶ້ນດ້ວຍການສະໜັບສະໜູນຈາກ ອົງການ ສປຊ ເພື່ອການພັດທະນາ, ອົງການ ສປຊ ກອງທຶນສຳລັບເດັກ, ແລະ ຄູ່ຮ່ວມງານອື່ນໆ, ແລະ ມີໜ້າທີ່ໃນການດຳເນີນການສຳຫຼວດ, ເກັບກູ້, ຕິດຕາມ ແລະ ໃຫ້ການສຶກສາກ່ຽວກັບຄວາມສ່ຽງຂອງ ລບຕ. ອົງການດັ່ງກ່າວດຳເນີນການກວດກູ້ທີ່ດິນ ເພື່ອຈຸດປະສົງດ້ານການປູກຝັງ ແລະ ການດຳລົງຊີວິດຂອງຊຸມຊົນ ລວມໄປເຖິງເພື່ອຈຸດປະສົງອື່ນໆດ້ານການພັດທະນາ.

ກອງຮ້ອຍ 58 ແມ່ນໜ່ວຍງານກວດກູ້ ລບຕ ເພື່ອມະນຸດສະທຳຂອງ ກອງທັບປະຊາຊົນລາວ. ກອງຮ້ອຍ 58 ປະກອບມີທັງໝົດ 7 ທີມງານຄື: 2 ທີມງານການສຶກສາຄວາມສ່ຽງໄພຈາກລະເບີດບໍ່ທັນແຕກ (EORE), 1 ທີມງານສຳຫຼວດທີ່ບໍ່ແມ່ນວິຊາການ, 1 ທີມງານສຳຫຼວດດ້ານວິຊາການ, ແລະ 3 ທີມງານເກັບກູ້. ໜ່ວຍງານດັ່ງກ່າວໄດ້ດຳເນີນການສຳຫຼວດ ແລະ ເກັບກູ້ລະເບີດຢູ່ ແຂວງບໍລິຄຳໄຊ ມາຕັ້ງແຕ່ປີ 2017 ໂດຍໄດ້ຮັບການສະໜັບສະໜູນຈາກ ອົງການ ສປຊ ເພື່ອການພັດທະນາ ແລະ ທຶນຈາກ ອົງການ KOICA.

---

9 ອົງການ ສປຊ, "ເອກະສານແຜນງານການຮ່ວມມືສຳລັບ ສປປ ລາວ, 2022-2026," ລົງວັນທີ: 2 ກໍລະກົດ 2021, ເລກທີ: DP/DCP/LAO/4.

10 ຄຊກລ, "ກ່ຽວກັບພວກເຮົາ: ກ່ຽວກັບ ຄຊກລ," ເຂົ້າເບິ່ງວັນທີ 13 ຕຸລາ 2022.

11 ຄຊກລ, "ໜ່ວຍງານ," ເຂົ້າເບິ່ງວັນທີ 13 ຕຸລາ 2022.

12 "ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄຊກລ ດ້ານ ລບຕ ໃນ ສປປ ລາວ," ເລກທີ: 67/ນຍ, ລົງວັນທີ 12 ກຸມພາ 2018.

## 2. ຄວາມເປັນມາ ແລະ ສະພາບການ

### 2.1. ການຕົກຄ້າງຂອງ ລບຕ

ສປປ ລາວ ແມ່ນປະເທດທີ່ມີລະດັບການຕົກຄ້າງຂອງສິ່ງເສດເຫຼືອຈາກ ລບຕ ສູງທີ່ສຸດໃນໂລກ, ອັນເປັນຜົນມາຈາກ ສົງຄາມອິນດູຈີນ ໃນລະຫວ່າງຊຸມປີ 1960 ແລະ 1970, ທີ່ ສ. ອາເມລິກາ ມີປະຕິບັດການຖິ້ມລະເບີດທາງອາກາດທີ່ຫຼາຍທີ່ສຸດໃນປະຫວັດສາດ. ຂໍ້ມູນດ້ານລະເບີດໄດ້ຊີ້ໃຫ້ເຫັນວ່າໃນທົ່ວ ສປປ ລາວ ມີພື້ນທີ່ປະມານ 70,000 ແຫ່ງຕົກເປັນເປົ້າໝາຍຂອງການຖິ້ມລະເບີດດັ່ງກ່າວ, ແລະ ມີຈໍານວນລູກລະເບີດກວມຫຼາຍກວ່າ 2 ລ້ານໂຕນ, ລວມທັງລະເບີດລູກຫວ່ານຂະໜາດນ້ອຍ (ທີ່ປະຊາຊົນທ້ອງຖິ່ນເອີ້ນວ່າບົ່ມບີ້) ຫຼາຍກວ່າ 270 ລ້ານລູກ, ຖືກນໍາໃຊ້ໃນພື້ນທີ່ດັ່ງກ່າວລະຫວ່າງປີ 1964-1973. ຍັງບໍ່ທັນຮູ້ຈໍານວນແນ່ນອນຂອງລະເບີດທີ່ຍັງບໍ່ທັນແຕກເທື່ອ. ປະເພດຂອງລະເບີດທີ່ພົບເຫັນໄດ້ທົ່ວໄປຫຼາຍທີ່ສຸດໃນ ລາວ ລວມມີ BLU 26, BLU 3B, BLU 61, ແລະ BLU 63.[14]

ມີການລາຍງານວ່າທັງ 18 ແຂວງ[15] ໃນ ສປປ ລາວ ພົບການຕົກຄ້າງຂອງ ລບຕ ແລະ ໃນນັ້ນ 15 ແຂວງພົບການຕົກຄ້າງຂອງສິ່ງເສດເຫຼືອຈາກລະເບີດລູກຫວ່ານ, ໂດຍ 9 ແຂວງມີລະດັບການຕົກຄ້າງຫລາຍຄື: ອັດຕະປື, ຈໍາປາສັກ, ຫົວພັນ, ຄໍາມ່ວນ, ຫຼວງພະບາງ, ສາລາວັນ, ສະຫວັນນະເຂດ, ເຊກອງ, ແລະ ຊຽງຂວາງ.[16] ຈຸດທີ່ມີການຕົກຄ້າງຫລາຍແມ່ນຢູ່ ແຂວງຊຽງຂວາງ ແລະ ຕາມເສັ້ນທາງໂຮຈິມິນເດີມທາງທິດຕາເວັນອອກຂອງປະເທດ ຕາມແນວເຂດຊາຍແດນກັບ ຫວຽດນາມ.[17]

ສິ່ງເສດເຫຼືອຈາກລະເບີດລູກຫວ່ານ ແລະ ລບຕ ເຮັດໃຫ້ປະຊາຊົນກວມ 50,899 ຄົນໃນ ສປປ ລາວ ຕ້ອງເສຍຊີວິດ ແລະ ບາດເຈັບໃນລະຫວ່າງປີ 1964 ແລະ 2021.[18] ຈໍານວນຜູ້ເສຍຊີວິດໃນແຕ່ລະປີໃນ ສປປ ລາວ ແມ່ນໄດ້ຫຼຸດລົງຢ່າງຫຼວງຫຼາຍຈາກ 304 ຄົນໃນປີ 2008, ມາເປັນ 99 ຄົນໃນປີ 2011.[19] ໃນປີ 2022, ຄຊກລ ໄດ້ບັນທຶກໄວ້ວ່າມີ 13 ອຸບັດເຫດ ແລະ ຜູ້ປະສົບເຄາະຮ້າຍ 17 ຄົນ (ບາດເຈັບ 14 ຄົນ ແລະ ເສຍຊີວິດ 3 ຄົນ), ແລະ ໃນປີ 2020 ແລະ 2019 ມີຜູ້ປະສົບເຄາະຮ້າຍ 33 ແລະ 26 ຄົນຕາມລໍາດັບ.[20] ໃນປີ 2021, ປາກົດມີຈໍານວນເຫດການເພີ່ມຂຶ້ນແບບຜິດປົກກະຕິເປັນ 35 ກໍລະນີ. ອຸບັດເຫດທີ່ກ່ຽວຂ້ອງກັບ ລບຕ ໃນ ສປປ ລາວ ມັກຈະເກີດຂຶ້ນໃນລະຫວ່າງການປູກຝັງ (ຕັດຫຍ້າ, ປູກຜັກ ແລະ ຂຸດຂຸມ), ຫຼື ການກໍ່ກອງໄຟເພື່ອສ້າງຄວາມອົບອຸ່ນ ຫຼື ເພື່ອແຕ່ງກິນ, ແລະ ການຈັບບາຍ ຫຼື ຫຼິ້ນກັບວັດຖຸດັ່ງກ່າວ. ຜູ້ເຄາະຮ້າຍສ່ວນໃຫຍ່ແມ່ນຜູ້ຊາຍ ແລະ ເດັກນ້ອຍ, ໂດຍສະເພາະເດັກຊາຍ. ໃນປີ 2022, ຜູ້ເສຍຊີວິດປະກອບມີເດັກຊາຍ 7 ຄົນ, ຜູ້ຊາຍ 7 ຄົນ ແລະ ແມ່ຍິງ 3 ຄົນ, ແລະ ໃນປີ 2021, ມີຜູ້ເສຍຊີວິດ 63 ຄົນ, ຜູ້ຊາຍ 23 ຄົນ, ເດັກຊາຍ 22 ຄົນ, ແມ່ຍິງ 11 ຄົນ ແລະ ເດັກຍິງ 7 ຄົນ. ໃນເດືອນກຸມພາ 2021, ມີການລາຍງານເຫດການໜຶ່ງຕັ້ງຢູ່ ແຂວງວຽງຈັນ, ໂດຍມີຜູ້ເສຍຊີວິດເປັນເດັກ 2 ຄົນ ແລະ ຜູ້ບາດເຈັບອີກ 3 ຄົນຈາກລະເບີດລູກຫວ່ານຂະໜາດນ້ອຍ, ໂດຍທັງໝົດມີອາຍຸຕໍ່າກວ່າ 10 ຄົນ.[21]

---

13 ລັດຖະສະພາ ສ. ອາເມລິກາ, "ບັນທຶກການຖິ້ມລະເບີດຂອງ ສ. ອາເມລິກາໃນ ລາວ, 1964-1973, ບັນທຶກລັດຖະສະພາ," 14 ພຶດສະພາ 1975; ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານຂອງ ສປປ ລາວ ມາດຕາທີ 7 ບົດລາຍງານ (ສໍາລັບປີປະຕິທິນ 2019), ຟອມ F, ໜ້າທີ 4.

14 ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານຂອງ ສປປ ລາວ ມາດຕາທີ 4 ກໍານົດການເສີມຂະຫຍາຍຄໍາຮ້ອງ, ພາກ B, ການບັນຍາຍລະອຽດ, 26 ກຸມພາ 2019, ໜ້າທີ 5; ແລະ ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານຂອງ ສປປ ລາວ ມາດຕາທີ 7 ບົດລາຍງານ (ສໍາລັບປີປະຕິທິນ 2019), ຟອມ F, ໜ້າທີ 7.

15 ໂດຍທາງການແລ້ວ, ສປປ ລາວ ມີ 17 ແຂວງ ແລະ ໜຶ່ງນະຄອນຫຼວງ, ນະຄອນຫຼວງວຽງຈັນ.

16 ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານຂອງ ສປປ ລາວ ມາດຕາທີ 4 ກໍານົດການເສີມຂະຫຍາຍຄໍາຮ້ອງ, ພາກ B, ການບັນຍາຍລະອຽດ, 26 ກຸມພາ 2019, ໜ້າທີ 1.

17 ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານຂອງ ສປປ ລາວ ມາດຕາທີ 7 ບົດລາຍງານ (ສໍາລັບປີປະຕິທິນ 2019), ຟອມ F; ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານຂອງ ສປປ ລາວ ມາດຕາທີ 4 ກໍານົດການເສີມຂະຫຍາຍຄໍາຮ້ອງ, 26 ກຸມພາ 2019.

18 ການຕິດຕາມລະເບີດຝັງດິນ ແລະ ລະເບີດລູກຫວ່ານ, ຂໍ້ມູນປະເທດ: ຜົນກະທົບ: ສປປ ລາວ, ປັບປຸງຄັ້ງລ່າສຸດວັນທີ 2 ທັນວາ 2020.

19 ຄຊກລ, "ກະດານຂໍ້ມູນ IMSMA," ເຂົ້າເບິ່ງວັນທີ 15 ທັນວາ 2022; ແລະ ການຕິດຕາມລະເບີດຝັງດິນ ແລະ ລະເບີດລູກຫວ່ານ, ຂໍ້ມູນປະເທດ: ຜົນກະທົບ: ສປປ ລາວ, ປັບປຸງຄັ້ງລ່າສຸດວັນທີ 2 ທັນວາ 2020.

20 ຄຊກລ, "ກະດານຂໍ້ມູນ IMSMA," ປັບປຸງ.

21 ມິລະຄົກຂອງສົງຄາມ, "ເດັກນ້ອຍ ແລະ ລະເບີດ: ເລື່ອງໜ້າຢ້ານຈາກລາວ," 24 ກຸມພາ 2021; ແລະ ຄຊກລ, "'ກະດານຂໍ້ມູນ IMSMA," ເຂົ້າເບິ່ງວັນທີ 15 ທັນວາ 2022 ແລະ 11 ມັງກອນ 2023.

## 2.2. ຂອບວຽກນະໂຍບາຍ

ຂອບວຽກນະໂຍບາຍໃນລະດັບຊາດຂອງ ສປປ ລາວ ສະແດງໃຫ້ເຫັນເຖິງຄວາມສໍາຄັນທີ່ ສປປ ລາວ ເນັ້ນໜັກໃສ່ວຽກງານການເກັບກູ້ ລບຕ ເພື່ອຊ່ວຍໃຫ້ສາມາດຫຼຸດຜ່ອນຄວາມທຸກຍາກ, ຍົກສູງຄວາມປອດໄພ ແລະ ຊີວິດການເປັນຢູ່ທີ່ດີ, ແລະ ສົ່ງເສີມການພັດທະນາເສດຖະກິດ-ສັງຄົມ. ສປປ ລາວ ແມ່ນລັດພາຄີຕໍ່ ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ທີ່ໄດ້ກໍານົດພັນທະສັນຍາໃນການທໍາລາຍສິ່ງເສດເຫຼືອທັງໝົດຈາກລະເບີດລູກຫວ່ານ ໃນຂົງເຂດພາຍໃຕ້ອໍານາດອະທິປະໄຕ ແລະ ການຄວບຄຸມຂອງຕົນບໍ່ໃຫ້ກາຍວັນທີ 31 ກໍລະກົດ 2025.[22]

### 2.2.1. ປພຍ 18

ໃນປີ 2016, ສປປ ລາວ ໄດ້ມີການຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ ລໍາດັບທີ 18, "ຊີວິດປອດໄພຈາກ ລບຕ," ທີ່ມີຄາດໝາຍແນໃສ່ຫຼຸດຜ່ອນອຸບັດເຫດ ແລະ ການເສຍຊີວິດ, ເກັບກູ້ທີ່ດິນທີ່ມີການຕົກຄ້າງຂອງ ລບຕ ໃນລະດັບສູງ ແລະ ໃນກຸ່ມບ້ານທຸກຍາກ, ແລະ ສະໜັບສະໜູນຄວາມຕ້ອງການຂອງຜູ້ລອດຊີວິດຈາກ ລບຕ.[23] ບັນດາໂຕຊີ້ວັດ ແລະ ຄາດໝາຍໃນປັດຈຸບັນຂອງ ປພຍ ລໍາດັບທີ 18 ມີດັ່ງລຸ່ມນີ້:[24]

| ຄາດໝາຍ | ໂຕຊີ້ວັດ | ຄວາມເຊື່ອມໂຍງຕໍ່ ປພຍ ອື່ນໆ |
|---|---|---|
| 18.1 ພາຍໃນປີ 2030, ຮັບປະກັນໃຫ້ສາມາດລຶບລ້າງຈໍານວນຜູ້ເຄາະຮ້າຍຈາກອຸບັດເຫດ ລບຕ ໃຫ້ໄດ້ຫຼາຍທີ່ສຸດ | 18.1.1 ລາຍງານຈໍານວນຂອງຜູ້ເສຍຊີວິດຈາກ ລບຕ ໂດຍແບ່ງເປັນກຸ່ມຕາມອາຍຸ<br>18.2.2 ອັດຕາສ່ວນຮ້ອຍຂອງປະຊາກອນໃນກຸ່ມບ້ານທີ່ມີການຕົກຄ້າງຂອງ ລບຕ (ແບ່ງເປັນກຸ່ມຕາມອາຍຸ, ເພດ ແລະ ຜູ້ພິການ) | ປພຍ 3: ສຸຂະພາບ ແລະ ຄວາມເປັນຢູ່ທີ່ດີ<br>ປພຍ 10: ຫຼຸດຜ່ອນຄວາມບໍ່ສະເໝີພາບ<br>ປພຍ 11: ສ້າງຕົວເມືອງ ແລະ ຊຸມຊົນທີ່ມີຄວາມຍືນຍົງ |
| 18.2 ພາຍໃນປີ 2030, ຮັບປະກັນໃຫ້ວຽກງານ ລບຕ ຄົງຄ້າງໄດ້ຮັບການດໍາເນີນງານ ແລະ ຮັບປະກັນໃຫ້ພື້ນທີ່ທີ່ມີ ລບຕ ທີ່ເປັນຂົງເຂດບຸລິມະສິດສູງ ແລະ ທຸກກຸ່ມບ້ານທີ່ຖືກກໍານົດເປັນ "ບ້ານທຸກຍາກ" ໄດ້ຮັບການເກັບກູ້ | 18.2.1 ອັດຕາສ່ວນຮ້ອຍຂອງຂົງເຂດອັນຕະລາຍ ທີ່ເປັນບຸລິມະສິດສູງ ທີ່ຍັງບໍ່ທັນໄດ້ຮັບການເກັບກູ້ເທື່ອ (ແບ່ງເປັນກຸ່ມບ້ານຕາມບຸລິມະສິດ)<br>18.2.2 ຈໍານວນຂອງບ້ານທີ່ຖືກກໍານົດເປັນ "ບ້ານທຸກຍາກ" ທີ່ມີຂົງເຂດໄດ້ຮັບຢືນຢັນວ່າອັນຕະລາຍ ທີ່ຍັງບໍ່ທັນໄດ້ຮັບການເກັບກູ້ເທື່ອ | ປພຍ 1: ລຶບລ້າງຄວາມທຸກຍາກ<br>ປພຍ 2: ລຶບລ້າງຄວາມອຶດຫິວ<br>ປພຍ 4: ການສຶກສາ<br>ປພຍ 11: ສ້າງຕົວເມືອງ ແລະ ຊຸມຊົນທີ່ມີຄວາມຍືນຍົງ |
| 18.3[25] ພາຍໃນປີ 2030, ຮັບປະກັນໃຫ້ສາມາດຕອບສະໜອງໄດ້ ຕໍ່ຄວາມຕ້ອງການຂອງຜູ້ລອດຊີວິດ ແລະ ຜູ້ປະສົບເຄາະຮ້າຍຈາກ ລບຕ ທີ່ລະບຸໄວ້ທັງໝົດ ໃນດ້ານສຸຂະພາບ, ແລະ ໃຫ້ມີການສະໜັບສະໜູນດ້ານການດໍາລົງຊີວິດ/ການຈ້າງງານ ແກ່ກຸ່ມຜູ້ລອດຊີວິດທີ່ມີຄວາມທຸກຍາກ ແລະ ຄວາມສ່ຽງສູງທີ່ສຸດ | 18.3.1 ອັດຕາສ່ວນຂອງຜູ້ລອດຊີວິດຈາກ ລບຕ ໃນກຸ່ມອາຍຸເຮັດວຽກ ທີ່ບໍ່ສາມາດສ້າງລາຍຮັບໄດ້ພຽງພໍ ແຕ່ມີການເຂົ້າເຖິງຄວາມໝັ້ນຄົງດ້ານລາຍຮັບພື້ນຖານ<br>18.3.2 ອັດຕາສ່ວນຮ້ອຍຂອງຜູ້ລອດຊີວິດ ແລະ ຜູ້ປະສົບເຄາະຮ້າຍຈາກ ລບຕ ທີ່ຖືກເຊື່ອມສານເຂົ້າໃນບໍລິການດ້ານສຸຂະພາບ, ການສຶກສາ, ແລະ ການຈ້າງງານ | ປພຍ 3: ສຸຂະພາບ ແລະ ຄວາມເປັນຢູ່ທີ່ດີ<br>ປພຍ 5: ມີຄວາມສະເໝີພາບຍິງຊາຍ<br>ປພຍ 8: ມີວຽກເຮັດງານທໍາ ແລະ ເສດຖະກິດມີການຂະຫຍາຍໂຕ<br>ປພຍ 10: ຫຼຸດຜ່ອນຄວາມບໍ່ສະເໝີພາບ |

22 ເບິ່ງ, "ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ: ຂໍ້ມູນປະເທດລາວ," 18 ສິງຫາ 2022.

23 ຄຊກລ, "ບົດລາຍງານປະຈໍາປີ 2021 ຂອງຂະແໜງການ ລບຕ," 2022.

24 ຄັດຈ້ອນມາຈາກ Rebecca Roberts ແລະ ກຽງໄກ ອຸມະນີ, "ກ້າວໄປສູ່ການບັນລຸ ປພຍ ລໍາດັບທີ 18: ການລຶບລ້າງ ລບຕ ທີ່ເປັນອຸປະສັກຕໍ່ການພັດທະນາໃນ ສປປ ລາວ," ອົງການ ສປຊ ເພື່ອການພັດທະນາ, 13 ກັນຍາ 2021.

25 ຜູ້ລອດຊີວິດໝາຍເຖິງຜູ້ທີ່ເຄີຍໄດ້ຮັບບາດເຈັບຈາກອຸບັດເຫດລະເບີດແຕກ. ຜູ້ເຄາະຮ້າຍໝາຍເຖິງຍາດພີ່ນ້ອງຂອງຜູ້ທີ່ເສຍຊີວິດ ແລະ, ດ້ວຍເຫດນີ້, ຈຶ່ງຕ້ອງການການຊ່ວຍເຫຼືອ.

### 2.2.2. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, 2021-2025

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 ສໍາລັບປີ 2021-2025, ທີ່ໄດ້ຮັບການຮັບຮອງໂດຍ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໃນເດືອນມີນາ 2021, ລວມມີຄາດໝາຍ 5 ປີ ແລະ ໂຕຊີ້ວັດສໍາລັບວຽກງານການເກັບກູ້ ແລະ ການສໍາຫຼວດ ພາຍໃຕ້ແຜນວຽກຈຸດສຸມທີ 3 ຂອງແຜນການດັ່ງກ່າວຄື: ຍົກສູງຊີວິດການເປັນຢູ່ທີ່ດີໃຫ້ແກ່ປະຊາຊົນ.[26] ແຜນການດັ່ງກ່າວໄດ້ຖືເອົາການຕົກຄ້າງຂອງ ລບຕ ເປັນບັນຫາບູລິມະສິດສູງ ທີ່ສິ່ງຜົນສະທ້ອນອັນສໍາຄັນຕໍ່ການຫຼຸດຜ່ອນຄວາມທຸກຍາກ, ການນໍາໃຊ້ທີ່ດິນເພື່ອການຜະລິດກະສິກໍາ, ການຢູ່ອາໄສ, ການທ່ອງທ່ຽວ, ຫຼື ການເຂົ້າເຖິງຊັບພະຍາກອນທໍາມະຊາດ, ທີ່ໄດ້ສ້າງບັນຫາທ້າທາຍໃຫຍ່ຫຼວງ ຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ເປັນໄພຄຸກຄາມຕໍ່ຊີວິດມະນຸດ. ແຜນການດັ່ງກ່າວຍັງເນັ້ນໃຫ້ເຫັນອີກວ່າ ເຖິງວຽກງານການເກັບກູ້ ລບຕ ໃນທີ່ດິນປູກຝັງ, ທີ່ດິນກໍ່ສ້າງ ແລະ ຂົງເຂດໂຄງການພັດທະນາອື່ນໆ ຈະມີຄວາມຄືບໜ້າທີ່ດີແລ້ວກໍ່ຕາມ, ແຕ່ຈໍານວນຂອງພື້ນທີ່ທີ່ໄດ້ຮັບການເກັບກູ້ ລບຕ ໄປແລ້ວນັ້ນ ກໍ່ຍັງຄົງ ບໍ່ພຽງພໍເພື່ອໃຫ້ຕອບສະໜອງໄດ້ຕໍ່ຄວາມຕ້ອງການ.[27]

ແຜນການດັ່ງກ່າວປະກອບມີຄາດໝາຍ 5 ປີ ແລະ ໂຕຊີ້ວັດສໍາລັບວຽກງານການເກັບກູ້ ແລະ ການສໍາຫຼວດດັ່ງຕໍ່ໄປນີ້:

- ເພື່ອດໍາເນີນການສໍາຫຼວດທີ່ບໍ່ເປັນວິຊາການ ເພື່ອລະບຸຂົງເຂດຢັ້ງຢືນອັນຕະລາຍ (CHA) ໃນ 2,776 ບ້ານ, ແລະ ດໍາເນີນການສໍາຫຼວດທາງວິຊາການເພື່ອລະບຸ CHA ໃນພື້ນທີ່ 250,000 ເຮັກຕ້າ, ປະມານ 50,000 ເຮັກຕ້າໂດຍສະເລ່ຍຕໍ່ປີ.
- ເພື່ອເກັບກູ້ ລບຕ ໃນທີ່ດິນປູກຝັງ, ພື້ນທີ່ຊຸມຊົນ ແລະ ສູນກາງທາງເສດຖະກິດກວມ 50,000 ເຮັກຕ້າ, ປະມານ 10,000 ເຮັກຕ້າໂດຍປະມານຕໍ່ປີ.

ຄາດໝາຍສໍາລັບວຽກງານການສຶກສາອົບຮົມດ້ານຄວາມສ່ຽງ ແລະ ການຊ່ວຍເຫຼືອຜູ້ເຄາະຮ້າຍ ກໍ່ຖືກລວມເຂົ້າໃນແຜນການດັ່ງກ່າວເຊັ່ນກັນ.

ຄາດໝາຍການເກັບກູ້, ເພື່ອໃຫ້ເກັບກູ້ໄດ້ປະມານ 10,000 ເຮັກຕ້າໂດຍສະເລ່ຍ (100 ກມ$^2$) ຕໍ່ປີສໍາລັບທີ່ດິນ ເພື່ອຈຸດປະສົງດ້ານການພັດທະນາເສດຖະກິດ-ສັງຄົມ, ຈະຕ້ອງໄດ້ອາໄສຂີດຄວາມສາມາດເພີ່ມຂຶ້ນ ເພື່ອໃຫ້ສາມາດດໍາເນີນວຽກງານການເກັບກູ້ໄດ້ຢ່າງມີປະສິດທິພາບສູງຂຶ້ນ. ໃນຊ່ວງ 5 ປີທີ່ຜ່ານມາ, ຈາກ 2017-2021, ສປປ ລາວ ໄດ້ເກັບກູ້ໄປແລ້ວທັງໝົດ 280.41 ກມ$^2$, ປະມານ 56 ກມ$^2$ໂດຍສະເລ່ຍຕໍ່ປີ.[28] ໃນປີ 2021, ມີການລາຍງານວ່າ ສປປ ລາວ ໄດ້ເກັບກູ້ ລບຕ ໄປແລ້ວ 45.57 ກມ$^2$.[29]

### 2.2.3. ເສັ້ນທາງກ້າວສູ່ຄວາມປອດໄພ III, 2021-2030

ຍຸດທະສາດຂະແໜງການ ລບຕ ແຫ່ງຊາດສະບັບໃໝ່, ເສັ້ນທາງກ້າວສູ່ຄວາມປອດໄພ III, 2021-2030, ແມ່ນໄດ້ຖືກສ້າງຂຶ້ນພາຍໃຕ້ການນໍາພາຂອງ ຄຊກລ.[30] ນີ້ແມ່ນຍຸດທະສາດຂະແໜງການສະບັບທີ 3 ແລ້ວ, ພາຍຫຼັງ ເສັ້ນທາງກ້າວສູ່ຄວາມປອດໄພ II, 2011-2020, ແລະ ເສັ້ນທາງກ້າວສູ່ຄວາມປອດໄພ I, 2003-2010 ສິ້ນສຸດລົງ. ອົງການ ສປຊ ເພື່ອການພັດທະນາ ໄດ້ໃຫ້ການສະໜັບສະໜູນການສ້າງຍຸດທະສາດດັ່ງກ່າວ ແລະ ຂັ້ນຕອນຕ່າງໆທີ່ກ່ຽວຂ້ອງ ທີ່ລວມມີການປຶກສາຫາລືກັບຄູ່ຮ່ວມງານຕົ້ນຕໍ, ລວມທັງຜູ້ເຄື່ອນໄຫວວຽກງານເກັບກູ້ລະເບີດໃນລະດັບສາກົນ. ຍຸດທະສາດ ເສັ້ນທາງກ້າວສູ່ຄວາມປອດໄພ III ໄດ້ຖືກຮ່າງຂຶ້ນສໍາເລັດໃນເດືອນມິຖຸນາ 2022 ແລະ ໄດ້ຮັບການຮັບຮອງເອົາໂດຍລັດຖະບານ.

ຮ່າງຍຸດທະສາດ ເສັ້ນທາງກ້າວສູ່ຄວາມປອດໄພ III ໄດ້ກໍານົດຈຸດປະສົງໃຫ້ແກ່ລັດຖະບານ ແລະ ຄູ່ຮ່ວມພັດທະນາ ພ້ອມດ້ວຍເປົ້າໝາຍໃນການຫຼຸດຜ່ອນໄພຄຸກຄາມດ້ານມະນຸດສະທໍາ ແລະ ເສດຖະກິດ-ສັງຄົມ ທີ່ເກີດຈາກ ລບຕ. ມັນໄດ້ຖືກອອກແບບມາ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ CCM, ປພຍ 2030, ແລະ ແຜນການ 5 ປີຄັ້ງທີ 9. ຈຸດເນັ້ນໜັກຕົ້ນຕໍຂອງແຜນການໃໝ່ນີ້ ແມ່ນແນໃສ່ຮັບປະກັນໃຫ້ມີການໂຮມໂຕຢ່າງເຂັ້ມແຂງກັບກົນໄກການພັດທະນາ, ໂດຍສະເພາະໃນຂັ້ນແຂວງ, ແລະ ແນໃສ່ຮັບປະກັນໃຫ້ການດໍາເນີນງານຕ່າງໆ

---

26 ສປປ ລາວ, "ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 9 (2021-2025)," ນະຄອນຫຼວງວຽງຈັນ, ມີນາ 2021.

27 ສປປ ລາວ, "ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 9 (2021-2025)," ນະຄອນຫຼວງວຽງຈັນ, ມີນາ 2021, ໜ້າທີ 79.

28 ເບິ່ງ ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ຂອງ ສປປ ລາວ ມາດຕາທີ 7 ບົດລາຍງານ (ສໍາລັບປີປະຕິທິນ 2018-2022).

29 ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ຂອງ ສປປ ລາວ ມາດຕາທີ 7 ບົດລາຍງານ (ສໍາລັບປີງົບປະມານ 2021), ຟອມ F, ໜ້າທີ 13.

30 ອົງການ ສປຊ ເພື່ອການພັດທະນາ, "ເອກະສານຄວາມເປັນມາສໍາລັບການຢ້ຽມຢາມພາກສະໜາມຂອງຜູ້ໃຫ້ທຶນ ແລະ ສື່ມວນຊົນ," 31 ມີນາ- 2 ເມສາ 2021.

ເນັ້ນໜັກໃສ່ບຸລະມີສິດຂັ້ນຊຸມຊົນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການພັດທະນາ.[31] ວິໄສທັດໂດຍລວມປະກອບມີ ຄວາມປາດຖະໜາເຖິງສະພາບແວດລ້ອມທີ່ປອດໄພຍິ່ງຂຶ້ນ ສຳລັບປະຊາຊົນລາວ ແລະ ການເລັ່ງລັດການພັດທະນາເສດຖະກິດ-ສັງຄົມໃຫ້ແກ່ປະເທດ. ທັງ 4 ເປົ້າ ໝາຍ ແລະ ຄາດໝາຍຍ່ອຍຕ່າງໆນັ້ນ ລ້ວນແລ້ວແຕ່ມີຄວາມກ່ຽວພັນກັບ ການສຶກສາອົບຮົມດ້ານຄວາມສ່ຽງໄພຈາກ ລບຕ, ການເກັບກູ້, ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແລະ ການຄຸ້ມຄອງຂະແໜງການ ລບຕ. ຄາດໝາຍດັ່ງກ່າວແມ່ນເພື່ອ:

- ຫຼຸດຜ່ອນຈຳນວນຜູ້ເສຍຊີວິດຈາກ ລບຕ ໃຫ້ຕ່ຳກວ່າ 380 ຄົນໃນຊ່ວງ 10 ປີ (ໂດຍສະເລ່ຍແລ້ວໃຫ້ຕ່ຳກວ່າ 38 ຄົນຕໍ່ປີ)
- ດຳເນີນການສຳຫຼວດ ເພື່ອກຳນົດ CHA ໃຫ້ໄດ້ 250,000 ເຮັກຕ້າ
- ດຳເນີນການເກັບກູ້ ລບຕ ຈາກທີ່ດິນປູກຝັງ ແລະ ທີ່ດິນເພື່ອການພັດທະນາກວມ 100,000 ເຮັກຕ້າ
- ສະໜັບສະໜູນຜູ້ເຄາະຮ້າຍຈາກ ລບຕ ຈຳນວນ 11,400 ຄົນ, ລວມທັງການພັດທະນາຊີວິດການເປັນຢູ່ ເພື່ອຊ່ວຍໃຫ້ພວກເຂົາສາມາດໂຮມໂຕເຂົ້າໃນສັງຄົມໄດ້ດີຂຶ້ນ; ແລະ
- ໂຮມເອົາວຽກງານ ລບຕ ເຂົ້າໃນແຜນຂອງຂະແໜງການທີ່ກ່ຽວຂ້ອງ.[32]

## 2.3. ການສຳຫຼວດ ແລະ ການເກັບກູ້

ຍັງບໍ່ທັນຮູ້ຂອບເຂດການຕົກຄ້າງທັງໝົດຂອງ ລບຕ ໃນ ສປປ ລາວ ເທື່ອ, ເຖິງຢ່າງໃດກໍ່ຕາມນັບຕັ້ງແຕ່ປີ 2015 ເປັນຕົ້ນມາ, ອົງການປະຕິບັດງານ ລບຕ ກໍ່ໄດ້ມີການດຳເນີນ ການສຳຫຼວດສິ່ງເສດເຫຼືອຈາກລະເບີດລູກຫວ່ານ (CMRS) ທີ່ແນໃສ່ເພື່ອສ້າງການປະເມີນຜົນທີ່ອີງໃສ່ຫຼັກຖານ ກ່ຽວກັບຂອບເຂດການຕົກຄ້າງຂອງ ລບຕ ໃນບັນດາແຂວງທີ່ດຳເນີນການສຳຫຼວດນັ້ນ. ປັດຈຸບັນ, ກຳລັງດຳເນີນການສຳຫຼວດໃນ 6 ແຂວງ ໂດຍໄດ້ຮັບເງິນທຶນຈາກ ສ. ອາເມລິກາ ລວມທັງການສຳຫຼວດແບບຈຳກັດໃນອີກ 5 ແຂວງ. ໃນຊ່ວງທ້າຍເດືອນທັນວາ 2021, ໄດ້ມີການຢັ້ງຢືນພື້ນທີ່ອັນຕະລາຍ (CHA) ໂດຍຜ່ານການສຳຫຼວດໄປແລ້ວ 152,300 ເຮັກຕ້າ (1,523 ກມ$^2$).[33]

ການສຳຫຼວດດັ່ງກ່າວຈະສ້າງພື້ນຖານ ໃຫ້ສາມາດສົ່ງເສີມຄວາມກ້າວໜ້າຂອງວຽກງານການເກັບກູ້, ໂດຍຮັບປະກັນໃຫ້ວຽກງານການເກັບກູ້ສ່ວນໃຫຍ່ ຖືກດຳເນີນການໃນ CHA ບ່ອນທີ່ມີຫຼັກຖານຢັ້ງຢືນເຖິງການຕົກຄ້າງຂອງ ລບຕ.[34] ນັບຕັ້ງແຕ່ປີ 2021 ເປັນຕົ້ນມາ, ອົງການປະຕິບັດງານໄດ້ມີການຍົກສູງຂີດ/ຄວາມສາມາດດ້ານການເກັບກູ້ ແລະ ຫຼຸດຜ່ອນຂີດຄວາມສາມາດດ້ານການສຳຫຼວດລົງ. ໃນປີ 2021, ມີຈຳນວນທີມສຳຫຼວດທາງວິຊາການທັງໝົດ 57 ທີມ ແລະ ທີມເກັບກູ້ທັງໝົດ 147 ທີມໂດຍໄດ້ຮັບເງິນທຶນຈາກ ສ. ອາເມລິກາ. ພາຍໃນປີ 2024, ວາງແຜນໄວ້ວ່າຈະມີທີມສຳຫຼວດ 36 ທີມ ແລະ ທີມເກັບກູ້ 205 ທີມ.[35] ອີງຕາມ ຍຸດທະສາດຂະແໜງການ ລບຕ, ເສັ້ນທາງກ້າວສູ່ຄວາມປອດໄພ III, 2021-2030, ຄຊກລ ຈຶ່ງໄດ້ກຳນົດຄາດໝາຍການເກັບກູ້ໃຫ້ໄດ້ປະມານ 10,000 ເຮັກຕ້າ (100 ກມ$^2$) ໂດຍສະເລ່ຍຕໍ່ປີ ໃນທີ່ດິນເພື່ອການພັດທະນາເສດຖະກິດ-ສັງຄົມ.[36]

ເຖິງຢ່າງໃດກໍ່ຕາມ, ປັດຈຸບັນຍັງຄົງບໍ່ທັນມີການຈັດຕັ້ງປະຕິບັດນະໂຍບາຍ ຫຼື ມາດຕະຖານແຫ່ງຊາດ ເພື່ອໃຊ້ເຂົ້າໃນການກຳນົດບຸລິມະສິດແຫ່ງຊາດດ້ານການເກັບກູ້ລະເບີດເທື່ອ. ການຊີ້ນຳວຽກງານກຳນົດບຸລິມະສິດໃນປັດຈຸບັນ ແມ່ນຂ້ອນຂ້າງກວ້າງ ແລະ ມີລັກສະນະກະແຈກກະຈາຍ, ໂດຍຜູ້ດຳເນີນງານສ່ວນໃຫຍ່ ຍັງຄົງຈັດຕັ້ງປະຕິບັດແນວທາງຂອງໃຜລາວ, ດ້ວຍຂໍ້ມູນທີ່ໄດ້ຮັບຈາກອຳນາດການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ.37 ວຽກງານເກັບກູ້ໃນ CHA ທີ່ຖືກກຳນົດໄວ້ແລ້ວນັ້ນ ນອກຈາກຈະຕ້ອງສະແດງໃຫ້ເຫັນເຖິງຈຳນວນຂອງລະເບີດລູກຫວ່ານ ທີ່ສາມາດເກັບກູ້ໄດ້ຫຼາຍຂຶ້ນຕໍ່ເຮັກຕ້າ ແລະ ປະສິດທິພາບຂອງຜົນງານທີ່ດີຂຶ້ນແລ້ວນັ້ນ, ຍັງຕ້ອງຮັບປະກັນໃຫ້ການກຳນົດບຸລິມະສິດ ຢູ່ບົນພື້ນຖານຂອງຄວາມເຂົ້າໃຈທີ່ດີຂຶ້ນ ກ່ຽວກັບຜົນກະທົບຂອງການເກັບກູ້ ເພື່ອໃຫ້ຜົນໄດ້ຮັບດ້ານການພັດທະນາຈາກວຽກງານເກັບກູ້ດັ່ງກ່າວ ມີຄວາມເຂັ້ມແຂງຂຶ້ນຕື່ມ. ການພັດທະນາລະບົບກຳນົດບຸລິມະສິດ ຊຶ່ງເປັນພາກສ່ວນໜຶ່ງຂອງຂະບວນການວາງແຜນແຫ່ງຊາດ ແມ່ນໄດ້ຖືກລວມເປັນການດຳເນີນງານໜຶ່ງພາຍໃຕ້ ເປົ້າໝາຍຍຸດທະສາດທີ 2 ໃນ ຍຸດທະສາດຂະແໜງການ ລບຕ, ເສັ້ນທາງກ້າວສູ່ຄວາມປອດໄພ III. ບໍລິສັດ Tetra Tech ແລະ ອົງການ ສປຊ ເພື່ອການພັດທະນາ ກຳລັງໃຫ້ການສະໜັບສະໜູນ ຄຊກລ ໃນການພັດທະນາລະບົບກຳນົດບຸລິມະສິດ ໃນຂອບເຂດທົ່ວປະເທດ.

ອີງຕາມກະດານຂໍ້ມູນ IMSMA ຂອງ ຄຊກລ, ຕັ້ງແຕ່ປີ 1997 ຈົນຮອດທ້າຍປີ 2022, ໄດ້ມີການເກັບກູ້ລະເບີດໄປແລ້ວກວມ 772.70 ກມ$^2$ (77,270 ເຮັກຕ້າ) ໃນທົ່ວທັງ 15 ແຂວງ ແລະ ນະຄອນຫຼວງວຽງຈັນ, ໃນນັ້ນ 603.43 ກມ$^2$ (60,343 ເຮັກຕ້າ, 78 ສ່ວນຮ້ອຍ) ແມ່ນ

ທີ່ດິນປູກຝັງ ແລະ 169.27 ກມ$^2$ (16,927 ເຮັກຕ້າ, 22 ສ່ວນຮ້ອຍ) ແມ່ນທີ່ດິນສໍາລັບການພັດທະນາ. ມີ ລບຕ ຢ່າງໜ້ອຍກວມ 874,058 ອັນຖືກເກັບກູ້ ແລະ ທໍາລາຍ, ໃນນັ້ນ 591,326 ແມ່ນສິ່ງເສດເຫຼືອຈາກລະເບີດລູກຫວ່ານ, 1,196 ແມ່ນລະເບີດຝັງດິນ, 867 ແມ່ນລູກບົ່ມ, ແລະ 280,669 ແມ່ນລະເບີດອື່ນໆທີ່ຕົກຄ້າງຈາກປາງສົງຄາມ. ມີປະຊາຊົນກວມທັງໝົດ 5,123,174 ຄົນໄດ້ຮັບຜົນປະໂຫຍດຈາກການເກັບກູ້ດັ່ງກ່າວ.[38] ການເກັບກູ້ລະເບີດໃນທີ່ດິນປູກຝັງ ແມ່ນວຽກງານທີ່ເປັນບຸລິມະສິດຕົ້ນຕໍ, ເຊັ່ນດຽວກັນກັບການເກັບກູ້ລະເບີດອອກຈາກສິ່ງອໍານວຍຄວາມສະດວກ, ພື້ນຖານໂຄງລ່າງຂອງພາກສ່ວນການສຶກສາ, ຊຸມຊົນ ແລະ ລັດຖະບານ, ລວມໄປເຖິງສະຖານທີ່ທ່ອງທ່ຽວ.[39] ເຖິງຢ່າງໃດກໍ່ຕາມ, ໂຕເລກດັ່ງກ່າວໄດ້ສະແດງໃຫ້ເຫັນວ່າ ມີການເກັບກູ້ລະເບີດໃນພື້ນທີ່ປູກຝັງ ຫຼາຍກວ່າພື້ນທີ່ເພື່ອການພັດທະນາ.

---

31 ຂອບໜ້າວຽກ, ການປະເມີນຜົນກະທົບຂອງ ອົງການ ສປຊ ເພື່ອການພັດທະນາ ສໍາລັບໂຄງການເກັບກູ້ລະເບີດທີ່ໄດ້ຮັບການສະໜັບສະໜູນຈາກອົງການດັ່ງກ່າວ, 2022.

32 ຄຊກລ, "ແຜນຍຸດທະສາດແຫ່ງຊາດສໍາລັບຂະແໜງການ ລປຕ ໃນ ສປປ ລາວ 2021-2030, 'ເສັ້ນທາງກ້າວສູ່ຄວາມປອດໄພ III'," ນະຄອນຫຼວງວຽງຈັນ, ມິຖຸນາ 2022, ສະບັບແປບໍ່ເປັນທາງການ.

33 ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ຂອງ ສປປ ລາວ ມາດຕາທີ 7 ບົດລາຍງານ (ສໍາລັບປີປະຕິທິນ 2021), ຟອມ F, ໜ້າທີ 6; ສົນທິສັນຍາວ່າດ້ວຍການເກືອດຫ້າມອາວຸດທໍາມະດາບາງຊະນິດ (CCW) ອານຸສັນຍາທີ V ມາດຕາທີ 10 ບົດລາຍງານ (ສໍາລັບປີປະຕິທິນ 2021), ຟອມ A.

34 ຄຊກລ ສາມາດຮັບຮອງເອົາຂໍ້ຍົກເວັ້ນຂໍ້ນີ້ໄດ້ ໃນກໍລະນີທີ່ມີລູກຄ້າຈ້າງໃຫ້ດໍາເນີນການເກັບກູ້ ຫຼື ການເກັບກູ້ທີ່ດິນທັງໝົດທີ່ຈໍາເປັນຕໍ່ການດໍາເນີນໂຄງການພັດທະນາ.

35 ແຜນວາດສະແດງໂຕເລກໂດຍລວມຂອງ ທີມງານສໍາຫຼວດທາງວິຊາການ ແລະ ທີມງານເກັບກູ້ລະເບີດຂອງ ຄກລ, ອົງການແມັກ ແລະ ສະມາຄົມບໍ່ຫວັງຜົນກໍາໄລ ທີ່ໄດ້ຮັບເງິນທຶນຈາກ ສ. ອາເມລິກາ, 20 ຕຸລາ 2022.

36 ສປປ ລາວ, "ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 9 (2021-2025)," ນະຄອນຫຼວງວຽງຈັນ, ມີນາ 2021, ໜ້າທີ 79.

37 Katherine Sweet, "ນະໂຍບາຍ, ຂັ້ນຕອນ ແລະ ຫຼັກປະຕິບັດດ້ານການກໍານົດບຸລິມະສິດ ທີ່ກ່ຽວຂ້ອງກັບການເກັບກູ້ ລບຕ ໃນ ສປປ ລາວ," ຄຊກລ ແລະ GICHD, ກັນຍາ 2017.

38 ຄຊກລ, "ກະດານຂໍ້ມູນ IMSMA," ເຂົ້າເບິ່ງວັນທີ 19 ຕຸລາ 2022.

39 ຄຊກລ, "ແຜນຍຸດທະສາດແຫ່ງຊາດສໍາລັບຂະແໜງການ ລບຕ ໃນ ສປປ ລາວ 2021-2030: ເສັ້ນທາງກ້າວສູ່ຄວາມປອດໄພ III," ນະຄອນຫຼວງວຽງຈັນ, ມິຖຸນາ 2022, ສະບັບຮ່າງແປເປັນພາສາອັງກິດ.

# 3. ແນວທາງ ແລະ ວິທີການ

## 3.1. ວິທີການປະເມີນຜົນ

ການສຳຫຼວດຜົນກະທົບ ໄດ້ນຳໃຊ້ແນວທາງ ແລະ ວິທີການແບບປະສົມປະສານດ້ານຄຸນນະພາບ, ໂດຍສະເພາະ ການສຳພາດກຸ່ມຜູ້ໃຫ້ຂໍ້ມູນຕົ້ນຕໍ (KII), ການສຳພາດແບບເຄິ່ງໂຄງສ້າງ (SSI) ແລະ ການສົນທະນາກຸ່ມສະເພາະ (FGD), ພ້ອມທັງນຳໃຊ້ຂໍ້ມູນດ້ານປະລິມານເປັນສ່ວນເສີມ ໂດຍຜ່ານຂໍ້ມູນມືສອງຈາກການທົບທວນຄືນເອກະສານ, ຖານຂໍ້ມູນ IMSMA ຂອງ ຄຊກລ, ແລະ ຂໍ້ມູນຂັ້ນແຂວງ ແລະ ຂັ້ນເມືອງ. ເຄື່ອງມືການຄົ້ນຄວ້າດັ່ງກ່າວ ແມ່ນໄດ້ຖືກນຳສະເໜີໄວ້ໃນ ພາກເອກະສານຊ້ອນທ້າຍທີ 5.

ວິທີການຄົ້ນຄວ້າເຫຼົ່ານີ້ ແມ່ນແນໃສ່ເພື່ອເກັບກຳຂໍ້ມູນ "ອັນສົມບູນ," ເພື່ອຊ່ວຍໃຫ້ສາມາດສ້າງຄວາມເຂົ້າໃຈທີ່ເລິກເຊິ່ງ ແລະ ແຕກຕ່າງຍິ່ງຂຶ້ນ ກ່ຽວກັບຜົນກະທົບຂອງການຕົກຄ້າງຂອງ ລບຕ, ແລະ ຜົນກະທົບຂອງການເກັບກູ້ ແລະ ການສຳຫຼວດ ລບຕ ທີ່ມີຕໍ່ຄົວເຮືອນ ແລະ ຊຸມຊົນຕ່າງໆໃນ ແຂວງບໍລິຄຳໄຊ ແລະ ຊຽງຂວາງ. ເຄື່ອງມືການຄົ້ນຄວ້າດ້ານປະລິມານ ແລະ ທີ່ສົ່ງເສີມການມີສ່ວນຮ່ວມນີ້ ຊ່ວຍຊຸກຍູ້ໃຫ້ເກີດການປຶກສາຫາລື ແລະ ການໂອ້ລົມກັນກັບບັນດາຜູ້ເຂົ້າຮ່ວມການສຳຫຼວດໃນບັນຫາຕ່າງໆ. ຄຳຖາມເສີມຊ່ວຍໃຫ້ນັກຄົ້ນຄວ້າກະກຽມ ແລະ ຮັບປະກັນການສົນທະນາອັນເລິກເຊິ່ງ ກ່ຽວກັບຄວາມປ່ຽນແປງທີ່ຜູ້ຕອບບົດສຳຫຼວດສັງເກດເຫັນ ລວມທັງເຫດຜົນຕ່າງໆຂອງການປ່ຽນແປງດັ່ງກ່າວ.

ການຄົ້ນຄວ້າພາກສະໜາມ ເລີ່ມຂຶ້ນດ້ວຍການສຳພາດຜູ້ໃຫ້ຂໍ້ມູນຕົ້ນຕໍ ທີ່ມາຈາກອົງການຄຸ້ມຄອງແຫ່ງຊາດ, ອົງການປະຕິບັດງານເກັບກູ້ລະເບີດເພື່ອມະນຸດສະທຳ ແລະ ຄູ່ຮ່ວມພັດທະນາໃນລະດັບຊາດໃນ ນະຄອນຫຼວງວຽງຈັນ ເພື່ອປຶກສາຫາລືກ່ຽວກັບກົນໄກການປະເມີນຜົນກະທົບ ແລະ ການກຳນົດບຸລິມະສິດສຳລັບວຽກງານການເກັບກູ້ ແລະ ການສຳຫຼວດ.

ເວລາສ່ວນໜຶ່ງຖືກນຳໃຊ້ໄປກັບ ໜ່ວຍງານຄຸ້ມຄອງຂໍ້ມູນ ຂອງ ຄຊກລ ໃນການຄັດເລືອກເອົາເມືອງ ແລະ ບ້ານສຳລັບການຄົ້ນຄວ້າພາກສະ ໜາມ ແລະ ເພື່ອຂໍຮັບເອົາເອກະສານທີ່ຈຳເປັນ ຕໍ່ການສຳຫຼວດ, ການເກັບກູ້, ລວມທັງວຽກງານການເກັບລະເບີດເທິງໜ້າດິນ ໃນແຕ່ລະບ້ານທີ່ຖືກຄັດເລືອກ. ໜ່ວຍງານຄຸ້ມຄອງຂໍ້ມູນ ຂອງ ຄຊກລ ແມ່ນຜູ້ຮັບຜິດຊອບລວບລວມເອກະສານ ທີ່ກ່ຽວຂ້ອງກັບການເກັບກູ້ ແລະ ການສຳຫຼວດໃນແຕ່ລະບ້ານທີ່ພວກເຂົາໄປຢ້ຽມຢາມ.

ໃນຂັ້ນແຂວງ ແລະ ຂັ້ນເມືອງ, ການສຳພາດຜູ້ໃຫ້ຂໍ້ມູນຕົ້ນຕໍ ແມ່ນຖືກດຳເນີນການຮ່ວມກັບພະນັກງານລັດ ແລະ ກົມກອງທີ່ກ່ຽວຂ້ອງ ເພື່ອໃຫ້ເຂົ້າໃຈຂັ້ນຕອນການວາງແຜນສຳລັບການພັດທະນາ (ໂຄງການລົງທຶນພາກລັດ), ລວມໄປເຖິງວິທີໃນການໂຮມເອົາ ວຽກງານການສຳຫຼວດ ແລະ ການເກັບກູ້ ລບຕ ເຂົ້າໃນຂັ້ນຕອນການວາງແຜນ.

ໃນຂັ້ນບ້ານ, ການສຳພາດແມ່ນຖືກດຳເນີນການຮ່ວມກັບລູກບ້ານ ທີ່ອາໄສຢູ່ໃນເຂດຂອງການຕົກຄ້າງ, ລູກບ້ານທີ່ດິນປູກຝັງໃນຄົວເຮືອນຂອງຕົນ ໄດ້ຮັບການສຳຫຼວດແລ້ວ, ແລະ ລູກບ້ານທີ່ດິນປູກຝັງໃນຄົວເຮືອນຂອງຕົນ ໄດ້ຮັບການເກັບກູ້ແລ້ວ. ການສຳຫຼວດ ແລະ ການເກັບກູ້ລະເບີດອອກຈາກຊັບສິນຂອງຊຸມຊົນ ແລະ ໂຄງການພັດທະນາ ແມ່ນໄດ້ຖືກນຳໄປພິຈາລະນາຜ່ານ ການສົນທະນາກຸ່ມສະເພາະ.

ໃນກໍລະນີທີ່ເປັນໄປໄດ້, ກໍ່ໄດ້ມີການເກັບກຳເອົາຂໍ້ມູນດ້ານປະລິມານ ເພື່ອມາເປັນສ່ວນເສີມໃຫ້ແກ່ການວິເຄາະດ້ານຄຸນນະພາບ. ຂໍ້ມູນດ້ານປະລິມານດັ່ງກ່າວປະກອບມີ ຂໍ້ມູນທີ່ກ່ຽວຂ້ອງກັບຂອບເຂດຂອງການສຳຫຼວດ ແລະ ການເກັບກູ້, ຈຳນວນຂອງຜູ້ໄດ້ຮັບຜົນປະໂຫຍດ, ຈຳນວນອຸບັດເຫດ ແລະ ຈຳນວນຜູ້ເສຍຊີວິດ, ແລະ ຂໍ້ມູນທີ່ກ່ຽວຂ້ອງກັບຄວາມທຸກຍາກຂອງບ້ານ ແລະ ຄົວເຮືອນ.

ຂໍ້ມູນທີ່ເກັບກຳມານັ້ນໄດ້ຖືກແບ່ງອອກເປັນ 3 ສ່ວນ ເພື່ອສະໜອງພື້ນຖານດ້ານຫຼັກຖານອັນເຂັ້ມແຂງ ໃຫ້ແກ່ຜົນໄດ້ຮັບຂອງການຄົ້ນຄວ້າ ແລະ ການສັງລວມ. ຂອບວຽກການດຳລົງຊີວິດອັນຍືນຍົງ ແມ່ນໄດ້ຖືກນຳໃຊ້ເປັນຂອບວຽກຕົ້ນຕໍສຳລັບການວິເຄາະ.

ກອງປະຊຸມເພື່ອນຳສະເໜີຜົນໄດ້ຮັບ ແລະ ຂໍ້ແນະນຳເບື້ອງຕົ້ນ ແມ່ນໄດ້ຖືກຈັດຂຶ້ນທີ່ ຄຊກລ ໃນວັນທີ 25 ພະຈິກ 2022 ໂດຍມີຜູ້ຕາງໜ້າຈາກ ອົງການ ສປຊ ເພື່ອການພັດທະນາ, ຄຊກລ ແລະ ຄກລ ເຂົ້າຮ່ວມ. ນີ້ຖືເປັນໂອກາດໃນການປຶກສາຫາລືກ່ຽວກັບຜົນໄດ້ຮັບ ແລະ ຂໍ້ແນະນຳຕ່າງໆທີ່ເກີດຂຶ້ນ, ແລະ ບາງປະເດັນທີ່ຖືກຍົກຂຶ້ນມາໃນລະຫວ່າງກອງປະຊຸມຄັ້ງນີ້ ກໍ່ໄດ້ຖືກຮັບຮອງເອົາ ແລະ ຖືກລວມເຂົ້າໄວ້ໃນບົດລາຍງານສະບັບສຸດທ້າຍ.

## 3.2. ການຄັດເລືອກເອົາເມືອງ ແລະ ບ້ານ

ການຄົ້ນຄວ້າແມ່ນໄດ້ຖືກດຳເນີນການໃນສອງແຂວງ ບ່ອນທີ່ ອົງການ ສປຊ ເພື່ອການພັດທະນາ ສະໜັບສະໜູນໃຫ້ມີການສຳຫຼວດ ແລະ ການເກັບກູ້ລະເບີດ, ເຊັ່ນ: ແຂວງບໍລິຄຳໄຊ ໃນບັນດາຂົງເຂດທີ່ ກອງຮ້ອຍ 58 ຂອງ ກອງທັບປະຊາຊົນລາວ ດຳເນີນການສຳຫຼວດ ແລະ ການເກັບກູ້ພາຍໃຕ້ເງິນທຶນຈາກ ອົງການ KOICA, ແລະ ໃນແຂວງຊຽງຂວາງ ໃນຂົງເຂດທີ່ ຄກລ ເຄື່ອນໄຫວວຽກງານພາຍໃຕ້ເງິນທຶນຈາກ ປະເທດນູແວນເຊລັງ. ເມືອງຕ່າງໆແມ່ນຖືກຄັດເລືອກເອົາ ບົນພື້ນຖານຂອງການວິເຄາະ ວຽກງານການເກັບກູ້ ແລະ ການສຳຫຼວດ.

ໃນແຂວງບໍລິຄຳໄຊ, ໜ່ວຍງານເກັບກູ້ລະເບີດເພື່ອມະນຸດສະທຳ ຂອງ ກອງທັບປະຊາຊົນລາວ, ກອງຮ້ອຍ 58, ໄດ້ເລີ່ມຕົ້ນດຳເນີນງານມາຕັ້ງແຕ່ປີ 2017 ໃນສອງເມືອງຄື: ຄຳເກີດ ແລະ ວຽງທອງ. ໃນເມືອງຄຳເກີດ, ກອງຮ້ອຍ 58 ໄດ້ດຳເນີນວຽກງານການສຳຫຼວດ ແລະ ການເກັບກູ້ ແລະ ອີກ 21 ວຽກງານໃນ 11 ບ້ານພາຍໃຕ້ເງິນທຶນຈາກ ອົງການ KOICA.[40] ທັງທີ່ດິນຟູປຝັງ ແລະ ທີ່ດິນເພື່ອການພັດທະນາ ແມ່ນໄດ້ຮັບການເກັບກູ້ລະເບີດແລ້ວ. ກອງຮ້ອຍ 58, ໃນໄລຍະຂອງການຄົ້ນຄວ້ານີ້, ບໍ່ໄດ້ມີການເຄື່ອນໄຫວວຽກງານເກັບກູ້ອັນໃດເລີຍໃນ ເມືອງວຽງທອງ.

| ເມືອງ | ຈຳນວນບ້ານ | ຈຳນວນວຽກ | ເນື້ອທີ່ດິນປູກຝັງ ຕາແມັດ | ເນື້ອທີ່ດິນພັດທະນາ ຕາແມັດ | ເນື້ອທີ່ດິນທັງໝົດ ຕາແມັດ |
|---|---|---|---|---|---|
| ຄຳເກີດ | 11 | 21 | 477,341 | 61,884 | 539,225 |
| ວຽງທອງ | 0 | 0 | 0 | 0 | 0 |

ກອງຮ້ອຍ 58 ໄດ້ມີການກຳນົດພື້ນທີ່ CHA ທັງໝົດ 27 ບ່ອນໃນ ເມືອງຄຳເກີດ ດັ່ງທີ່ສະແດງໄວ້ໃນຕາຕະລາງຂ້າງລຸ່ມນີ້. ສ່ວນໃນເມືອງວຽງທອງ, ກອງຮ້ອຍ 58 ໄດ້ກຳນົດພື້ນທີ່ CHA ທັງໝົດ 3 ບ່ອນ, ແຕ່ຍັງບໍ່ທັນໄດ້ມີການເຄື່ອນໄຫວວຽກງານເກັບກູ້ໃດໆເທື່ອ.[41]

| ເມືອງ | ຈຳນວນບ້ານ | ພື້ນທີ່ CHA | ເນື້ອທີ່ຂອງພື້ນທີ່ CHA ຕາແມັດ | ເນື້ອທີ່ເກັບກູ້ ຕາແມັດ |
|---|---|---|---|---|
| ຄຳເກີດ | 18 | 27 | 1,525,313 ຕາແມັດ | 438,523 ຕາແມັດ |
| ວຽງທອງ | 2 | 3 | 67,224 ຕາແມັດ | 0 |

ເມືອງຄຳເກີດ ຖືກຄັດເລືອກເຂົ້າໃນການຄົ້ນຄວ້າຄັ້ງນີ້ ຍ້ອນມັນສະໜອງຂອບເຂດອັນກວ້າງຂວາງ ໃນແງ່ຂອງການຄັດເລືອກບ້ານ ແລະ ຜູ້ຕອບບົດສຳຫຼວດທີ່ເປັນໄປໄດ້, ຄວາມສາມາດໃນການຄຸ້ມຄອງວຽກງານການສຳຫຼວດ ແລະ ການເກັບກູ້, ລວມທັງການເຄື່ອນໄຫວອື່ນໆພາຍໃຕ້ເງິນທຶນຈາກ ອົງການ KOICA, ລວມໄປເຖິງບັນດາວຽກງານການເກັບກູ້ລະເບີດ ໃນທີ່ດິນປູກຝັງ ແລະ ທີ່ດິນເພື່ອການພັດທະນາ.

ໃນແຂວງຊຽງຂວາງ, ວຽກງານການສຳຫຼວດ ແລະ ການເກັບກູ້ ແມ່ນໄດ້ຖືກດຳເນີນງານໂດຍ ຄກລ ແລະ ອົງການແມັກ. ຖານຂໍ້ມູນ IMSMA ຂອງ ຄຊກລ ມີຂໍ້ມູນກ່ຽວກັບວຽກງານເກັບກູ້ຂອງ ຄກລ ໃນແຂວງຊຽງຂວາງ ນັບຕັ້ງແຕ່ປີ 1999 ຫາ 2022, ກວມ 7 ຕົວເມືອງ.[42] ວຽກງານຂອງ ຄກລ ໃນແຂວງຊຽງຂວາງ ແມ່ນໄດ້ຮັບການສະໜັບສະໜູນດ້ານເງິນທຶນຈາກ ປະເທດນູແວນເຊລັງ ນັບຕັ້ງແຕ່ປີ 2014 ເປັນຕົ້ນມາ ເພື່ອໃຫ້ດຳເນີນການໃນ 4 ຕົວເມືອງ - ຄຳ, ໜອງແຮດ, ແປກ ແລະ ພູກູດ. ລຸ່ມນີ້ແມ່ນບັນດາວຽກງານເກັບກູ້ລະເບີດຂອງ ຄກລ ທີ່ຖືກບັນທຶກໄວ້ພາຍໃຕ້ລະບົບການສະໜອງທຶນຂອງ ປະເທດນູແວນເຊລັງ ມາຮອດເດືອນພະຈິກ 2022:

| ເມືອງ | ຈຳນວນບ້ານ | ຈຳນວນວຽກ | ເນື້ອທີ່ດິນປູກຝັງ ຕາແມັດ | ເນື້ອທີ່ດິນພັດທະນາ ຕາແມັດ | ເນື້ອທີ່ດິນທັງໝົດ ຕາແມັດ |
|---|---|---|---|---|---|
| ແປກ | 50 | 361 | 14,210,691 | 301,395 | 14,512,086 |
| ຄຳ | 31 | 133 | 4,718,746 | 57,449 | 4,776,195 |
| ພູກູດ | 15 | 219 | 9,437,080 | 62,564 | 9,499,644 |
| ໜອກໃໝ່ | 9 | 12 | 8,672 | 23,946 | 32,618 |

ນອກຈາກນັ້ນ, ມາຮອດເດືອນຕຸລາ 2022, ຄກລ ໄດ້ມີການກຳນົດພື້ນທີ່ CHA ໃນ 4 ເມືອງດັ່ງຕໍ່ໄປນີ້:[43]

| ເມືອງ | ຈຳນວນບ້ານ | ພື້ນທີ່ CHA | ເນື້ອທີ່ CHA ຕາແມັດ | ເນື້ອທີ່ເກັບກູ້ ຕາແມັດ |
|---|---|---|---|---|
| ແປກ | 66 | 307 | 52,069,815 | 20,124,771 |
| ຄຳ | 36 | 129 | 20,897,198 | 6,456,169 |
| ພູກູດ | 26 | 166 | 25,748,178 | 12,502,761 |
| ໜອກໃໝ່ | 2 | 3 | 258,813 | 0 |

ເມືອງແປກ ສະໜອງຂອບເຂດທີ່ກວ້າງຂວາງທີ່ສຸດ ໃນແງ່ຂອງຈຳນວນບ້ານທີ່ ຄກລ ມີການເຄື່ອນໄຫວວຽກ, ຈຳນວນຂອງວຽກງານເກັບກູ້ລະເບີດທີ່ປະຕິບັດສຳເລັດ ທັງໃນທີ່ດິນປູກຝັງ ແລະ ທີ່ດິນເພື່ອການພັດທະນາ, ແລະ ຈຳນວນຂອງພື້ນທີ່ CHA ທີ່ກຳນົດໄວ້. ເມືອງຄຳ ໄດ້ຖືກຄັດເລືອກເປັນເມືອງທີສອງ ຍ້ອນມັນມີຈຳນວນບ້ານທີ່ມີການດຳເນີນວຽກງານເກັບກູ້ ແລະ ມີພື້ນທີ່ CHA ຫຼາຍທີ່ສຸດຮອງຈາກ ເມືອງແປກ, ແລະ ມີອັດຕາສ່ວນຂອງການເກັບກູ້ລະຫວ່າງທີ່ດິນປູກຝັງ ແລະ ທີ່ດິນເພື່ອການພັດທະນາທີ່ດຸ່ນດ່ຽງກັນເປັນຢ່າງດີ. ນອກນັ້ນ ເມືອງແປກ ແລະ ເມືອງຄຳ ຍັງມີຈຳນວນຂອງຜູ້ເສຍຊີວິດຫຼາຍທີ່ສຸດຈາກທັງ 4 ເມືອງນັບຕັ້ງແຕ່ປີ 2008 ເປັນຕົ້ນມາ, ໂດຍມີຈຳນວນຜູ້ເສຍຊີວິດຈາກ ລບຕ 182 ຄົນໃນເມືອງແປກ ແລະ 61 ຄົນໃນເມືອງຄຳ.

ທັນທີທີ່ມີການດຳເນີນການຄັດເລືອກເມືອງເບື້ອງຕົ້ນແລ້ວ ໂດຍອີງໃສ່ການວິເຄາະຂໍ້ມູນຈາກລະບົບ IMSMA, ທີ່ປຶກສາກໍ່ຈະສາມາດກວດສອບຄວາມເໝາະສົມຂອງການຄັດເລືອກເມືອງດັ່ງກ່າວ ໃນລະຫວ່າງການພົບປະກັບ ຜູ້ອຳນວຍການ ຄຊກລ ແລະ ພະນັກງານເກັບກູ້ລະເບີດ.

ບັນດາບ້ານທີ່ເຂົ້າຮ່ວມການຄົ້ນຄວ້າ ແມ່ນໄດ້ຮັບການຄັດເລືອກດ້ວຍການສະໜັບສະໜູນຂອງ ໜ່ວຍງານຄຸ້ມຄອງຂໍ້ມູນ ຂອງ ຄຊກລ ໂດຍຜ່ານການນຳໃຊ້ຕົວຢ່າງດ້ານຈຸດປະສົງ (ການຕັດສິນ), ທີ່ບັນດາບ້ານດັ່ງກ່າວຈະໄດ້ຮັບການຄັດເລືອກ ບົນພື້ນຖານຂອງລັກສະນະອັນສະເພາະທີ່ທີ່ປຶກສາຮູ້ສຶກວ່າຈະເປັນສິ່ງທີ່ໜ້າສົນໃຈ ໃນການຄົ້ນຄວ້າຜົນກະທົບ ແລະ ທີ່ຈະຊ່ວຍໃຫ້ສາມາດສົມທຽບສະຖານະການຂອງບ້ານຕ່າງໆໃສ່ກັນໄດ້.[44]

ໃນອັນດັບທຳອິດ, ບ້ານຕ່າງໆຈະໄດ້ຮັບການຄັດເລືອກ ໂດຍອີງໃສ່ຫຼັກຖານທີ່ໄດ້ຮັບຈາກການດຳເນີນວຽກງານການສຳຫຼວດ ຫຼື ການເກັບກູ້ໂດຍ ກອງຮ້ອຍ 58 (ທີ່ໄດ້ຮັບການສະໜັບສະໜູນຈາກ ອົງການ KOICA) ຫຼື ຄກລ (ທີ່ໄດ້ຮັບການສະໜັບສະໜູນໂດຍ ປະເທດນູແວນເຊລັງ), ຫຼື ບັນດາກຸ່ມບ້ານທີ່ຢູ່ໃນແຜນການສຳຫຼວດ ແລະ ການເກັບກູ້ໂດຍຜູ້ດຳເນີນການເຫຼົ່ານີ້ໃນຊຸມປີທີ່ຈະມາເຖິງ. ບ່ອນທີ່ມີການດຳເນີນວຽກງານການເກັບກູ້ແລ້ວນັ້ນ, ບັນດາບ້ານທີ່ມີວຽກງານ (ທັງດ້ານກະສິກຳ ແລະ ການພັດທະນາ) ຈຳນວນຫຼາຍແມ່ນໄດ້ຖືກຄັດເລືອກ ເພື່ອຮັບປະກັນໃຫ້ມີປະຊາຊົນພຽງພໍສຳລັບການສຳພາດ, ແລະ ເພື່ອຊ່ວຍໃຫ້ສາມາດສົມທຽບຈຳນວນຂອງການນຳໃຊ້ທີ່ດິນປູກຝັງ ກັບຈຳນວນ ຂອງການນຳໃຊ້ທີ່ດິນເພື່ອການພັດທະນາໄດ້. ຖ້າເປັນໄປໄດ້, ໃຫ້ຄັດເລືອກເອົາວຽກງານການເກັບກູ້ລະເບີດ ທີ່ດຳເນີນງານໄປແລ້ວ 3-4 ປີກ່ອນໜ້າ, ເພື່ອຊ່ວຍໃຫ້ສາມາດສັງເກດເຫັນໄດ້ເຖິງຜົນກະທົບ ແລະ ຄວາມປ່ຽນແປງໄລຍະຍາວ. ເຖິງຢ່າງໃດກໍ່ຕາມ, ສິ່ງນີ້ກໍ່ບໍ່ສາມາດເຮັດໄດ້ສະເໝີໄປ. ດັ່ງນັ້ນ, ກໍ່ອາດຄັດເລືອກເອົາບາງວຽກງານເກັບກູ້ລະເບີດ ທີ່ດຳເນີນການໄປແລ້ວ 2 ປີກ່ອນໜ້າກໍ່ໄດ້.

ຫຼັກຖານທີ່ສະແດງໃຫ້ເຫັນເຖິງການຕົກຄ້າງໃນລະດັບສູງ ກໍ່ອາດຊ່ວຍຊີ້ນຳການຄັດເລືອກບ້ານ (ອີງຕາມແຜນທີ່ສະແດງຂໍ້ມູນລະເບີດຂອງ ຄຊກລ) ຍ້ອນກຸ່ມບ້ານເຫຼົ່ານີ້ ອາດຊ່ວຍສະແດງໃຫ້ເຫັນເຖິງການປ່ຽນແປງໄດ້ຊັດເຈນ ພາຍຫຼັງດຳເນີນການເກັບກູ້ ແລະ ການສຳຫຼວດ, ຫຼາຍກວ່າບັນດາບ້ານທີ່ມີອັດຕາການຕົກຄ້າງໃນລະດັບກາງໄປຫາຕໍ່າ.

ນອກນັ້ນຍັງມີການພິຈາລະນາຂໍ້ມູນດ້ານປະຊາກອນ ແລະ ພູມສາດຂອງບ້ານ ໄປພ້ອມໆກັບຂໍ້ມູນອື່ນໆທີ່ມີສະໜອງໃຫ້ ກ່ອນດຳເນີນວຽກງານພາກສະໜາມ - ໂດຍສະເພາະທີ່ຕັ້ງ ແລະ ຂະໜາດຂອງບ້ານ. ສ່ວນຂໍ້ມູນກ່ຽວກັບຊົນເຜົ່າ ແລະ ກິດຈະກຳການຜະລິດຫຼັກ ແມ່ນສາມາດເກັບກຳເອົາໄດ້ ພາຍຫຼັງທີ່ບ້ານດັ່ງກ່າວໄດ້ຖືກຄັດເລືອກແລ້ວ.

ຈຸດປະສົງຫຼັກແມ່ນໃຫ້ຄັດເລືອກເອົາບ້ານ 2 ຫຼື 3 ແຫ່ງໃນຂົງເຂດທີ່ຮູ້ຈັກກັນໃນນາມ ພື້ນທີ່ຈຸດສຸມການພັດທະນາ (FDA), ທີ່ຖືກກຳນົດໃຫ້ເປັນຂົງເຂດບຸລິມະສິດ ສຳລັບການເກັບກູ້ ລບຕ ພາຍໃຕ້ແຜນວຽກ ລບຕ ຫຼາຍປີຂອງ ສປປ ລາວ, ທີ່ໄດ້ຮັບການຮັບຮອງເອົາໃນປີ 2016.[45] ເຖິງຢ່າງໃດກໍ່ຕາມ, ມີ FDA ຈຳນວນໜຶ່ງເທົ່ານັ້ນ ທີ່ຖືກລະບຸໄວ້ໃນບັນດາເມືອງ ທີ່ຖືກຄັດເລືອກສຳລັບການຄົ້ນຄວ້າ. ມີພຽງ ບ້ານຄຳແສນ, ເມືອງຄຳເກີດ, ແຂວງບໍລິຄຳໄຊ, ເທົ່ານັ້ນທີ່ຖືກກຳນົດໃຫ້ເປັນ FDA. ເຖິງຢ່າງໃດກໍ່ຕາມ, ບັນດາບ້ານອື່ນໆຫຼາຍແຫ່ງ ແມ່ນຖືເປັນ "ກຸ່ມ" ບ້ານ, ທີ່ປະກອບໄປດ້ວຍບ້ານນ້ອຍໆຫຼາຍແຫ່ງ ລວມເຂົ້າກັນເປັນເຂດປົກຄອງບ້ານແຫ່ງດຽວ. ບ້ານທອງແສນ ຍັງຈະເປັນພາກສ່ວນ  ໜຶ່ງຂອງໂຄງການ 5 ປີພາຍໃຕ້ ອົງການ KOICA ທີ່ຈະຊ່ວຍເຊື່ອມໂຍງການດຳເນີນວຽກງານ ລບຕ ເຂົ້າກັບວຽກງານການພັດທະນາຊົນນະບົດ ແລະ ທີ່ກຳລັງໄດ້ຮັບການຈັດຕັ້ງປະຕິບັດ ໂດຍປະສານສົມທົບກັນກັບ ກະຊວງກະສິກຳ ແລະ ປ່າໄມ້, ແລະ ຄຊກລ ແລະ ຂະແໜງ ການ ລບຕ.

ໃນເບື້ອງຕົ້ນ, ມີການຄາດຫວັງໄວ້ວ່າຈະແນໃສ່ໜຶ່ງບ້ານ ທີ່ບໍ່ໄດ້ຮັບການເກັບກູ້ ຫຼື ການສຳຫຼວດມາກ່ອນ, ແຕ່ມີບັນຫາເລື່ອງ ລບຕ ຕົກຄ້າງ ແລະ ນອນຢູ່ໃນແຜນທີ່ຈະໄດ້ຮັບການສຳຫຼວດ ແລະ ເກັບກູ້ຢູ່ແລ້ວ;[46] ໜຶ່ງບ້ານທີ່ໄດ້ຮັບການສຳຫຼວດ; ແລະ ສອງບ້ານທີ່ໄດ້ຮັບການເກັບກູ້ແລ້ວ (ສຳລັບທີ່ດິນປູກຝັງ ແລະ/ຫຼື ທີ່ດິນເພື່ອການພັດທະນາ) ເປັນເວລາ 3-4 ປີກ່ອນໜ້ານີ້. ເຖິງຢ່າງໃດກໍ່ຕາມ, ບ້ານທີ່ມີບັນຫາ ລບຕ ຕົກຄ້າງສ່ວນໃຫຍ່ທັງໃນ ແຂວງບໍລິຄຳໄຊ ແລະ ຊຽງຂວາງ ລ້ວນແລ້ວແຕ່ເປັນຜູ້ໄດ້ຮັບຜົນປະໂຫຍດຈາກວຽກງານຂອງ ແຜນງານເກັບກູ້ລະເບີດເພື່ອມະນຸດສະທຳ ຢູ່ກ່ອນແລ້ວ (ເຖິງແມ່ນວ່າບາງຄັ້ງຈະແມ່ນຜູ້ດຳເນີນງານທີ່ແຕກຕ່າງກັນກໍ່ຕາມ). ໃນບັນດາບ້ານທີ່ມີ ລບຕ ຕົກຄ້າງ ທີ່ລໍຖ້າການສຳຫຼວດ, ແລະ ໃນບັນດາບ້ານທີ່ດຳເນີນການສຳຫຼວດໄປແລ້ວ, ກໍ່ມັກຈະມີການລາຍງານວ່າ ໄດ້ມີການດຳເນີນວຽກງານເກັບກູ້ລະເບີດມາກ່ອນແລ້ວໃນທີ່ດິນຕ່າງໆຂອງບ້ານດັ່ງກ່າວ. ນອກນັ້ນຍັງມີການດຳເນີນວຽກງານເກັບລະເບີດເທິງໜ້າດິນ (ໂດຍສ່ວນໃຫຍ່ແລ້ວຈະດຳເນີນໄປພ້ອມໆກັບຂັ້ນຕອນການສຳຫຼວດ), ແລະ ດ້ວຍເຫດນັ້ນຈຶ່ງເຮັດໃຫ້ຂໍ້ກັງວົນໃຈອັນຮີບດ່ວນ ກ່ຽບກັບ ລບຕ ຕົກຄ້າງ ມັກຈະຖືກລຶບລ້າງອອກໄປຈາກຂົງເຂດດັ່ງກ່າວ. ສິ່ງນີ້ໄດ້ກໍ່ໃຫ້ເກີດບັນຫາທ້າທາຍບາງປະການ ໃນການປຶກສາຫາລືກ່ຽວກັບຜົນກະທົບຂອງການຕົກຄ້າງຂອງ ລບຕ, ທັງຍັງຍົກໃຫ້ເຫັນເຖິງຄຳຖາມທີ່ໜ້າສົນໃຈ ກ່ຽວກັບຄວາມເຂົ້າໃຈຂອງລູກບ້ານ ຕໍ່ຂັ້ນຕອນການສຳຫຼວດ ແລະ ການເກັບກູ້, ທີ່ຈະໄດ້ຮັບການຄົ້ນຄວ້າຕື່ມອີກໃນພາກຜົນໄດ້ຮັບຕົ້ນຕໍຂອງບົດລາຍງານສະບັບນີ້.

ເພື່ອໃຫ້ເຂົ້າໃຈເຖິງຜົນກະທົບຂອງການຕົກຄ້າງຂອງ ລບຕ ກ່ອນດຳເນີນການເກັບກູ້, ທີມງານຈຶ່ງໄດ້ດຳເນີນການສຳພາດຄົວເຮືອນຕ່າງໆ ທີ່ດິນປູກຝັງຂອງຕົນຍັງບໍ່ໄດ້ໄດ້ຮັບການເກັບກູ້ເທື່ອ ເພື່ອຊ່ວຍໃຫ້ເຫັນພາບວ່າການຕົກຄ້າງດັ່ງກ່າວ ສົ່ງຜົນກະທົບໃນລະດັບໃດຕໍ່ຊີວິດຂອງພວກເຂົາ. ນອກຈາກນັ້ນ, ຜູ້ຕອບບົດສຳຫຼວດຈາກຄົວເຮືອນຕ່າງໆ ທີ່ດິນຂອງຕົນໄດ້ຮັບການເກັບກູ້ແລ້ວ ກໍ່ໄດ້ຮັບການສອບຖາມເຊັ່ນດຽວກັນ. ເພື່ອທົບທວນຄືນສະຖານະການກ່ອນການເກັບກູ້, ອັນໄດ້ຊ່ວຍໃຫ້ສາມາດດຳເນີນການສົມທຽບບາງສ່ວນ ແລະ ເກີດການໂອ້ລົມກັນກ່ຽວກັບຄວາມປ່ຽນແປງ. ບົດຝຶກຫັດກ່ຽວກັບລຳດັບເຫດການ ທີ່ຖືກນຳໃຊ້ເຂົ້າໃນການສົນທະນາກຸ່ມສະເພາະ ຍັງໄດ້ຊ່ວຍໃຫ້ເກີດມີການປຶກສາຫາລືກັນກ່ຽວກັບຄວາມປ່ຽນແປງ ໃນບ້ານໃດໜຶ່ງໃນຊ່ວງເວລາໃດໜຶ່ງ, ເຊິ່ງຊ່ວຍໃຫ້ສາມາດເນັ້ນໜັກໄດ້ເຖິງບັນຫາທ້າທາຍຕ່າງໆ ທີ່ເກີດຈາກ ລບຕ ແລະ ວຽກງານເກັບກູ້ໄດ້ຊ່ວຍອຳນວຍຄວາມສະດວກໃຫ້ແກ່ການພັດທະນາ ແລະ ການປັບປຸງຊີວິດການເປັນຢູ່ໃນໄລຍະເວລາໃດໜຶ່ງ ໃນລະດັບໃດ.

ໃນການຄັດເລືອກເອົາບ້ານຕ່າງໆ, ບໍ່ໄດ້ມີຂໍ້ມູນຈຳເປັນທຸກຢ່າງພ້ອມສະໜອງໃຫ້ ແລະ ເວລາທີ່ໃຊ້ເຂົ້າໃນການຄັດເລືອກບ້ານເພື່ອການຄົ້ນຄວ້ານັ້ນ ກໍ່ສັ້ນກວ່າທີ່ຄວນຈະເປັນ ອັນເນື່ອງມາຈາກຂໍ້ກຳນົດຂອງ ຄຊກລ ໃນການຕ້ອງແຈ້ງໃຫ້ອຳນາດການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງຊາບກ່ອນລ່ວງໜ້າ ທີ່ຈະເດີນທາງໄປຢ້ຽມຢາມບັນດາບ້ານດັ່ງກ່າວ. ຖ້າມີການດຳເນີນຂັ້ນຕອນກວດສອບຂໍ້ມູນຢ່າງລະອຽດເພີ່ມຕື່ມອີກ, ກໍ່ຍິ່ງຈະເປັນປະໂຫຍດຕໍ່ວຽກງານດັ່ງກ່າວ, ແລະ ທີ່ປຶກສາຈຳເປັນຕ້ອງໄດ້ດຳເນີນ ບາງຂັ້ນຕອນການກວດສອບຂໍ້ມູນໃນພາກສະໜາມ. ໃນແຂວງຊຽງຂວາງ, ທີມງານແມ່ນບໍ່ສາມາດເຂົ້າເຖິງບ້ານໜຶ່ງໄດ້ຄື: ບ້ານຫ້ວຍພັດ ເນື່ອງຈາກສະພາບເສັ້ນທາງບໍ່ອຳນວຍ. ດັ່ງນັ້ນຈຶ່ງໄດ້ປ່ຽນແຜນໄປຢ້ຽມຢາມອີກບ້ານໜຶ່ງຄື: ບ້ານຫີນ ແທນ.

ໃນແຂວງ ບໍລິຄໍາໄຊ, ການຄົ້ນຄວ້າໄດ້ຖືກດໍາເນີນການທີ່ ເມືອງຄໍາເກີດ ໃນບັນດາບ້ານດັ່ງຕໍ່ໄປນີ້:

| ບ້ານ | ຄໍາອະທິບາຍ |
|---|---|
| ບ້ານແສນອຸດົມ | ວຽກງານສໍາຫຼວດຖືກວາງແຜນໄວ້ໂດຍ ກອງຮ້ອຍ 58 ໃນປີ 2023.<br>ໄດ້ຮັບການເກັບກູ້ລະເບີດໃນປີ 2012 ແລະ 2013 ໂດຍ SODI[47]: ເກັບກູ້ລະເບີດ 6 ຄັ້ງກວມເນື້ອທີ່ປູກຝັງ 211,200 ຕາແມັດ ແລະ ເນື້ອທີ່ການພັດທະນາ 4,662 ຕາແມັດ. ມີຜູ້ໄດ້ຮັບຜົນປະໂຫຍດ 1,230 ຄົນ ແລະ ໄດ້ເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານຈໍານວນ 205 ລູກ ແລະ ລບຕ ຈໍານວນ 57 ລູກ. |
| ບ້ານນໍ້າຜ້າວ | ມີການດໍາເນີນວຽກງານສໍາຫຼວດ 4 ຄັ້ງໃນພື້ນທີ່ທີ່ຖືກລະບຸເປັນ CHA (ກວມທັງໝົດ 111,881 ຕາແມັດ) ໃນປີ 2020 ແລະ 2022. ໄດ້ຮັບການສໍາຫຼວດໂດຍ ກອງຮ້ອຍ 58 ໃນພື້ນທີ່ປູກພືດເສດຖະກິດ ແລະ ເຂົ້າເປືອກ.<br>ລະຫວ່າງປີ 2012 ແລະ 2014, ມີພື້ນທີ່ 4 ແຫ່ງໄດ້ຮັບການເກັບກູ້ໂດຍ SODI ແລະ ຜູ້ດໍາເນີນງານທີ່ບໍ່ປະສົງອອກນາມ, ໂດຍເກັບກູ້ທີ່ດິນປູກຝັງໄປທັງໝົດ 25,118 ຕາແມັດ ແລະ ທີ່ດິນເພື່ອການພັດທະນາ 51,158 ຕາແມັດ.<br>ມີຜູ້ໄດ້ຮັບຜົນປະໂຫຍດ 3,429 ຄົນ. ສິ່ງເສດເຫຼືອຈາກລະເບີດລູກຫວ່ານຈໍານວນ 31 ລູກ ແລະ ລບຕ ຈໍານວນ 1 ລູກໄດ້ຮັບການເກັບກູ້. |
| ບ້ານທອງແສນ | ມີການດໍາເນີນວຽກງານເກັບກູ້ໂດຍ ກອງຮ້ອຍ 58 ພາຍໃຕ້ເງິນທຶນຈາກອົງການ KOICA ໃນປີ 2020 ແລະ 2022 ໂດຍປະກອບມີວຽກງານເກັບກູ້ລະເບີດສອງຄັ້ງສໍາລັບທີ່ດິນປູກຝັງ (99,087 ຕາແມັດ) ແລະ ໜຶ່ງຄັ້ງສໍາລັບທີ່ດິນພັດທະນາ (2,490 ຕາແມັດ). ມີການເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານໄດ້ 116 ລູກ ແລະ ລບຕ 390 ລູກ, ໂດຍມີຜູ້ໄດ້ຮັບຜົນປະໂຫຍດກວມ 2,221 ຄົນ.<br>ບ້ານທອງແສນ ແມ່ນບ້ານເປົ້າໝາຍສໍາລັບໂຄງການພັດທະນາຊົນນະບົດຂອງ ອົງການ KOICA ແລະ ແມ່ນຢູ່ພາຍໃນ ຂົງເຂດສໍາຄັນເພື່ອການພັດທະນາ. |
| ບ້ານໂພນແພງ | ມີການດໍາເນີນວຽກງານເກັບກູ້ໂດຍ ກອງຮ້ອຍ 58 ພາຍໃຕ້ເງິນທຶນຈາກອົງການ KOICA ລະຫວ່າງປີ 2017, 2019 ແລະ 2020. ໄດ້ດໍາເນີນ 4 ວຽກງານສໍາເລັດ ກວມເນື້ອທີ່ປູກຝັງ 117,342 ຕາແມັດ ແລະ ເນື້ອທີ່ພັດທະນາ 6,887 ຕາແມັດ. ການເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານໄດ້ 44 ລູກ ແລະ ລບຕ 506 ລູກ, ໂດຍມີຜູ້ໄດ້ຮັບຜົນປະໂຫຍດກວມ 6,085 ຄົນ.<br>ວຽກງານທີ່ຜ່ານມາ ໄດ້ຖືກດໍາເນີນການສໍາເລັດໂດຍ APOPO[48] ໃນປີ 2014, ໂດຍເກັບກູ້ທີ່ດິນປູກຝັງໄປທັງໝົດ 7,187 ຕາແມັດ, ມີຜູ້ໄດ້ຮັບຜົນປະໂຫຍດ 9 ຄົນ. ເຖິງຢ່າງໃດກໍ່ຕາມ, ບໍ່ມີການລາຍງານວ່າໄດ້ເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານ ຫຼື ລບຕ. |

ໃນແຂວງຊຽງຂວາງ, ການຄົ້ນຄວ້າແມ່ນໄດ້ຖືກດໍາເນີນການໃນ 2 ເມືອງຄື: ເມືອງຄໍາ ແລະ ເມືອງແປກ, ແລະ ໃນ 4 ບ້ານໃນແຕ່ລະເມືອງ. ໃນເມືອງຄໍາ, ໄດ້ມີການຄັດເລືອກເອົາບ້ານຕ່າງໆດັ່ງຕໍ່ໄປນີ້:

| ບ້ານ | ຄໍາອະທິບາຍ |
|---|---|
| ບ້ານຫີນ | ເປັນໂຕເລືອກແທນ ບ້ານຫ້ວຍພັດ ທີ່ບໍ່ສາມາດເຂົ້າເຖິງໄດ້ ເນື່ອງຈາກສະພາບຫົນທາງ.<br>ໄດ້ດໍາເນີນ 11 ວຽກງານເກັບກູ້ລະເບີດໃນທີ່ດິນປູກຝັງ (ກວມ 390,577 ຕາແມັດ) ລະຫວ່າງປີ 2021 ແລະ 2022 ພາຍໃຕ້ເງິນທຶນຈາກ ປະເທດນູແວນເຊລັງ. ມີການເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານໄດ້ 339 ລູກ ແລະ ລບຕ 152 ລູກ, ໂດຍມີຜູ້ໄດ້ຮັບຜົນປະໂຫຍດກວມ 208 ຄົນ. |
| ບ້ານຄັງເຄ | ໄດ້ດໍາເນີນ 5 ວຽກງານສໍາຫຼວດໃນປີ 2021 ແລະ 2022 ໂດຍ ຄກລ ພາຍໃຕ້ເງິນທຶນຂອງ ປະເທດນູແວນເຊລັງ (ໃນພື້ນທີ່ CHA ທັງໝົດກວມ 2,092,859 ຕາແມັດ).<br>ຄກລ ໄດ້ດໍາເນີນບາງວຽກງານເກັບກູ້ລະເບີດໃນປີ 2016 ໃຫ້ແກ່ທີ່ດິນປູກຝັງ (ກວມ 32,196 ຕາແມັດ), ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 23 ຄົນ. ມີການເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານ ໄດ້ 143 ລູກ ແລະ ລບຕ 1 ລູກ. |
| ບ້ານຊ້າງ | ຄກລ ໄດ້ດໍາເນີນ 4 ວຽກງານເກັບກູ້ລະເບີດ ພາຍໃຕ້ເງິນທຶນຈາກ ປະເທດນູແວເຊລັງ. ໄດ້ດໍາເນີນວຽກງານເກັບກູ້ລະເບີດ 3 ຄັ້ງໃນປີ 2021, ແລະ 1 ຄັ້ງໃນປີ 2018. ວຽກງານດັ່ງກ່າວລວມມີການເກັບກູ້ທີ່ດິນປູກຝັງ (ກວມ 90 ຕາແມັດ) ແລະ ທີ່ດິນພັດທະນາ (ກວມ 28,041 ຕາແມັດ). ເຖິງຢ່າງໃດກໍ່ຕາມ, ບໍ່ພົບວັດຖຸລະເບີດທີ່ຕ້ອງໄດ້ເກັບກູ້ເລີຍໃນລະຫວ່າງດໍາເນີນວຽກງານດັ່ງກ່າວ. ມີຜູ້ໄດ້ຮັບຜົນປະໂຫຍດກວມ 473 ຄົນຈາກວຽກງານເຫຼົ່ານີ້.<br>ໃນປີ 2003, 2009 ແລະ 2011, ຄກລ ໄດ້ລຶບລ້າງທີ່ດິນປູກຝັງ 3 ແຫ່ງ (ກວມທັງໝົດ 44,209 ຕາແມັດ), ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 373 ຄົນ ແລະ ໄດ້ເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານ 832 ລູກ ແລະ ລບຕ 295 ລູກ. |

| | |
|---|---|
| ບ້ານລອງປົວ | ໄດ້ມີການດໍາເນີນວຽກງານເກັບກູ້ທີ່ດິນປູກຝັງ 15 ແຫ່ງ (ກວມ 682,277 ຕາແມັດ). ໃນນັ້ນ, ມີການເກັບກູ້ 1 ຄັ້ງໃນປີ 2018, 6 ຄັ້ງໃນປີ 2019, 5 ຄັ້ງໃນປີ 2020 ແລະ 3 ຄັ້ງໃນປີ 2021. ໄດ້ເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານ 1,118 ອັນ ແລະ ລບຕ 471 ອັນ, ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 493 ຄົນ.<br>ໄດ້ມີການດໍາເນີນວຽກງານເກັບກູ້ 1 ຄັ້ງໃນປີ 2017 (ລວມມີທີ່ດິນປູກຝັງກວມ 103,467 ຕາແມັດ, ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 68 ຄົນ), ໂດຍຜູ້ດໍາເນີນການທີ່ບໍ່ປະສົງອອກນາມ. ໄດ້ເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານ 210 ລູກ ແລະ ລບຕ 105 ລູກ. J MAS ໄດ້ດໍາເນີນວຽກງານເກັບກູ້ທີ່ດິນປູກຝັງ 3 ແຫ່ງ (ກວມ 70,590 ຕາແມັດ) ໃນປີ 2020, ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 114 ຄົນ. ໄດ້ເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານ 32 ລູກ ແລະ ລບຕ 23 ລູກ. |

ໃນເມືອງແປກ, ໄດ້ມີການຄັດເລືອກເອົາບ້ານຕ່າງໆດັ່ງຕໍ່ໄປນີ້:

| **ບ້ານ** | **ຄໍາອະທິບາຍ** |
|---|---|
| ບ້ານຍອດພຽງ | ເປັນບ້ານບຸລິມະສິດສໍາລັບ ຄກລ ເພື່ອສໍາຫຼວດໃນປີ 2023.<br>ໃນປີ 2019 ແລະ 2021, ຄກລ ໄດ້ມີການດໍາເນີນ 26 ວຽກງານເກັບກູ້ລະເບີດໃຫ້ແກ່ທີ່ດິນປູກຝັງ ພາຍໃຕ້ເງິນທຶນຈາກ ປະເທດນູແວນເຊລັງ. ໃນນັ້ນ, ທີ່ດິນປູກຝັງກວມ 276,214 ຕາແມັດ ໄດ້ຮັບການເກັບກູ້, ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 344 ຄົນ, ສາມາດເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານໄດ້ 555 ອັນ ແລະ ລບຕ 67 ອັນ. |
| ບ້ານນາເຜິ້ງ | ຄກລ ໄດ້ດໍາເນີນ 4 ວຽກງານສໍາຫຼວດ ພາຍໃຕ້ເງິນທຶນຈາກ ປະເທດນູແວນເຊລັງ ໃນປີ 2021.<br>ໃນປີ 2022, ໄດ້ດໍາເນີນການເກັບກູ້ລະເບີດໃນທີ່ດິນປູກຝັງ 2 ແຫ່ງ (ກວມ 52,147 ຕາແມັດ), ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 36 ຄົນ. ສາມາດເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານໄດ້ 109 ລູກ ແລະ ລບຕ 6 ລູກ.<br>ລະຫວ່າງປີ 2009 ແລະ 2017, ຄກລ ໄດ້ດໍາເນີນ 20 ວຽກງານເກັບກູ້ລະເບີດຈົນສໍາເລັດ (ກວມ 274,757 ຕາແມັດ ຂອງເນື້ອທີ່ດິນປູກຝັງ ແລະ 36,020 ຕາແມັດ ຂອງເນື້ອທີ່ດິນພັດທະນາ, ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 410 ຄົນ). ສາມາດເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານໄດ້ 888 ລູກ ແລະ ລບຕ 327 ລູກ. |
| ບ້ານລາດບວກ | ຄກລ ໄດ້ດໍາເນີນ 22 ວຽກງານເກັບກູ້ລະເບີດໃຫ້ແກ່ທີ່ດິນພັດທະນາ ແລະ ທີ່ດິນປູກຝັງລະຫວ່າງປີ 2018 ແລະ 2022 ພາຍໃຕ້ເງິນທຶນຂອງ ປະເທດນູແວນເຊລັງ. ໃນນັ້ນທີ່ດິນປູກຝັງກວມ 733,562 ຕາແມັດ, ແລະ ທີ່ດິນພັດທະນາ 12,070 ຕາແມັດ ໄດ້ຮັບການເກັບກູ້, ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 797 ຄົນ. ສາມາດເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານໄດ້ 988 ລູກ ແລະ ລບຕ 435 ລູກ.<br>ລະຫວ່າງປີ 2008-2016, ຄກລ ໄດ້ດໍາເນີນ 14 ວຽກງານເກັບກູ້ສໍາເລັດ. ໃນນັ້ນລວມມີທີ່ດິນປູກຝັງກວມ 323,714 ຕາແມັດ ແລະ ທີ່ດິນພັດທະນາກວມ 8,216 ຕາແມັດ, ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 366 ຄົນ. ສາມາດເກັບກູ້ລູກບົ່ມໄດ້ 1 ໜ່ວຍ, ສິ່ງເສດເຫຼືອຈາກລະເບີດລູກຫວ່ານ 294 ລູກ ແລະ ລບຕ 236 ລູກ. |

| | |
|---|---|
| ບ້ານນາໂອ | ຄກລ ໄດ້ດຳເນີນ 12 ວຽກງານເກັບກູ້ລະເບີດໃຫ້ແກ່ທີ່ດິນປູກຝັງ ແລະ ທີ່ດິນພັດທະນາໃນລະຫວ່າງປີ 2016, 2018, 2020 ແລະ 2022 ພາຍໃຕ້ເງິນທຶນຈາກ ປະເທດນູແວນເຊລັງ. ໃນນັ້ນທີ່ດິນປູກຝັງກວມ 443,747 ຕາແມັດ ແລະ ທີ່ດິນພັດທະນາກວມ 151,564 ຕາແມັດ ໄດ້ຮັບການເກັບກູ້, ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 4,546 ຄົນ. ສາມາດເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານໄດ້ 974 ລູກ ແລະ ລບຕ 376 ລູກ.<br>ໃນປີ 2004, 2007 ແລະ 2010, ອົງການແມັກ ໄດ້ດຳເນີນ 9 ວຽກງານເກັບກູ້ລະເບີດ (ກວມເນື້ອທີ່ປູກຝັງ 21,217 ຕາແມັດ ແລະ ເນື້ອທີ່ພັດທະນາ 24,373 ຕາແມັດ), ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 62 ຄົນ. ສາມາດເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານໄດ້ 57 ລູກ ແລະ ລບຕ 105 ລູກ.<br>ລະຫວ່າງປີ 2008-2018, ຄກລ ຍັງໄດ້ດຳເນີນ 22 ວຽກງານເກັບກູ້ລະເບີດ (ກວມເນື້ອທີ່ປູກຝັງ 620,367 ຕາແມັດ ແລະ ເນື້ອທີ່ພັດທະນາ 263,188 ຕາແມັດ), ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 484,521 ຄົນ. ສາມາດເກັບກູ້ ສິ່ງເສດເຫຼືອຈາກລະເບີດລູກຫວ່ານໄດ້ 895 ລູກ, ລະເບີດຝັງດິນ 1 ລູກ ແລະ ລບຕ 355 ລູກ. |

40 ນັບຕັ້ງແຕ່ປີ 2017, ກອງຮ້ອຍ 58 ໄດ້ດຳເນີນໄປທັງໝົດ 31 ວຽກໃນ 12 ບ້ານ, ໂດຍໄດ້ຮັບເງິນທຶນຈາກ ອົງການ KOICA ແລະ ກະຊວງປ້ອງກັນປະເທດ.

41 ຄຊກລ, "ກະດານຂໍ້ມູນ IMSMA," ເຂົ້າເບິ່ງວັນທີ 19 ຕຸລາ 2022 ແລະ ວັນທີ 11 ມັງກອນ 2023; ຄຊກລ, "ກະດານຂໍ້ມູນ CHA," ເຂົ້າເບິ່ງວັນທີ 19 ຕຸລາ 2022.

42 ເມືອງຄຳ, ຄູນ, ໜອກໃໝ່, ໜອງແຮດ, ແປກ, ຜາໄຊ ແລະ ພູກູດ.

43 ຄຊກລ, "ກະດານຂໍ້ມູນ CHA," ເຂົ້າເບິ່ງວັນທີ 19 ຕຸລາ 2022.

[44] ທີ່ປຶກສາໄດ້ລະບຸເງື່ອນໄຂໃນການຄັດເລືອກບ້ານ, ແລະ ໜ່ວຍງານຄຸ້ມຄອງຂໍ້ມູນ ຂອງ ຄຊກລ ໄດ້ໃຫ້ການສະໜັບສະໜູນທີມງານດັ່ງກ່າວ ໃນການລະບຸບັນດາບ້ານ ທີ່ແທດເໝາະກັບເງື່ອນໄຂດັ່ງກ່າວ ພາຍໃນຖານຂໍ້ມູນ IMSMA ຂອງຕົນ. ໜ່ວຍງານຄຸ້ມຄອງຂໍ້ມູນ ຍັງໄດ້ສະໜອງຂໍ້ມູນກ່ຽວກັບວຽກງານການເກັບກູ້ລະເບີດ ໃນແຕ່ລະບ້ານທີ່ຖືກຄັດເລືອກນຳອີກ.

45 Kathryn Sweet, "ນະໂຍບາຍ, ຂັ້ນຕອນ ແລະ ຫຼັກປະຕິບັດດ້ານການກຳນົດບຸລິມະສິດ ທີ່ກ່ຽວຂ້ອງກັບການເກັບກູ້ ລບຕ ໃນ ສປປ ລາວ," ຄຊກລ ແລະ GICHD, ກັນຍາ 2017; ແຜນວຽກ ລບຕ ຂອງ ສປປ ລາວ 2016-2020, ຄຊກລ, ແຜນການເລກທີ100, 1 ມີນາ 2016, ໜ້າທີ12 ແລະ 18.

46 ໂດຍຜ່ານການຄັດເລືອກເອົາບັນດາບ້ານ ເພື່ອໃຫ້ສາມາດດຳເນີນແຜນການເກັບກູ້ລະເບີດໄດ້ໃນຊ່ວງ 3-4 ປີຕໍ່ໜ້ານີ້, ຈະຊ່ວຍໃຫ້ສາມາດເກັບກຳໄດ້ ຄວາມປ່ຽນແປງຫຼັງການເກັບກູ້ລະເບີດ ອັນເປັນພາກສ່ວນໜຶ່ງຂອງການປະເມີນຜົນໄລຍະກາງຂອງ ອົງການ ສປຊ ເພື່ອການພັດທະນາ ໃນປີ 2024 ແລະ ການປະເມີນຜົນໄລຍະສຸດທ້າຍໃນປີ 2026.

47 SODI (Solidaritätsdienst International e.V. – ອົງການສົ່ງເສີມຄວາມສາມັກຄີສາກົນ) ແມ່ນອົງການຂອງ ປະເທດເຢຍລະມັນ ທີ່ດຳເນີນວຽກງານເກັບກູ້ລະເບີດທັງໃນ ສປປ ລາວ ແລະ ຫວຽດນາມ. ອີງຕາມຖານຂໍ້ມູນ IMSMA ຂອງ ຄຊກລ, SODI ມີການເຄື່ອນໄຫວວຽກຢູ່ ແຂວງບໍລິຄຳໄຊ ຕັ້ງແຕ່ປີ 2010-2014.

48 APOPO (Anti-Persoonsmijnen Ontmijnende Product Ontwikkeling - ອົງການພັດທະນາສິນຄ້າເພື່ອກວດຄົ້ນລະເບີດຝັງດິນ) ແມ່ນອົງການທີ່ບໍ່ສັງກັດລັດຂອງ ແບນຊິກ ແລະ ສ. ອາເມລິກາ ທີ່ຝຶກໜູ ແລະ ໝາເພື່ອກວດຄົ້ນຫາລະເບີດຝັງດິນ. APOPO ສຳເລັດວຽກງານຂອງຕົນໃນ ລາວ ໃນປີ 2014 ເພື່ອລໍຖ້າລະດົມທຶນເພີ່ມເຕີມ. ເບິ່ງຂໍ້ມູນກ່ຽວກັບ APOPO, "ສິ່ງທີ່ພວກເຮົາເຮັດ: ການກວດຄົ້ນລະເບີດຝັງດິນ ແລະ ວັດຖຸລະເບີດ: ບ່ອນທີ່ພວກເຮົາເຮັດວຽກ: ປະເທດລາວ," ບໍ່ມີວັນທີ.

## 3.3. ການສຳພາດຜູ້ໃຫ້ຂໍ້ມູນຕົ້ນຕໍ

ການສຳພາດຜູ້ໃຫ້ຂໍ້ມູນຕົ້ນຕໍ (KII) ແມ່ນການສຳພາດບຸກຄົນທີ່ມີຄວາມຮູ້ວິຊາສະເພາະ ແລະ ມີແຫຼ່ງຂໍ້ມູນທີ່ໜ້າເຊື່ອຖື ກ່ຽວກັບຫົວຂໍ້. ອັນສະເພາະໃດໜຶ່ງ. ໄດ້ມີການສ້າງຂໍ້ຊີ້ນຳສຳລັບການສຳພາດຮູບແບບນີ້ຂຶ້ນ, ລວມທັງຊຸດຄຳຖາມເປີດປະມານ 10 ຫາ 20 ຂໍ້. ການສຳພາດນີ້ໃຊ້ເວລາປະມານ 45-60 ນາທີ.

### 3.3.1. ຄູ່ຮ່ວມງານລະດັບຊາດ

KII ແມ່ນຖືກດຳເນີນການໂດຍຜູ້ປະຕິບັດ ແຜນງານເກັບກູ້ລະເບີດເພື່ອມະນຸດສະທຳ ແລະ ຄູ່ຮ່ວມງານອື່ນໆໃນລະດັບຊາດໃນ ນະຄອນຫຼວງວຽງຈັນ. ຂົງເຂດຄຳຖາມແມ່ນກວມເອົາວຽກງານການສຳຫຼວດ, ການເກັບກູ້, ການກຳນົດບຸລິມະສິດ, ແລະ ການປະເມີນຜົນກະທົບ ທີ່ສອດຄ່ອງກັບຍຸດທະສາດແຫ່ງຊາດ ແລະ ຍຸດທະສາດຂະແໜງການ ລບຕ ແລະ ຂອບວຽກການພັດທະນາຕ່າງໆ. ການສຳພາດຍັງໄດ້ຖືກດຳເນີນການຜ່ານລະບົບ Zoom ຮ່ວມກັບໂຕແທນຈາກ ອົງການ LuxDev ກ່ອນຈະມີການລົງເຄື່ອນໄຫວວຽກພາກສະໜາມ ເພື່ອຮັບຟັງປະສົບການຂອງພວກເຂົາກ່ຽວກັບການຈັດຕັ້ງປະຕິບັດວຽກງານເກັບກູ້ ລບຕ ເພື່ອການພັດທະນາ. ຊຸດຄຳຖາມທາງອີເມວ ແມ່ນໄດ້ຖືກສົ່ງໃຫ້ ອົງການ KOICA ຕາມການຮ້ອງຂໍຂອງພວກເຂົາ, ແຕ່ໃນເວລາທີ່ກຳລັງຂຽນບົດລາຍງານສະບັບນີ້, ຍັງບໍ່ທັນໄດ້ຮັບຄຳຕອບໃດໆຈາກພວກເຂົາເທື່ອ. ສາມາດເບິ່ງລາຍຊື່ສະບັບເຕັມຂອງຄູ່ຮ່ວມງານລະດັບຊາດ ທີ່ມີການປຶກສາຫາລືນຳໄດ້ທີ່ ພາກເອກະສານຊ້ອນທ້າຍທີ 4.

### 3.3.2. ຄູ່ຮ່ວມງານຂັ້ນແຂວງ ແລະ ຂັ້ນເມືອງ

ໃນແຂວງບໍລິຄຳໄຊ ແລະ ຊຽງຂວາງ, ການສຳພາດຜູ້ໃຫ້ຂໍ້ມູນຕົ້ນຕໍ ແມ່ນໄດ້ຖືກດຳເນີນການຮ່ວມກັບອຳນາດການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ ໂດຍແນໃສ່ສ້າງຄວາມເຂົ້າໃຈກ່ຽວກັບບຸລິມະສິດການພັດທະນາ ຂອງຂະແໜງການຂອງພວກເຂົາ, ຄວາມຄືບໜ້າທີ່ສ້າງໄດ້ໃນຊ່ວງ 5 ປີທີ່ຜ່ານມາ, ແລະ ແຜນການຕໍ່ໜ້າ. ການສຳພາດດັ່ງກ່າວເຮັດໃຫ້ຮູ້ວ່າ ການຕົກຄ້າງຂອງ ລບຕ ໄດ້ສົ່ງຜົນກະທົບແນວໃດແດ່ ຕໍ່ການຈັດຕັ້ງປະຕິບັດແຜນການຕ່າງໆ, ແລະ ມີການພິຈາລະນາວຽກງານເກັບກູ້ ລບຕ ແນວໃດແດ່ ໃນລະຫວ່າງຂັ້ນຕອນການວາງແຜນ. ການສຳພາດດັ່ງກ່າວຊ່ວຍໃຫ້ທີມງານ ສາມາດເກັບກຳໄດ້ບາງຂໍ້ມູນໃນຂັ້ນແຂວງ ແລະ ຂັ້ນເມືອງ ທີ່ກ່ຽວຂ້ອງກັບຄວາມທຸກຍາກ, ການພັດທະນາ, ການກະສິກຳ, ພື້ນຖານໂຄງລ່າງ, ແລະ ອື່ນໆ.

ໄດ້ມີການຈັດກອງປະຊຸມຮ່ວມກັບ ຄກລ ໃນແຂວງຊຽງຂວາງ ເພື່ອໂອ້ລົມກ່ຽວກັບການກຳນົດບຸລິມະສິດ, ການສຳຫຼວດ ແລະ ການເກັບກູ້, ພ້ອມທັງການປະເມີນຜົນ ແລະ ຜົນກະທົບຫຼັງການເກັບກູ້ລະເບີດ. ຄກລ ໄດ້ສະໜອງຂໍ້ມູນກ່ຽວກັບຄົວເຮືອນຕ່າງໆ ທີ່ມີເນື້ອທີ່ດິນໄດ້ຮັບການສຳຫຼວດ ແລະ ເກັບກູ້ໃນບັນດາບ້ານເປົ້າໝາຍ ເຊິ່ງເປັນສ່ວນຊ່ວຍອັນສຳຄັນໃຫ້ສາມາດລະບຸໂຕຜູ້ໃຫ້ຂໍ້ມູນໃນຂັ້ນບ້ານໄດ້. ທີ່ປຶກສາຍັງໄດ້ພົບປະກັບພະນັກງານວິຊາການຈາກ ໜ່ວຍງານຄຸ້ມຄອງຄຸນນະພາບສາກົນ (QSI), ທີ່ເປັນຜູ້ໃຫ້ການສະໜັບສະໜູນ ຄກລ.

ຄຊກລ ແລະ ຫ້ອງການຂັ້ນແຂວງຂອງຕົນ ໄດ້ໃຫ້ການສະໜັບສະໜູນ ການກະກຽມການສຳພາດຮ່ວມກັບອຳນາດການປົກຄອງຂັ້ນເມືອງ ແລະ ຂັ້ນແຂວງ. ສາມາດເບິ່ງລາຍຊື່ຂອງອຳນາດການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ ທີ່ມີການປຶກສາຫາລືນຳໄດ້ທີ່ ພາກເອກະສານຊ້ອນທ້າຍທີ 4.

## 3.4. ການເກັບກຳຂໍ້ມູນຂັ້ນຊຸມຊົນ

### 3.4.1. ການສຳພາດແບບເຄິ່ງໂຄງສ້າງ (SSI)

ຄຳຖາມຊີ້ນຳສຳລັບ SSI ແມ່ນໄດ້ຖືກກຳນົດຂຶ້ນເປັນແຕ່ລະຫົວຂໍ້, ໂດຍແບ່ງເປັນຂົງເຂດຄຳຖາມ ແລະ ຄຳຖາມຍ່ອຍຕ່າງໆ ທີ່ຖືກນຳໃຊ້ເພື່ອສົ່ງເສີມ ແລະ ສະໜອງແນວທາງການປຶກສາຫາລືກັນ. ຊຸດຄຳຖາມດັ່ງກ່າວແມ່ນມີລັກສະນະປາຍເປີດ ເພື່ອຊ່ວຍໃຫ້ຜູ້ຕອບບົດສຳຫຼວດໄດ້ອະທິບາຍ ແລະ ໂອ້ລົມບັນຫາຕ່າງໆທີ່ສຳຄັນຕໍ່ພວກເຂົາ.

SSI ແມ່ນໄດ້ຖືກດຳເນີນການໃນຂັ້ນຊຸມຊົນ ພ້ອມດ້ວຍສະມາຊິກຊຸມຊົນຈາກຫຼາກຫຼາຍພາກສ່ວນ, ລວມທັງການນຳຂັ້ນບ້ານ, ເພື່ອໃຫ້ເຂົ້າໃຈວ່າບັນຫາການຕົກຄ້າງຂອງ ລບຕ, ການເກັບກູ້ ແລະ ການສຳຫຼວດມີຜົນກະທົບ ຫຼື ບໍ່ ແລະ ຖ້າມີ, ມີຜົນກະທົບແນວໃດຕໍ່ຊີວິດ ແລະ ການເປັນຢູ່, ລວມທັງຄວາມໝັ້ນຄົງດ້ານສະບຽງອາຫານ, ຄວາມປ່ຽນແປງດ້ານຊັບສິນໃຈຄົວເຮືອນ, ການເພີ່ມທະວີໂອກາດສ້າງລາຍຮັບ, ຜົນຜະລິດດ້ານກະສິກຳ, ແລະ ການເຂົ້າເຖິງບໍລິການພາກລັດ.

ການຄັດເລືອກຜູ້ຖືກສຳພາດໃນຂັ້ນບ້ານ ແມ່ນໄດ້ຖືກດຳເນີນການໂດຍຜ່ານການປຶກສາຫາລືກັບ ຄະນະກຳມະການຄຸ້ມຄອງ ລບຕ ຂັ້ນແຂວງ ແລະ ຂັ້ນເມືອງ, ແລະ ໂດຍຜ່ານການອ້າງອີງຂໍ້ມູນວຽກງານການເກັບກູ້ ແລະ ການສຳຫຼວດ ທີ່ໄດ້ຮັບຈາກ ຄຊກລ. ໃນແຂວງຊຽງຂວາງ, ຄກລ ຍັ

ງໄດ້ສະໜອງຂໍ້ມູນກ່ຽວກັບຄົວເຮືອນຕ່າງໆ ທີ່ມີເນື້ອທີ່ດິນໄດ້ຮັບການສຳຫຼວດ ແລະ ເກັບກູ້ແລ້ວ, ແລະ ບັນດາລາຍຊື່ຜູ້ໄດ້ຮັບຜົນປະໂຫຍດເຫຼົ່ານີ້ ກໍ່ໄດ້ຖືກນຳໃຊ້ເປັນຈຸດເລີ່ມຕົ້ນ ໃນການລະບຸໂຕຜູ້ຖືກສຳພາດ. ທີ່ປຶກສາໄດ້ສຸມໃສ່ຄວາມພະຍາຍາມ ໃນການສຳພາດກຸ່ມປະຊາກອນໃຫ້ໄດ້ຫຼາກຫຼາຍທີ່ສຸດ, ໂດຍຮັບປະກັນໃຫ້ທຸກຄົນບໍ່ວ່າເພດໃດ, ຊົນເຜົ່າໃດ ແລະ ມີຄວາມພິການ ຫຼື ບໍ່ ຕ້ອງໄດ້ຮັບການພິຈາລະນາເຂົ້າໃນການສຳພາດ. ເຖິງຢ່າງໃດກໍ່ຕາມ, ຜູ້ຖືກສຳພາດສ່ວນໃຫຍ່ມັກຈະເປັນຜູ້ຊາຍ ຍ້ອນພວກເຂົາຖືກເຂົ້າໃຈວ່າອາດຈະມີຂໍ້ມູນຫຼາຍກວ່າ ທີ່ກ່ຽວພັນກັບບັນຫາການຕົກຄ້າງຂອງ ລບຕ ແລະ/ຫຼື ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆທີ່ກ່ຽວຂ້ອງມາກ່ອນ. ຄົນພິການແມ່ນບໍ່ໄດ້ຖືກສຳພາດໂດຍກົງ, ແຕ່ເປັນການສຳພາດສະມາຊິກໃນຄົວເຮືອນຄົນອື່ນແທນໃນ ບ້ານຊ້າງ, ເມືອງຄຳ, ແຂວງຊຽງຂວາງ.

ຄາດໝາຍວ່າຈະມີການດຳເນີນການສຳພາດແບບ SSI ຈຳນວນ 5 ຄັ້ງໃນແຕ່ລະບ້ານ, ເຖິງແມ່ນວ່າຈຳນວນຂອງການສຳພາດໂຕຈິງຈະແຕກຕ່າງກັນໄປຂຶ້ນກັບຂະໜາດຂອງບ້ານ ແລະ ເວລາ ແລະ ຄວາມສະດວກຂອງຜູ້ຕອບສຳພາດ. ໃນບາງບ້ານ, ໂອກາດໃນການສຳພາດລູກບ້ານໃນພື້ນທີ່ດັ່ງກ່າວ ແມ່ນມີຈຳກັດຍ້ອນພວກເຂົາບໍ່ສະດວກ. ໃນສອງກໍລະນີ - ບ້ານນາເຜິ້ງ ແລະ ບ້ານຍອດພຽງ, ການສົນທະນາແບບກຸ່ມສະເພາະ (FGD) ໄດ້ຖືກນຳມາດຳເນີນການແທນການສຳພາດແບບ SSI.49 ໃນບ້ານນາເຜິ້ງ, ໄດ້ມີການຈັດຕັ້ງ 1 ກຸ່ມສົນທະນາຂຶ້ນ ໂດຍປະກອບມີປະຊາຊົນທີ່ເນື້ອທີ່ດິນຂອງຕົນໄດ້ຮັບການສຳຫຼວດແລ້ວ, ສ່ວນໃນບ້ານຍອດພຽງ, ໄດ້ມີການຈັດຕັ້ງ 1 ກຸ່ມສົນທະນາຂຶ້ນໃຫ້ແກ່ຜູ້ຊາຍ ທີ່ໄດ້ຮັບຜົນປະໂຫຍດຈາກວຽກງານເກັບກູ້, ແລະ ອີກໜຶ່ງກຸ່ມສຳລັບແມ່ຍິງ. ໂດຍລວມແລ້ວ, ໄດ້ມີການດຳເນີນການສຳພາດແບບ SSI ຈຳນວນ 48 ຄັ້ງ, 21 ຄັ້ງຢູ່ ແຂວງບໍລິຄຳໄຊ ແລະ 27 ຄັ້ງຢູ່ ແຂວງຊຽງຂວາງ, ດັ່ງທີ່ສະແດງໄວ້ໃນຕາຕະລາງລຸ່ມນີ້.

| **ບ້ານ** | **ຜູ້ຕອບສຳພາດ (SSI)** | **ທັງໝົດ** |
|---|---|---|
| **ແຂວງບໍລິຄຳໄຊ, ເມືອງຄຳເກີດ** | | |
| ບ້ານແສນອຸດົມ | ຮອງນາຍບ້ານ (ຍ); ອະດີດນາຍບ້ານ (ຊ); ລູກບ້ານ (1 x ຊ) | 3 |
| ບ້ານນ້ຳພ້າວ | ນາຍບ້ານ (ຊ); ຮອງນາຍບ້ານ (ຍ); ລູກບ້ານ (4 x ຊ) | 6 |
| ບ້ານໂພນແພງ | ນາຍບ້ານ (ຊ); ລູກບ້ານ (3 x ຍ, 2 x ຊ) | 6 |
| ບ້ານທອງແສນ | ນາຍບ້ານ (ຊ); ຮອງນາຍບ້ານ (ຊ); ລູກບ້ານ (4 x ຊ) | 6 |
| **ຊຽງຂວາງ, ເມືອງແປກ** | | |
| ບ້ານຍອດພຽງ | ນາຍບ້ານ (ຊ); ຮອງນາຍບານ (ຊ) ແລະ ການສົນທະນາແບບກຸ່ມສະເພາະ | 2 |
| ບ້ານນາເຜິ້ງ | ນາຍບ້ານ (ຊ); ຮອງນາຍບ້ານ (ຊ) ແລະ ການສົນທະນາແບບກຸ່ມສະເພາະ | 2 |
| ບ້ານນາໂອ | ລູກບ້ານ (1 x ຊ) | 1 |
| ບ້ານລາດບວກ | ນາຍບ້ານ (ຊ); ລູກບ້ານ (2 x ຍ, 1 x ຊ) | 4 |
| Xiengkhuang, Kham district | | |
| ບ້ານທົ່ນ | (ການສົນທະນາແບບກຸ່ມສະເພາະ ເທົ່ານັ້ນ) | 0 |
| ບ້ານຄັງເຄ | ນາຍບ້ານ (ຊ); ລູກບ້ານ (5 x ຊ) | 6 |
| ບ້ານຊ້າງ | ນາຍບ້ານ (ຊ); ຮອງນາຍບ້ານ (ຍ); ລູກບ້ານ (1 x ຊ; 3 x ຍ) | 6 |
| ບ້ານລອງປົວ | ນາຍບ້ານ (ຊ); ລູກບ້ານ (3 x ຍ, 2 x ຊ) | 6 |
| | **ຈຳນວນທັງໝົດຂອງການສຳພາດແບບ SSI** | 48 |

49 FGD ເຫຼົ່ານີ້ແມ່ນໄດ້ຖືກຈັດຕັ້ງຂຶ້ນ ເພີ່ມເຕີມໃຫ້ແກ່ FGD ທີ່ວາງແຜນໄວ້ກ່ອນແລ້ວ ຮ່ວມກັບລູກບ້ານຕົ້ນຕໍໃນບັນດາບ້ານເປົ້າໝາຍ ທີ່ມີການດຳເນີນວຽກງານເກັບກູ້, ເຊິ່ງຈະມີການໂອ້ລົມລາຍລະອຽດຕື່ມອີກໃນພາກຕໍ່ໄປ.

### 3.4.2. ການສົນທະນາແບບກຸ່ມສະເພາະ (FGD) ແລະ ລຳດັບເວລາ

FGD ແມ່ນໄດ້ຖືກດຳເນີນການ ໃນບັນດາບ້ານທີ່ມີການດຳເນີນວຽກງານເກັບກູ້ລະເບີດໄປແລ້ວ, ເຊັ່ນ: ບ້ານທອງແສນ ໃນ ແຂວງບໍລິຄຳໄຊ, ແລະ ບ້ານລອງປິວ, ບ້ານທີນ, ບ້ານລາດບວກ, ແລະ ບ້ານນາໂອ ໃນ ແຂວງຊຽງຂວາງ. ໄດ້ມີການວາງແຜນໄວ້ວ່າຈະດຳເນີນ FGD ຮອບທີສອງທີ່ ບ້ານໂພນແພງ ໃນ ແຂວງບໍລິຄຳໄຊ, ແຕ່ບໍ່ສາມາດດຳເນີນການໄດ້ ເນື່ອງຈາກມີກຳນົດການຕຳກັນກັບງານດອງຂອງບ້ານ.

FGD ແມ່ນເນັ້ນໜັກໄປທີ່ການສ້າງລຳດັບເວລາ, ເພື່ອນຳໃຊ້ເຂົ້າໃນການສືບຄົ້ນຄວາມປ່ຽນແປງ, ທັງໃນທາງບວກ ແລະ ທາງລົບ, ທີ່ເກີດຂຶ້ນໃນບ້ານຕ່າງໆ ໃນຊ່ວງໄລຍະເວລາທີ່ກຳນົດໃດໜຶ່ງ, ໂດຍເປັນເອກະພາບກັນກັບຜູ້ເຂົ້າຮ່ວມ FGD. ຄວາມປ່ຽນແປງທີ່ໂອ້ລົມກັນໃນກຸ່ມ ປະກອບມີຄວາມປ່ຽນແປງດ້ານພື້ນຖານໂຄງລ່າງ, ການສຶກສາ, ສຸຂະພາບ, ການກະສິກຳ, ແລະ ການເຂົ້າເຖິງບໍລິການອື່ນໆ, ເຊັ່ນ: ໄຟຟ້າ ແລະ ນ້ຳປະປາ. ທັນທີທີ່ຄວາມປ່ຽນແປງດັ່ງກ່າວ ຖືກນຳໄປຈັດລຽງເຂົ້າໃນແຜນຜັງລຳດັບເວລາ, ຜູ້ເຂົ້າຮ່ວມການສົນທະນາ ກໍ່ຈະຖືກຖາມວ່າບັນຫາການຕົກຄ້າງຂອງ ລບຕ ມີຜົນກະທົບ ຫຼື ບໍ່ ແລະ ຖ້າມີ, ມີຜົນກະທົບແນວໃດຕໍ່ກັບຄວາມຄືບໜ້າ, ແລະ ວຽກງານການເກັບກູ້ ລບຕ ມີການປະກອບສ່ວນ ຫຼື ບໍ່ ແລະ ຖ້າມີ, ມີການປະກອບສ່ວນແນວໃດຕໍ່ຄວາມປ່ຽນແປງດັ່ງກ່າວ. ດ້ວຍວິທີນີ້, FGD ກໍ່ຈະຊ່ວຍໃຫ້ສາມາດກຳນົດແຜນຜັງລຳດັບເວລາໃຫ້ແກ່ບ້ານໃດໜຶ່ງໄດ້ເປັນເວລາຫຼາຍປີ ຫຼື ຫຼາຍທົດສະຫວັດ ທັງຍັງສາມາດຊີ້ໃຫ້ເຫັນໄດ້ວ່າ ບ່ອນໃດທີ່ວຽກງານເກັບກູ້ລະເບີດ ໄດ້ມີການ ະໜັບສະໜູນການພັດທະນາ ແລະ ການປ່ຽນແປງ.



*ການກຳນົດແຜນຜັງລຳດັບເວລາໃນບ້ານ ລອງປິວ, ເມືອງຄຳ, ແຂວງຊຽງຂວາງ*

FGD ປະກອບມີກຸ່ມທີ່ລວມເອົາສະມາຊິກບ້ານ 6-7 ຄົນຕໍ່ບ້ານ, ຜູ້ທີ່ຖືກລະບຸວ່າເປັນກຸ່ມຄົນສຳຄັນໃນບ້ານດັ່ງກ່າວ ຜູ້ທີ່ມີຄວາມຮູ້ກ່ຽວກັບປະຫວັດຄວາມເປັນມາຂອງບ້ານ ແລະ ມີອຳນາດຕັດສິນໃຈ. ສະມາຊິກອາດລວມມີນາຍບ້ານ ແລະ ຮອງ, ຜູ້ອາວຸໂສ, ສະມາຊິກຂອງກຸ່ມກະສິກອນ, ສະຫະພັນແມ່ຍິງລາວ, ສູນກາງຊາວໜຸ່ມລາວ, ແລະ ກຸ່ມອື່ນໆທີ່ກ່ຽວຂ້ອງ. ຜົນປະໂຫຍດຂອງການສົນທະນາກຸ່ມໃນຮູບແບບນີ້ ແມ່ນການທີ່ສະມາຊິກໃນກຸ່ມມີໂອກາດໄດ້ສະໜອງການສະໜັບສະໜູນເຊິ່ງກັນ ແລະ ກັນ ທັງຍັງເປັນຊ່ອງທາງໃນການຢັ້ງຢືນຄວາມຖືກຕ້ອງ ແລະ ການວິເຄາະຂໍ້ມູນໃນລະຫວ່າງການສົນທະນາຮ່ວມກັນນຳອີກ. ທີ່ປຶກສາໄດ້ຖາມຄຳຖາມຕິດຕາມຜົນເພື່ອສິ່ງເສີມ ແລະ ເສີມຂະຫຍາຍການສົນທະໃນໃຫ້ເລິກເຊິ່ງຍິ່ງຂຶ້ນ, ລວມໄປເຖິງຄຳຖາມສະຫຼຸບຜົນ ກ່ຽວກັບແຜນການໃນອະນາຄົດ.

FGD ແມ່ນໂອກາດໃນການສືບຄົ້ນຫາກົນໄກຕົ້ນເຫດ ຂອງຜົນກະທົບ ໂດຍຜ່ານການກຳນົດແຜນງານການກວດກູ້ ລບຕ ເພື່ອມະນຸດສະທຳ HMA ທັງຍັງຊ່ວຍໄດ້ຮູ້ເຖິງເລື່ອງລາວຄວາມເປັນຈິງ ກ່ຽວກັບການປ່ຽນແປງທີ່ຍິ່ງໃຫຍ່ ຈາກຊຸມຊົນທີ່ກ່ຽວຂ້ອງ. ສິ່ງທີ່ສຳຄັນກ່ຽວກັບລຳດັບເວລາແມ່ນວ່າ ບັນຫາການຕົກຄ້າງຂອງ ລບຕ ແລະ ການເກັບກູ້ ລບຕ ມັກຈະບໍ່ໄດ້ຖືກຍົກຂຶ້ນມາໂດຍຜູ້ເຂົ້າຮ່ວມ ວ່າເປັນປັດໄຈດ້ານເນື້ອໃນທີ່ຊ່ວຍສະກັດກັ້ນ ຫຼື, ໃນທາງກົງກັນຂ້າມ, ອຳນວຍຄວາມສະດວກໃຫ້ແກ່ການປ່ຽນແປງ, ແຕ່ທັນທີທີ່ໄດ້ຖືກນຳສະເໜີເປັນຫົວຂໍ້ສົນທະນາແລ້ວ, ການສົນທະນາກໍ່ໄດ້ສະແດງໃຫ້ເຫັນວ່າ ວຽກງານເກັບກູ້ໄດ້ຊ່ວຍເຂົ້າໃນການສ້າງຄວາມຄືບໜ້າຕໍ່ການປ່ຽນແປງໃນບ້ານຄືແນວໃດ, ນອກເໜືອໄປຈາກການເຮັດໃຫ້ປະຊາຊົນຮູ້ສຶກປອດໄພຍິ່ງຂຶ້ນ.

ແຕ່ລະການສົນທະນາແບບ FGD ແມ່ນຈະໃຊ້ເວລາໂດຍສະເຫຼ່ຍປະມານ 1 ຊົ່ວໂມງໄປຈົນເຖິງສູງສຸດບໍ່ເກີດ 90 ນາທີເພື່ອບໍ່ໃຫ້ຜູ້ເຂົ້າຮ່ວມເກີດຄວາມອິດເມື່ອຍ. ເຖິງຢ່າງໃດກໍ່ຕາມ, ໃນບາງໂອກາດ, FGD ກໍ່ອາດໃຊ້ເວລາດົນກວ່ານັ້ນ, ໂດຍຫຼັກແລ້ວແມ່ນຍ້ອນຄວາມກະຕືລືລົ້ນຂອງຜູ້ເຂົ້າຮ່ວມ ໃນການເລົ່າຄືນເຖິງຄວາມປ່ຽນແປງຕ່າງໆ ແລະ ໄລຍະເວລາທີ່ຄວາມປ່ຽນແປງເຫຼົ່ານັ້ນເກີດຂຶ້ນ.

### 3.4.3. ການເກັບກຳຮູບພາບ

ຮູບພາບບາງອັນແມ່ນໄດ້ຖືກຖ່າຍຂຶ້ນໃນພາກສະໜາມ ເພື່ອປະກອບເປັນເນື້ອໃນເຂົ້າໃນບົດຄົ້ນຄວ້າ. ຮູບພາບຕ່າງໆປະກອບມີ: ພາບທີ່ດິນປູກ

ຝັງ ແລະ ທີ່ດິນພັດທະນາຊຸມຊົນ ທີ່ໄດ້ຮັບການເກັບກູ້ລະເບີດແລ້ວ. ຈະມີການຂໍອານຸຍາດຖ່າຍພາບກັບຜູ້ເຂົ້າຮ່ວມທຸກຄົນ ແລະ ຈະບໍ່ມີການຖ່າຍພາບປະຊາຊົນ. ຮູບພາບບາງອັນຈາກການເຄື່ອນໄຫວວຽກງານພາກສະໜາມ ແມ່ນໄດ້ຖືກລວມເຂົ້າໃນບົດລາຍງານສະບັບນີ້ ເພື່ອຊ່ວຍເກັບກຳເປັນຫຼັກຖານໃຫ້ເຫັນເຖິງການປ່ຽນແປງ ແລະ ຜົນກະທົບໃນຂັ້ນຊຸມຊົນ.

### 3.4.4. ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ

ທີ່ປຶກສາໄດ້ສຸມໃສ່ຄວາມພະຍາຍາມເທົ່າທີ່ເຮັດໄດ້ ເພື່ອຮັບປະກັນໃຫ້ກຸ່ມຄົນຫຼາກຫຼາຍດ້ານອາຍຸ, ເພດ, ແລະ ຊົນເຜົ່າ, ໄດ້ຮັບການສຳພາດໃນບ້ານຕ່າງໆ ແລະ ໄດ້ເຂົ້າຮ່ວມໃນການສົນທະນາແບບ FGD. ເຖິງຢ່າງໃດກໍ່ຕາມ, ເຫັນໄດ້ວ່າມີແມ່ຍິງພຽງບາງກຸ່ມເທົ່ານັ້ນ ທີ່ເຂົ້າຮ່ວມໃນການຄົ້ນຄວ້າຄັ້ງນີ້ ເຊິ່ງໜ້ອຍກວ່າຄາດໝາຍທີ່ພວກເຮົາຢາກໃຫ້ເປັນ. ກຸ່ມຄົນສຳຄັນໃນບ້ານທີ່ໄດ້ຮັບການຄົ້ນຄວ້າ ສ່ວນໃຫຍ່ແລ້ວແມ່ນຜູ້ຊາຍ, ຍົກເວັ້ນໃນບາງກໍລະນີທີ່ຮອງນາຍບ້ານເປັນຜູ້ຍິງ ລວມໄປເຖິງສະມາຊິກຂອງ ສະຫະພັນແມ່ຍິງລາວ. ພະນັກງານຈາກຄະນະກຳມະການຄຸ້ມຄອງ ລບຕ ຂັ້ນແຂວງ ແລະ ຂັ້ນເມືອງ, ໂດຍທັງໝົດເປັນຜູ້ຊາຍ, ເປັນຜູ້ໃຫ້ການຊ່ວຍເຫຼືອ ເຂົ້າໃນການກະກຽມການສຳພາດ. ດ້ວຍເຫດນັ້ນຈຶ່ງສົ່ງຜົນເຮັດໃຫ້ມັກຈະມີຜູ້ຖືກສຳພາດເປັນຜູ້ຊາຍເທົ່ານັ້ນ ຍ້ອນພວກເຂົາເບິ່ງຄືວ່າຈະມີຄວາມຮູ້ກ່ຽວກັບບັນຫາ ລບຕ ຫຼາຍກວ່າ. ເຖິງຢ່າງໃດກໍ່ຕາມ, ດ້ວຍຄວາມບໍ່ທໍ້ຖອຍ, ພວກເຮົາກໍ່ສາມາດລະບຸຜູ້ຖືກສຳພາດທີ່ເປັນແມ່ຍິງໄດ້, ທັງຍັງໄດ້ສ້າງຕັ້ງກຸ່ມສົນທະນາແບບ FGD ທີ່ມີແຕ່ສະມາຊິກຍິງເທົ່ານັ້ນທີ່ ບ້ານຍອດພຽງ, ເມືອງແປກ.

ບັນດາບ້ານທີ່ຖືກຮັບເລືອກເຂົ້າໃນການຄົ້ນຄວ້າຄັ້ງນີ້ ມີລູກບ້ານທີ່ເປັນປະຊາກອນກວມ 3 ຊົນເຜົ່າຫຼັກຂອງ ສປປ ລາວ ຄື: ຊົນເຜົ່າລາວ-ໄຕ, ມອນ-ຂະແມ ແລະ ມົ້ງ-ອິວມ້ຽນ.[50] ຊົນເຜົ່າລາວ, ຢາງ, ໄຕ, ມອຍ, ຂະມຸ ແລະ ມົ້ງແມ່ນກຸ່ມຄົນທີ່ຖືກຮັບເລືອກເຂົ້າສຳພາດ.

### 3.4.5. ການແປເອກະສານ ແລະ ການແປປາກເປົ່າ

ບັນດາເຄື່ອງມືຄົ້ນຄວ້າແມ່ນໄດ້ຖືກແປເປັນພາສາລາວ ໂດຍທີ່ປຶກສາຝ່າຍລາວ, ແລະ ທຸກການສຳພາດທີ່ດຳເນີນການເປັນພາສາລາວ ກໍ່ໄດ້ຖືກແປເປັນພາສາອັງກິດ. ເຖິງແມ່ນວ່າຈະຕ້ອງໄດ້ສຳພາດຄົນຈາກຊົນເຜົ່າທີ່ແຕກຕ່າງກັນກໍ່ຕາມ, ແຕ່ກໍ່ບໍ່ໄດ້ມີການແປບົດສຳພາດ ເປັນພາສາຊົນເຜົ່າທີ່ກ່ຽວຂ້ອງ. ພາຍຫຼັງສິ້ນສຸດການສຳພາດແລ້ວ, ກໍ່ໄດ້ມີການຂຽນບັນທຶກການສຳພາດອອກມາເປັນພາສາອັງກິດ ໃນແຕ່ລະວັນ.

## 3.5. ພິທີການ ແລະ ຫຼັກຈັນຍາບັນຂອງການຄົ້ນຄວ້າ

ມີການຍຶດໝັ້ນຕໍ່ຫຼັກການ ບໍ່ສ້າງຄວາມອັນຕະລາຍ ຕະຫຼອດໄລຍະຂອງການຄົ້ນຄວ້າ, ໂດຍຮັບປະກັນ, ເທົ່າທີ່ເຮັດໄດ້, ໃຫ້ການຄົ້ນຄວ້າ ແລະ ທຸກການດຳເນີນງານທີ່ຈຳເປັນ ເພື່ອໃຫ້ບັນລຸໄດ້ວຽກງານດັ່ງກ່າວນີ້ ບໍ່ສ້າງຄວາມອັນຕະລາຍໂດຍບໍ່ຕັ້ງໃຈຕໍ່ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ, NGO, ອົງການ ສປຊ ເພື່ອການພັດທະນາ, ຄຊກລ.

- ກ່ອນດຳເນີນການສຳພາດ ຫຼື ການສົນທະນາແບບ FGD, ຕ້ອງໄດ້ຮັບຄຳຍິນຍອມເຫັນດີຈາກຜູ້ເຂົ້າຮ່ວມເສຍກ່ອນ. ການສຳພາດ ແລະ ການສົນທະນາກຸ່ມສະເພາະ ຈະສາມາດດຳເນີນການໄດ້ ກໍ່ຕໍ່ເມື່ອຜູ້ເຂົ້າຮ່ວມເຫັນດີເຂົ້າຮ່ວມ. ໂດຍຄຳນຶງເຖິງເວລາທີ່ຜູ້ເຂົ້າຮ່ວມຕ້ອງເສຍໄປໃນການສຳພາດ, ທີ່ປຶກສາຈະຕ້ອງໄດ້ກະກຽມການສຳພາດ ແລະ ການສົນທະນາກຸ່ມສະເພາະລ່ວງໜ້າ ແລະ ກຳນົດເວລາທີ່ເໝາະສົມກັບຜູ້ເຂົ້າຮ່ວມ. ໃນບາງກໍລະນີ, FGD ແມ່ນໄດ້ຖືກນຳມາຈັດຕັ້ງປະຕິບັດແທນການສຳພາດສ່ວນບຸກຄົນ, ຍ້ອນມັນ ເໝາະສົມກັບຜູ້ເຂົ້າຮ່ວມຫຼາຍກວ່າ. ຜູ້ເຂົ້າຮ່ວມຈະໄດ້ຮັບແຈ້ງກ່ຽວກັບໄລຍະເວລາຂອງການສຳພາດ ກ່ອນເລີ່ມສຳພາດ ແລະ ຕ້ອງໄດ້ຮັບແຈ້ງວ່າ ຕົນມີສິດຢຸດໃຫ້ສຳພາດເມື່ອໃດກໍ່ໄດ້.
- ໄດ້ມີການພົບປະກັບນາຍບ້ານ ຫຼື ຮອງນາຍບ້ານ ກ່ອນເລີ່ມດຳເນີນການສຳພາດ ເພື່ອໃຫ້ມີການນຳສະເໜີຈຸດປະສົງຂອງການຄົ້ນຄວ້າ, ແລະ ໃຫ້ໄດ້ຮັບຄຳຍິນຍອມເຫັນດີ. ພະນັກງານຂອງ ຄະນະກຳມະການຄຸ້ມຄອງ ລບຕ ຂັ້ນແຂວງ ແລະ ຂັ້ນເມືອງ ແມ່ນຜູ້ທີ່ໃຫ້ການຊ່ວຍເຫຼືອເຂົ້າໃນການພົບປະ ແລະ ການຂໍອານຸຍາດຈາກອຳນາດການປົກຄອງຂັ້ນບ້ານ.
- ໄດ້ມີການອະທິບາຍແຈ້ງແລ້ວວ່າ ບໍ່ມີຄ່າຕອບແທນໃດໆສຳລັບການເຂົ້າຮ່ວມການຄົ້ນຄວ້າຄັ້ງນີ້. ທີ່ປຶກສາແມ່ນໄດ້ປະຕິບັດຕາມພິທີການ ແລະ ຂໍ້ຊີ້ນຳຂອງ ອົງການ ສປຊ ເພື່ອການພັດທະນາ ດ້ານຄ່າຕອບແທນ.
- ຊື່ຂອງຜູ້ເຂົ້າຮ່ວມ ລວມໄປເຖິງຂໍ້ມູນສ່ວນໂຕຂອງພວກເຂົາທີ່ສະໜອງໃຫ້ນັ້ນ ຈະຖືກເກັບຮັກສາເປັນຄວາມລັບພາຍໃຕ້ບົດລາຍງານສະບັບນີ້ ເພື່ອບໍ່ໃຫ້ສາມາດສືບສາວຄືນໄດ້ເຖິງແຫຼ່ງຂໍ້ມູນຕົ້ນຕໍ.
- ປະຊາຊົນຈະບໍ່ໄດ້ຖືກຖ່າຍພາບ ເພື່ອນຳໃຊ້ເປັນສ່ວນໜຶ່ງຂອງການຄົ້ນຄວ້າ, ແລະ ຕ້ອງໄດ້ຮັບອານຸຍາດຈາກອຳນາດການປົກຄອງ ຫຼື ຄູ່

ຮ່ວມງານທີ່ກ່ຽວຂ້ອງເສຍກ່ອນ ຈຶ່ງຈະສາມາດຖ່າຍພາບໄດ້ (ພາບທີ່ສະແດງເຖິງຜົນຂອງການພັດທະນາ, ບ້ານ, ພື້ນຖານໂຄງລ່າງ ແລະ ອື່ນໆ).
- ບໍ່ມີການສຳພາດເດັກນ້ອຍອາຍຸຕໍ່າກວ່າ 18.

## 3.6. ຂອບວຽກການວິເຄາະ

ບັນດາໂຕຊີ້ວັດຂອງ ປພຍ 18, ແຜນການ 5 ປີຄັ້ງທີ 9, ແລະ ເສັ້ນທາງກ້າວສູ່ຄວາມປອດໄພ III ລ້ວນແລ້ວແຕ່ແມ່ນໂຕຊີ້ວັດລະດັບສູງ, ແລະເປັນທີ່ຮັບຮູ້ແລ້ວວ່າ ການຄົ້ນຄວ້າຄັ້ງນີ້ຈະບໍ່ສາມາດວັດແທກຄວາມຄືບໜ້າ ໂດຍສົມທຽບໃສ່ໂຕຊີ້ວັດເຫຼົ່ານີ້ໄດ້, ເຖິງວ່າຈະມີຂໍ້ບົ່ງບອກທີ່ຊີ້ໃຫ້ເຫັນເຖິງການປະກອບສ່ວນບາງປະການກໍ່ຕາມ. ດັ່ງນັ້ນ, ທີ່ປຶກສາຈຶ່ງໄດ້ຕັດສິນໃຈນຳໃຊ້ ຂອບວຽກການດຳລົງຊີວິດແບບຍືນຍົງ (SLF) ເປັນຂອບວຽກການວິເຄາະ ເພື່ອມາປະເມີນຜົນກະທົບໃນຂັ້ນຄົວເຮືອນ ແລະ ຊຸມຊົນ. SLF ຮັບຮູ້ວ່າການດຳລົງຊີວິດໃນຂັ້ນຄົວເຮືອນ ແມ່ນອີງປະກອບທີ່ມີຄວາມຫຍຸ້ງຍາກ ແລະ ປົນເປກັນ, ແລະ ດ້ວຍເຫດນັ້ນ, ສະພາບການໃນວົງກວ້າງ ອາດສົ່ງຜົນກະທົບຕໍ່ຜົນໄດ້ຮັບດ້ານການດຳລົງຊີວິດ.[51]

ແນວທາງ SLF ແມ່ນອີງໃສ່ຄວາມເຂົ້າໃຈທີ່ວ່າປະຊາຊົນ, ໂດຍສະເພາະຄົນທຸກ ທີ່ມີຄວາມສາມາດໃນການເຂົ້າເຖິງຊັບສິນໃດໜຶ່ງຢ່າງຈຳກັດ, ຈຳເປັນຕ້ອງໄດ້ມີຊັບສິນທີ່ຫຼາກຫຼາຍ ເພື່ອຊ່ວຍໃຫ້ພວກເຂົາບັນລຸໄດ້ຜົນໄດ້ຮັບດ້ານການດຳລົງຊີວິດທາງບວກ. ເວົ້າອີກຢ່າງໜຶ່ງກໍ່ຄື: ປະຊາຊົນໄດ້ມີການຈັດຕັ້ງປະຕິບັດຍຸດທະສາດການດຳລົງຊີວິດທີ່ແຕກຕ່າງກັນ ເພື່ອໃຫ້ໄດ້ມາເຊິ່ງຜົນໄດ້ຮັບສູງສຸດ, ເພື່ອແກ້ໄຂບັນຫາຂາດແຄນການບໍລິໂພກ ແລະ ເພື່ອຫຼຸດຜ່ອນຄວາມສ່ຽງ. ຂອບວຽກດັ່ງກ່າວເນັ້ນໜັກໃສ່ຊັບສິນຕົ້ນຕໍ 5 ປະການ ທີ່ຜູ້ທຸກຍາກສາມາດນຳໃຊ້ເຂົ້າໃນການສ້າງຍຸດທະສາດການດຳລົງຊີວິດຂອງຕົນໄດ້:

- ຊັບສິນມະນຸດ, ລວມທັງປະລິມານ ແລະ ຄຸນນະພາບຂອງແຮງງານມະນຸດທີ່ມີຢູ່. ລວມມີສຸຂະພາບ, ຄວາມໝັ້ນຄົງດ້ານສະບຽງອາຫານ, ການເຂົ້າເຖິງການສຶກສາ, ທັກສະ ແລະ ອື່ນໆ.
- ຊັບສິນທາງສັງຄົມ, ທີ່ເນັ້ນໜັກໃສ່ຄວາມສາມາດໃນການເພີ່ມທະວີເຄືອຂ່າຍສັງຄົມ, ບັນລຸພັນທະທາງສັງຄົມ ແລະ ວັດທະນະທຳ, ແລະ ຮີບໂຮມຂໍ້ມູນ.
- ຊັບສິນທາງການເງິນ, ລວມທັງຄວາມສາມາດໃນການຊື້ສິນຄ້າ ແລະ ບໍລິການພື້ນຖານ ລວມໄປເຖິງການເກັບອອມຈຳນວນໜຶ່ງ.
- ຊັບສິນທາງກາຍະພາບ, ລວມທັງການເຂົ້າເຖິງພື້ນຖານໂຄງລ່າງ, ເຊັ່ນ: ໂຮງຮຽນ, ຫ້ອງປິ່ນປົວພະຍາດ, ຕະຫຼາດ, ນໍ້າສ້າງ ແລະ ຖະໜົນຫົນທາງ, ເຄື່ອງມື, ແລະ ອຸປະກອນຕ່າງໆ.
- ຊັບສິນທາງທຳມະຊາດ, ລວມທັງການເຂົ້າເຖິງປ່າໄມ້, ດິນປູກຝັງ, ແລະ ແຫຼ່ງນໍ້າຕ່າງໆ ລວມໄປເຖິງທຸກຜົນກະທົບຕໍ່ສິ່ງແວດລ້ອມ.

ຂອບວຽກດັ່ງກ່າວໄດ້ຄຳນຶງເຖິງ ຜົນກະທົບຂອງຄວາມອ່ອນໄຫວ ຕໍ່ການດຳລົງຊີວິດໃນຄົວເຮືອນ, ຍົກຕົວຢ່າງຜົນກະທົບຂອງແຮງສະທ້ອນຕໍ່ການດຳລົງຊີວິດຕ່າງໆ, ເຊັ່ນ: ໄພທຳມະຊາດ, ຄວາມຂັດແຍ່ງ, ຫຼື ການເຈັບປ່ວຍ; ການປ່ຽນແປງຂອງລະດູການ, ທີ່ອາດສົ່ງຜົນຕໍ່ລາຄາຕະຫຼາດ, ສຸຂະພາບ, ການຈ້າງງານ, ແລະ ໂອກາດດ້ານການກະສິກຳ; ແລະ ແນວໂນ້ມ, ລວມທັງແນວໂນ້ມດ້ານປະຊາກອນ ຫຼື ເສດຖະກິດ ແລະ ລາຄາຕະຫຼາດ. ຄວາມສາມາດຂອງຄົວເຮືອນຕ່າງໆ ໃນການເຂົ້າເຖິງທຶນທັງ 5 ທີ່ພວກເຂົານຳໃຊ້ເຂົ້າໃນການກຳນົດຍຸດທະສາດການດຳລົງຊີວິດຂອງຕົນນັ້ນ ອາດຖືກຈຳກັດ ຫຼື ໄດ້ຮັບການຍົກສູງໂດຍໂຄງສ້າງ, ການຈັດຕັ້ງ ແລະ ຂັ້ນຕອນ, ກົດໝາຍ ແລະ ນະໂຍບາຍຂອງສັງຄົມ ລວມໄປເຖິງລະດັບການບັງຄັບໃຊ້ຂັ້ນຕອນຕ່າງໆເຫຼົ່ານີ້. ສິ່ງນີ້ໄດ້ສະແດງໃຫ້ເຫັນວ່າ ການເຂົ້າເຖິງຊັບສິນດັ່ງກ່າວ ທີ່ຊ່ວຍປະກອບສ່ວນເຂົ້າໃນການດຳລົງຊີວິດຂອງຄົວເຮືອນຕ່າງໆນັ້ນ ອາດໄດ້ຮັບຜົນກະທົບໃນທາງບວກ ຫຼື ທາງລົບໂດຍປັດໄຈພາຍນອກ ຄືແນວໃດ. ຖ້າຄົວເຮືອນໃດໜຶ່ງມີຊັບສິນທີ່ເຂັ້ມແຂງ ແລະ ກວ້າງຂວາງແລ້ວນັ້ນ, ພວກເຂົາກໍ່ຈະມີທາງເລືອກ ດ້ານຍຸດທະສາດການດຳລົງຊີວິດຫຼາຍຂຶ້ນ ແລະ ສາມາດທົນທານຕໍ່ຜົນກະທົບທາງລົບຈາກພາຍນອກໄດ້ດີຂຶ້ນ. ບັນດາຄົວເຮືອນທີ່ມີຊັບສິນໜ້ອຍ ມັກຈະມີຄວາມອ່ອນໄຫວຕໍ່ຜົນສະທ້ອນສູງກວ່າໝູ່.[52]




*ແຫຼ່ງຂໍ້ມູນ: ກະຊວງການພັດທະນາສາກົນ ແຫ່ງ ປະເທດອັງກິດ (DFID), "ເອກະສານຊີ້ນຳການດຳລົງຊີວິດແບບຍືນຍົງ: 1.1: ພາບລວມ," ເມສາ 1999.*

ທີ່ປຶກສາໄດ້ວິເຄາະຂໍ້ມູນດ້ານປະລິມານ ທີ່ເກັບກຳໄດ້ໃນລະຫວ່າງການຄົ້ນຄວ້າ ໂດຍນຳໃຊ້ບັນດາໂຕຊີ້ວັດອັນກວ້າງຂວາງດັ່ງຕໍ່ໄປນີ້ ທີ່ຖືກສ້າງຂຶ້ນໂດຍທີ່ປຶກສາ ໂດຍອ້າງອີງໃສ່ບັນດາໂຕຊີ້ວັດພາຍໃຕ້ 5 ທຶນຕົ້ນຕໍຂອງ SLF ແລະ ໂດຍຕໍ່ຍອດຈາກບັນດາຂົງເຂດການສອບຖາມທີ່ກ່ຽວຂ້ອງ ທີ່ຖືກຍົກຂຶ້ນມາໃນການທົບທວນຄືນບົດຄວາມ ແລະ ໃນລະຫວ່າງການສຳພາດກັບຄູ່ຮ່ວມງານດ້ານວຽກງານເກັບກູ້ລະເບີດທີ່ ນະຄອນຫຼວງວຽງຈັນ.[53] ໃຫ້ຈື່ໄວ້ວ່າໂຕຊີ້ວັດເຫຼົ່ານີ້ ແມ່ນບໍ່ສາມາດວັດແທກໄດ້ໃນດ້ານຈຳນວນ, ແຕ່ຖືກອອກແບບມາເພື່ອຊີ້ໃຫ້ເຫັນເຖິງຄວາມຄືບໜ້າ (ຫຼື ການຂາດຄວາມຄືບໜ້າ) ພາຍໃຕ້ແຕ່ລະຊຸດຊັບສິນ. ຂອບເຂດຂອງຂໍ້ມູນທີ່ກ່ຽວຂ້ອງກັບໂຕຊີ້ວັດແຕ່ລະອັນເຫຼົ່ານີ້ທີ່ຖືກເກັບກຳມາໄດ້ນັ້ນ ແມ່ນຈະຂຶ້ນກັບຂໍ້ມູນທີ່ຜູ້ຕອບສຳພາດສະໜອງໃຫ້ ໃນລະຫວ່າງດຳເນີນການຄົ້ນຄວ້າພາກສະໜາມ, ແລະ ຂໍ້ມູນທີ່ມີພ້ອມສະໜອງໃຫ້ໃນຂັ້ນເມືອງ ແລະ ຂັ້ນບ້ານ.

| **ຊັບສິນພາຍໃຕ້ຂອບວຽກການດຳລົງຊີວິດ** | **ໂຕຊີ້ວັດ** |
|---|---|
| ມະນຸດ | • ຄວາມປອດໄພ ແລະ ການຫຼຸດຜ່ອນຄວາມສ່ຽງດ້ານການດຳລົງຊີວິດ/ການປະຕິບັດວຽກງານ<br>• ເດັກນ້ອຍໄດ້ເຂົ້າໂຮງຮຽນ<br>• ຄວາມສາມາດໃນການເຂົ້າເຖິງບໍລິການປິ່ນປົວສຸຂະພາບ |
| ສັງຄົມ | • ເຂົ້າເຖິງຂໍ້ມູນຂ່າວສານຈາກອຳນາດການປົກຄອງທ້ອງຖິ່ນ, ພໍ່ຄ້າແມ່ຄ້າ, ອື່ນໆ (ລວມທັງຜູ້ດຳເນີນວຽກງານເກັບກູ້ລະເບີດ)<br>• ຄວາມສາມາດ/ເວລາໃນການຢ້ຽມຢາມໝູ່ ແລະ ຄອບຄົວ, ເຂົ້າຮ່ວມພິທີການ ແລະ ອື່ນໆ<br>• ການມີສ່ວນຮ່ວມເຂົ້າໃນກອງປະຊຸມ ແລະ ການຕັດສິນໃຈຂັ້ນຊຸມຊົນ |
| ການເງິນ | • ເພີ່ມທະວີ ແລະ/ຫຼື ສ້າງຄວາມປ່ຽນແປງຕໍ່ລາຍຮັບໃນຄົວເຮືອນ<br>• ການລົງທຶນເຂົ້າໃນເຄື່ອງມື, ເຄື່ອງຈັກ, ການລ້ຽງສັດ ແລະ ອື່ນໆ<br>• ຄວາມສາມາດໃນການອົດອອມ |
| ທຳມະຊາດ | • ການເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນ<br>• ຄວາມສາມາດໃນການປູກຝັງ (ປະເພດຂອງພືດ, ການນຳໃຊ້ເຄື່ອງຈັກ ແລະ ອື່ນໆ) / ຫຼື ຄວາມປ່ຽນແປງຕໍ່ວຽກງານການດຳລົງຊີວິດ |

| | |
|---|---|
| | • ຄວາມປ່ຽນແປງຕໍ່ສິ່ງແວດລ້ອມ (ທາງບວກ ຫຼື ທາງລົບ) |
| ກາຍະພາບ | • ການເຂົ້າເຖິງຖະໜົນ ແລະ ພື້ນຖານໂຄງລ່າງໃນຊຸມຊົນ<br>• ຄວາມປ່ຽນແປງດ້ານເງື່ອນໄຂຂອງທີ່ພັກອາໄສ<br>• ການເຂົ້າເຖິງນ້ຳສະອາດ, ໄຟຟ້າ, ການຄ້າ/ຕະຫຼາດ |
| ຄວາມອ່ອນໄຫວ (ຜົນສະທ້ອນ, ຄວາມປ່ຽນແປງຂອງລະດູການ, ແນວໂນ້ມ ແລະ ອື່ນໆ) | • ຄວາມສາມາດໃນການຮັບມືກັບບັນຫາຄົວເຮືອນ, ການດຳລົງຊີວິດ ຫຼື ຜົນສະທ້ອນຈາກພາຍນອກ<br>• ຜົນກະທົບຂອງລະດູການຕໍ່ຄວາມໝັ້ນຄົງດ້ານການດຳລົງຊີວິດ |
| ສະພາບແວດລ້ອມເອື້ອອຳນວຍ | • ການສະໜັບສະໜູນທີ່ສະໜອງໃຫ້ຫຼັງການເກັບກູ້ (ເງິນກູ້, ການສະໜອງຊັບສິນ, ການຝຶກອົບຮົມ ແລະ ອື່ນໆ)<br>• ຂໍ້ມູນທີ່ສະໜອງໃຫ້ໂດຍຜູ້ດຳເນີນວຽກງານເກັບກູ້ ກ່ຽວກັບຂັ້ນຕອນການສຳຫຼວດ ແລະ ການເກັບກູ້ |

ເຖິງແມ່ນວ່າຈະຮັບຮູ້ແລ້ວວ່າ ການຄົ້ນຄວ້າຄັ້ງນີ້ຈະບໍ່ສາມາດວັດແທກຄວາມຄືບໜ້າ ໂດຍສົມທຽບໃສ່ໂຕຊີ້ວັດລະດັບສູງ ພາຍໃຕ້ນະໂຍບາຍ ແລະ ຍຸດທະສາດຂອງລັດຖະບານໄດ້ກໍ່ຕາມ, ແຕ່ມັນໄດ້ພົບວ່າ ເງື່ອນໄຂການຫຼຸດພົ້ນອອກຈາກຄວາມທຸກຍາກ ຂອງ ລັດຖະບານລາວ[54] ແມ່ນມີຄວາມສອດຄ່ອງໃນລະດັບໜຶ່ງກັບຊັບສິນ SLF ແລະ ບັນດາໂຕຊີ້ວັດທີ່ກ່ຽວຂ້ອງທີ່ຖືກສ້າງຂຶ້ນ.

| **ເງື່ອນໄຂການຫຼຸດພົ້ນອອກຈາກຄອບຄົວທຸກຍາກ** | **ເງື່ອນໄຂຫຼຸດພົ້ນອອກຈາກບ້ານທຸກຍາກ** |
|---|---|
| • ມີບ້ານທີ່ປອດໄພ ແລະ ແຂງແຮງ<br>• ມີຊັບສິນ ແລະ ອຸປະກອນທີ່ຈຳເປັນໃນການດຳລົງຊີວິດ ແລະ ສ້າງລາຍຮັບ<br>• ມີແຮງງານ, ມີລາຍຮັບໝັ້ນຄົງ, ຫຼື ມີວຽກເຮັດງານທຳ<br>• ສະມາຊິກຄອບຄົວໃນໄວຮຽນ ໄດ້ຮັບການສຶກສາຊັ້ນມັດທະຍົມຕົ້ນ<br>• ສາມາດເຂົ້າເຖິງນ້ຳສະອາດ ແລະ ແຫຼ່ງພະລັງງານທີ່ໝັ້ນຄົງ<br>• ສາມາດເຂົ້າເຖິງບໍລິການປິ່ນປົວສຸຂະພາບຂັ້ນພື້ນຖານ | • ມີ ຫຼື ສາມາດເຂົ້າເຖິງໂຮງຮຽນປະຖົມ ຫຼື ມັດທະຍົມຕົ້ນ<br>• ມີ ຫຼື ສາມາດເຂົ້າເຖິງສຸກສາລາ ຫຼື ໜ່ວຍບໍລິການປິ່ນປົວສຸຂະພາບຂັ້ນພື້ນຖານ<br>• ມີ ຫຼື ສາມາດເຂົ້າເຖິງແຫຼ່ງນ້ຳສະອາດ<br>• ມີຖະໜົນທີ່ສາມາດນຳໃຊ້ໄດ້ຕະຫຼອດປີ<br>• ສາມາດເຂົ້າເຖິງບໍລິການສື່ສານ ແລະ ການຂົນສົ່ງ<br>• ສາມາດເຂົ້າເຖິງຕະຫຼາດ ເພື່ອຊື້/ຂາຍ/ແລກປ່ຽນສິນຄ້າ<br>• ສາມາດເຂົ້າເຖິງໄຟຟ້າຈາກຕາໜ່າງໄຟຟ້າແຫ່ງຊາດ<br>• ມີຄອບຄົວພົ້ນທຸກກວມ 70 ສ່ວນຮ້ອຍໃນບ້ານດັ່ງກ່າວ |

ການວິເຄາະໄດ້ຄຳນຶງເຖິງຄຳຖາມຕ່າງໆດັ່ງຕໍ່ໄປນີ້:

- ແມ່ນໃຜທີ່ໄດ້ຮັບຜົນປະໂຫຍດຈາກການເກັບກູ້ ລບຕ, ແລະ ມີຜົນປະໂຫຍດອັນໃດແດ່ທີ່ຖືກເພີ່ມທະວີຂຶ້ນ ໃນແງ່ຂອງຊັບສິນທັງ 5 ພາຍໃຕ້ຂອບວຽກການດຳລົງຊີວິດຂ້າງເທິງ? ສິ່ງນີ້ໄດ້ສົ່ງຜົນກະທົບອັນໃດແດ່ຕໍ່ຄວາມອ່ອນໄຫວ ແລະ ຄວາມທົນທານຂອງຄົວເຮືອນຕ່າງໆ?
- ແມ່ນໃຜທີ່ບໍ່ໄດ້ຮັບຜົນປະໂຫຍດຈາກວຽກງານເກັບກູ້ ລບຕ, ແລະ ມີປັດໄຈໃດແດ່ທີ່ເປັນອຸປະສັກຕໍ່ການສ້າງຜົນກະທົບທາງບວກ?
- ກົນໄກການກຳນົດບຸລິມະສິດທີ່ຖືກນຳໃຊ້ ເຂົ້າໃນການກຳນົດບຸລິມະສິດໃຫ້ແກ່ວຽກງານສຳຫຼວດ ແລະ ເກັບກູ້ລະເບີດ ມີອິດທິພົນແນວໃດຕໍ່ກັບຜົນກະທົບໂດຍລວມ ຂອງການດຳເນີນວຽກງານເກັບກູ້ລະເບີດ? ມີຂໍ້ແຕກຕ່າງທີ່ສັງເກດເຫັນໄດ້ ຫຼື ບໍ່ດ້ານວິທີການທີ່ ຄກລ ນຳໃຊ້ໂດຍສົມທຽບກັບ ກອງຮ້ອຍ 58?
- ກົນໄກການປະສານວຽກງານເກັບກູ້ ລບຕ/ລະເບີດ ມີບົດບາດ ແລະ ການປະກອບສ່ວນຫຍັງແດ່ຕໍ່ຜົນໄດ້ຮັບ?
- ສະຖິຕິປະຊາກອນ (ບົດບາດຍິງຊາຍ, ອາຍຸ, ຊົນເຜົ່າ, ຄວາມພິການ ແລະ ອື່ນໆ) ແລະ ລະດັບຄວາມທຸກຍາກ ມີອິດທິພົນຫຍັງແດ່ຕໍ່ການບັນລຸຜົນໄດ້ຮັບໃຫ້ແກ່ຢ່າງລຸ່ລ່ວງ?
- ວຽກງານເກັບກູ້ ລບຕ ສົ່ງຜົນກະທົບແນວໃດຕໍ່ການນຳໃຊ້ທີ່ດິນ ເມື່ອສົມທຽບກັບລະດັບຄວາມທຸກຍາກ?
- ມີປັດໄຈພາຍນອກອັນໃດແດ່ຕາມການສັງເກດ ທີ່ປະກອບສ່ວນໃຫ້ເກີດຄວາມປ່ຽນແປງດ້ານບວກ, ຫຼື ໃນທາງກົງກັນຂ້າມ, ດ້ານລົບ ຫຼື ບໍ່ເກີດການປ່ຽນແປງເລີຍ?
- ການເກັບກູ້ລະເບີດໃນທີ່ດິນປູກຝັງ ໄດ້ສ້າງຜົນປະໂຫຍດອັນໃດແດ່ເມື່ອສົມທຽບໃສ່ກັບ ການເກັບກູ້ລະເບີດໃນທີ່ດິນພັດທະນາຂອງ

ຊຸມຊົນ?

- ການເກັບກູ້ລະເບີດອອກຈາກທີ່ດິນປູກຝັງ ໄດ້ກໍ່ໃຫ້ເກີດຄວາມແຕກຕ່າງດ້ານເວລາ ທີ່ຕ້ອງການເພື່ອກະກຽມທີ່ດິນ ແລະ ການເພາະປູກພືດ ຫຼື ບໍ່? ຖ້າບໍ່, ປະຊາຊົນຈະໄດ້ປະໂຫຍດຫຍັງຈາກການເກັບກູ້ທີ່ດິນຂອງຕົນ?
- ມີຜົນກະທົບອັນໃດແດ່ສຳລັບທີ່ດິນທີ່ໄດ້ຮັບການສຳຫຼວດແຕ່ບໍ່ຖືກເກັບກູ້ເທື່ອ? ຜົນກະທົບຂອງການມີທີ່ດິນໄດ້ຮັບການສຳຫຼວດ ແຕກຕ່າງໄປຈາກຜົນກະທົບຂອງທີ່ດິນທີ່ມີ ລຕບ ຕົກຄ້າງແຕ່ບໍ່ໄດ້ຮັບການສຳຫຼວດ ຫຼື ບໍ່?
- ປະຊາຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ ມີຄວາມເຂົ້າໃຈແນວໃດຕໍ່ຂັ້ນຕອນການສຳຫຼວດ ແລະ ເກັບກູ້ລະເບີດ? ພວກເຂົາໄດ້ຮັບການປຶກສາ ແລະ ແຈ້ງຂ່າວ ຫຼື ບໍ່?
- ພະແນກຂັ້ນແຂວງ ແລະ ຫ້ອງການຂັ້ນເມືອງ ມີຄວາມເຂົ້າໃຈແນວໃດ ກ່ຽວກັບການປະກອບສ່ວນຂອງວຽກງານສຳຫຼວດ ແລະ ເກັບກູ້ ລບຕ ຕໍ່ແຜນ ແລະ ບຸລິມະສິດການພັດທະນາຂອງພວກເຂົາ?
- ຜົນກະທົບ ແລະ ຄວາມປ່ຽນແປງຕາມທີ່ສັງເກດ ແລະ ບັນທຶກໄວ້ ມີການປະກອບສ່ວນແນວໃດ ຕໍ່ເປົ້າໝາຍທີ່ກຳນົດໄວ້ພາຍໃຕ້ ຍຸດທະສາດຂະແໜງການ ລບຕ, ປພຍ 18, ແລະ ແຜນການ 5 ປີຄັ້ງທີ 9?

---

50 ເບິ່ງ, ການພັດທະນາແບບເປີດກວ້າງໃນ ລາວ, "ກຸ່ມຊົນເຜົ່າ-ພາສາໃນ ສປປ ລາວ," ປັບປຸງວັນທີ 22 ມີນາ 2019.

51 GICHD, "ໜັງສືສັງລວມການສຳຫຼວດຜົນກະທົບດ້ານເສດຖະກິດ-ສັງຄົມ," GICHD, ທັນວາ 2011.

52 ເບິ່ງ: DFID, (2001), "ເອກະສານຊີ້ນຳການດຳລົງຊີວິດແບບຍືນຍົງ," ລອນດອນ, DFID; Collinson, S. (2003) "ອຳນາດ, ການດຳລົງຊີວິດ ແລະ ຄວາມຂັດແຍ່ງ: ກໍລະນີສຶກສາໃນການວິເຄາະເສດຖະສາດການເມືອງເພື່ອການດຳເນີນງານດ້ານມະນຸດສະທຳ," ບົດລາຍງານ HPG ເລກທີ 13, ODI; ແລະ Levine, Simon, (2014), "ວິທີສຶກສາການດຳລົງຊີວິດ: ການເຮັດໃຫ້ ຂອບວຽກການດຳລົງຊີວິດແບບຍືນຍົງ ປາກົດຜົນເປັນຈິງ," ເອກະສານວຽກຂອງ ODI ເລກທີ 22.

53 ເບິ່ງ DFID, "ເອກະສານຊີ້ນຳການດຳລົງຊີວິດແບບຍືນຍົງ," ເມສາ 1999.

54 ດຳລັດວ່າດ້ວຍເງື່ອນໄຂດ້ານການພັດທະນາ ແລະ ການຫຼຸດພົ້ນອອກຈາກຄວາມທຸກຍາກ, ເລກທີ 348, ລັດຖະບານລາວ, ນະຄອນຫຼວງວຽງຈັນ, 16 ພະຈິກ 2017 (ບົດແປບໍ່ເປັນທາງການ).

## 3.7. ບັນຫາທ້າທາຍ ແລະ ຂໍ້ຈຳກັດຂອງການຄົ້ນຄວ້າ

ໃນລະຫວ່າງດຳເນີນການປະເມີນຜົນຄັ້ງນີ້, ຕ້ອງໄດ້ພົບພໍ້ກັບບັນຫາທ້າທາຍ ແລະ ຂໍ້ຈຳກັດຫຼາຍປະການ. ໃນກໍລະນີທີ່ເປັນໄປໄດ້, ທີມງານໄດ້ສຸມໃສ່ຄວາມພະຍາຍາມໃນການຫຼຸດຜ່ອນບັນຫາທ້າທາຍຕ່າງໆ, ເຖິງແມ່ນວ່າບັນຫາທ້າທາຍເຫຼົ່ານີ້ຈະຍັງມີຄວາມກ່ຽວຂ້ອງ ໃນລະດັບທີ່ສົ່ງຜົນກະທົບຕໍ່ການດຳເນີນການ ແລະ ຂອບເຂດຂອງການຄົ້ນຄວ້າຕາມທີ່ອະທິບາຍໄວ້ລຸ່ມນີ້ກໍ່ຕາມ.

- ຂອບເຂດເວລາໃນການດຳເນີນການຄົ້ນຄວ້າດັ່ງກ່າວແມ່ນຂ້ອນຂ້າງສັ້ນ, ແລະ ມີພຽງທີ່ປຶກສາສອງຄົນເທົ່ານັ້ນທີ່ເປັນຜູ້ດຳເນີນການ. ສິ່ງນີ້ແນ່ນອນວ່າໄດ້ກໍ່ໃຫ້ເກີດຂໍ້ຈຳກັດຢ່າງຊັດເຈນ ໃນດ້ານປະລິມານຂອງຂໍ້ມູນທີ່ສາມາດເກັບກຳໄດ້ ເພື່ອປະກອບເຂົ້າໃນການວິເຄາະ ແລະ ສັງຂໍ້ແນະນຳຕ່າງໆ. ຂອບເຂດຂອງການຄົ້ນຄວ້າແມ່ນໄດ້ຖືກຈຳກັດໄວ້ ໃນດ້ານຂອງຈຳນວນບ້ານທີ່ໄດ້ຮັບການຢ້ຽມຢາມ ແລະ ຈຳນວນຂອງປະຊາຊົນທີ່ຖືກສຳພາດ, ເຊິ່ງໝາຍຄວາມວ່າຜົນຂອງການຄົ້ນຄວ້າ ຈະບໍ່ສາມາດນຳໄປໃຊ້ອ້າງອີງໄດ້ຕໍ່ເມືອງ ຫຼື ແຂວງອື່ນໆ ແບບດຽວກັນກັບທີ່ຜົນຂອງການສຳຫຼວດຂະໜາດໃຫຍ່ສາມາດເຮັດໄດ້. ເຖິງຢ່າງໃດກໍ່ຕາມ, ແນວທາງດ້ານຄຸນນະພາບ ທີ່ນຳໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ໄດ້ຊ່ວຍໃຫ້ທີ່ປຶກສາສາມາດຄົ້ນຄວ້າຫົວຂໍ້ຕ່າງໆໄດ້ຢ່າງເລິກເຊິ່ງຍິ່ງຂຶ້ນ ແລະ ມີຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບປັດໄຈຕົ້ນເຫດ ທີ່ເປັນໂຕຍົກສູງ ຫຼື ຫຼຸດຜ່ອນຜົນກະທົບ. ຜົນໄດ້ຮັບຂອງການຄົ້ນຄວ້ານີ້ ຍັງໄດ້ຖືກນຳເອົາໄປສົມທຽບກັບ ຜົນໄດ້ຮັບຂອງການປະເມີນຜົນຫຼັງການເກັບກູ້ຄັ້ງກ່ອນ ທີ່ຖືກດຳເນີນການໃນ ສປປ ລາວ, ເພື່ອສົມທຽບຜົນໄດ້ຮັບ ແລະ ຊຸກຍູ້ໃຫ້ເກີດຫົວຂໍ້ແບບດຽວກັນ.[55]

  ການອອກແບບການຄົ້ນຄວ້າດັ່ງທີ່ກຳນົດໄວ້ໃນ ຂອບໜ້າວຽກ ຈຳເປັນຕ້ອງໄດ້ມີຄວາມເຂົ້າໃຈ ເຖິງຜົນກະທົບຂອງການຕົກຄ້າງຂອງ ລບຕ (ພື້ນຖານ) ເພື່ອມາສົມທຽບກັບ ການວິເຄາະຜົນກະທົບຫຼັງການສຳຫຼວດ ແລະ ການເກັບກູ້. ດັ່ງນັ້ນ, ການອອກແບບນີ້ ຈຶ່ງບໍ່ໄດ້ຊ່ວຍສະໜອງພື້ນຖານ ທີ່ການຄົ້ນຄວ້າໃນອະນາຄົດ ສາມາດນຳເອົາໄປວັດແທກຄວາມຄືບໜ້າໄດ້, ເຖິງແມ່ນວ່າມັນຈະສະໜອງຂໍ້ມູນ ກ່ຽວກັບສະຖານະການກ່ອນການເກັບກູ້ ແລະ ສະຖານະການຫຼັງການເກັບກູ້ໃນບັນດາບ້ານທີ່ໄດ້ຮັບການຢ້ຽມຢາມ ກໍ່ຕາມ. ເຖິງຢ່າງໃດກໍ່ຕາມ, ຂໍ້ມູນດ້ານຄຸນນະພາບທີ່ເກັບກຳໄດ້ນັ້ນ ແມ່ນສາມາດຊ່ວຍປະກອບເຂົ້າໃນການອອກແບບ ການສຳຫຼວດພື້ນຖານດ້ານປະລິມານ ທີ່ສາມາດດຳເນີນການໄດ້ໃນຂອບເຂດທີ່ກວ້າງຂວາງກວ່າເກົ່າ ແລະ ນຳກັບມາດຳເນີນການຊ້ຳໄດ້ຢ່າງເປັນປົກກະຕິ ເພື່ອໃຫ້ສາມາດເກັບກຳໄດ້ການປ່ຽນແປງ.

- ມີການສະໜອງຂໍ້ມູນດ້ານປະລິມານຢ່າງຈຳກັດໃຫ້ແກ່ທີ່ປຶກສາ ໃນແງ່ຂອງໂຕເລກທີ່ກ່ຽວຂ້ອງກັບຄວາມທຸກຍາກ ແລະ ຊີວິດການເປັນຢູ່ທີ່ດີ. ຂໍ້ມູນໃນຂັ້ນບ້ານເອງກໍ່ມີຈຳກັດເຊັ່ນກັນ. ສິ່ງນີ້ໝາຍຄວາມວ່າການຄົ້ນຄວ້າຄັ້ງນີ້ ບໍ່ສາມາດສະໜອງການວິເຄາະຂໍ້ມູນດ້ານປະລິມານ ໂດຍສອດຄ່ອງກັບຂໍ້ມູນດ້ານຄຸນນະພາບໄດ້, ຍົກເວັ້ນຂໍ້ມູນການເກັບກູ້ ແລະ ການສຳຫຼວດ ທີ່ມີພ້ອມສະໜອງໃຫ້ໃນ IMSMA.
- ຂອບເຂດເວລາຂອງການຄົ້ນຄວ້າ, ທີ່ມີການດຳເນີນວຽກງານພາກສະໜາມພາຍໃນ 1 ເດືອນ, ໄດ້ກໍ່ໃຫ້ເກີດຄວາມທ້າທາຍ ໃນການທຳຄວາມເຂົ້າໃຈຕໍ່ການປ່ຽນແປງ ທີ່ອາດເກີດຂຶ້ນໄດ້ຕະຫຼອດເວລາ. ເຖິງຢ່າງໃດກໍ່ຕາມ, ວິທີການສ້າງລຳດັບເວລາ ທີ່ຖືກນຳໃຊ້ໃນລະຫວ່າງ ການສົນທະນາແບບກຸ່ມສະເພາະ ໄດ້ຊ່ວຍໃຫ້ສາມາດລວບລວມຂໍ້ມູນກ່ຽວກັບການປ່ຽນແປງ ທີ່ເກີດຂຶ້ນໃນຊ່ວງເວລາທີ່ຜ່ານມາໄດ້, ແລະ ການປະກອບສ່ວນຂອງວຽກງານເກັບກູ້ ຕໍ່ການປ່ຽນແປງເຫຼົ່ານີ້.
- ໃນບາງບ້ານ, ບັນຫາທ້າທາຍແມ່ນການຫາຄົນມາສຳພາດໃຫ້ພຽງພໍ. ບັນຫານີ້ເກີດມາຈາກຫຼາຍສາເຫດ. ໃນບາງກໍລະນີ, ລູກບ້ານແມ່ນຫຍຸ້ງວຽກ ແລະ ບໍ່ສາມາດເຂົ້າຮ່ວມໄດ້ (ຍ້ອນແມ່ນລະດູເກັບກ່ຽວໃນບາງພື້ນທີ່, ແລະ ໃນພື້ນທີ່ອື່ນໆກໍ່ມີການຈັດກອງປະຊຸມຂັ້ນບ້ານ ຫຼື ງານສັງສັນຕ່າງໆ, ເຊັ່ນ: ງານດອງ). ນອກຈາກນັ້ນ, ໃນບາງກໍລະນີ, ລູກບ້ານກໍ່ຂາດຄວາມຮູ້ກ່ຽວກັບວຽກງານການສຳຫຼວດ ແລະ ການເກັບກູ້ (ເຖິງແມ່ນວ່າທີມງານຈະມີລາຍຊື່ຂອງບັນດາຄົວເຮືອນ ທີ່ໄດ້ຮັບຜົນປະໂຫຍດຈາກວຽກງານເກັບກູ້ລະເບີດມາກ່ອນກໍ່ຕາມ), ແລະ ດັ່ງນັ້ນບັນຫານີ້ຈຶ່ງກໍ່ໃຫ້ເກີດຄວາມຫຍຸ້ງຍາກ ໃນການລະບຸປະຊາຊົນຜູ້ທີ່ມີທີ່ດິນໄດ້ຮັບການສຳຫຼວດແລ້ວ, ແລະ ໃນບາງກໍລະນີກໍ່ໄດ້ຮັບການເກັບກູ້ແລ້ວ. ບັນຫາທ້າທາຍທີ່ກ່ຽວຂ້ອງກັບ ການຮັບປະກັນຄວາມຫຼາກຫຼາຍຂອງຜູ້ຖືກສຳພາດ ໃນດ້ານບົດບາດຍິງຊາຍ ແມ່ນໄດ້ຖືກລະບຸໄວ້ໃນພາກ 3.4.4 ຂ້າງເທິງ.

---

55 ໂດຍສະເພາະ:Jo Durham ແລະ ວົງ ນັນທະວົງ, "ການປະເມີນຜົນກະທົບພາຍຫຼັງເກັບກູ້ ລບຕ ໃນ ສປປ ລາວ," ກັນຍາ 2010; ແລະ Shiqi Guo, "ຜົນກະທົບຄົງຄ້າງຂອງລະເບີດບໍ່ທັນແຕກຕໍ່ການບັນລຸເປົ້າໝາຍການສຶກສາໃນ ລາວ," ບົດຄວາມການພັດທະນາເສດຖະກິດ, ສະບັບທີ 147, ພະຈິກ 2020.

# 4. ຜົນຂອງການຄົ້ນຄວ້າ

ການທຳຄວາມເຂົ້າໃຈຜົນກະທົບຂອງວຽກງານເກັບກູ້ ລບຕ ແມ່ນສິ່ງທີ່ມີຄວາມທ້າທາຍ, ຍ້ອນຈະດຳເນີນວຽກງານດັ່ງກ່າວໃຫ້ດີໄດ້ນັ້ນ ຕ້ອງໄດ້ອາໄສຄວາມເຂົ້າໃຈອັນຮອບດ້ານ ກ່ຽວກັບການດຳລົງຊີວິດຂອງປະຊາຊົນໃນຂົງເຂດທີ່ມີ ລບຕ ຕົກຄ້າງຢູ່ ພ້ອມທັງຕ້ອງເຂົ້າໃຈເຖິງຄວາມຊັບຊ້ອນ ກ່ຽວກັບວິທີທີ່ປະຊາຊົນຮັກສາ ແລະ ດັດປັບວິຖີການດຳລົງຊີວິດຂອງຕົນ. ໂດຍຫຼັກແລ້ວ, ການຄົ້ນຄວ້າໄລຍະຍາວແມ່ນວຽກງານທີ່ຈຳເປັນ ເພື່ອໃຫ້ເກັບກຳໄດ້ຮູບແບບການປ່ຽນແປງຕ່າງໆ, ແນວທາງການດຳລົງຊີວິດທີ່ປະຊາຊົນເລືອກ, ແລະ ຜົນກະທົບຂອງໂຄງສ້າງ ແລະ ຂັ້ນຕອນຕ່າງໆທີ່ມີຕໍ່ການດັດປັບວິຖີຊີດວິດການເປັນຢູ່ ແລະ ການຕັດສິນໃຈຕ່າງໆ.[56] ຂອບເຂດເວລາທີ່ກຳນົດໃຫ້ສຳລັບການຄົ້ນຄວ້ານີ້ ແມ່ນບໍ່ພຽງພໍໃຫ້ພວກເຮົາສາມາດລົງເລິກ ວິຖີຊີວິດຂອງປະຊາຊົນທີ່ພວກເຮົາໄດ້ພົບປະນຳໄດ້, ເປັນພຽງແຕ່ການປະເມີນແບບໄວເທົ່ານັ້ນ.

ຂອບວຽກການດຳລົງຊີວິດແບບຍືນຍົງ ແລະ ທຶນການດຳລົງຊີວິດ 5 ປະການຄື: ມະນຸດ, ສັງຄົມ, ການເງິນ, ທຳມະຊາດ, ແລະ ກາຍະພາບ, ແມ່ນໄດ້ຖືກນຳໃຊ້ເພື່ອຈັດຕັ້ງ ແລະ ນຳສະເໜີຜົນໄດ້ຮັບ, ເຖິງແມ່ນວ່າຈະຮັບຮູ້ແລ້ວວ່າ ບໍ່ສາມາດຈັດແບ່ງການດຳລົງຊີວິດອອກເປັນ 5 ໝວດໝູ່ຊັບສິນໄດ້ຢ່າງເປັນລະບຽບ, ໂດຍຈະມີລັກສະນະທີ່ຫຍຸ້ງຍາກ, ຊັບຊ້ອນ, ແລະ ເກາະກ່າຍກັນຫຼາຍກວ່າ. ຂໍ້ມູນທີ່ສະໜອງໃຫ້ໂດຍຜູ້ຕອບບົດສຳຫຼວດໃນລະຫວ່າງການສຳພາດ ແລະ ການສົນທະນາແບບກຸ່ມສະເພາະ ແມ່ນໄດ້ຖືກຈັດວາງໄວ້ຢູ່ໃນຈຸດໃຈກາງຂອງຜົນໄດ້ຮັບ. ຜົນໄດ້ຮັບທີ່ຖືກນຳສະເໜີນັ້ນ ບໍ່ໄດ້ເປັນໂຕແທນໃຫ້ແກ່ບັນດາຄົວເຮືອນຕ່າງໆ, ແຕ່ເປັນພຽງພາບລວມດ້ານທັດສະນະຄະຕິອັນຫຼາກຫຼາຍ ຈາກບັນດາຜູ້ຕອບບົດສຳຫຼວດ ແລະ ອຳນາດການປົກຄອງທ້ອງຖິ່ນໃນທົ່ວທຸກຊຸມຊົນ ທີ່ໄດ້ຮັບການຢ້ຽມຢາມ.

ໃນຂະນະທີ່ການຄົ້ນຄວ້າດັ່ງກ່າວ ແນໃສ່ພິຈາລະນາວຽກງານເກັບກູ້ ແລະ ການສຳຫຼວດທີ່ໄດ້ຮັບການສະໜັບສະໜຸນຈາກ ອົງການ ສປຊ ເພື່ອການພັດທະນາເປັນຫຼັກ - ໂດຍສະເພາະການສຳຫຼວດ ແລະ ການເກັບກູ້ທີ່ດຳເນີນການໂດຍ ຄກລ ໃນແຂວງຊຽງຂວາງ ພາຍໃຕ້ເງິນທຶນຈາກ ປະທດນູແວນເຊລັງ, ແລະ ໂດຍ ກອງຮ້ອຍ 58 ໃນແຂວງບໍລິຄຳໄຊ ພາຍໃຕ້ເງິນທຶນຈາກ ອົງການ KOICA - ຜົນໄດ້ຮັບຍັງໄດ້ລວມເອົາຕົວຢ່າງຈາກການສຳຫຼວດ ແລະ ການເກັບກູ້ອື່ນໆ ທີ່ຖືກດຳເນີນການໃນບ້ານຕ່າງໆມາກ່ອນ ເຂົ້ານຳ, ຍ້ອນສິ່ງນີ້ຊ່ວຍສະໜອງພາບລວມກ່ຽວກັບວິທີທີ່ວຽກງານເກັບກູ້ລະເບີດ ປະກອບສ່ວນຕໍ່ການປ່ຽນແປງ ແລະ ການພັດທະນາພາຍໃນບັນດາຊຸມຊົນ ທີ່ໄດ້ຮັບຜົນກະທົບຈາກ ລບຕ. ໃນກໍລະນີທີ່ເປັນໄປໄດ້, ກໍ່ມີການຂີດໝາຍໄວ້ວ່າວຽກງານເກັບກູ້ອັນໃດ ແມ່ນວຽກງານທີ່ ອົງການ ສປຊ ເພື່ອການພັດທະນາ ໃຫ້ການສະໜັບສະໜຸນ.

## 4.1. ດ້ານມະນຸດ

ພາຍໃຕ້ທຶນມະນຸດຂອງຂອບວຽກການດຳລົງຊີວິດ, ພວກເຮົາໄດ້ດຳເນີນການກວດສອບວ່າ ປະຊາຊົນມີຄວາມເຂົ້າໃຈ ແລະ ຮັບມືກັບຄວາມສ່ຽງຈາກ ລບຕ ກ່ອນການເກັບກູ້ຄືແນວໃດ, ລວມໄປເຖິງຄວາມເຂົ້າໃຈຂອງພວກເຂົາ ຕໍ່ສະຖານະການກ່ອນການເກັບກູ້ ໃນດ້ານຄວາມປອດໄພຂອງພວກເຂົາເອງ ແລະ ຄວາມສາມາດໃນການເຮັດວຽກ ຫຼື ການດຳລົງຊີວິດໃນທີ່ດິນທີ່ມີການຕົກຄ້າງຂອງລະເບີດໃນເມື່ອກ່ອນ. ຄວາມປ່ຽນແປງຕໍ່ດ້ານການສຶກສາ ແລະ ການປິ່ນປົວສຸຂະພາບ ກໍ່ໄດ້ຖືກອະທິບາຍໄວ້ໃນພາກສ່ວນນີ້ເຊັ່ນກັນ.

### 4.1.1. ການດຳລົງຊີວິດໃນທ່າມກາງ ລບຕ

ອີງຕາມຂອບເຂດຂອງການຕົກຄ້າງຂອງ ລບຕ ໃນ ສປປ ລາວ, ໝາຍຄວາມວ່າປະຊາຊົນຈຳນວນຫຼາຍ, ໂດຍສະເພາະໃນ 9 ແຂວງທີ່ມີການຕົກຄ້າງສູງທີ່ສຸດ, ຕ້ອງໄດ້ອາໄສຢູ່ທ່າມກາງ ລບຕ ມາເປັນເວລາຫຼາຍປີ. ລບຕ ແມ່ນໄດ້ຖືກກະຈັດກະຈາຍໄປໃນຫຼາຍຂົງເຂດ ຈົນປະຊາຊົນທີ່ພວກເຮົາສຳພາດ ສະແດງອອກໃຫ້ເຫັນວ່າຮູ້ສຶກ “ທຳມະດາ” ແລ້ວໃນການຕ້ອງອາໄສ ແລະ ດຳລົງຊີວິດໃນຂົງເຂດທີ່ມີການຕົກຄ້າງຢູ່. ຄວາມຮູ້ສຶກຊິນເຄີຍກັບບັນຫາແບບນີ້ ໄດ້ເຮັດໃຫ້ເກີດຂໍ້ຫຍຸ້ງຍາກ ໃນການປະເມີນຜົນກະທົບຂອງວຽກງານເກັບກູ້ ລບຕ, ຍ້ອນເຖິງວ່າຈະມີການຕົກຄ້າງຂອງ ລບຕ ຢູ່ກໍ່ຕາມ ປະຊາຊົນກໍ່ຕ້ອງໄດ້ດຳເນີນຊີວິດຕໍ່ໄປ. ດັ່ງທີ່ໜຶ່ງໃນຜູ້ຕອບບົດສຳພາດກ່າວວ່າ, “ປະຊາຊົນຮຽນຮູ້ທີ່ຈະດຳລົງຊີວິດກັບໄພຄຸກຄາມ, ເຊັ່ນງູພິດ.” ຊາວກະສິກອນທີ່ຖືກສຳພາດ ມັກຈະຕອບວ່າພວກເຂົາ “ບໍ່ມີທາງເລືອກ,” ແລະ ຖ້າພວກເຂົາບໍ່ດຳເນີນການປູກຝັງໃນທີ່ດິນດັ່ງກ່າວ, ພວກເຂົາກໍ່ຈະບໍ່ມີອາຫານກິນ.

56 Simon Levine, "ວິທີສຶກສາການດຳລົງຊີວິດ: ການເຮັດໃຫ້ ຂອບວຽກການດຳລົງຊີວິດແບບຍືນຍົງ ປາກົດຜົນເປັນຈິງ," ເອກະສານວຽກຂອງ ODI ເລກທີ 22, ກັນຍາ 2014.

ໃນຫຼາຍໆບ້ານທີ່ໄປຢ້ຽມຢາມ, ປະຊາຊົນໄດ້ເວົ້າກ່ຽວກັບສະຖານະການຂອງການຕົກຄ້າງໃນອະດີດ ແລະ ຈຳນວນທີ່ແທ້ຈິງຂອງ ລບຕ ທີ່ຖືກຖິ້ມລົງພື້ນດິນ. ມີການລາຍງານວ່າທັງຜູ້ຍິງ ແລະ  ຜູ້ຊາຍມັກຈະເຄື່ອນຍ້າຍ ລບຕ ເວລາທີ່ພວກເຂົາພົບເຫັນວັດຖຸດັ່ງກ່າວ ໃນທີ່ດິນຂອງຕົນ. ລບຕ ມັກຖືກນຳໄປໄວ້ຢູ່ຕາມກໍໄຜ່, ຫຼື ຕາມຄັນນາຕ່າງໆ. ມີຜູ້ຊາຍຄົນໜຶ່ງອະທິບາຍວ່າ ລາວພົບເຫັນບົ່ມບີ້ 4 ຫຼື 5 ລູກ[57] ໃນນາຂອງລາວໃນປີ 2010 ແລະ ໄດ້ນຳເອົາວັດຖຸດັ່ງກ່າວໄປໄວ້ທີ່ຄັນນາໂດຍໃຊ້ຊ້ອນຕັກເອົາໄປ. ໃນບ້ານລາດບອກ, ເມືອງແປກ, ແລະ ບ້ານລອງປີວ, ເມືອງຄຳ, ມີຜູ້ຊາຍກຸ່ມໜຶ່ງເລົ່າວ່າ ພວກເຂົາເກັບລວບລວມ ລບຕ ໂດຍໃຊ້ເສື້ອ ແລະ ເສື້ອຄຸມຫໍ່ ລບຕ ກ່ອນຈະນຳເອົາໄປຝັງໃນຂຸມເລິກ. ເລື່ອງລາວການນຳເອົາ ລບຕ ໄປຝັງຂຸມເລິກຕາມຄັນນາຕ່າງໆ ແມ່ນເລື່ອງລາວທີ່ໄດ້ຍິນຊ້ຳໄປຊ້ຳມາຫຼາຍຄັ້ງ, ເຮັດໃຫ້ປະຊາຊົນເກີດຄວາມກັງວົນຢູ່ບໍ່ເຊົາ ວ່າຍັງມີລະເບີດຖືກຝັງຢູ່ໃຕ້ດິນ, ເຖິງແມ່ນວ່າຈະຖືກເກັບກູ້ໄປແລ້ວກໍ່ຕາມ.

ປະຊາຊົນມັກຈະລາຍງານວ່າ ເວລາທີ່ທີມງານ ລບຕ ເລີ່ມເຂົ້າມາໃນບ້ານຂອງພວກເຂົາ, ພວກເຂົາກໍ່ໄດ້ຮັບແຈ້ງການ ກ່ຽວກັບຄວາມອັນຕະລາຍຂອງ ລບຕ ຈາກທີມງານການສຶກສາຄວາມສ່ຽງ ທັງຍັງໄດ້ຮັບແຈ້ງເຕືອນບໍ່ໃຫ້ຈັບບາຍ ຫຼື ເຄື່ອນຍ້າຍວັດຖຸດັ່ງກ່າວ. ໃນບາງກໍລະນີ, ປະຊາຊົນກໍ່ມີການລາຍງານວ່າ ຍິ່ງຮັບຮູ້ເຖິງອັນຕະລາຍຂອງ ລບຕ ຫຼາຍເທົ່າໃດ ກໍ່ຍິ່ງຮູ້ສຶກບໍ່ປອດໄພ ແລະ ກັງວົນໃຈຫຼາຍຂຶ້ນເທົ່ານັ້ນ.

ໃນປັດຈຸບັນ, ໃນບັນດາບ້ານທີ່ໄດ້ຮັບການຢ້ຽມຢາມໃນລະຫວ່າງການຄົ້ນຄວ້າ, ບໍ່ຄ່ອຍພົບເຫັນ ລບຕ ຢູ່ເທິງໜ້າດິນອີກແລ້ວ. ຫຼາຍຄົນທີ່ໄດ້ຮັບການສຳພາດກໍ່ມີການລາຍງານວ່າ ພວກເຂົາບໍ່ໄດ້ພົບເຫັນ ລບຕ ມາເປັນເວລາຫຼາຍປີແລ້ວ, ເຖິງແມ່ນວ່າຈະຢູ່ໃນພື້ນທີ່ທີ່ລະບຸວ່າຍັງມີການຕົກຄ້າງຂອງ ລບຕ ກໍ່ຕາມ. ສິ່ງນີ້ອາດກໍ່ໃຫ້ເກີດຄວາມເຂົ້າໃຈຜິດກ່ຽວກັບຄວາມປອດໄພ, ຍ້ອນຈະເຮັດໃຫ້ປະຊາຊົນ ຂາດຄວາມລະມັດລະວັງໃນເວລາດຳເນີນການປູກຝັງ.

ໃນບ້ານນາເຜີ້ງ ໃນ ແຂວງຊຽງຂວາງ, ອຳນາດການປົກຄອງບ້ານໄດ້ກ່າວວ່າພວກເຂົາ, ໃນປັດຈຸບັນ, ພົບເຫັນ ລບຕ ໜ້ອຍລົງແລ້ວຍ້ອນພວກເຂົາໄດ້ມີການປະສານງານຮ່ວມກັບ ທີມງານເກັບກູ້ ລບຕ ມາເປັນເວລາຫຼາຍກວ່າ 10 ປີແລ້ວ. ທີ່ຜ່ານມາ, ມັກຈະພົບເຫັນ ລບຕ ໃນດິນນາຕ່າງໆ, ແລະ ປະຊາຊົນກໍ່ຕ້ອງໄດ້ດຳເນີນການປູກຝັງຢ່າງລະມັດລະວັງ ແລະ ຮູ້ສຶກຢ້ານຢູ່ຕະຫຼອດເວລາ. ບ້ານດັ່ງກ່າວຖືກແນໃສ່ເປັນເປົ້າໝາຍຖິ້ມລະເບີດໃນຊ່ວງສົງຄາມ ຍ້ອນມີສາງອາວຸດຍຸດໂທປະກອນ ມາຕັ້ງຢູ່ໃນຖະໜົນໃກ້ຄຽງ.

ໃນບ້ານທອງແສນ ໃນ ແຂວງບໍລິຄຳໄຊ, ລູກບ້ານຄົນໜຶ່ງໄດ້ບອກພວກເຮົາວ່າ ລາວມີຄວາມຕື່ນໂຕຕໍ່ບັນຫາ ລບຕ ຢູ່ສະເໝີໃນບ້ານດັ່ງກ່າວ ຍ້ອນລູກຂອງເອື້ອຍລາວເສຍຊີວິດຈາກການເອົາ ລບຕ ມາຫຼິ້ນໃນປີ 1997. ເຖິງຢ່າງໃດກໍ່ຕາມ, ລາວໄດ້ມີການປູກມັນຕົ້ນ ແລະ ສາລີຢູ່ໃນດິນຂອງລາວ ແລະ ບໍ່ຮູ້ວ່າດິນຂອງຕົນມີ ລບຕ ຝັງຢູ່. ລາວໄດ້ນຳໃຊ້ລົດໄຖຄັນໃຫຍ່ບຸກເບີກດິນປູກຝັງຂອງຕົນ. ເຖິງຢ່າງໃດກໍ່ຕາມ, ເມື່ອທີມງານເກັບກູ້ລະເບີດມາດິນຂອງລາວ, ພວກເຂົາບອກວ່າດິນຂອງລາວມີ ລບຕ ຝັງຢູ່.

ເຖິງຢ່າງໃດກໍ່ຕາມ, ປະຊາຊົນຍັງຄົງພົບເຫັນ ລບຕ ໃນດິນນາຂອງພວກເຂົາຢູ່, ເຖິງແມ່ນວ່າຈະບໍ່ເລື້ອຍເທົ່າກັບໃນອະດີດກໍ່ຕາມ.

ຊາຍຜູ້ໜຶ່ງໃນ ບ້ານແສນອຸດົມ, ແຂວງບໍລິຄຳໄຊ, ມີການລາຍງານວ່າໄປຂຸດຂຸມ ແລະ ບຸກເບີກດິນໃກ້ໆກັບໜອງປາ ແລະ ໄດ້ໃຊ້ມີດຟັນຖືກບົ່ມບີ້. ລາວກ່າວວ່າລູກບົ່ມບີ້ນັ້ນແຕກເຄິ່ງອອກ, ແຕ່ບໍ່ລະເບີດ. ລາວຈຶ່ງໄດ້ແຈ້ງໃຫ້ ກອງຮ້ອຍ 58 ຊາບເພື່ອມາດຳເນີນການເກັບກູ້ຢ່າງເໝາະສົມ. ຈາກນັ້ນລາວກໍ່ບໍ່ພົບເຫັນ ລບຕ ອີກເລີຍ ແລະ ໃນປັດຈຸບັນກໍ່ກຳລັງຂຸດໜອງປາແຫ່ງໃໝ່, ເຖິງແມ່ນວ່າຈະຍັງຮູ້ສຶກກັງວົນວ່າອາດມີບົ່ມບີ້ໃນພື້ນທີ່ດັ່ງກ່າວຢູ່ກໍ່ຕາມ.

ໃນບ້ານລອງປີວ, ແຂວງຊຽງຂວາງ, ໃນຂະນະທີ່ທີມງານໄປຮອດບ້ານດັ່ງກ່າວ, ກໍ່ມີຊາຍຄົນໜຶ່ງມາລາຍງານວ່າຕົນພົບເຫັນ ລບຕ ໃນດິນຂອງຕົນ. ຄາລ, ທີ່ມີແຄ້ມໃກ້ກັບບ້ານດັ່ງກ່າວ, ກໍ່ໄດ້ຮັບແຈ້ງຂ່າວ ແລະ ເດີນທາງໄປທຳລາຍບົ່ມບີ້ນັ້ນພາຍໃນເຄິ່ງຊົ່ວໂມງ. ເຖິງຢ່າງໃດກໍ່ຕາມ, ຊາວກະສິກອນຜູ້ນັ້ນໄດ້ກ່າວວ່າ ລາວເຄີຍພົບເຫັນ ລບຕ ຫຼາຍລູກໃນຫຼາຍປີທີ່ຜ່ານມາ ແລະ ລາວກໍ່ຕ້ອງການຢາກໃຫ້ທີ່ດິນຂອງລາວໄດ້ຮັບການເກັບກູ້.

ໃນບັນດາຂົງເຂດທີ່ມີ ລບຕ ຕົກຄ້າງຢູ່, ການປະເຊີນກັບຄວາມສ່ຽງໃນບາງລະດັບຖືເປັນສິ່ງທີ່ພົບເຫັນໄດ້ທົ່ວໄປ. ລູກບ້ານຫຼາຍຄົນໃນປັດຈຸບັນແມ່ນໄດ້ຮັບການສຶກສາກ່ຽວກັບຄວາມສ່ຽງແລ້ວ ຫຼື ມີການຕິດຕໍ່ພົວພັນກັບທີມງານ ລບຕ, ແລະ ດັ່ງນັ້ນ, ຈຶ່ງມີຄວາມເຂົ້າໃຈວ່າເມື່ອໃດທີ່ພົບເຫັນ ລບຕ, ພວກເຂົາສາມາດລາຍງານໄດ້ທັນທີ ເພື່ອໃຫ້ທມທີມງານເກັບກູ້ ມາດຳເນີນການກຳຈັດວັດຖຸດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ສິ່ງນີ້ກໍ່ບໍ່ໄດ້ໝາຍຄວາມວ່າ ປະຊາຊົນບໍ່ໄດ້ມີການເຂົ້າໄປສຳຜັດກັບ ລບຕ ອີກແລ້ວ.

57 “ບົ່ມບີ້” ແມ່ນຄຳສັບທີ່ນຳໃຊ້ໃນພາສາລາວ ໝາຍເຖິງລະເບີດລູກຫວ່ານ.

ໃນຂະນະທີ່ບາງຄົນນໍາເອົາງ່າໄມ້ໄປປັກດິນ ເພື່ອໝາຍຈຸດຂອງ ລບຕ ໄວ້ໃນນາຂອງຕົນ, ຄົນອື່ນໆມີການລາຍງານວ່າໄດ້ເຄື່ອນຍ້າຍ ລບຕ ໄປໄວ້ຂ້າງໆດິນຂອງຕົນ ເພື່ອດໍາເນີນການປູກຝັງຕໍ່ໄປ. ພົບວ່າປະຊາຊົນມັກຈະເຄື່ອນຍ້າຍ ລບຕ ຢູ່ເລື້ອຍໆ ເມື່ອພວກເຂົາພົບເຫັນມັນຢູ່ນາຂອງຕົນ, ເຖິງແມ່ນວ່າຕໍ່ມາຈະແຈ້ງໃຫ້ອໍານາດການປົກຄອງຊາບ ເພື່ອໃຫ້ດໍາເນີນການເກັບກູ້ໃນພາຍຫຼັງກໍ່ຕາມ.

ປະຊາຊົນກ່າວວ່າເຖິງແມ່ນວ່າຈະຮູ້ວ່າອາດມີ ລບຕ ຢູ່ໃນດິນຂອງຕົນກໍ່ຕາມ, ພວກເຂົາກໍ່ຍັງສືບຕໍ່ດໍາເນີນການປູກຝັງ ແລະ ນໍາໃຊ້ລົດໄຖນາເດີນຕາມ ຫຼື ລົດໄຖນາຂະໜາດໃຫຍ່ເພື່ອກະກຽມ ແລະ ພວນດິນ, ໂດຍສະເພາະໃນທີ່ດິນທີ່ມີການປູກຝັງມາເປັນເວລາດົນນານ. ພວກເຂົາກ່າວວ່ານີ້ແມ່ນສິ່ງທີ່ເຮັດເປັນປົກກະຕິ. ຄົນອື່ນລາຍງານວ່າພວກເຂົາຮູ້ສຶກກັງວົນໃຈ ແລະ ຢ້ານຫຼາຍຂຶ້ນ ໃນຂະນະທີ່ຕ້ອງຮັດວຽກໃນທີ່ດິນ ທີ່ຄິດວ່າອາດມີການຕົກຄ້າງຂອງ ລບຕ ຢູ່. ຄກລ ໃນ ແຂວງຊຽງຂວາງ ໄດ້ໃຫ້ຂໍ້ສັງເກດການວ່າ ປະຊາຊົນມັກມີຄວາມຢ້ານກວ່າຢູ່ສະເໝີ ຖ້າພວກເຂົາພົບເຫັນບົ່ມບີ້ຢູ່ໃນດິນຂອງພວກເຂົາ ຍ້ອນວ່າອາດຍັງມີລູກອື່ນໆຝັງຢູ່ໃນຈຸດໃດຈຸດໜຶ່ງຕື່ມອີກ. ຊາວກະສິກອນໄດ້ລາຍງານວ່າ ຖ້າພວກເຂົາພົບເຫັນ ລບຕ ໃນດິນຂອງຕົນ, ພວກເຂົາກໍ່ມັກຈະດໍາເນີນວຽກງານຢ່າງລະມັດລະວັງ ແລະ ນົ້ມນອນຫຼາຍຂຶ້ນ.

ໃນເວລາທີ່ປະຊາຊົນຕ້ອງໄດ້ຂະຫຍາຍຂອບເຂດນາຂອງຕົນ ໄປສູ່ພື້ນທີ່ອື່ນໆທີ່ບໍ່ໄດ້ມີການບຸກເບີກມາກ່ອນ, ກໍ່ມັກຈະຕ້ອງໄດ້ດໍາເນີນການຢ່າງລະມັດລະວັງຫຼາຍຂຶ້ນ ພ້ອມທັງຢ້ານວ່າອາດມີ ລບຕ ຝັງຢູ່. ປະຊາຊົນຈະບໍ່ຢາກບຸກເບີກ ແລະ ຂະຫຍາຍດິນຂອງພວກເຂົາເລີຍ ຖ້າສົງໄສວ່າອາດມີ ລບຕ ຕົກຄ້າງຢູ່. ໃນບ້ານນາໂອ, ໂຕແທນແມ່ຍິງບ້ານໄດ້ຊີ້ໃຫ້ເຫັນເຖິງຄວາມສໍາຄັນ ຂອງວຽກງານເກັບກູ້ລະເບີດທີ່ຊ່ວຍໃຫ້ປະຊາຊົນ ສາມາດຂະຫຍາຍພື້ນທີ່ປູກເຂົ້າໄດ້ຢ່າງປອດໄພ ຍ້ອນທີ່ຜ່ານມາ, ປະຊາຊົນມັກນໍາເອົາ ລບຕ ທີ່ພົບເຫັນໄປໄວ້ຢູ່ຕາມຄັນນາ ຫຼື ປາຍນາ, ເຮັດໃຫ້ການຂະຫຍາຍພື້ນທີ່ຍິ່ງທະວີຄວາມສ່ຽງສູງຂຶ້ນ.

ເດັກນ້ອຍມັກຈະໄປນາພ້ອມກັບພໍ່ແມ່ຂອງພວກເຂົາ ແລະ ດັ່ງນັ້ນ, ຈຶ່ງມີຄວາມສ່ຽງອາດພົບພໍ້ກັບ ລບຕ ໃນພື້ນທີ່ນາດັ່ງກ່າວ. ຍ້ອນເດັກນ້ອຍແມ່ນກຸ່ມທີ່ກວມອັດຕາສ່ວນໃຫຍ່ຂອງຜູ້ເສຍຊີວິດຈາກ ລບຕ ໃນ ສປປ ລາວ (ຫຼາຍກວ່າເຄິ່ງໜຶ່ງຂອງຍອດຜູ້ເສຍຊີວິດທັງໝົດ ຈົນເຖິງຕອນນີ້ໃນປີ 2022), ບັນຫານີ້ແມ່ນຂໍ້ກັງວົນໃຈອັນໜັກໜ່ວງ. ໃນຫຼາຍໆບ້ານ, ເມື່ອຖາມກ່ຽວກັບອຸບັດເຫດ ລບຕ, ອຸບັດເຫດທີ່ລູກບ້ານຈື່ໄດ້ ກໍ່ມັກຈະເປັນເຫດການທີ່ກ່ຽວພັນກັບເດັກນ້ອຍ. ໃນບ້ານທອງແສນ ໃນ ແຂວງບໍລິຄໍາໄຊ, ປາກົດວ່າມີສອງເຫດການກ່ຽວພັນກັບເດັກນ້ອຍ. ເຫດການທີ 1 ເກີດໃນປີ 1992, ມີເດັກນ້ອຍ 3 ຄົນເສຍຊີວິດ, ແລະ ອີກເຫດການ 1 ໃນປີ 1997, ມີເດັກນ້ອຍ 2 ຄົນເສຍຊີວິດ, ແລະ ອີກ 1 ຄົນບາດເຈັບ. ເດັກທີ່ເສຍຊີວິດໄປນັ້ນ ແມ່ນມາຈາກຄອບຄົວຈໍານວນໜຶ່ງ ທີ່ດິນຂອງພວກເຂົາໄດ້ຮັບການເກັບກູ້ລະເບີດແລ້ວໂດຍ ກອງຮ້ອຍ 58 ໃນເດືອນມິຖຸນາ 2022. ຊາຍ 1 ຄົນເລົ່າຄືນຫຼັງວ່າຕອນທີ່ເກີດເຫດຂຶ້ນນັ້ນ ລາວມີອາຍຸພຽງ 6 ປີ ແລະ ຜູ້ເສຍຊີວິດທີ່ຕອນນັ້ນອາຍຸ 9 ປີແມ່ນໝູ່ຂອງລາວ. ລາວກ່າວວ່າໃນຕອນທີ່ພົບເຫັນ ລບຕ ໃນດິນຂອງຕົນ ລາວໄດ້ຂໍໃຫ້ຄົນອື່ນມາເຄື່ອນຍ້າຍ ແລະ ທໍາລາຍໃຫ້ແທນ.

### 4.1.2. ການດໍາລົງຊີວິດໃນທີ່ດິນທີ່ໄດ້ຮັບການເກັບກູ້ ລບຕ ແລ້ວ

ຂະແໜງການ ລບຕ ມີການເກັບກູ້ ແລະ ທໍາລາຍ ລບຕ ຈໍານວນຫຼາຍພັນລູກໃນແຕ່ລະປີ. ໃນປີ 2021, ມີການລາຍງານວ່າ ລບຕ ຈໍານວນ 84 ,790 ລູກໄດ້ຖືກເກັບກູ້ ແລະ ທໍາລາຍ ໂດຍຜ່ານປະຕິບັດການເກັບກູ້ ແລະ ວຽກງານການທໍາລາຍຕ່າງໆ, ໃນນັ້ນ 66,800 ໜ່ວຍແມ່ນລະເບີດລູກຫວ່ານ.[58] ວຽກງານເກັບກູ້ ລບຕ ໄດ້ສ້າງຄວາມແຕກຕ່າງອັນຍິ່ງໃຫຍ່ ໃນດ້ານຄວາມປອດໄພໂດຍລວມພາຍໃນຊຸມຊົນ, ໂດຍຮັບປະກັນໃຫ້ ລບຕ ເທິງໜ້າດິນໄດ້ຮັບການກໍາຈັດເມື່ອພົບເຫັນ, ທັງຮັບປະກັນໃຫ້ທີ່ດິນດັ່ງກ່າວໄດ້ຮັບການເກັບກູ້ ແລະ ສົ່ງຄືນແກ່ຊຸມຊົນ. ໃນເວລາທີ່ລູກບ້ານພົບເຫັນ ລບຕ, ພວກເຂົາກໍ່ມັກຈະລາຍງານໃຫ້ນາຍບ້ານຊາບ, ຜູ້ທີ່ຕໍ່ມາລາຍງານໃຫ້ຂັ້ນເມືອງຊາບ ເພື່ອໃຫ້ສົ່ງທີມງານເກັບກູ້ມາຈັດການກັບບັນຫາດັ່ງກ່າວ. ການຕອບສະໜອງຢ່າງໄວວາຂອງທີມງານເກັບກູ້ ແມ່ນປັດໄຈສໍາຄັນໃນການຫຼຸດຜ່ອນຄວາມສ່ຽງ ໂດຍຜ່ານການເກັບກູ້ວັດຖຸອັນຕະລາຍໂດຍທັນທີ. ບ້ານສ່ວນໃຫຍ່ທີ່ໄດ້ໄປຢ້ຽມຢາມ ມີການລາຍງານວ່າທັນທີທີ່ແຈ້ງກ່ຽວກັບ ລບຕ ໄປແລ້ວ, ກໍ່ຈະມີການດໍາເນີນການເກັບກູ້ພາຍໃນ 1 ຫຼື 2 ວັນ, ຫຼື ຊ້າສຸດພາຍໃນ 1 ອາທິດ.

ວຽກງານເກັບກູ້ ລບຕ ແມ່ນມີຄວາມສໍາຄັນຫຼາຍ ຕໍ່ປະຊາຊົນທີ່ຕ້ອງພົບພໍ້ກັບຄວາມສ່ຽງໃນທຸກມື້, ເຖິງແມ່ນວ່າບາງຄົນອາດຈະບໍ່ຮັບຮູ້ວ່າຕົນເອງມີຄວາມສ່ຽງນັ້ນກໍ່ຕາມ. ວຽກງານດັ່ງກ່າວຮັບປະກັນໃຫ້ຊາວກະສິກອນ ສາມາດເຮັດວຽກໃນດິນນາຂອງຕົນໄດ້ຢ່າງປອດໄພຍິ່ງຂຶ້ນ, ແລະ ສົ່ງຜົນໃຫ້ມີຈໍານວນ ລບຕ ທີ່ເດັກນ້ອຍຈະພົບພໍ້ໜ້ອຍລົງ.

---

58 ຄຊກລ, "ບົດລາຍງານປະຈໍາປີ 2021 ຂອງຂະແໜງການ ລບຕ," ນະຄອນຫຼວງວຽງຈັນ, 2022.

ປະຊາຊົນໄດ້ລາຍງານວ່າ ທັນທີທີ່ ລບຕ ໄດ້ຮັບການເກັບກູ້ອອກຈາກທີ່ດິນປູກຝັງ ແລະ ທີ່ດິນຊຸມຊົນຂອງພວກເຂົາແລ້ວນັ້ນ, ພວກເຂົາກໍ່ຮູ້ສຶກປອດໄພຂຶ້ນ ແລະ ມີຄວາມໝັ້ນໃຈຫຼາຍຂຶ້ນ ໃນການດຳເນີນກິດຈະກຳດຳລົງຊີວິດອື່ນໆຕາມປົກກະຕິ. ປະຊາຊົນບາງກຸ່ມໄດ້ກ່າວວ່າການເກັບກູ້ລະເບີດນັ້ນປຽບເໝືອນ "ທາງເປີດ" ຫຼື "ປະຕູ" ສູ່ໂອກາດ ແລະ ຄວາມເຊື່ອໝັ້ນທີ່ຫຼາຍກວ່າເກົ່າໃນການປູກຝັງ ຫຼື ການລົງທຶນ. ໃນດ້ານການເກັບກູ້ທີ່ດິນຊຸມຊົນ ແລະ ພື້ນຖານໂຄງລ່າງຕ່າງໆ, ເຊັ່ນ: ໃນເຂດໂຮງຮຽນ, ວັດ ຫຼື ຫໍປະຊຸມຂັ້ນບ້ານຕ່າງໆ, ສິ່ງນີ້ໄດ້ເຮັດໃຫ້ປະຊາຊົນຮູ້ສຶກພູມໃຈ ທີ່ລະເບີດໄດ້ຖືກເກັບກູ້ອອກໄປແລ້ວ. ນີ້ແມ່ນຜົນໄດ້ຮັບທີ່ຄ້າຍຄືກັນກັບການປະເມີນຜົນກະທົບ ທີ່ດຳເນີນການໃນ ສປປ ລາວ ໃນປີ 2010 , ທີ່ພົບວ່າການເກັບກູ້ ລບຕ ຊ່ວຍຍົກສູງຄວາມປອດໄພ, ຄວາມຫວັງ, ຄວາມພູມໃຈ ແລະ ຄວາມເຊື່ອໝັ້ນໃຫ້ແກ່ປະຊາຊົນ.[59]

ແມ່ຍິງທີ່ຖືກສຳພາດມັກຈະກ່າວວ່າ ການເກັບກູ້ລະເບີດອອກຈາກທີ່ດິນຂອງພວກເຂົານັ້ນ ຍັງຊ່ວຍຫຼຸດຜ່ອນຄວາມກັງວົນໃຈ ໃນການພາລູກຂອງພວກເຂົາໄປນຳ. ຖ້າຍັງມີຄວາມສ່ຽງຂອງ ລບຕ ຢູ່, ພວກເຂົາຮູ້ສຶກວ່າຈະຕ້ອງໄດ້ເບິ່ງລູກໃຫ້ໃກ້ຊິດຂຶ້ນຕື່ມ. ເມື່ອລະເບີດຖືກເກັບກູ້ໄປແລ້ວ , ຄວາມກັງວົນໃຈນີ້ກໍ່ຫາຍໄປນຳ.

### 4.1.3. ການຍົກສູງການສຶກສາ

ການເກັບກູ້ ລບຕ ກ່ອນການສ້າງ ຫຼື ການບູລະນະໂຮງຮຽນ ແມ່ນໄດ້ສົ່ງຜົນກະທົບທາງບວກຢ່າງຊັດເຈນ ໃນດ້ານການຊ່ວຍໃຫ້ເດັກນ້ອຍ ສາມາດເຂົ້າເຖິງໂຮງຮຽນໄດ້ຫຼາຍຂຶ້ນ, ແລະ ໃນບາງກໍລະນີ, ກໍ່ເຮັດໃຫ້ພວກເຂົາສາມາດຮຽນໄດ້ດົນຂຶ້ນກວ່າເກົ່າ ເນື່ອງຈາກໂຮງຮຽນມີຊັ້ນຮຽນອື່ນໆໄວ້ພ້ອມບໍລິການ. ສິ່ງນີ້ປະກອບສ່ວນຕໍ່ເປົ້າໝາຍຂອງ ແຜນການ 5 ປີຄັ້ງທີ 9 ວ່າດ້ວຍການປັບປຸງຄຸນນະພາບຂອງການສຶກສາທຸກລະດັບ ແລະ ການສ້າງເງື່ອນໄຂເອື້ອອຳນວຍດ້ານການເຂົ້າເຖິງ.[60] ຍ້ອນປະຊາກອນກວມ 60 ສ່ວນຮ້ອຍແມ່ນໄວໜຸ່ມ, ການຮັບປະກັນໃຫ້ພວກເຂົາ ສາມາດເຂົ້າເຖິງການສຶກສາໄດ້ຢ່າງພຽງພໍ ຖືເປັນປັດໄຈທີ່ສຳຄັນ.

ໂຮງຮຽນສ່ວນໃຫຍ່ມັກຈະຖືກສ້າງຂຶ້ນກ່ອນດຳເນີນການເກັບກູ້ລະເບີດ, ມັກຈະຖືກສ້າງໂດຍນຳໃຊ້ໄມ້ເປັນວັດສະດຸຫຼັກໂດຍປະຊາຊົນໃນທ້ອງຖິ່ນເອງ, ແລະ ບາງຄັ້ງກໍ່ມີພຽງແຕ່ 1 ຫຼື 2 ຫ້ອງຮຽນເທົ່ານັ້ນ. ພາຍຫຼັງການເກັບກູ້ ລບຕ ແລ້ວ, ອາຄານຮຽນຫຼັງໃໝ່ທີ່ໃຫຍ່ ແລະ ແໜ້ນໜາກວ່າເກົ່າກໍ່ໄດ້ຖືກສ້າງຂຶ້ນ, ລວມທັງຫໍພັກ, ເດີ່ນໂຮງຮຽນ ແລະ ເດີ່ນກິລາຕ່າງໆທີ່ມີຄວາມປອດໄພ. ອາຄານຮຽນຖາວອນເຫຼົ່ານີ້ສ່ວນໃຫຍ່ ແມ່ນຖືກສ້າງຂຶ້ນພາຍໃຕ້ການຊ່ວຍເຫຼືອເພື່ອການພັດທະນາຈາກຕ່າງປະເທດ (ODA), ລວມໄປເຖິງການສະໜັບສະໜູນຈາກອົງການຈັດຕັ້ງສາກົນ, ໂດຍມີວຽກງານເກັບກູ້ລະເບີດ ເປັນເງື່ອນໄຂຈຳເປັນສຳລັບຜູ້ໃຫ້ທຶນທີ່ຕ້ອງໄດ້ເຮັດ ກ່ອນລິເລີ່ມການກໍ່ສ້າງ. ຜົນປະໂຫຍດທີ່ລູກບ້ານໄດ້ຮັບກໍ່ຄື ເດັກນ້ອຍຈະບໍ່ຕ້ອງໄດ້ເດີນທາງໄກໄປໂຮງຮຽນອີກແລ້ວ (ໂດຍສະເພາະທີ່ພວກເຂົາສາມາດຮຽນໄດ້ດົນຂຶ້ນກວ່າເກົ່າ ເນື່ອງຈາກມີຊັ້ນຮຽນລະດັບສູງເພີ່ມຂຶ້ນ), ມີຈຳນວນນັກຮຽນໜ້ອຍລົງຕໍ່ 1 ຫ້ອງຮຽນ, ແລະ ມີອາຄານທີ່ສາມາດນຳໃຊ້ເພື່ອສິດສອນໄດ້ຫຼາຍຂຶ້ນ.

ໃນບ້ານທອງແສນ ໃນ ແຂວງບໍລິຄຳໄຊ, ການເກັບກູ້ ລບຕ ໂດຍ ກອງຮ້ອຍ 58 ໃນປີ 2020 ແລະ 2021, ພາຍໃຕ້ເງິນທຶນຈາກ ອົງການ KOICA ອັນເປັນພາກສ່ວນໜຶ່ງຂອງໂຄງການພັດທະນາຊົນນະບົດແບບຮອບດ້ານອັນໃໝ່ຂອງພວກເຂົາ, ໄດ້ຊ່ວຍໃຫ້ສາມາດສ້າງອາຄານຮຽນຫຼັງໃໝ່ທີ່ມີ 4 ຫ້ອງຮຽນ ແລະ 1 ຫໍພັກ. ອຳນາດການປົກຄອງບ້ານໄດ້ກ່າວວ່າ ນີ້ໝາຍຄວາມວ່າໂຮງຮຽນດັ່ງກ່າວ ແມ່ນສາມາດໃຫ້ການສິດສອນໄດ້ຈົນເຖິງ ມໍ 7, ທັງຍັງຊ່ວຍໃຫ້ສາມາດຫຼຸດຜ່ອນຈຳນວນນັກຮຽນຕໍ່ 1 ຫ້ອງຮຽນລົງຈາກ 70-80 ຄົນມາເປັນ 40 ຄົນຕໍ່ 1 ຫ້ອງ, ເຮັດໃຫ້ນັກຮຽນໄດ້ຮັບປະສົບການການຮຽນຮູ້ທີ່ດີຂຶ້ນກວ່າເກົ່າ. ຫໍພັກຫຼັງໃໝ່ຍັງຊ່ວຍໃຫ້ເດັກນ້ອຍຈາກບັນດາບ້ານໃກ້ຄຽງ ສາມາດມາຮຽນຢູ່ໂຮງຮຽນແຫ່ງນີ້ໄດ້.



*ຫ້ອງຮຽນກຳລັງຖືກສ້າງຂຶ້ນເທິງທີ່ດິນ ທີ່ໄດ້ຮັບການເກັບກູ້ລະເບີດແລ້ວໃນ ບ້ານທອງແສນ, ແຂວງບໍລິຄຳໄຊ*

ການເສີມຂະຫຍາຍໂຮງຮຽນຖືເປັນວຽກງານທີ່ສຳຄັນ ສຳລັບກຸ່ມບ້ານດັ່ງກ່າວ ທີ່ປະກອບມີ 3 ບ້ານຂະໜາດນ້ອຍໂຮມກັນ ແລະ ຕັ້ງຢູ່ໃນ ເຂດສຳຄັນເພື່ອການພັດທະນາ. ດັ່ງນັ້ນຈຶ່ງຄາດໝາຍວ່າ ຈຳນວນປະຊາກອນກໍ່ຈະສືບຕໍ່ເພີ່ມຂຶ້ນເລື້ອຍໆ. ອາຄານຂອງໂຮງຮຽນດັ່ງກ່າວ ຍັງຢູ່ໃນຂັ້ນຕອນການກໍ່ສ້າງໃນເວລາທີ່ລົງຢ້ຽມຢາມລ່າສຸດ.

ໃນບ້ານລອງປິວ ຢູ່ ແຂວງຊຽງຂວາງ, ໂຮງຮຽນປະຈຳບ້ານຫຼັງທຳອິດ ແມ່ນໂຮງຮຽນໄມ້ທີ່ຖືກສ້າງຂຶ້ນໃນປີ 1986. ໂຮງຮຽນປະຖົມໄດ້ຮັບການບູລະນະຄືນໃໝ່ໃນປີ 1997 ພ້ອມທັງການກໍ່ສ້າງຫ້ອງຮຽນແບບຖາວອນ, ແລະ ໃນປີ 2015 ກໍ່ໄດ້ມີການສ້າງຫ້ອງຮຽນເພີ່ມອີກ 2 ຫ້ອງພາຍຫຼັງເກັບກູ້ ລບຕ ແລ້ວ. ໂຮງຮຽນມັດທະຍົມເອງກໍ່ໄດ້ຖືກເສີມຂະຫຍາຍ ໃນຮູບແບບທີ່ຄ້າຍຄືກັນພາຍໃຕ້ເງິນທຶນຂອງ ສ. ເກົາຫຼີ[61] ທີ່ໃຫ້ການສະໜັບສະໜູນ ການກໍ່ສ້າງອາຄານຮຽນ 2 ແຫ່ງເພື່ອຮອງຮັບ ມໍ 1 ຫາ ມໍ 7, ແລະ ຫໍພັກ. ທີ່ດິນດັ່ງກ່າວແມ່ນໄດ້ຖືກເກັບກູ້ລະເບີດແລ້ວກ່ອນການກໍ່ສ້າງ. ກ່ອນເສີມຂະຫຍາຍໂຮງຮຽນ, ເດັກນ້ອຍຕ້ອງໄດ້ເດີນທາງມາຈາກອີກບ້ານໜຶ່ງ ເພື່ອມາຮຽນໜັງສື ແລະ ຖ້າມາບໍ່ໄດ້, ກໍ່ຕ້ອງໄດ້ປະລະການຮຽນເລີຍ.

ທີມງານໄດ້ພົບເຫັນກໍລະນີ 1 ຂອງພື້ນທີ່ໂຮງຮຽນ ທີ່ໄດ້ຮັບການເກັບກູ້ລະເບີດແລ້ວໂດຍ ຄກລ, ແຕ່ພັດບໍ່ໄດ້ມີການນຳໃຊ້. ໃນບ້ານຍອດພຽງ ໃນ ແຂວງຊຽງຂວາງ, ໄດ້ມີການເກັບກູ້ລະເບີດອອກຈາກເດີ່ນໂຮງຮຽນປະຖົມຂະໜາດນ້ອຍປະຈຳບ້ານ, ແຕ່ໂຮງຮຽນດັ່ງກ່າວພັດບໍ່ໄດ້ມີການນຳໃຊ້ອີກຕໍ່ໄປແລ້ວ ເນື່ອງຈາກມີຈຳນວນເດັກໃນໄວຮຽນໜ້ອຍເກີນໄປ. ສິ່ງນີ້ໄດ້ເຮັດໃຫ້ເດັກນັກຮຽນຈຳນວນທີ່ເຫຼືອ ຕ້ອງໄດ້ເດີນທາງປະມານ 5 ກມ ເພື່ອໄປເຂົ້າໂຮງຮຽນຢູ່ບ້ານໃກ້ຄຽງ. ໂຮງຮຽນຫຼັງດັ່ງກ່າວ ໄດ້ຖືກນຳໃຊ້ເປັນທີ່ພັກຂອງທີມງານ ຄກລ ເວລາທີ່ພວກເຂົາເດີນທາງມາເກັບກູ້ລະເບີດຢູ່ດິນປູກຝັງຂອງບ້ານ.

ການເກັບກູ້ລະເບີດອອກຈາກເດີ່ນໂຮງຮຽນ ໄດ້ຊ່ວຍໃຫ້ເດັກນ້ອຍມີສະພາບແວດລ້ອມ ແລະ ບ່ອນຫຼິ້ນທີ່ປອດໄພ, ເຊິ່ງເປັນສິ່ງທີ່ມີຄວາມສຳຄັນເປັນພິເສດໃນ ສປປ ລາວ, ຍ້ອນເດັກນ້ອຍແມ່ນກຸ່ມທີ່ກວມອັດຕາສ່ວນໃຫຍ່ຂອງຜູ້ເສຍຊີວິດ, ອັນເປັນສາເຫດມາຈາກຄວາມຢາກຮູ້ຢາກເຫັນ ແລະ ການຢາກຢິບຈັບສິ່ງຂອງແປກຕາຂຶ້ນມາຫຼິ້ນ. ບົດລາຍງານການຕິດຕາມລະເບີດລູກຫວ່ານປະຈຳປີ 2022 ໄດ້ຊີ້ໃຫ້ເຫັນວ່າໃນປີ 2021, ອັດຕາສ່ວນຂອງເດັກທີ່ເສຍຊີວິດຈາກລະເບີດລູກຫວ່ານໃນຂອບເຂດທົ່ວໂລກ ແມ່ນເພີ່ມຂຶ້ນເປັນ 66 ສ່ວນຮ້ອຍຂອງຈຳນວນຜູ້ເສຍຊີວິດທັງໝົດ ທີ່ໄດ້ຮັບການຢັ້ງຢືນອາຍຸ, ໂດຍເພີ່ມຂຶ້ນຈາກ 44 ສ່ວນຮ້ອຍໃນປີ 2020.[62] ໃນ ສປປ ລາວ ໃນປີ 2021, ຫຼາຍກວ່າເຄິ່ງໜຶ່ງ (16 ຄົນ) ຂອງຜູ້ເສຍຊີວິດທັງໝົດ 30 ຄົນຈາກລະເບີດລູກຫວ່ານແມ່ນເດັກນ້ອຍ (ໃນນັ້ນ 11 ຄົນແມ່ນເດັກຊາຍ ແລະ 5 ແມ່ນເດັກຍິງ).[63]

ລູກບ້ານມັກຖືເອົາຄວາມປອດໄພຂອງເດັກນ້ອຍ ເປັນໜຶ່ງໃນຂໍ້ກັງວົນໃຈຕົ້ນຕໍ, ແລະ ໃນບ້ານຕ່າງໆ, ເຊັ່ນ: ບ້ານທອງແສນ, ບ່ອນທີ່ມີອຸບັດເຫດກ່ຽວກັບເດັກເກີດຂຶ້ນໃນຊ່ວງຊຸມປີ 1990 ໃກ້ກັບເດີ່ນໂຮງຮຽນ, ລູກບ້ານໄດ້ກ່າວວ່າ ພວກເຂົາຮູ້ສຶກດີໃຈທີ່ໂຮງຮຽນ ແລະ ເນື້ອທີ່ ອ້ອມຮອບນັ້ນໄດ້ຮັບການເກັບກູ້ລະເບີດແລ້ວ. ເດີ່ນໂຮງຮຽນ ແລະ ພື້ນທີ່ອ້ອມຮອບໃນ ບ້ານນາໂອ ໃນ ແຂວງຊຽງຂວາງ ແມ່ນໄດ້ຮັບການເກັບກູ້ແລ້ວ, ຊ່ວຍໃຫ້ພໍ່ແມ່ປະຊາຊົນຄາຍຄວາມກັງວົນລົງ ໃນເວລາທີ່ລູກຂອງພວກເຂົາຢູ່ໃນໂຮງຮຽນ ແລະ ຫຼິ້ນຢູ່ເດີ່ນໂຮງຮຽນຈົນເຖິງເວລາເລີກຮຽນ. ໃນບ້ານລາດບວກ, ນາຍບ້ານໄດ້ເນັ້ນໃຫ້ເຫັນເຖິງຄວາມສຳຄັນ ຂອງການເກັບກູ້ລະເບີດອອກຈາກໂຮງຮຽນ ຍ້ອນລາວຮູ້ສຶກວ່າຕົນຕ້ອງໄດ້ສະແດງຄວາມຮັບຜິດຊອບ ໃນເວລາເດັກນ້ອຍຖືກບາດເຈັບ.

ເຖິງແມ່ນວ່າການຄົ້ນຄວ້າດັ່ງກ່າວນີ້ ຈະບໍ່ສາມາດກວດສອບອັດຕາເກັບການຮັກສານັກຮຽນໃນບ້ານຕ່າງໆໄດ້, ແຕ່ດ້ວຍຄວາມສາມາດໃນການເຂົ້າເຖິງໂຮງຮຽນ ແລະ ການຮຽນໄດ້ດີຂຶ້ນໂດຍຜ່ານຊັ້ນຮຽນລະດັບສູງຕ່າງໆ, ອາດເປັນໜຶ່ງໃນປັດໄຈປະກອບສ່ວນໃຫ້ເກີດອັດຕາການເກັບຮັກສານັກຮຽນໄດ້ສູງຂຶ້ນ.

59 Jo Durham ແລະ ວົງ ບັນທະວົງ, "ການປະເມີນຜົນກະທົບພາຍຫຼັງເກັບກູ້ ລບຕ ໃນ ສປປ ລາວ," ກັນຍາ 2010.

60 ສປປ ລາວ, "ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 9 (2021-2025)," ນະຄອນຫຼວງວຽງຈັນ, ມີນາ 2021.

61 ຄາດເດົາວ່າແມ່ນ KOICA, ເຖິງແມ່ນວ່າທີມງານຈະບໍ່ສາມາດຢັ້ງຢືນຂໍ້ມູນນີ້ໄດ້ກໍ່ຕາມ.

62 ເຄືອຂ່າຍຮ່ວມມືຕໍ່ຕ້ານລະເບີດລູກຫວ່ານ, "ບົດລາຍງານການຕິດຕາມລະເບີດລູກຫວ່ານປະຈຳປີ 2022," ICBL-CMC, ສິງຫາ 2022.

63 ຄຊກລ, "ກະດານຂໍ້ມູນ IMSMA," ເບິ່ງວັນທີ 15 ທັນວາ 2022.

### 4.1.4. ການປັບປຸງການເຂົ້າເຖິງບໍລິການສຸຂະພາບ

ການເກັບກູ້ ລບຕ ໄດ້ຊ່ວຍໃຫ້ສາມາດສ້າງສຸກສາລາແຫ່ງໃໝ່ຂຶ້ນໄດ້ ຫຼື ຊ່ວຍເສີມຂະຫຍາຍ ຫຼື ບູລະນະໂຄງສ້າງດັ້ງເດີມໃຫ້ມີສະພາບດີຂຶ້ນ. ມີບ້ານທີ່ໄດ້ຮັບການຢ້ຽມຢາມຈຳນວນໜຶ່ງ ລາຍງານວ່າໄດ້ມີການດຳເນີນການເກັບກູ້ ລບຕ ໄປແລ້ວ ເພື່ອຊ່ວຍໃຫ້ສາມາດສ້າງສຸກສາລາແຫ່ງ ໃໝ່ໄດ້. ການຮັບປະກັນໃຫ້ເຂົ້າເຖິງບໍລິການປິ່ນປົວສຸຂະພາບຂັ້ນພື້ນຖານ ແມ່ນໜຶ່ງໃນບຸລິມະສິດພາຍໃຕ້ ແຜນການ 5 ປີຄັ້ງທີ 9, ທີ່ແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ການປິ່ນປົວສຸຂະພາບຂັ້ນພື້ນຖານ ເພື່ອໃຫ້ປະຊາຊົນມີຄວາມໃສ່ໃຈ ແລະ ຮັບປະກັນສຸຂະພາບທີ່ດີໃຫ້ແກ່ພວກເຂົາຫຼາຍຂຶ້ນ.[64]

ໃນບ້ານລອງປົວ, ສຸກສາລາແຫ່ງທຳອິດແມ່ນໄດ້ຖືກສ້າງຂຶ້ນໃນປີ 2010, ແຕ່ມາຮອດປີ 2017 ພາຍຫຼັງດຳເນີນການເກັບກູ້ ລບຕ ແລ້ວ, ກໍ່ໄດ້ມີການສ້າງສຸກສາລາແຫ່ງໃໝ່ຂຶ້ນ ພາຍໃຕ້ການສະໜັບສະໜູນຈາກ ປະເທດຝຣັ່ງ. ສິ່ງນີ້ຊ່ວຍໃຫ້ປະຊາຊົນສາມາດເຂົ້າເຖິງ ບໍລິການປິ່ນປົວຂັ້ນພື້ນຖານໄດ້ດີຂຶ້ນ, ປະຊາຊົນມີສຸຂະພາບທີ່ດີຂຶ້ນ, ປ່ຽນຜ່ານຈາກການເອື່ອຍອີງຢາພື້ນເມືອງ ມາເປັນການນຳໃຊ້ຢາທັນສະໄໝ ເຮັດໃຫ້ເກີດຄວາມງ່າຍດາຍສຳລັບເດັກນ້ອຍໃນການໄດ້ຮັບຢາວັກຊີນ ແລະ ແມ່ຖືພາໄດ້ຮັບການເບິ່ງແຍງສຸຂະພາບຢ່າງເໝາະສົມ. ສຳລັບການເຈັບປ່ວຍຮ້າຍແຮງ, ປະຊາຊົນຈະຕ້ອງໄດ້ເດີນທາງໄປຍັງໂຮງໝໍເມືອງທີ່ຢູ່ໃກ້ຄຽງແທນ.

### 4.1.5. ພື້ນທີ່ ແລະ ເດີ່ນບ້ານ

ໃນຫຼາຍບ້ານທີ່ໄດ້ໄປຢ້ຽມຢາມ, ມີຫຼາຍພື້ນທີ່ພາຍໃນຄົວເຮືອນທີ່ຍັງຄົງສົງໄສວ່າມີ ລບຕ ຕົກຄ້າງຢູ່. ຫຼາຍຄັ້ງ, ບ້ານເຮືອນຕ່າງໆແມ່ນໄດ້ຖືກສ້າງຂຶ້ນຫຼາຍປີ ກ່ອນມີການດຳເນີນວຽກງານເກັບກູ້ ແລະ ກຳຈັດ ລບຕ ອອກຈາກໜ້າດິນ. ເຖິງຢ່າງໃດກໍ່ຕາມ, ກໍ່ຍັງຄົງມີການສ້າງບ້ານເຮືອນຂຶ້ນໃໝ່ຢູ່ຢ່າງຕໍ່ເນື່ອງ - ຫຼາຍຄັ້ງແມ່ນການກໍ່ປູນແບບຖາວອນ. ລູກບ້ານບາງຄົນໄດ້ລາຍງານວ່າ ພວກເຂົາມີແຜນທີ່ຈະສ້າງເຮືອນ ເທິງດິນປູກຝັງຂອງຕົນໃຫ້ແກ່ລູກ ຫຼື ຫຼານຂອງພວກເຂົາ ຕິດແຕ່ວ່າຍັງບໍ່ທັນແນ່ໃຈວ່າມັນປອດໄພສຳລັບການກໍ່ສ້າງ ຫຼື ບໍ່, ເຖິງແມ່ນວ່າທີ່ດິນດັ່ງກ່າວ ຈະໄດ້ຮັບການເກັບກູ້ ລບຕ ເພື່ອຈຸດປະສົງໃນການປູກຝັງ ໄປແລ້ວກໍ່ຕາມ.

ປະຊາຊົນຍັງຄົງມີຄວາມກັງວົນໃຈກ່ຽວກັບວຽກງານການເກັບກູ້ລະເບີດອອກຈາກເດີ່ນບ້ານຂອງພວກເຂົາ. ຫຼາຍຄົນເວລາປັດກວາດເດີ່ນບ້ານ ກໍ່ມັກລົງທ້າຍດ້ວຍການຈູດເຜົາຂີ້ເຫຍື້ອທີ່ຕົນກວດຕ້ອມໄວ້. ການຈູດໄຟເທິງດິນທີ່ມີ ລບຕ ຕົກຄ້າງຢູ່ ຖືເປັນໜຶ່ງໃນສາເຫດຕົ້ນຕໍ ທີ່ກໍ່ໃຫ້ເກີດອຸບັດເຫດ ລບຕ ໃນ ສປປ ລາວ, ແລະ ປະຊາຊົນເອງກໍ່ກັງວົນໃຈວ່າຕົນຍັງມີຄວາມສ່ຽງນັ້ນຢູ່ ຫຼື ບໍ່. ຂໍ້ມູນນີ້ອາດໄດ້ມາຈາກບົດສະ ເໜີຂອງທີມງານໂຄສະນາສຶກສາ ຄວາມສ່ຽງໄພ, ທີ່ບໍ່ໄດ້ຊີ້ໃຫ້ເຫັນວ່າໄດ້ມີການດຳເນີນມາດຕະການໃດແດ່ແລ້ວ ເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວ, ເຊັ່ນ: ການຖົມດິນກ່ອນຈູດໄຟ, ຫຼື ການຈູດໄຟໃນຈຸດດຽວກັນສະເໝີ ເພື່ອປ້ອງກັນອຸບັດເຫດ. ການຕັດຫຍ້າໃນເດີ່ນບ້ານ ແລະ ພື້ນທີ່ສາທາລະນະອື່ນໆ ກໍ່ຖືວ່າເປັນວຽກງານທີ່ມີຄວາມສ່ຽງ ທີ່ປະຊາຊົນມີຄວາມກັງວົນໃຈເຊັ່ນກັນ.

---

64 ສປປ ລາວ, "ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 9 (2021-2025)," ນະຄອນຫຼວງວຽງຈັນ, ມີນາ 2021.

## 4.2. ດ້ານສັງຄົມ

ພາຍໃຕ້ທຶນສັງຄົມຂອງຂອບວຽກການດຳລົງຊີວິດ, ພວກເຮົາໄດ້ເນັ້ນໃສ່ການເກັບກູ້ລະເບີດ ຈາກສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຊ່ວຍໃຫ້ບ້ານສາມາດຈັດກອງປະຊຸມ ແລະ ພິທີການຕ່າງໆໄດ້. ການເຂົ້າເຖິງຂໍ້ມູນ, ການໂຮມໂຕໃນຊຸມຊົນ ແລະ ຄວາມສາມາດໃນການບູຊາ ແລະ ເຂົ້າຮ່ວມພິທີການຕ່າງໆ ລ້ວນແລ້ວແຕ່ແມ່ນກິດຈະກຳສຳຄັນ ໃນການປະກອບສ່ວນຕໍ່ຊີວິດການເປັນຢູ່ທີ່ດີຂອງປະຊາຊົນ ແລະ ຄວາມຮູ້ສຶກຂອງຊຸມຊົນ. ພວກເຮົາຍັງໄດ້ເລັງໃສ່ວຽກງານການສື່ສານ ທີ່ກ່ຽວຂ້ອງກັບຂັ້ນຕອນການສຳຫຼວດ ແລະ ການເກັບກູ້. ຄວາມເຂົ້າໃຈຂອງລູກບ້ານ ທີ່ມີຕໍ່ຂັ້ນຕອນການສຳຫຼວດ ແລະ ການເກັບກູ້ ລບຕ ຖືເປັນສິ່ງທີ່ສຳຄັນ ຍ້ອນມັນປະກອບສ່ວນຕໍ່ຄວາມສາມາດຂອງປະຊາຊົນ ໃນການວາງແຜນ ແລະ ສ້າງຄວາມເຂົ້າໃຈກ່ຽວກັບວ່າ ພວກເຂົາຈະນຳໃຊ້ທີ່ດິນຂອງຕົນຄືແນວໃດ ພາຍຫຼັງສຳເລັດການສຳຫຼວດ ຫຼື ການເກັບກູ້ແລ້ວ.

### 4.2.1. ຫ້ອງການບ້ານ

ຫໍປະຊຸມ ແລະ ຫ້ອງການບ້ານແມ່ນໄດ້ຖືກສ້າງຂຶ້ນໃນທີ່ດິນ ທີ່ໄດ້ຮັບການເກັບກູ້ ລບຕ ແລ້ວ, ຫຼື ມີການເກັບກູ້ ລບຕ ອອກຈາກທີ່ດິນອ້ອມຮອບຫໍປະຊຸມຂອງບ້ານແລ້ວ.

ລູກບ້ານ ແລະ ອຳນາດການປົກຄອງທ້ອງຖິ່ນ ໄດ້ຊີ້ໃຫ້ເຫັນວ່າຫໍປະຊຸມຂອງບ້ານ ແມ່ນສະຖານທີ່ສຳຄັນໃນການຈັດກອງປະຊຸມບ້ານ ແລະ ໃນການແບ່ງປັນຂໍ້ມູນ. ການມີສິ່ງອຳນວຍຄວາມສະດວກທີ່ພຽງພໍສຳລັບກອງປະຊຸມ ຖືເປັນອົງປະກອບທີ່ສຳຄັນໃນກຸ່ມບ້ານ ແລະ ຂົງເຂດສຳຄັນເພື່ອການພັດທະນາ, ເຊັ່ນ: ບ້ານທອງແສນ ທີ່ມີຈຳນວນປະຊາກອນເພີ່ມຂຶ້ນ ແລະ ມີຄວາມຕ້ອງການຫໍປະຊຸມທີ່ໃຫຍ່ຂຶ້ນ.

ຫຼາຍບ້ານທີ່ໄດ້ໄປຢ້ຽມຢາມ, ເຊັ່ນ: ບ້ານທອງແສນ ໃນ ແຂວງບໍລິຄຳໄຊ, ແລະ ບ້ານນາເຜິ້ງ ແລະ ບ້ານນາໂອ ໃນ ແຂວງຊຽງຂວາງ ໄດ້ມີການສ້າງຫ້ອງການບ້ານຫຼັງໃໝ່ຂຶ້ນ ໃນທີ່ດິນທີ່ໄດ້ຮັບການເກັບກູ້ ລບຕ ແລ້ວ. ໃນບ້ານນາເຜິ້ງ, ທີ່ດິນຂອງຫ້ອງການບ້ານ ແມ່ນໄດ້ຮັບການເກັບກູ້ໃນລະຫວ່າງປີ 2004-2005, ແລະ ຈາກນັ້ນກໍ່ສ້າງຫ້ອງການໃໝ່ຂຶ້ນ. ກ່ອນສ້າງຫ້ອງການດັ່ງກ່າວຂຶ້ນ, ອຳນາດການປົກຄອງຂັ້ນບ້ານ ຕ້ອງໄດ້ນຳໃຊ້ຫ້ອງຂະໜາດນ້ອຍ ຢູ່ທາງດ້ານຫຼັງຂອງໂຮງຮຽນ ເປັນຫ້ອງການຂອງພວກເຂົາ ແລະ ໃນກໍລະນີພົບປະລູກບ້ານ, ກໍ່ນຳໃຊ້ວັດເປັນສະຖານທີ່ຈັດກອງປະຊຸມແທນ. ອຳນາດການປົກຄອງຂັ້ນບ້ານໄດ້ກ່າວວ່າ ດຽວນີ້ທຸກຢ່າງແມ່ນດີຂຶ້ນແລ້ວ ເພາະພວກເຂົາມີອາຄານ ແລະ ຫໍຈັດປະຊຸມຂອງບ້ານ ທີ່ຖືກສ້າງຂຶ້ນສະເພາະແລ້ວ.

ໃນບ້ານນາໂອ, ຫໍປະຊຸມຂອງບ້ານແມ່ນໄດ້ຖືກສ້າງຂຶ້ນໃນລະຫວ່າງປີ 2018-2021 ເທິງທີ່ດິນທີ່ຢູ່ຕິດກັບໂຮງຮຽນ. ທີ່ດິນຂອງໂຮງຮຽນ ແລະ ທີ່ດິນຂອງຫໍປະຊຸມຂອງບ້ານ ແມ່ນໄດ້ຮັບການເກັບກູ້ລະເບີດແລ້ວໂດຍ ຄກລ ພາຍໃຕ້ເງິນທຶນຈາກ ປະເທດນູແວນເຊລັງ. ບານນາໂອ ແມ່ນບ້ານຂະໜາດໃຫຍ່ທີ່ມີປະຊາກອນກວມ 2,300 ຄົນ. ຫໍປະຊຸມອັນເກົ່າແມ່ນມີໂຄງສ້າງເປັນໄມ້ດິບ, ມຸງດ້ວຍຫຼັງຄາເຫຼັກ ແລະ ມີຂະໜາດນ້ອຍເກີດກວ່າຈະຈັດກອງປະຊຸມໄດ້, ແລະ ຫຼັງຄາເຫຼັກນັ້ນກໍ່ເຮັດໃຫ້ພາຍໃນຮ້ອນເກີນໄປ, ດັ່ງນັ້ນຈຶ່ງບໍ່ມີໃຜຢາກມາຮ່ວມກອງປະຊຸມຢູ່ບ່ອນນີ້. ຫໍປະຊຸມແຫ່ງໃໝ່ແມ່ນມີຄວາມກວ້າງຂວາງກວ່າເກົ່າຫຼາຍ ແລະ ມີພື້ນທີ່ພຽງພໍໃນການຈັດກອງປະຊຸມ ແລະ ດຳເນີນກິດຈະກຳອື່ນໆຂອງບ້ານ.

### 4.2.2. ວັດ

ວັດມັກຈະເປັນຈຸດສູນລວມພາຍໃນບັນດາບ້ານໃນ ລາວ ແລະ ມີໜ້າທີ່ຮຽກໂຮມປະຊາຊົນເພື່ອເຂົ້າຮ່ວມບຸນ ແລະ ພິທີກຳປະຈຳປີຕ່າງໆ.

ໃນບ້ານລາດບວກ ຢູ່ ແຂວງຊຽງຂວາງ, ທີ່ດິນຂອງວັດແມ່ນໄດ້ຮັບການເກັບກູ້ ລບຕ ແລ້ວໂດຍ ຄກລ ໃນປີ 2021, ແລະ ລູກບ້ານເອງກໍ່ມາຊ່ວຍຖາງຫຍ້າ ເພື່ອເປັນການເກັບກວາດທີ່ດິນດັ່ງກ່າວໃຫ້ສະອາດ. ທີ່ຜ່ານມາ, ປະຊາຊົນໃນ ບ້ານລາດບວກ ຕ້ອງໄດ້ເດີນທາງໄປ ວັດບ້ານສີເມືອງ ທີ່ຢູ່ຫ່າງອອກໄປປະມານ 1 ກມ ແທນ. ໃນປີ 2016, ບ້ານລາດບວກ ໄດ້ມີການສ້າງວັດຂຶ້ນດ້ວຍໄມ້ ແລະ ມຸງຫຼັງຄາດ້ວຍແຜ່ນດິບຸກ, ຕໍ່ມາຈຶ່ງໄດ້ມີການສ້າງວັດທີ່ເທດ້ວຍປູນຂຶ້ນໃນປີ 2017. ທີ່ດິນຂອງວັດດັ່ງກ່າວແມ່ນໄດ້ຮັບການເກັບກູ້ ລບຕ ແລ້ວ. ວັດນີ້ແມ່ນອາຄານທີ່ມີຄວາມສຳຄັນໃນບ້ານດັ່ງກ່າວ ແລະ ການນຳຂອງບ້ານໄດ້ມີການລາຍງານວ່າ ປະຊາຊົນຈາກ 16 ບ້ານໃກ້ຄຽງ ກໍ່ໄດ້ເດີນທາງມາວັດດັ່ງກ່າວເຊັ່ນກັນ. ວັດດັ່ງກ່າວເປັນສະຖານທີ່ຈັດບຸນສຳຄັນໆຕ່າງໆ, ລວມມີ: ບຸນກະຖິນໃນເດືອນມີນາ, ບຸນບັ້ງໄຟໃນເດືອນມິຖຸນາ, ແລະ ບຸນເຂົ້າສະຫຼາກໃນເດືອນຕຸລາ. ໃນເດືອນພະຈິກ, ຫຼັງການເກັບກ່ຽວແລ້ວ, ກໍ່ຈະມີການຈັດບຸນໃຫຍ່ຂຶ້ນທີ່ວັດດັ່ງກ່າວ ໂດຍມີລູກບ້ານເຂົ້າຮ່ວມເພື່ອເຮັດຢູ່ແຕ່ງກິນໃຫ້ແກ່ຄູບາ ແລະ ເສບງັນດົນຕີຕ່າງໆ. ວຽກງານການເກັບກູ້ລະເບີດແມ່ນມີຄວາມສຳຄັນ ຍ້ອນລູກບ້ານມັກຈະຕ້ອງໄດ້ຈູດໄຟໃນທີ່ດິນຂອງວັດ ເພື່ອສ້າງຄວາມອົບອຸ່ນ ແລະ ແຕ່ງກິນ. ນອກນັ້ນຍັງໄດ້ມີການຕັ້ງຮົ້ວອ້ອມຮອບດິນວັດ ແລະ ຍັງມີແຜນທີ່ຈະປູກຕົ້ນໄມ້ບາງຊະນິດນຳອີກ.
ໃນບ້ານນາໂອ ຢູ່ ແຂວງຊຽງຂວາງ, ດິນວັດຂອງບ້ານດັ່ງກ່າວແມ່ນໄດ້ຮັບການເກັບກູ້ ລບຕ ຄັ້ງທຳອິດໃນປີ 1997 ຍ້ອນຈະມີການດຳເນີນໂຄງການປູກຕົ້ນໄມ້ພາຍໃນວັດໃນເວລານັ້ນ. ເມື່ອບໍ່ດົນມານີ້ກໍ່ໄດ້ມີການເສີມຂະຫຍາຍ ແລະ ເກັບກູ້ ລບຕ ເພີ່ມເຕີມ ຍ້ອນມີແຜນທີ່ຈະສ້າງສູນປະ

ຕິບັດທຳ ທີ່ສາມາດຮອງຮັບພະສົງໄດ້ 200-300 ອົງ.

### 4.2.3. ການສື່ສານກ່ຽວກັບວຽກງານການສຳຫຼວດ ແລະ ການເກັບກູ້

ໃນຂະນະທີ່ການເກັບກູ້ ລບຕ ຊ່ວຍອຳນວຍຄວາມສະດວກໃຫ້ແກ່ ການກໍ່ສ້າງຫໍປະຊຸມ, ວັດ ແລະ ຕະຫຼາດທີ່ຈະຊ່ວຍຊຸກຍູ້ໃຫ້ເກີດການໂຮມໂຕກັນ ແລະ ການແບ່ງປັນຂໍ້ມູນໃນສັງຄົມ, ການສະໜອງຂໍ້ມູນກ່ຽວກັບວຽກງານເກັບກູ້ ແລະ ສຳຫຼວດ ລບຕ ແມ່ນບໍ່ເຄີຍພຽງພໍຈັກເທື່ອ. ການສື່ສານທີ່ບໍ່ມີປະສິດທິພາບ ກ່ຽວກັບວຽກງານການກຳນົດບຸລິມະສິດ, ການສຳຫຼວດ ແລະ ການເກັບກູ້, ອາດກີດຂວາງການພັດທະນາ ແລະ ສະກັດກັ້ນບໍ່ໃຫ້ການເກັບກູ້ ລບຕ ສາມາດສ້າງຜົນກະທົບໂດຍລວມໄດ້.

ການຄົ້ນຄວ້າທີ່ຜ່ານມາໄດ້ຊອນໃຫ້ເກີດຄຳຖາມກ່ຽວກັບວ່າ ຜູ້ດຳເນີນວຽກງານເກັບກູ້ລະເບີດມີການລວມເອົາ ແລະ ປຶກສາຫາລືກັບແມ່ຍິງໄດ້ດີເທົ່າໃດ, ລວມໄປເຖິງປະສິດທິພາບຂອງການສື່ສານຜ່ານການຂຽນ ແລະ ການເວົ້າ, ໂດຍສະເພາະໃນເວລາສື່ສານກັບຜູ້ທຸກຍາກໃນເຂດຊົນນະບົດ ແບະ ຊົນກຸ່ມນ້ອຍຕ່າງໆ.[65] ການທົບທວນຄືນຄວາມຄືບໜ້າຕໍ່ ປພຍ ແບບສະໝັກໃຈ ຂອງ ສປປ ລາວ ຍັງໄດ້ຊີ້ໃຫ້ເຫັນອີກວ່າ ອຸປະສັກດ້ານພາສາໄດ້ກໍ່ໃຫ້ເກີດຂໍ້ຈຳກັດ ແລະ ສົ່ງຜົນຕໍ່ຄວາມເຂົ້າໃຈດ້ານຂໍ້ມູນ.[66]

*ການກຳນົດບຸລິມະສິດ*

ການຄົ້ນຄວ້າໃນປີ 2017 ກ່ຽວກັບວຽກງານການກຳນົດບຸລິມະສິດໃນ ສປປ ລາວ ພົບວ່າປະຊາຊົນໃນຂັ້ນບ້ານ ບໍ່ສາມາດອະທິບາຍໄດ້ວ່າ ມີການຈັດລຽງບຸລິມະສິດໃຫ້ແກ່ວຽກງານເກັບກູ້ລະເບີດຕ່າງໆຄືແນວໃດ.[67] ການປະເມີນຜົນກະທົບໃນຄັ້ງນີ້ ຍັງພົບອີກວ່າປະຊາຊົນມັກຈະບໍ່ຄ່ອຍໄດ້ຮັບຮູ້ ກ່ຽວກັບຂັ້ນຕອນການຕັດສິນໃຈເລືອກເອົາທີ່ດິນໃດ ທີ່ຈະຕ້ອງໄດ້ຮັບການເກັບກູ້ກ່ອນ. ນາຍບ້ານມັກຈະລາຍງານວ່າພວກເຂົາ ບໍ່ໄດ້ມີສ່ວນຮ່ວມເຂົ້າໃນການຕັດສິນໃຈເລືອກວ່າຕ້ອງເກັບກູ້ດິນຕອນໃດກ່ອນ, ໂດຍສະເພາະທີ່ດິນປູກຝັງ. ມີແຕ່ໜ່ວຍງານໃດໜຶ່ງລົງມາ ແລະ ອະທິບາຍວ່າຈະເຮັດຫຍັງແດ່ເທົ່ານັ້ນ. ນາຍບ້ານຄົນໜຶ່ງໄດ້ລາຍງານວ່າ ມີຊາວກະສິກອນບາງກຸ່ມໄດ້ຮ້ອງຂໍໃຫ້ມາຊ່ວຍເກັບກູ້ທີ່ດິນຂອງພວກເຂົາເປັນເວລາ 2 ປີມາແລ້ວ, ແຕ່ກໍ່ຍັງບໍ່ທັນມີການດຳເນີນງານໃດໆ, ໃນຂະນະທີ່ຄົວເຮືອນອື່ນໆທີ່ຮ້ອງຂໍໄປເມື່ອປີກາຍ ພັດໄດ້ຮັບການຕອບຮັບໂດຍທັນທີ. ລາວບໍ່ເຂົ້າໃຈວ່າຄຳຮ້ອງເບື້ອງຕົ້ນ ທີ່ສົ່ງໄປກ່ອນໜ້ານີ້ຍ້ອນຫຍັງຈຶ່ງບໍ່ໄດ້ຖືກຕອບຮັບເທື່ອ. ໃນບ້ານລອງປິວ, ຄົວເຮືອນທີ່ທີມງານລົງຢ້ຽມຢາມ ແລະ ຖືກກວດພົບເຫັນ ລບຕ ໃນດິນຂອງຕົນກ່າວວ່າ ລາວພົບເຫັນ ລບຕ ຈຳນວນ 10 ລູກໃນຊ່ວງຊຸມປີທີ່ຜ່ານມາ, ແຕ່ດິນຂອງລາວກໍ່ບໍ່ໄດ້ຮັບການເກັບກູ້ເທື່ອ, ໃນຂະນະທີ່ບ່ອນອື່ນດຳເນີນການສຳເລັດໄປແລ້ວ. ການຂາດຄວາມເຂົ້າໃຈຕໍ່ຂະບວນການຕັດສິນໃຈ ທີ່ກ່ຽວຂ້ອງກັບການດຳເນີນວຽກງານເກັບກູ້ນີ້ ອາດກໍ່ໃຫ້ເກີດຄວາມບໍ່ສະບາຍໃຈ ແລະ ອາດສົ່ງຜົນໃຫ້ປະຊາຊົນ ບໍ່ສາມາດນຳໃຊ້ທີ່ດິນຂອງພວກເຂົາໄດ້ຢ່າງເຕັມປະສິດທິພາບ

ອຳນາດການປົກຄອງບ້ານ, ແທ້ຈິງແລ້ວ, ມີບົດບາດສຳຄັນໃນການຄັດເລືອກໃຫ້ພື້ນຖານໂຄງລ່າງອັນໃດໃນຊຸມຊົນ ໄດ້ຮັບການເກັບກູ້ ລບຕ ແລະ ເປັນໜ່ວຍງານທີ່ມີຄວາມສຳຄັນ ໃນການຮຽກຮ້ອງໃຫ້ມີການດຳເນີນການເກັບກູ້ ລບຕ ເພື່ອກໍ່ສ້າງໂຮງຮຽນ ຫຼື ອາຄານທີ່ຈະນຳໃຊ້ເປັນຫ້ອງການບ້ານ ແລະ ຫໍປະຊຸມຕ່າງໆ. ເຖິງຢ່າງໃດກໍ່ຕາມ, ຂັ້ນຕອນ ແລະ ຄວາມວ່ອງໄວໃນການພິຈາລະນາ ຄຳຮ້ອງຂໍດຳເນີນການເກັບກູ້ລະເບີດ, ລວມໄປເຖິງຂັ້ນຕອນໃນການລວມເອົາຄຳຮ້ອງດັ່ງກ່າວ ເຂົ້າໃນແຜນວຽກການເກັບກູ້ລະເບີດນີ້ ຍັງຂາດຄວາມຊັດເຈນຢູ່. ຜູ້ດຳເນີນງານທີ່ໄດ້ຮັບການສຳພາດ ໄດ້ຊີ້ໃຫ້ເຫັນວ່າພວກເຂົ້າຈຳເປັນຕ້ອງໝັ້ນໃຈກ່ອນວ່າ ມີງົບປະມານພຽງພໍແລ້ວໃນການກໍ່ສ້າງອາຄານ ກ່ອນທີ່ຈະສາມາດລວມເອົາຄຳຮ້ອງດັ່ງກ່າວ ເຂົ້າໃນແຜນການເກັບກູ້ໄດ້.

ນາຍບ້ານຫຼາຍຄົນໄດ້ກ່າວວ່າ ພວກເຂົາຕ້ອງການຂໍ້ມູນທີ່ຊັດເຈນຂຶ້ນກວ່ານີ້ ກ່ຽວກັບຂັ້ນຕອນການກຳນົດບຸລິມະສິດ ແລະ ຄວາມເຂົ້າໃຈກ່ຽວກັບວ່າທີ່ດິນຕອນໃດ ຄວນໄດ້ຮັບການສຳຫຼວດ ແລະ ໄດ້ຮັບການເກັບກູ້ລະເບີດ. ນາຍບ້ານຄົນໜຶ່ງໄດ້ຮ້ອງຂໍໂດຍສະເພາະ ໃຫ້ມີການສະໜອງແຜນທີ່ອັນຮອບດ້ານ ແກ່ອຳນາດການປົກຄອງບ້ານ ເພື່ອໃຫ້ພວກເຂົາສາມາດເບິ່ງເຫັນຄວາມຄືບໜ້າຂອງວຽກງານເກັບກູ້ ແລະ ສຳຫຼວດໃນບ້ານດັ່ງກ່າວໄດ້ ແລະ ໃຫ້ສາມາດເຂົ້າໃຈວ່າຍັງເຫຼືອທີ່ດິນຕອນໃດທີ່ມີ ລບຕ ຕົກຄ້າງຢູ່. ລາວກ່າວວ່າລາວຍິນດີເຂົ້າຮ່ວມການຝຶກອົບຮົມ ເພື່ອຮຽນຮູ້ກ່ຽວກັບວຽກງານກຳນົດບຸລິມະສິດ, ການສຳຫຼວດ, ແລະ ການເກັບກູ້.

## *ການສ້າງຄວາມເຂົ້າໃຈຕໍ່ຂັ້ນຕອນການສຳຫຼວດ*

ໃນຂົງເຂດທີ່ປະຊາຊົນໄດ້ມີການປູກຝັງມາແລ້ວເປັນເວລາຫຼາຍປີ ແລະ ບໍ່ເຄີຍພົບເຫັນ ລບຕ ມາກ່ອນ, ການສຳຫຼວດພັດໄດ້ກໍ່ໃຫ້ເກີດຄວາມກັງວົນໃຈວ່າ ທີ່ດິນດັ່ງກ່າວອາດຈະມີ ລບຕ ຕົກຄ້າງໂດຍທີ່ເຈົ້າຂອງດິນບໍ່ຮູ້, ເຮັດໃຫ້ພວກເຂົາຮູ້ສຶກບໍ່ສະບາຍໃຈ ແລະ ເປັນກັງວົນ. ຍັງປາກົດມີການຂາດການສື່ສານຢ່າງສະໝໍ່າສະເໝີ ລະຫວ່າງທີມງານສຳຫຼວດ ແລະ ລູກບ້ານກ່ຽວກັບຂັ້ນຕອນການສຳຫຼວດ, ສິ່ງທີ່ພວກເຂົາພົບລະຫວ່າງການສຳຫຼວດ, ແລະ ຜົນກະທົບຂອງສິ່ງທີ່ພົບນັ້ນ ຕໍ່ກິດຈະກຳການປູກຝັງຂອງພວກເຂົາ.

ໃນບ້ານນາເຜີ້ງ ໃນ ແຂວງຊຽງຂວາງ, ລູກບ້ານແມ່ນມີຄວາມສັບສົນ ກ່ຽວກັບສະຖານະທີ່ດິນຂອງຕົນ, ທີ່ໄດ້ຮັບການສຳຫຼວດແລ້ວໃນປີ 2021 ໂດຍ ຄກລ ພາຍໃຕ້ເງິນທຶນຂອງ ປະເທດນູແວນເຊລັງ. ພວກເຂົາລາຍງານວ່າບໍ່ໄດ້ຮັບເອກະສານຫຍັງເລີຍ ພາຍຫຼັງທີ່ທີມງານດັ່ງກ່າວ ສຳເລັດວຽກງານຂອງພວກເຂົາແລ້ວ ແລະ ດ້ວຍເຫດນີ້, ຈຶ່ງບໍ່ຮູ້ເລີຍວ່າດິນຕອນໃດ ໄດ້ຮັບການສຳຫຼວດໄປແລ້ວ. ລູກບ້ານຄົນໜຶ່ງ ໄດ້ຍິນມາວ່າທີມງານດັ່ງກ່າວ ໄດ້ເກັບກູ້ບົ່ມບີ້ 2 ລູກຈາກດິນຂອງລາວ, ແຕ່ກໍ່ບໍ່ຮູ້ວ່າທີມງານດັ່ງກ່າວຈະກັບມາອີກມື້ໃດ ເພື່ອເກັບກູ້ທີ່ດິນຂອງລາວໃຫ້ຄົບຖ້ວນຕື່ມ. ລາວກ່າວວ່າກ່ອນໜ້ານີ້ ໄດ້ດຳເນີນການປູກຝັງໂດຍບໍ່ມີຄວາມຢ້ານກົວອັນໃດເລີຍ, ແຕ່ໃນປັດຈຸບັນພັດຮູ້ສຶກຢ້ານ ທີ່ຈະໄປເຮັດວຽກຢູ່ດິນຂອງຕົນເອງ ແລະ ຕ້ອງໄດ້ໃຊ້ຄວາມລະມັດລະວັງຫຼາຍຂຶ້ນ.

ໃນບ້ານລອງປິວ, ແມ່ຍິງຄົນໜຶ່ງລາຍງານວ່າ ມີທີມງານ ລບຕ ເດີນທາງມາໃນປີ 2020, ພົບເຫັນ ລບຕ 1 ລູກໃນດິນຂອງລາວ ແລະ ດຳເນີນການເກັບກູ້ຕາມມຸມຂອງທີ່ດິນຂອງລາວເທົ່ານັ້ນ. ລາວບໍ່ເຂົ້າໃຈວ່າເປັນຫຍັງ ພວກເຂົາຈຶ່ງບໍ່ດຳເນີນການເກັບກູ້ໃນພື້ນທີ່ທັງໝົດ ແລະ ກ່າວວ່າຍ້ອນແນວນີ້ຈຶ່ງເຮັດໃຫ້ລາວຮູ້ສຶກຢ້ານ ແລະ ບໍ່ກ້າໄປເຮັດກິດຈະກຳປູກຝັງຢູ່ບ່ອນນັ້ນ. ຄະນະກຳມະການເກັບກູ້ ລບຕ ປະຈຳແຂວງຊຽງຂວາງ ຄິດວ່າທີ່ດິນຜືນດັ່ງກ່າວ ມີພຽງຂອບຂອງດິນເທົ່ານັ້ນທີ່ຖືເປັນພື້ນທີ່ CHA, ຈຶ່ງເຮັດໃຫ້ມີພຽງບາງສ່ວນເທົ່ານັ້ນທີ່ໄດ້ຮັບການເກັບກູ້. ເຖິງຢ່າງໃດກໍ່ຕາມ, ຂໍ້ມູນອັນຊັດເຈນກ່ຽວກັບການສຳຫຼວດພື້ນທີ່ CHA ແລະ ການດຳເນີນການເກັບກູ້ໃນເວລາຕໍ່ມາ ອາດຊ່ວຍໃຫ້ຊາວກະສິກອນລາຍນີ້ ຮູ້ສຶກປອດໄພຍິ່ງຂຶ້ນໃນເວລານຳໃຊ້ທີ່ດິນດັ່ງກ່າວ.

ຜູ້ຕອບບົດສຳຫຼວດທີ່ມີຄວາມລຶ້ງເຄີຍກັບ ການສຳຫຼວດສິ່ງເສດເຫຼືອຈາກລະເບີດລູກຫວ່ານ ພາຍໃຕ້ທຶນຊ່ວຍເຫຼືອຂອງ ສ. ອາເມລິກາ ໄດ້ຊີ້ໃຫ້ເຫັນວ່າໃນບັນດາຂົງເຂດ ທີ່ໄດ້ຮັບການສຳຫຼວດແບບບໍ່ເປັນວິຊາການ ພາຍໃຕ້ທຶນຂອງ ສ. ອາເມລິກາ, ວັດຖຸລະເບີດກໍ່ຈະຖືກເກັບກູ້ ຖ້າຖືກພົບເຫັນໃນລະຫວ່າງການສຳຫຼວດ, ເພື່ອແນໃສ່ຍົກສູງຄວາມເຊື່ອໝັ້ນໃຫ້ແກ່ລູກບ້ານ. ເຖິງຢ່າງໃດກໍ່ຕາມ, ຍັງມີປະຊາຊົນບາງສ່ວນ ເຂົ້າໃຈວ່າການສຳຫຼວດທາງວິຊາການ ແລະ ການເກັບກູ້ລະເບີດນັ້ນ ແມ່ນວຽກງານອັນດຽວກັນ. ຄຊກລ ຈຶ່ງໄດ້ລິເລີ່ມສະໜອງຂໍ້ມູນເພີ່ມເຕີມໃຫ້ແກ່ລູກບ້ານ ເພື່ອສຸມໃສ່ຄວາມພະຍາຍາມໃນການອະທິບາຍຂັ້ນຕອນການສຳຫຼວດ ໃຫ້ພວກເຂົາເຂົ້າໃຈຕື່ມ, ແລະ ເບິ່ງຄືວ່ານີ້ແມ່ນບາດກ້າວທີ່ສົມເຫດສົມຜົນ. ຂະແໜງການດັ່ງກ່າວກຳລັງພິຈາລະນາ ຫຼຸດຜ່ອນຂັ້ນຕອນການສຳຫຼວດທາງວິຊາການລົງ, ໂດຍໃຫ້ມີແຕ່ທີມງານທີ່ດຳເນີນການເກັບກູ້ ລບຕ ຈາກພື້ນທີ່ CHA ໂດຍກົງເລີຍ. ແນ່ນອນວ່າ, ພາຍໃນບັນດາບ້ານທີ່ໄດ້ຮັບການຢ້ຽມຢາມ ອັນເປັນພາກສ່ວນໜຶ່ງຂອງການສຳຫຼວດຄັ້ງນີ້, ລູກບ້ານລ້ວນແລ້ວແຕ່ມີຄວາມສັບສົນ ກ່ຽວກັບຂັ້ນຕອນການສຳຫຼວດ ແລະ ບໍ່ເຂົ້າໃຈວ່າມັນໝາຍຄວາມແນວໃດ ໃນການທີ່ດິນຂອງຕົນໄດ້ຮັບການສຳຫຼວດ ແລະ ເມື່ອໃດຈຶ່ງຈະດຳເນີນການເກັບກູ້. ຫຼາຍຄົນຍັງຂາດຄວາມເຂົ້າໃຈ ກ່ຽວກັບແນວຄິດຂອງການກຳນົດພື້ນທີ່ CHA ແລະ ລູກບ້ານ ຫຼື ອຳນາດການປົກຄອງຂັ້ນບ້ານເອງ ກໍ່ບໍ່ເຄີຍກ່າວເຖິງຄຳສັບດັ່ງກ່າວເລີຍ.

ບ້ານຄັງເຄ ແມ່ນບ້ານຂອງຊົນເຜົ່າມົ້ງທີ່ຢູ່ ເມືອງຄໍາ, ແຂວງຊຽງຂວາງ, ໄດ້ຖືກສ້າງຂຶ້ນໃນປີ 1997, ປະກອບມີລູກບ້ານທີ່ຖືກຍົກຍ້າຍມາຈາກເມືອງໜອງແຮດ. ບ້ານດັ່ງກ່າວມີປະຊາກອນຫຼາຍກວ່າ 1,000 ຄົນ ແລະ 139 ຄົວເຮືອນ.

ຄກລ ໄດ້ມາສຳຫຼວດບ້ານດັ່ງກ່າວໃນເດືອນທັນວາ 2021, ໃນຊ່ວງເວລາທີ່ເກັບກ່ຽວເຂົ້າແລ້ວ. ອຳນາດການປົກຄອງບ້ານຈື່ໄດ້ວ່າ ທີມງານໄດ້ດຳເນີນການສຳຫຼວດໄປປະມານ 60 ສ່ວນຮ້ອຍຂອງເນື້ອທີ່ນາທັງໝົດ ແລະ ໄດ້ບອກວ່າຈະກັບມາເກັບກູ້ລະເບີດໃຫ້ໃນປີຕໍ່ມາ, ໃນຊ່ວງເວລາທີ່ເກັບກ່ຽວເຂົ້າແລ້ວ. ອຳນາດການປົກຄອງບ້ານ ມີລາຍຊື່ຂອງແຕ່ລະຄົວເຮືອນ ທີ່ດິນຂອງພວກເຂົາໄດ້ຮັບການສຳຫຼວດ ແລະ ໄດ້ຊ່ວຍເຫຼືອທີມງານຄົ້ນຄວ້າດັ່ງກ່າວ ໃຫ້ໄດ້ພົບປະກັບແຕ່ລະຄົວເຮືອນ. ເຖິງຢ່າງໃດກໍ່ຕາມ, ພວກເຮົາພົບວ່າແຕ່ລະຄົວເຮືອນ ມີຄວາມຮັບຮູ້ກ່ຽວກັບຂັ້ນຕອນການສຳຫຼວດດັ່ງກ່າວ ໃນຂອບເຂດທີ່ຈຳກັດຫຼາຍ.

ລູກບ້ານຄົນໜຶ່ງໄດ້ລາຍງານວ່າ ລາວບໍ່ຈື່ຜູ້ໃດເລີຍທີ່ມາສຳຫຼວດດິນຂອງລາວ ແລະ ລາວກໍ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມອັນໃດເລີຍ. ລາວກ່າວວ່າອາດແມ່ນລູກຊາຍ ຫຼື ລູກສາວຂອງລາວເຂົ້າຮ່ວມກອງປະຊຸມແທນ, ເຖິງແມ່ນວ່າຊື່ຜູ້ໄດ້ຮັບຜົນປະໂຫຍດ ຈະແມ່ນລາວກໍ່ຕາມ. ອີກຄອບຄົວໜຶ່ງຍັງໄດ້ກ່າວວ່າ ພວກເຂົາບໍ່ຮູ້ເລີຍວ່າດິນຂອງຕົນ ໄດ້ຮັບການສຳຫຼວດແລ້ວ, ເຖິງແມ່ນວ່າພວກເຂົາຈະຢູ່ໃນລາຍຊື່ຂອງນາຍບ້ານກໍ່ຕາມ. ພວກເຂົາໄດ້ພົບເຫັນ ລບຕ ຢູ່ສວນສາລີຂອງພວກເຂົາເອງ ແລະ ໄດ້ຍ້າຍມັນອອກມາປະໄວ້ທາງຂ້າງ ກ່ອນຈະສືບຕໍ່ເຮັດວຽກ. ອີກລູກບ້ານຜູ້ ໜຶ່ງທີ່ຢູ່ໃນລາຍຊື່ຜູ້ໄດ້ຮັບຜົນປະໂຫຍດເຊັ່ນກັນ ບອກວ່າລາວເຄີຍເຫັນທີມງານມາບ້ານນີ້, ແຕ່ບໍ່ໄດ້ມາເຮັດວຽກຢູ່ດິນຂອງລາວ, ແລະ ລາວກໍ່ບໍ່ໄດຮັບແຈ້ງວ່າພວກເຂົາມາເຮັດຫຍັງ. ອີກຜູ້ໜຶ່ງກໍ່ໄດ້ກ່າວວ່າ ລາວບໍ່ໄດ້ພົບ ລບຕ ຢູ່ດິນຂອງລາວ ແລະ ຄຶດວ່າດິນຂອງລາວກໍ່ຍັງບໍ່ໄດ້ຮັບການສຳຫຼວດເທື່ອ.

ມີລູກບ້ານພຽງຄົນດຽວຈາກທັງໝົດທີ່ຖືກສຳພາດທີ່ຈື່ໄດ້ ແລະ ມີຂໍ້ມູນກ່ຽວກັບການສຳຫຼວດ ທີ່ຖືກດຳເນີນການຢູ່ດິນນາເນື້ອທີ່ 1.2 ເຮັກຕ້າຂອງລາວ. ລາວໄດ້ມີການປູກຝັງ ໂດຍນໍາໃຊ້ລົດໄຖນາຂະໜາດໃຫຍ່ ແລະ ເຄີຍພົບເຫັນບົ່ມບີ້ 3-4 ລູກຕອນທີ່ລາວພອນດິນ. ລາວຍ້າຍລູກລະເບີດດັ່ງກ່າວໄປປະໄວ້ຢູ່ທາງຂ້າງຂອງດິນນາ ແລະ ລາຍງານໃຫ້ນາຍບ້ານຊາບ. ທີມງານເກັບກູ້ໄດ້ມາທຳລາຍວັດຖຸດັ່ງກ່າວ, ແລະ ທີມສຳຫຼວດກໍ່ຕາມມາພາຍຫຼັງ ເພື່ອສຳຫຼວດດິນຂອງລາວເພີ່ມເຕີມ. ພວກເຂົາແຈ້ງໃຫ້ລາວຊາບວ່າຈະກັບມາດຳເນີນເກັບກູ້ໃຫ້ຕື່ມອີກ. ລາວບອກວ່າລາວຮູ້ສຶກປອດໄພຂຶ້ນ, ແຕ່ກໍ່ຄຶດວ່າຍັງມີ ລບຕ ຕົກຄ້າງຢູ່. ລາວຄຶດວ່າໜ້າຈະດີກວ່ານີ້ ຖ້າມີຂໍ້ມູນເພີ່ມເຕີມອີກກ່ຽວກັບວຽກງານການສຳຫຼວດ ແລະ ການເກັບກູ້, ຍົກຕົວຢ່າງ, ຖ້າພວກເຂົາສາມາດແຈ້ງໃຫ້ລາວຊາບ ກ່ຽວກັບຈຳນວນທີ່ດິນທີ່ໄດ້ຮັບການສຳຫຼວດ, ພົບ ລບຕ ແລ້ວຈັກລູກ, ແລະ ຈະມີການດຳເນີນການເກັບກູ້ເມື່ອໃດ.

## *ການທຳຄວາມເຂົ້າໃຈຂັ້ນຕອນການເກັບກູ້ລະເບີດ*

ໃນແຂວງບໍລິຄຳໄຊ, ໃນຫຼາຍໆບ້ານ, ປະຊາຊົນເວົ້າເຖິງການເກັບກູ້ທີ່ດິນຂອງພວກເຂົາຫຼາຍກວ່າ 1 ຄັ້ງ. ໃນບ້ານທອງແສນ, ມີການລາຍງານໂດຍລູກບ້ານຫຼາຍຄົນວ່າ ນາປູກເຂົ້າໃກ້ກັບໂຮງຮຽນທີ່ໄດ້ຮັບການເກັບກູ້ລະເບີດໂດຍ ກອງຮ້ອຍ 58 ໃນປີ 2021 ແລະ 2022 ແທ້ຈິງແລ້ວ, ແມ່ນໄດ້ຮັບການເກັບກູ້ໂດຍໜ່ວຍງານອື່ນ 2 ແຫ່ງມາກ່ອນແລ້ວ. ຂໍ້ມູນເຫຼົ່ານີ້ແມ່ນຍາກທີ່ຈະດຳເນີນການກວດສອບຄວາມເປັນຈິງໄດ້ ເນື່ອງຈາກບໍ່ມີໃຜຈື່ໄດ້ວ່າວຽກງານເກັບກູ້ດັ່ງກ່າວນັ້ນ ຖືກດຳເນີນການເມື່ອໃດ ແລະ ອົງການໃດເປັນຜູ້ດຳເນີນການ. ເປັນໄປໄດ້ທີ່ອາດຈະເຄີຍມີການເກັບກູ້ເບື້ອງຕົ້ນພາຍຫຼັງສົງຄາມສິ້ນສຸດ, ຫຼື ອາດຈະເປັນແຕ່ທີມງານມາກຳຈັດວັດຖຸສ່ວນບຸກຄົນ, ຫຼື ປະຊາຊົນອາດຈະເຂົ້າໃຈຜິດວ່າແມ່ນການເກັບກູ້, ແຕ່ແທ້ຈິງແມ່ນການສຳຫຼວດ.  ບໍ່ວ່າຈະຍ້ອນສາເຫດໃດກໍ່ຕາມ, ຜົນກໍ່ຄືລູກບ້ານຮູ້ສຶກບໍ່ໝັ້ນໃຈວ່າດິນຂອງພວກເຂົາ ໄດ້ຮັບການເກັບກູ້ຢ່າງຄົບຖ້ວນແລ້ວ ຫຼື ບໍ່ ພາຍຫຼັງການດຳເນີນງານຂອງ ກອງຮ້ອຍ 58, ເພາະພວກເຂົາຮູ້ສຶກວ່າຍິ່ງມີດຳເນີນການເກັບກູ້, ກໍຍິ່ງພົບ ລບຕ ເພີ່ມຂຶ້ນເລື້ອຍໆ.

ທີມງານຍັງໄດ້ພົບພໍ້ກັບບາງກໍລະນີ ທີ່ປະຊາຊົນບໍ່ຮູ້ມາກ່ອນເລີຍວ່າດິນຂອງພວກເຂົາ ໄດ້ຮັບການເກັບກູ້ລະເບີດແລ້ວ. ໃນບາງກໍລະນີ, ເອກະສານວຽກງານການເກັບກູ້ ແມ່ນໄດ້ຖືກສະໜອງໃຫ້ແກ່ຜູ້ນຳກຸ່ມ. ດັ່ງນັ້ນ, ການທີ່ບັນດາຄົວເຮືອນທີ່ຢູ່ພາຍໃຕ້ກຸ່ມດັ່ງກ່າວ ຈະໄດ້ຮັບຂໍ້ມູນກ່ຽວກັບວຽກງານການເກັບກູ້ ຫຼື ບໍ່ນັ້ນ ແມ່ນຂຶ້ນກັບວ່າຜູ້ນຳກຸ່ມ ຫຼື ອຳນາດການປົກຄອງທ້ອງຖິ່ນຈະສະໜອງຂໍ້ມູນດັ່ງກ່າວໃຫ້ ຫຼື ບໍ່. ໃນບ້ານລາດບອກ, ແມ່ຍິງຄົນໜຶ່ງໄດ້ລາຍງານວ່າ ລາວໄດ້ຍິນຈາກເພື່ອນບ້ານ ແລະ ຜູ້ນຳກຸ່ມບອກວ່າ ດິນຂອງລາວໄດ້ຮັບການເກັບກູ້ແລ້ວ, ແຕ່ລາວບໍ່ມີຂໍ້ມູນອັນໃດເລີຍກ່ຽວກັບການເກັບກູ້ລະເບີດດັ່ງກ່າວ. ໃນບ້ານນາໂອ ຢູ່ ເມືອງແປກ, ປາກົດມີຄວາມສັບສົນໃນຮູບແບບດຽວກັນວ່າ ໄດ້ມີການເກັບກູ້ລະເບີດອອກຈາກທີ່ດິນຂອງປະຊາຊົນແລ້ວ ຫຼື ບໍ່.

ໃນບ້ານນາໂອ, ຊາວບ້ານທີ່ລ້ຽງງົວຜູ້ໜຶ່ງ ໄດ້ຮ້ອງຂໍໃຫ້ມີການເກັບກູ້ລະເບີດອອກຈາກດິນເປີ້ນພູ ທີ່ຢູ່ຫຼັງບ້ານຂອງລາວ ບ່ອນທີ່ລາວຢາກເອົາງົວຊິນໄປລ້ຽງ. ລາວໄດ້ເລີ່ມບຸກເບີກດິນດັ່ງກ່າວດ້ວຍໂຕເອງກ່ອນແລ້ວ ແລະ ພົບເຫັນບົ່ມບີ້ບາງລູກ. ລາວໄດ້ນໍາເອົາບາງລູກໄປເຜົາ, ແຕ່ດ້ວຍຄວາມຊ່ວຍເຫຼືອຈາກໝູ່ຜູ້ທີ່ເຮັດວຽກໃຫ້ແກ່ "ອົງການເກັບກູ້ ລບຕ" (ຄກລ), ລາວຈຶ່ງໄດ້ສົ່ງຄໍາຮ້ອງຂໍໃຫ້ມີການເກັບກູ້ລະເບີດໄປຍັງອົງການດັ່ງກ່າວໃນປີ 2012. ທີມງານເກັບກູ້ໄດ້ມາບ້ານຂອງລາວໃນປີ 2016 ເພື່ອເກັບກູ້ ລບຕ ທີ່ລາວຄົ້ນພົບ, ແລະ ມາອີກຄັ້ງໜຶ່ງໃນປີ 2017 ເພື່ອສໍາຫຼວດທີ່ດິນຜືນດັ່ງກ່າວ ແລະ ທີ່ດິນໃກ້ຄຽງ. ພວກເຂົາກັບມາອີກໃນປີ 2019 ເພື່ອມາເກັບກູ້ທີ່ດິນຕອນດັ່ງກ່າວ ໂດຍໃຊ້ເວລາປະມານ 2-3 ເດືອນ. ລາວບອກວ່າບໍ່ຮູ້ວ່າພວກເຂົາເກັບກູ້ ລບຕ ໄປແລ້ວຈັກລູກ, ແຕ່ລາວແນມເຫັນພວກເຂົາປັກທຸງສີແດງເຕັມໄປໝົດເທິງໜ້າດິນ. ລາວໄດ້ຮັບເອກະສານຈາກອົງການດັ່ງກ່າວ ແຕ່ບໍ່ໄດ້ອ່ານທັງໝົດເພາະມັນຍາວ ແລະ ຫຍຸ້ງຍາກ. ເຖິງຢ່າງໃດກໍ່ຕາມ, ລາວຮູ້ວ່າດິນຂອງເພື່ອນບ້ານຂອງລາວກໍ່ໄດ້ຮັບການເກັບກູ້ຄືກັນ.[68] ທີມງານໄດ້ໂອ້ລົມກັບເພື່ອນບ້ານຂອງລາວ 2 ຫຼັງທີ່ຢູ່ໃນລາຍຊື່ຜູ້ໄດ້ຮັບຜົນປະໂຫຍດຈາກການເກັບກູ້ເຊັ່ນກັນ (ລາຍຊື່ດັ່ງກ່າວມີທັງໝົດ 13 ຄົວເຮືອນ). ເພື່ອນບ້ານທັງສອງທີ່ໂອ້ລົມນໍານັ້ນແມ່ນຜູ້ຍິງ, ແລະ ບໍ່ມີໃຜເລີຍທີ່ຮູ້ວ່າດິນຂອງຕົນໄດ້ຮັບການເກັບກູ້ແລ້ວ. ຜູ້ຍິງໜຶ່ງໃນນັ້ນກ່າວວ່າ ລາວຢາກນໍາໃຊ້ທີ່ດິນເພື່ອປູກຫຍ້າ ແຕ່ບໍ່ສາມາດເຮັດແນວນັ້ນໄດ້ ຍ້ອນຄິດວ່າຍັງມີ ລບຕ ຕົກຄ້າງຢູ່.

## *ເອກະສານການເກັບກູ້ລະເບີດ*

ພາຍຫຼັງເກັບກູ້ລະເບີດແລ້ວ, ຄົວເຮືອນສ່ວນໃຫຍ່ກໍ່ຈະໄດ້ຮັບເອກະສານຢັ້ງຢືນການເກັບກູ້ສໍາເລັດ. ເອກະສານນີ້, ໂດຍທົ່ວໄປແລ້ວ, ປະກອບມີປະມານ 10 ໜ້າ, ທີ່ອະທິບາຍວຽກງານຕ່າງໆທີ່ໄດ້ຖືກດໍາເນີນງານໄປ, ຈຸດພິກັດຂອງດິນທີ່ໄດ້ຮັບການເກັບກູ້, ຄວາມເລິກຂອງການເກັບກູ້, ແລະ ຈໍານວນ ລບຕ ທີ່ຄົ້ນພົບໃນຈຸດພິກັດດັ່ງກ່າວ. ເອກະສານນີ້ຂ້ອນຂ້າງລະອຽດ ແລະ ມີເນື້ອໃນຫຼາຍ, ແລະ ລູກບ້ານຫຼາຍຄົນ, ເຖິງແມ່ນວ່າຈະໄດ້ຮັບສໍາເນົາເອກະສານນີ້ແລ້ວກໍ່ຕາມ, ບໍ່ມີໃຜສາມາດອ່ານໄດ້ຄົບທັງໝົດ ຫຼື ເຂົ້າໃຈຂໍ້ມູນທັງໝົດໄດ້. ມີລູກບ້ານຫຼາຍຄົນລາຍງານວ່າ ພວກເຂົາໄດ້ຮັບເອກະສານເປັນພາສາອັງກິດ, ແລະ ດັ່ງນັ້ນຈຶ່ງບໍ່ສາມາດອ່ານໄດ້.[69] ນາຍບ້ານຄົນໜຶ່ງກ່າວວ່າ ລາວໄດ້ຮັບບົດລາຍງານກ່ຽວກັບການເກັບກູ້, ແລະ ເຖິງແມ່ນວ່າລາວຈະມີຄວາມຮູ້ໃນລະດັບໜຶ່ງ ແລະ ສາມາດອ່ານອອກຂຽນເປັນ, ແຕ່ເອກະສານດັ່ງກ່າວມີການນໍາໃຊ້ພາສາທີ່ເປັນວິຊາການເກີນກວ່າທີ່ລາວຈະເຂົ້າໃຈໄດ້. ປະຊາຊົນແນະນໍາໃຫ້ສ້າງເອກະສານການທີ່ມີຄວາມລຽບງ່າຍຂຶ້ນກວ່າເກົ່າ, ເນັ້ນໜັກໃສ່ແຕ່ຂໍ້ມູນສໍາຄັນທີ່ພວກເຂົາຕ້ອງຮູ້, ລວມທັງໃຫ້ລະບຸຊັດເຈນວ່າດິນຕອນໃດໄດ້ຮັບການເກັບກູ້ແລ້ວ, ເລິກເທົ່າໃດ ແລະ ເກັບກູ້ເພື່ອໃຫ້ນໍາເອົາດິນດັ່ງກ່າວໄປໃຊ້ໃນຈຸດປະສົງຫຍັງ, ເກັບກູ້ ລບຕ ໄດ້ຈັກລູກ, ແລະ ຕອນນີ້ດິນດັ່ງກ່າວປອດໄພສໍາລັບການປູກຝັງແລ້ວ ຫຼື ບໍ່. ເອກະສານສະຫຼຸບຫຍໍ້ທີ່ຂຽນເປັນພາສາລາວ ໜ້າຈະພຽງພໍແລ້ວໃນການສະໜອງຂໍ້ມູນ ທີ່ລູກບ້ານຈໍາເປັນຕ້ອງຮູ້.

ໃນຫຼາຍໆກໍລະນີ, ແມ່ຍິງເບິ່ງຄືວ່າຈະມີຄວາມຮັບຮູ້ ກ່ຽວກັບຂັ້ນຕອນການເກັບກູ້ໜ້ອຍກວ່າຜູ້ຊາຍ. ໃນບ້ານຍອດພຽງ, ແມ່ຍິງໄດ້ຊີ້ໃຫ້ເຫັນວ່າຜູ້ຊາຍແມ່ນກຸ່ມຄົນສ່ວນໃຫຍ່ ທີ່ໄດ້ເຂົ້າຮ່ວມກອງປະຊຸມທີ່ຖືກຈັດຂຶ້ນໂດຍອົງການ ລບຕ. ແມ່ຍິງຈຶ່ງບໍ່ມີຄວາມເຂົ້າໃຈທີ່ຈະແຈ້ງວ່າ ໄດ້ມີການເກັບກູ້ດິນໄປຫຼາຍເທົ່າໃດແລ້ວ ແລະ ຍ້ອນຫຍັງດິນຕອນນີ້ຈຶ່ງໄດ້ຮັບການເກັບກູ້ ແລະ ອີກຕອນບໍ່ມີການດໍາເນີນງານໃດໆ. ມີແມ່ຍິງພຽງ 3 ໃນ 8 ຄົນກ່າວວ່າ ພວກເຂົາສາມາດອ່ານເອກະສານທີ່ແຈກໃຫ້ໂດຍອົງການດັ່ງກ່າວໄດ້, ແລະ ເຖິງແນວນັ້ນ, ພວກເຂົາກໍ່ເຂົ້າໃຈພຽງໜ້ອຍດຽວເທົ່ານັ້ນ. ພວກເຂົາບໍ່ສາມາດເຂົ້າໃຈໄດ້ຊັດເຈນວ່າ ມີການເກັບກູ້ທີ່ດິນໄດ້ເລິກເທົ່າໃດແລ້ວ, ຫຼື ໄດ້ມີການເກັບກູ້ ລບຕ ອັນໃດແດ່ຈາກດິນຂອງພວກເຂົາ. ກົງກັນຂ້າມ, ກຸ່ມຜູ້ຊາຍແມ່ນໄດ້ຮັບຂໍ້ມູນທີ່ຊັດເຈນກວ່າກ່ຽວກັບ ລບຕ ທີ່ໄດ້ຮັບການເກັບກູ້ ແລະ ຄວາມເລິກຂອງການເກັບກູ້, ເຖິງແມ່ນວ່າສ່ວນໃຫຍ່ຈະບໍ່ໄດ້ອ່ານເອກະສານຄົບຖ້ວນກໍ່ຕາມ.

---

65 Rebecca Roberts ແລະ ກຽງໄກ ອຸມະນີ, "ກ້າວໄປສູ່ການບັນລຸ ປພຍ ລໍາດັບທີ 18: ການລຶບລ້າງ ລບຕ ທີ່ເປັນອຸປະສັກຕໍ່ການພັດທະນາໃນ ສປປ ລາວ," ອົງການ ສປຊ ເພື່ອການພັດທະນາ, 13 ກັນຍາ 2021.

66 ລັດຖະບານລາວ, "ການທົບທວນຄືນແຫ່ງຊາດແບບສະໝັກໃຈໃນການຈັດຕັ້ງປະຕິບັດ ວາລະ 2030 ເພື່ອການພັດນາແບບຍືນຍົງ," ກໍລະກົດ 2021.

67 Katherine Sweet, "ນະໂຍບາຍ, ຂັ້ນຕອນ ແລະ ຫຼັກປະຕິບັດດ້ານການກໍານົດບຸລິມະສິດ ທີ່ກ່ຽວຂ້ອງກັບການເກັບກູ້ ລບຕ ໃນ ສປປ ລາວ," ຄຊກລ ແລະ GICHD, ກັນຍາ 2017.

68 ທີມຄົ້ນຄວ້າກໍ່ໄດ້ຮັບລາຍຊື່ຜູ້ໄດ້ຮັບຜົນປະໂຫຍດຈາກວຽກງານເກັບກູ້ນີ້ຈາກ ຄກລ ເຊັ່ນກັນ.

69 ບາງເອກະສານຜົນສໍາເລັດຂອງການເກັບກູ້ທີ່ທີມຄົ້ນຄວ້າໄດ້ຮັບ ມີຂໍ້ຄວາມທີ່ຂຽນເປັນທັງພາສາລາວ ແລະ ພາສາອັງກິດ.

## 4.3. ດ້ານການເງິນ

ພາຍໃຕ້ທຶນການເງິນ, ພວກເຮົາຈະພິຈາລະນາການເພີ່ມຂຶ້ນ ຫຼື ຄວາມປ່ຽນແປງດ້ານລາຍຮັບໃນຄົວເຮືອນ, ການລົງທຶນເຂົ້າໃນເຄື່ອງມື, ເຄື່ອງກົນຈັກ ແລະ ສັດລ້ຽງ, ແລະ ຄວາມປ່ຽນແປງດ້ານມູນຄ່າທີ່ດິນ ອັນເປັນຜົນມາຈາກວຽກງານເກັບກູ້ ລບຕ.

### 4.3.1. ລາຍຮັບໃນຄົວເຮືອນ

ເປັນການຍາກທີ່ຈະສາມາດປະເມີນໄດ້ວ່າ ຄວາມປ່ຽນແປງທີ່ເກີດຂຶ້ນກັບລາຍຮັບໃນຄົວເຮືອນນັ້ນ ມີສາເຫດມາຈາກການເກັບກູ້ ລບຕ ຫຼື ບໍ່. ຍົກຕົວຢ່າງໃນກໍລະນີໜຶ່ງທີ່ມີລາຍຮັບຄົວເຮືອນເພີ່ມຂຶ້ນ, ສາເຫດສ່ວນໃຫຍ່ແມ່ນມາຈາກປັດໄຈຕ່າງໆດັ່ງນີ້: ການສົ່ງເສີມ ແລະ ການເສີມຂະຫຍາຍກິດຈະກຳປູກຝັງ, ການປັບປຸງສາຍພັນເຂົ້າ, ການນຳສະເໜີພືດເສດຖະກິດ ແລະ ພືດສວນຄົວ, ການສ້າງຕັ້ງໂຮງງານແປຮູບອາຫານໃນທ້ອງຖິ່ນ, ການເພີ່ມທະວີຄວາມຕ້ອງການຂອງຕະຫຼາດ, ແລະ ສົ່ງເສີມໃຫ້ພໍ່ຄ້າແມ່ຄ້າເຂົ້າມາໃນບ້ານ ແລະ ດຳເນີນການຊື້ຂາຍຜົນຜະລິດ. ໃນຫຼາຍໆບ້ານ, ປະຊາຊົນໄດ້ມີການເຮັດສວນຝຜກຫຼາຍຂຶ້ນ ເພື່ອປູກພືດຜັກຊະນິດຕ່າງໆ, ເຊັ່ນ: ກະຫຼໍ່າ, ຫົວຫອມໃຫຍ່, ໝາກແຕງ, ແລະ ກະທຽມ ທີ່ສາມາດນຳໄປບໍລິໂພກເອງ ແລະ ຂາຍໄດ້. ສິ່ງນີ້ກໍ່ໄດ້ຮັບການສົ່ງເສີມເຊັ່ນດຽວກັນ ໂດຍບັນດາອົງການທີ່ຮັບຜິດຊອບປັບປຸງໂພຊະນາການໃນເຂດຊົນນະບົດ. ຍຸດທະສາດຂອງລັດຖະບານໃນການສົ່ງເສີມໜຶ່ງເມືອງ, ໜຶ່ງຜະລິດຕະພັນ, ທີ່ແນໃສ່ຍົກສູງການຂະຫຍາຍໂຕຂອງເສດຖະກິດພາຍໃນເມືອງ, ຍັງໄດ້ຊ່ວຍສົ່ງເສີມຜະລິດຕະພັນຕ່າງໆ, ເຊັ່ນ: ນໍ້າເຜິ້ງ ແລະ ຊາ. ເຕັກນິກການປູກຝັງທີ່ໄດ້ຮັບການປັບປຸງດີຂຶ້ນ, ຄວາມຫຼາກຫຼາຍດ້ານກະສິກຳ ແລະ ພືດເສດຖະກິດ ລວນແລ້ວແຕ່ແມ່ນປັດໄຈ ທີ່ຊ່ວຍປັບປຸງຊີວິດການເປັນຢູ່ ແລະ ຫັນປະຊາຊົນອອກຈາກການກະສິກຳເພື່ອລ້ຽງຊີບ ໄປສູ່ການກະສິກຳແບບຍືນຍົງ. ລາຍຮັບຄົວເຮືອນທີ່ເພີ່ມຂຶ້ນ ໄດ້ພາໃຫ້ຊັບສິນຄົວເຮືອນເພີ່ມຂຶ້ນຕາມ.

ໃນແຂວງບໍລິຄຳໄຊ, ອຳນາດການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງໄດ້ຊີ້ໃຫ້ເຫັນວ່າ ໃນຊ່ວງກວ່າ 10 ປີທີ່ຜ່ານມາ, ມີຄວາມປ່ຽນແປງເກີດຂຶ້ນຫຼາຍຢ່າງ - ມີກົນໄກການປູກຝັງເພີ່ມຂຶ້ນ, ມີແນວພັນພືດຫຼາກຫຼາຍຂຶ້ນ ແລະ ໄດ້ຮັບການປັບປຸງດີຂຶ້ນ. ໃນຂະນະທີ່ເມື່ອກ່ອນມີແຕ່ປູກເພື່ອບໍລິໂພກພາຍໃນຄົວເຮືອນເທົ່ານັ້ນ, ປັດຈຸບັນສາມາດຂາຍຜົນຜະລິດທັງໃນຕະຫຼາດພາຍໃນ ແລະ ສົ່ງອອກໄປຍັງ ຫວຽດນາມ ໄດ້. ການປັບປຸງຖະໜົນຫົນທາງ ກໍ່ຊ່ວຍໃຫ້ປະຊາຊົນມີຄວາມສາມາດສູງຂຶ້ນ ໃນການຂາຍຜົນຜະລິດຂອງຕົນ. ໃນແຂວງຊຽງຂວາງ, ພະແນກກະສິກຳແຂວງ ໄດ້ຊີ້ໃຫ້ເຫັນເຖິງປັດໄຈຕົ້ນຕໍ ທີ່ຊ່ວຍປະຊາຊົນໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ, ເຊັ່ນ: ການຍົກສູງກຳລັງການຜະລິດກະສິກຳ ແລະ ການລ້ຽງສັດ, ມີຂະບວນການແປຮູບກະສິກຳທີ່ດີຂຶ້ນ ແລະ ການເສີມຂະຫຍາຍການຄ້າຮ່ວມກັບ ຫວຽດນາມ ແລະ ຈີນ. ເຖິງຢ່າງໃດກໍ່ຕາມ, ຍັງມີການຊີ້ໃຫ້ເຫັນອີກວ່າ ການເກັບກູ້ ລບຕ ກໍ່ແມ່ນອີກໜຶ່ງປັດໄຈສຳຄັນ ທີ່ຊ່ວຍໃຫ້ປະຊາຊົນຮູ້ສຶກປອດໄພຂຶ້ນ ແລະ ອາດເປັນສິ່ງກະຕຸ້ນໃຫ້ພວກເຂົາເສີມຂະຫຍາຍທີ່ດິນ ແລະ ການຜະລິດຂຶ້ນຕື່ມ.

ສ່ວນຕົວຢ່າງດ້ານການຂະຫຍາຍໂຕຂອງເສດຖະກິດໃນ ແຂວງຊຽງຂວາງ ແມ່ນ ເມືອງຄຳ. ອຳນາດການປົກຄອງຂອງເມືອງດັ່ງກ່າວ ໄດ້ລາຍງານວ່າໃນປີ 2018 ແຕ່ລະຄົວເຮືອນມີລາຍຮັບສະເຫຼ່ຍຢູ່ທີ່ປະມານ 700-800 ໂດລາຕໍ່ປີ, ແຕ່ພາຍຫຼັງມີການປູກສາລີ ແລະ ເຂົ້າສາຍພັນພິເສດ ແລະ ສາຄູ, ພ້ອມທັງລ້ຽງສັດ, ລາຍຮັບໃນຄົວເຮືອນຕໍ່ປີກໍ່ເພີ່ມຂຶ້ນເປັນ 1,200 ໂດລາໂດຍສະເຫຼ່ຍ.

ເຖິງແມ່ນວ່າການຍົກສູງຄວາມເຊື່ອໝັ້ນໃນທີ່ດິນປູກຝັງ ພາຍຫຼັງດຳເນີນການເກັບກູ້ ລບຕ ໄປແລ້ວ ເບິ່ງຄືວ່າອາດຊ່ວຍຊຸກຍູ້ໃຫ້ຊາວກະສິກອນໄດ້ລອງປູກພືດ ແລະ ເຂົ້າສາຍພັນຕ່າງໆໃນດິນຂອງຕົນ, ແຕ່ໃນຄວາມເປັນຈິງແລ້ວ, ຊາວກະສິກອນກໍ່ມີການທົດລອງປູກພືດໃໝ່ໆຢູ່ເປັນປະຈຳຢູ່ແລ້ວ ບໍ່ວ່າດິນຕອນນັ້ນຈະມີ ລບຕ ຫຼື ບໍ່ກໍ່ຕາມ. ດັ່ງນັ້ນ, ຈຶ່ງຕ້ອງໄດ້ເບິ່ງປັດໄຈອື່ນໆນຳອີກ, ເຊັ່ນ: ລາຄາຕະຫຼາດ ແລະ ຄວາມສາມາດໃນການສະໜອງແນວພັນພືດ ແລະ ເຕັກນິກປູກຝັງໃໝ່ໆໃຫ້ແກ່ພວກເຂົາ. ປັດໄຈເຫຼົ່ານີ້ໜ້າຈະມີອິດທິພົນຫຼາຍກວ່າຕໍ່ຄວາມປ່ຽນແປງທີ່ເກີດຂຶ້ນ.

ກອງຮ້ອຍ 58 ມີແຜນດຳເນີນການສຳຫຼວດ ບ້ານແສນອຸດົມ ໃນ ເມືອງຄຳເກີດ ໃນປີ 2023, ເຖິງແມ່ນວ່າຈະມີການດຳເນີນວຽກງານເກັບກູ້ບາງສ່ວນໂດຍ SODI ມາກ່ອນໃນລະຫວ່າງປີ 2012-2014 ມາແລ້ວກໍ່ຕາມ.

ອຳນາດການປົກຄອງທ້ອງຖິ່ນໄດ້ລາຍງານວ່າ ມີການປູກມັນຕົ້ນໂດຍລູກບ້ານເປັນເວລາປະມານ 2 ປີມາແລ້ວ ແລະ ໄດ້ກໍ່ໃຫ້ເກີດຄວາມປ່ຽນແປງອັນໃຫຍ່ຫຼວງຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ເມື່ອສົມທຽບກັບການປູກເຂົ້າ. ມັນຕົ້ນສາມາດນຳໄປແປຮູບທີ່ໂຮງງານໃນ ເມືອງຄຳເກີດ ແລະ ວຽງທອງ, ແລະ ຕໍ່ມາກໍ່ຂາຍໃຫ້ ຫວຽດນາມ. ພວກເຂົາຍັງໄດ້ປູກຕົ້ນໄມ້ຂະຍຸງເພື່ອໄວ້ຂາຍມາເປັນເວລາຍາວນານແລ້ວ ແລະ ຕົ້ນໄມ້ດັ່ງກ່າວກໍ່ໄດ້ກາຍມາເປັນ ອົງປະກອບທາງການຄ້າທີ່ສຳຄັນໃນຊຸມປີທີ່ຜ່ານມາ. ຄົວເຮືອນຕ່າງໆກໍ່ເລີ່ມມີລາຍຮັບສູງຂຶ້ນ ຊ່ວຍໃຫ້ພວກເຂົາສາມາດຊື້ຊັບສິນໄດ້ຫຼາຍຂຶ້ນ ແລະ ສາມາດສົ່ງລູກໄປຮຽນຊັ້ນມັດທະຍົມປາຍຈົນເຖິງຂັ້ນວິທະຍາໄລໄດ້.

ຜູ້ຕອບບົດສຳຫຼວດຫຼາຍຄົນກ່າວວ່າ ກຳລັງການຜະລິດຕໍ່າບໍ່ໄດ້ເກີດຂຶ້ນຍ້ອນການຕົກຄ້າງຂອງ ລບຕ ສະເໝີໄປ. ເຖິງແມ່ນວ່າຊາວກະສິກອນບາງຄົນໄດ້ເວົ້າວ່າ ຖ້າພວກເຂົາຮູ້ວ່າມີ ລບຕ ຕົກຄ້າງຢູ່ໃນດິນ, ພວກເຂົາກໍ່ຈະຕ້ອງໄດ້ເຮັດວຽກຊ້າລົງ ແລະ ລະມັດລະວັງຂຶ້ນກໍ່ຕາມ, ແຕ່ບໍ່ມີໃຜເລີຍທີ່ລາຍງານວ່າ ບັນຫານີ້ກະທົບຕໍ່ກຳລັງການຜະລິດຂອງພວກເຂົາ. ໃນບ້ານນາເຜິ້ງ ໃນ ເມືອງແປກ, ຊາວກະສິກອນໄດ້ລາຍງານວ່າບັນຫາຕົ້ນຕໍທີ່ກະທົບຕໍ່ການຜະລິດຂອງພວກເຂົາແມ່ນນໍ້າ ຍ້ອນບໍ່ມີລະບົບຊົນລະປະທານ ແລະ ຝົນຟ້າເອງກໍ່ບໍ່ສາມາດຄາດເດົາໄດ້. ຫຼາຍຄັ້ງ, ຫຼັງການເກັບກູ້ ລບຕ ແລ້ວ, ລູກບ້ານໄດ້ລາຍງານວ່າ ກຳລັງການຜະລິດກໍ່ຍັງຄືຢູ່ໃນລະດັບເດີມ. ໃນບ້ານລາດບວກ, ແມ່ຍິງຄົນໜຶ່ງກ່າວວ່າ ນາປູກເຂົ້າຂອງລາວໄດ້ຮັບການເກັບກູ້ລະເບີດໄປແລ້ວໃນປີ 2022 ກ່ອນລະດູປູກເຂົ້າ. ຫຼັງການປູກເຂົ້າແລ້ວ, ລາວສາມາດເກັບກ່ຽວຜົນຜະລິດໄດ້ 110 ຖົງ, ເຊິ່ງເປັນຈຳນວນດຽວກັນກັບກ່ອນການເກັບກູ້ລະເບີດ. ຈຳນວນດັ່ງກ່າວແມ່ນພຽງພໍແລ້ວ ສຳລັບການບໍລິໂພກໃນຄົວເຮືອນ ແລະ ເພື່ອຂາຍ.

ໃນທຸກບ້ານທີ່ໄດ້ໄປຢ້ຽມຢາມ, ການຜະລິດພືດເສດຖະກິດ, ເຊັ່ນ: ມັນຕົ້ນ, ຖົ່ວ, ສາລີຫວານ, ແລະ ຊາ, ໄດ້ຊ່ວຍໃຫ້ປະຊາຊົນສາມາດຍົກສູງຊີວິດການເປັນຢູ່ ແລະ ຫັນປ່ຽນອອກຈາກການກະສິກຳເພື່ອລ້ຽງຊີບແບບເດີມ ຍ້ອນພືດພັນໃໝ່ເຫຼົ່ານີ້ ແມ່ນສາມາດປູກໄດ້ທຸກລະດູການໃນຕະຫຼອດທັງປີ. ຍົກຕົວຢ່າງ, ໃນບ້ານລອງປົວ, ລູກບ້ານໄດ້ກ່າວວ່າ ການຫັນມາໃຊ້ປຸ໋ຍ ແລະ ການປູກເຂົ້າສາຍພັນໃໝ່, *ເຂົ້າໄກ່ນ້ອຍ*, ໄດ້ເຮັດໃຫ້ພວກເຂົາເຫັນເຖິງຄວາມແຕກຕ່າງດ້ານການຜະລິດ. ກ່ອນໜ້ານີ້ຜະລິດເຂົ້າໄດ້ພຽງແຕ່ 30 ເປົາຕໍ່ເຮັກຕ້າ, ແຕ່ດຽວນີ້ສາມາດຜະລິດໄດ້ 70 ເປົາແລ້ວ. ເຖິງແມ່ນວ່າວຽກງານເກັບກູ້ ລບຕ ຈະບໍ່ແມ່ນປັດໄຈໂດຍກົງ ທີ່ປະກອບສ່ວນຕໍ່ຄວາມປ່ຽນແປງດັ່ງກ່າວກໍ່ຕາມ, ການເພີ່ມຂຶ້ນຂອງລາຍຮັບກໍ່ໄດ້ຊ່ວຍໃຫ້ປະຊາຊົນ ສາມາດຊື້ຊັບສິນໄດ້ຫຼ!ຍຂຶ້ນ, ສ້າງເຮືອນທີ່ເທດ້ວຍປູນແໜ້ນໜາ, ແລະ ສາມາດສົ່ງລູກຮຽນໄດ້ສູງຂຶ້ນ ທັງຍັງມີເງິນເກັບນຳອີກ.



*ເຄື່ອງເຮັດຊາໃນ ບ້ານຍອດພຽງ, ເມືອງແປກ*

ຜູ້ດຳເນີນການທີ່ໄດ້ໂອ້ລົມນຳໄດ້ລາຍງານວ່າ ການກຳນົດບູລິມະສິດໃຫ້ແກ່ວຽກງານການເກັບກູ້ ຕ້ອງໄດ້ຄຳນຶງເຖິງລະດູການເຂົ້ານຳ, ເພື່ອໃຫ້ນາປູກເຂົ້າໄດ້ຮັບການເກັບກູ້ ຫຼັງການເກັບກ່ຽວກໍ່ຄືໃນລະຫວ່າງລະດູແລ້ງ. ສ່ວນທີ່ດິນຊຸມຊົນ, ທົ່ງຫຍ້າ, ແລະ ໂຄງການພັດທະນາ ແລະ ພື້ນຖານໂຄງລ່າງຕ່າງໆ ແມ່ນໃຫ້ດຳເນີນການເກັບກູ້ໃນຊ່ວງລະດູຝົນ. ການກຳນົດບູລິມະສິດແນວນີ້ ແມ່ນອີງໃສ່ຄວາມເຂົ້າໃຈທີ່ວ່າ ປະຊາຊົນ, ໂດຍທົ່ວໄປແລ້ວ, ດຳເນີນການປູກຝັງ ເທິງດິນທີ່ມີການຕົກຄ້າງຂອງລະເບີດ ແລະ ເພື່ອຮັບປະກັນໃຫ້ການເກັບກູ້ ລບຕ ບໍ່ສົ່ງຜົນກະທົບທາງລົບຕໍ່ການຜະລິດກະສິກຳ. ເຖິງຢ່າງໃດກໍ່ຕາມ, ໃນບ້ານທອງແສນ ໃນ ແຂວງບໍລິຄຳໄຊ, ການເກັບກູ້ລະເບີດໂດຍ ກອງຮ້ອຍ 58 ແມ່ນໄດ້ຖືກດຳເນີນການໃນເດືອນມິຖຸນາ 2022, ໃນລະຫວ່າງລະດູປູກພືດ ແລະ ພືດພັນຂອງລູກບ້ານບາງຄົນ ກໍ່ໄດ້ຮັບຄວາມເສຍຫາຍຈາກວຽກງານດັ່ງກ່າວ. ຊາວກະສິກອນຜູ້ໜຶ່ງກ່າວວ່າ ລາວກຳລັງຢູ່ໃນຂັ້ນຕອນການປູກເຂົ້າຢູ່, ແລະ ຕ້ອງສູນເສຍຜົນຜະລິດໄປປະມານ 10 ກລ. ຊາວກະສິກອນອີກຜູ້ໜຶ່ງກໍ່ກ່າວວ່າ ລາວຕ້ອງເສຍມັນຕົ້ນໄປປະມານ 100 ກລ, ແລະ ຜູ້ທີສາມຕ້ອງເສຍປະມານ 20-30 ສ່ວນຮ້ອຍຂອງພືດທີ່ລາວປູກ. ຍັງມີການລາຍງານອີກວ່າ ເຈົ້າຂອງດິນບາງລາຍ ບໍ່ອານຸຍາດໃຫ້ມີການດຳເນີນການເກັບກູ້ລະເບີດ ຍ້ອນນີ້ແມ່ນລະດູປູກຝັງ. ເຖິງພືດພັນຂອງພວກເຂົາຈະເສຍຫາຍກໍ່ຕາມ, ແຕ່ຊາວກະສິກອນບາງຄົນທີ່ຖືກສຳພາດ ກໍ່ກ່າວວ່າພວກເຂົາຮູ້ສຶກຍິນດີ ແລະ ຮູ້ສຶກປອດໄພຂຶ້ນແລ້ວ.

### 4.3.2. ມູນຄ່າທີ່ດິນ

ໃນປະເທດເພື່ອນບ້ານກໍ່ຄື ກຳປູເຈຍ, ການເກັບກູ້ລະເບີດ ບວກກັບຄວາມຕ້ອງການທີ່ດິນ ໄດ້ເຮັດໃຫ້ທີ່ດິນມີມູນຄ່າສູງຂຶ້ນ, ອັນໄດ້ກໍ່ໃຫ້ເກີດບັນຫາຄວາມຂັດແຍ່ງດ້ານທີ່ດິນ ຫຼື ການຍາດແຍ່ງທີ່ດິນເມື່ອມີການເປີດຂາຍ. ໃນບັນດາບ້ານທີ່ໄດ້ຮັບການຢ້ຽມຢາມໃນ ແຂວງບໍລິຄຳໄຊ ແລະ

ຊຽງຂວາງ, ມັກຈະບໍ່ໄດ້ມີການຕີລາຄາທີ່ດິນ. ເຖິງຢ່າງໃດກໍ່ຕາມ, ມີໂຕຊີ້ວັດທີ່ບົ່ງບອກໃຫ້ຮູ້ວ່າ ມູນຄ່າຂອງທີ່ດິນກຳລັງເພີ່ມສູງຂຶ້ນ ໃນບາງບ້ານທີ່ມີການພັດທະນາ, ທີ່ຕັ້ງຢູ່ແຄມຖະໜົນຫົນທາງ, ແລະ ໃນຂົງເຂດສຳຄັນເພື່ອການພັດທະນາ, ເຊິ່ງເປັນສິ່ງໜ້າດຶງດູດໃຫ້ຄົນມາລົງທຶນຫຼາຍຂຶ້ນ.

ໃນບ້ານທອງແສນ, ປະຊາຊົນໄດ້ລາຍງານວ່າ ລາຄາທີ່ດິນໄດ້ມີການປັບປ່ຽນໄປ ພາຍຫຼັງດຳເນີນການເກັບກູ້ ລບຕ ແລ້ວ, ເຖິງແມ່ນວ່າມູນຄ່າຂອງທີ່ດິນແຕ່ລະຕອນ ຈະມີຄວາມແຕກໂຕນກັນຫຼາຍກໍ່ຕາມ. ຜູ້ຕອບບົດສຳຫຼວດໜຶ່ງຄົນໄດ້ກ່າວວ່າ ກ່ອນທີ່ດິນ 1 ເຮັກຕ້າຂອງລາວຈະໄດ້ຮັບການເກັບກູ້ລະເບີດ, ມັນມີມູນຄ່າປະມານ 60 ລ້ານກີບ (3,400 ໂດລາ), ແຕ່ຕອນນີ້ໄດ້ເພີ່ມສູງຂຶ້ນເປັນ 70 ຫາ 80 ລ້ານກີບແລ້ວ. ອີກຄົນໜຶ່ງໄດ້ລາຍງານວ່າດິນຂອງລາຍເຄີຍມີມູນຄ່າ 26,000 ໂດລາກ່ອນການເກັບກູ້ລະເບີດ, ແຕ່ພາຍຫຼັງກໍ່ມີຄົນໃຫ້ລາຄາສູງເຖິງ 30,000 ໂດລາແລ້ວ. ຊາວກະສິກອນອີກຜູ້ໜຶ່ງໃນບ້ານນັ້ນໄດ້ກ່າວວ່າ ລາວໄດ້ຂາຍດິນ 0.8 ເຮັກຕ້າຂອງລາວໃນລາຄາ 115 ລ້ານກີບ (ປະມານ 6,000 ໂດລາ) ຫຼັງການເກັບກູ້ລະເບີດ. ດິນຕອນດັ່ງກ່າວຕັ້ງຢູ່ຕາມແຄມທາງ ເຮັດໃຫ້ຫຼາຍຄົນຕ້ອງການຊື້ ຍ້ອນສາມາດນຳໄປສ້າງເປັນທີ່ພັກອາໄສໄດ້. ການຂະຫຍາຍໂຕຂອງເສດຖະກິດໃນ ເມືອງຄຳເກີດ ແລະ ສະຖານະຂອງ ບ້ານທອງແສນ ທີ່ຖືກກຳນົດໃຫ້ເປັນພື້ນທີ່ສຳຄັນເພື່ອການພັດທະນາ ໄດ້ກາຍມາເປັນປັດໄຈສຳຄັນໃນການຊ່ວຍໃຫ້ທີ່ດິນມີມູນຄ່າສູງຂຶ້ນ.

ໃນລະຫວ່າງການໂອ້ລົມກັນກັບອຳນາດການປົກຄອງແຂວງ ແລະ ເມືອງ, ມັກຈະກ່າວເຖິງການລົງທຶນທີ່ເພີ່ມຂຶ້ນ ອັນເປັນຜົນມາຈາກການພັດທະນາ, ແລະ ຜູ້ຕອບບົດສຳຫຼວດ ກໍ່ລ້ວນແລ້ວແຕ່ຢາກໃຫ້ທີ່ດິນຂອງຕົນໄດ້ຮັບການເກັບກູ້ ເພື່ອດຶງດູດນັກລົງທຶນທັງພາຍໃນ ແລະ ຕ່າງປະເທດມາຊື້. ຄາດໝາຍດ້ານການຂະຫຍາຍໂຕເສດຖະກິດ, ດັ່ງທີ່ກຳນົດໄວ້ໃນ ແຜນການ 5 ປີ, ອາດກໍ່ໃຫ້ເກີດຄວາມກົດດັນຕໍ່ທີ່ດິນ, ແລະ ໂດຍສະເພາະດິນທີ່ມີປະຫວັດການເກັບກູ້ ລບຕ ມາກ່ອນ. ນີ້ອາດໝາຍຄວາມວ່າດິນທີ່ໄດ້ຮັບການເກັບກູ້ສຳລັບປະຊາຊົນທ້ອງຖິ່ນ ອາດຍັງຄົງມີຄວາມອັນຕະລາຍຢູ່ຖ້ານຳໄປໃຊ້ເພື່ອຈຸດປະສົງອື່ນ. ສິ່ງສຳຄັນແມ່ນ ຄຊກລ ຕ້ອງຮັບປະກັນໃຫ້ອຳນາດການປົກຄອງແຂວງ ແລະ ເມືອງເຂົ້າໃຈ ແລະ ສາມາດໄຈ້ແຍກຄວາມແຕກຕ່າງລະຫວ່າງການເກັບກູ້ ລບຕ ເພື່ອມະນຸດສະທຳ, ແລະ ການເກັບກູ້ເພື່ອຈຸດປະສົງທາງການຄ້າ, ການພັດທະນາ ແລະ ການລົງທຶນ, ແລະ ຕ້ອງຮັບປະກັນໃຫ້ເງິນທຶນດ້ານມະນຸດສະທຳສຳລັບວຽກງານເກັບກູ້ ລບຕ ສືບຕໍ່ສ້າງປະໂຫຍດໃຫ້ແກ່ປະຊາຊົນທ້ອງຖິ່ນ. ນີ້ແມ່ນວຽກງານທີ່ ຄຊກລ ອາດຕ້ອງໄດ້ດຳເນີນການຕິດຕາມກວດກາຢ່າງຮັດກຸມ ໃນໄລຍະຊຸມປີຕໍ່ໜ້ານີ້.

ໃນເມືອງແປກ, ທີມງານໄດ້ຍິນມາວ່າ ມີບໍລິສັດຍີ່ປຸ່ນທີ່ລົງທຶນໃນກິດຈະການລ້ຽງງົວ ພະຍາຍາມຊື້ທີ່ດິນ 5,000 ເຮັກຕ້າທີ່ໄດ້ຮັບການເກັບກູ້ ລບຕ ມາແລ້ວຫຼາຍປີ ທີ່ເປັນພື້ນທີ່ສຳຄັນເພື່ອການພັດທະນາ. ບັນຫານີ້ກໍ່ໃຫ້ເກີດຄວາມຂັດແຍ່ງກັບຄົວເຮືອນທີ່ເປັນເຈົ້າຂອງທີ່ດິນ. ໃນຕອນທ້າຍ, ບໍລິສັດດັ່ງກ່າວສາມາດເຊົ່າທີ່ດິນດັ່ງກ່າວໄດ້ 2,000 ເຮັກຕ້າຈາກລູກບ້ານ. ມີບໍລິສັດຈີນແຫ່ງໜຶ່ງ, ທີ່ເຮັດກິດຈະການປູກໝາກລິ້ນຈີ່, ກໍ່ໄດ້ຖືກລາຍງານວ່າເຊົ່າດິນຈາກປະຊາຊົນໃນຂົງເຂດດຽວກັນ. ທີມງານບໍ່ສາມາດຢັ້ງຢືນຂໍ້ມູນເຫຼົ່ານີ້ໄດ້, ແຕ່ກໍ່ໄດ້ລວມເຂົ້າໄວ້ໃນບົດລາຍງານ ເພື່ອຊີ້ໃຫ້ເຫັນເຖິງຄວາມເປັນໄປໄດ້ ທີ່ອາດເກີດມີການແຂ່ງຂັນ ແລະ ຍາດແຍ່ງທີ່ດິນທີ່ໄດ້ຮັບການເກັບກູ້ ລບຕ ແລ້ວ ໃນອະນາຄົດ.

### 4.3.3. ສະຖານທີ່ທ່ອງທ່ຽວ

ການທ່ອງທ່ຽວແມ່ນໜຶ່ງໃນຂົງເຂດບຸລິມະສິດສຳລັບການພັດທະນາເສດຖະກິດໃນ ແຂວງຊຽງຂວາງ, ໄປພ້ອມກັບການລ້ຽງສັດ ແລະ ການພັດທະນາອຸດສະຫະກຳປຸງແຕ່ງກະສິກຳ. ການທ່ອງທ່ຽວແມ່ນຖືເປັນໜຶ່ງໃນຂະແໜງການຕົ້ນຕໍທີ່ສົ່ງເສີມການຂະຫຍາຍໂຕພາຍໃຕ້ ແຜນການ 5 ປີ ແລະ ມີອັດຕາສ່ວນຮ່ວມຂອງກຳລັງແຮງງານສູງ.[70] ເຖິງຢ່າງໃດກໍ່ຕາມ, ມູນຄ່າຂອງສະຖານທີ່ທ່ອງທ່ຽວໃນ ລາວ ບໍ່ໄດ້ມີຄວາມສຳຄັນແຕ່ໃນແງ່ຂອງການເງິນເທົ່ານັ້ນ, ແຕ່ຍັງລວມໄປເຖິງໃນແງ່ຂອງຄວາມພູມໃຈຂອງຄົນລາວ ຕໍ່ມໍລະດົກທາງທຳມະຊາດທີ່ຕົນມີ. ການເກັບກູ້ ລບຕ ເພື່ອການທ່ອງທ່ຽວ ໄດ້ສະໜອງໂອກາດທາງການເງິນໃຫ້ແກ່ລູກບ້ານ. ມີການລາຍງານວ່າແມ່ຍິງສາມາດຂາຍສິ່ງທໍ ແລະ ສິນຄ້າຫັດຖະກຳອື່ນໆໃຫ້ແກ່ນັກທ່ອງທ່ຽວ, ລວມໄປເຖິງອາຫານໃຫ້ແກ່ຜູ້ທີ່ກາຍໄປກາຍມາໄດ້ນຳອີກ.

ວຽກງານເກັບກູ້ ລບຕ ໄດ້ຖືກດຳເນີນທັງໃນ ແລະ ອ້ອມຮອບສະຖານທີ່ທ່ອງທ່ຽວຕ່າງໆໃນ ແຂວງຊຽງຂວາງ, ລວມທັງໃນພື້ນທີ່ຖ້ຳ, ນ້ຳຕົກຕາດ, ບໍ່ນ້ຳຮ້ອນ, ແລະ ທົ່ງໄຫຫີນບາງແຫ່ງ. ທົ່ງໄຫຫີນ ໄດ້ຮັບການຂຶ້ນທະບຽນເປັນ ມໍລະດົກໂລກ ໃນປີ 2019, ແລະ ອີງຕາມພະນັກງານຂອງແຂວງ, ວຽກງານເກັບກູ້ ລບຕ ແມ່ນໜຶ່ງໃນເງື່ອນໄຂຈຳເປັນ ຂອງການຂຶ້ນທະບຽນສະຖານະດັ່ງກ່າວໃຫ້ແກ່ສະຖານທີ່ນີ້.[71] ອີງການ UNESC

O ໄດ້ລາຍງານວ່າບັນດາບ້ານໃກ້ຄຽງ ແມ່ນຜູ້ທີ່ຮັບຜິດຊອບດຳເນີນການຄຸ້ມຄອງ ທົ່ງໄຫຫີນ ໃນແຕ່ລະວັນ ໂດຍອີງຕາມສັນຍາທີ່ເຊັນຮ່ວມກັນກັບ ຫ້ອງວ່າການປົກຄອງແຂວງ, ໃນຮູບແບບທີ່ເປັນການແບ່ງປັນລາຍຮັບຈາກການຂາຍປີ້ເຂົ້າຊົມ ໃຫ້ແກ່ຊຸມຊົນທ້ອງຖິ່ນ.[72]

> ໃນບ້ານຊ້າງ, ເມືອງຄຳ, ມີທົ່ງໄຫຫີນຂະໜາດນ້ອຍຢູ່ບ່ອນນັ້ນ 4 ແຫ່ງ ແລະ ບໍ່ນ້ຳຮ້ອນ 1 ແຫ່ງ. ປະເທດນູແວນເຊລັງ ໄດ້ສະໜອງການສະ ໜັບສະໜູນໃຫ້ແກ່ບ້ານດັ່ງກ່າວ ເພື່ອໃຊ້ເຂົ້າໃນການພັດທະນາການທ່ອງທ່ຽວຂອງຕົນ ໂດຍຜ່ານໂຄງການທີ່ດຳເນີນການແຕ່ປີ 2013-2016. ຖະໜົນຫີນທາງໄດ້ຮັບການປັບປຸງດີຂຶ້ນ, ແລະ ປະເທດນູແວນເຊລັງ ກໍ່ໄດ້ໃຫ້ການສະໜັບສະໜູນວຽກງານເກັບກູ້ ລບຕ ອອກຈາກພື້ນທີ່ຖະ ໜົນເຂົ້າເຖິງທົ່ງໄຫຫີນ ລວມໄປເຖິງພື້ນທີ່ທົ່ງໄຫຫີນເອງ. ໄດ້ມີການສ້າງບັງກະໂລຂຶ້ນໃນເຂດບໍ່ນ້ຳຮ້ອນ ແລະ ລູກບ້ານໃນລະແວກນັ້ນ ກໍ່ໄດ້ຮັບການຝຶກອົບຮົມດ້ານການແຕ່ງກິນ, ການບໍລິການທີ່ພັກ, ການນວດ ແລະ ການນຳທ່ຽວນຳອີກ.
>
> ລູກບ້ານໄດ້ລາຍງານວ່າກ່ອນເກີດວິກິດ ໂຄວິດ-19, ມີນັກທ່ອງທ່ຽວຈຳນວນຫຼາຍ ເດີນທາງມາທົ່ງໄຫຫີນ, ແລະ ແມ່ຍິງກໍ່ສາມາດຂາຍເຄື່ອງຫັດຖະກຳ ແລະ ສິ່ງທໍໃຫ້ແກ່ນັກທ່ອງທ່ຽວໄດ້. ມີຄົວເຮືອນທັງໝົດກວມ 30 ສ່ວນຮ້ອຍທີ່ຜະລິດສິນຄ້າ ເພື່ອຂາຍໃຫ້ແກ່ນັກທ່ອງທ່ຽວ. ພາຍຫຼັງການແຜ່ລະບາດສິ້ນສຸດລົງ, ນັກທ່ອງທ່ຽວສ່ວນໃຫຍ່ແມ່ນມາຈາກພາຍໃນປະເທດ, ແຕ່ໃນລະຫວ່າງເດືອນທັນວາ 2022, ພວກເຂົາຄາດວ່າຈະໄດ້ຮັບຕ້ອນນັກທ່ອງທ່ຽວຫຼາຍຂຶ້ນ ເພື່ອມາຮ່ວມສະເຫຼີມສະຫຼອງສະຖານະ ມໍລະດົກໂລກ ຂອງ ທົ່ງໄຫຫີນ ແລະ ມະຫະກຳກິລາແຫ່ງຊາດ ທີ່ຈະຖືກຈັດຂຶ້ນຢູ່ແຂວງດັ່ງກ່າວ. ປັດຈຸບັນມີພະນັກງານ 7 ຄົນດຳເນີນການບຳລຸງຮັກສາ ທົ່ງໄຫຫີນ. ສ່ວນບໍ່ນ້ຳຮ້ອນ ແມ່ນບໍລິສັດເອກະຊົນເປັນຜູ້ດຳເນີນການ, ແຕ່ລາຍຮັບສ່ວນໜຶ່ງກໍ່ຍັງຖືກແບ່ງໃຫ້ບ້ານຢູ່, ແລະ ແມ່ຍິງກໍ່ຍັງຄົງສືບຕໍ່ຂາຍຜ້າພັນຄໍ ແລະ ເຄື່ອງຫັດຖະກຳໃຫ້ແກ່ນັກທ່ອງທ່ຽວຕໍ່ໄປ.

ພື້ນທີ່ຖ້ຳໃກ້ ບ້ານລອງປີວ ກໍ່ໄດ້ຮັບການເກັບກູ້ ລບຕ ແລ້ວເຊັ່ນກັນ ແລະ ລູກບ້ານກໍ່ສາມາດຊື້ດອກໄມ້ ແລະ ທູບທຽນໃນຖ້ຳໄດ້ ລວມໄປເຖິງຕັ້ງຮ້ານຄ້າຂະໜາດນ້ອຍ ເພື່ອຂາຍເຄື່ອງຫັດຖະກຳ ແລະ ອາຫານ. ເຊັ່ນດຽວກັນ, ໃນບ້ານນາໂອ ໃນ ເມືອງແປກ, ທີ່ຕັ້ງຢູ່ໃກ້ກັບ ທົ່ງໄຫຫີນ 1 ແລະ ຖ້ຳໄຊ, ທີ່ໄດ້ຮັບການເກັບກູ້ລະເບີດໂດຍ ອົງການແມັກ, ກໍ່ມີແມ່ຍິງກຸ່ມໜຶ່ງມາເຊົ່າສະຖານທີ່ ເພື່ອຂາຍເຄື່ອງຫັດຖະກຳ ເຊັ່ນກັນ.

ຄາດໝາຍວ່າການທ່ອງທ່ຽວໃນ ສປປ ລາວ ຈະຟື້ນໂຕຄືນໃນຊ່ວງຊຸມປີຕໍ່ໜ້ານີ້ ໂດຍມີຈຳນວນນັກທ່ອງທ່ຽວເພີ່ມຂຶ້ນຈາກ ຈີນ ແລະ ປະເທດອື່ນໆໃນ ທະວີບອາຊີ ຫຼັງຈາກທີ່ສຳເລັດ ໂຄງການທາງລົດໄຟລາວ-ຈີນ ເຊື່ອມຕໍ່ ນະຄອນຫຼວງວຽງຈັນ ແລະ ກຸນໝິງ ເຂົ້າກັນ, ແລະ ດັ່ງນັ້ນ, ການເກັບກູ້ລະເບີດອອກຈາກສະຖານທີ່ທ່ອງທ່ຽວ ກໍ່ອາດເປັນປັດໄຈຊ່ວຍອັນໜຶ່ງ ໃນການສ້າງໂອກາດອັນດີໃຫ້ແກ່ປະຊາຊົນທ້ອງຖິ່ນ ໄດ້ມີລາຍຮັບເພີ່ມຂຶ້ນ.

### 4.3.4. ການປັບປຸງສະພາບການເງິນໃຫ້ແກ່ຄົນພິການ

ການຄົ້ນຄ້ວາຄັ້ງນີ້ສາມາດພິຈາລະນາໜຶ່ງໂຄງການ ທີ່ໄດ້ໃຫ້ການສະໜັບສະໜູນການເກັບກູ້ ລບຕ ເພື່ອສົ່ງເສີມກິດຈະການລ້ຽງສັດຂອງຄົວເຮືອນທີ່ມີຄົນພິການ. ໃນປີ 2021, ສະມາຄົມຊ່ວຍເຫຼືອຟື້ນຟູຄຸນນະພາບຊີວິດ (QLA) ພາຍໃຕ້ເງິນທຶນຂອງ ປະເທດນູແວນເຊລັງ, ໄດ້ສະ ໜອງການເກັບກູ້ ລບຕ ແລະ ການສະໜັບສະໜູນໃຫ້ແກ່ 5 ຄົວເຮືອນທີ່ມີຄົນພິການໃນ ບ້ານຊ້າງ, ເມືອງຄຳ, ແຂວງຊຽງຂວາງ. ດິນຂອງຄົວເຮືອນດັ່ງກ່າວໄດ້ຮັບການເກັບກູ້ ເພື່ອໃຫ້ພວກເຂົາສາມາດສ້າງຄອກສັດ. ນອກນັ້ນ, ຄອບຄົວດັ່ງກ່າວຍັງໄດ້ຮັບໝູນ້ອຍຈຳນວນໜຶ່ງ ແລະ ແບ້ໄວ້ລ້ຽງນຳອີກ. ພວກເຂົາບໍ່ມີຂໍ້ມູນລະອຽດກ່ຽວກັບໂຄງການດັ່ງກ່າວ, ແຕ່ອີງຕາມເວັບໄຊຂອງ QLA ແລ້ວ, QLA ໄດ້ມີການປະສານງານ ເພື່ອຈັດຕັ້ງປະຕິບັດຂໍ້ລິເລີ່ມດ້ານການດຳລົງຊີວິດຫຼາຍອັນ ເພື່ອຊ່ວຍໃຫ້ຜູ້ໄດ້ຮັບຜົນປະໂຫຍດ ບັນລຸໄດ້ຊີວິດການເປັນຢູ່ທີ່ຍືນຍົງ.[73]

ແມ່ຍິງ 3 ຄົນທີ່ເປັນຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການດັ່ງກ່າວ ໄດ້ຖືກສຳພາດເພື່ອໂອ້ລົມກ່ຽວກັບປະສົບການຂອງພວກເຂົາ ແລະ ເພື່ອໃຫ້ຮູ້ວ່າໂຄງການດັ່ງກ່າວ ຊ່ວຍປັບປຸງຊີວິດການເປັນຢູ່ຂອງພວກເຂົາຄືແນວໃດ. ແມ່ຍິງ 2 ຄົນຈາກທັງໝົດມີສະມາຊິກຄອບຄົວຄົນໜຶ່ງເປັນຜູ້ພິການ, ແລະ ແມ່ຍິງອີກຄົນໜຶ່ງເປັນຜູ້ພິການ (ຫູໜວກ) ແລະ ຜົວຂອງລາວຕາບອດ.

ແມ່ຍິງສອງຄົນໄດ້ຮັບລູກໝູໄປລ້ຽງ. ພວກເຂົາກ່າວວ່າ ອົງການດັ່ງກ່າວໄດ້ສະໜອງຫົວອາຫານ ໃຫ້ໃຊ້ລ້ຽງລູກໝູໄດ້ພໍເປັນເວລາ 2 ເດືອນ, ແລະ ຫຼັງຈາກນັ້ນພວກເຂົາຕ້ອງໄດ້ຊື້ເອງ ເຊິ່ງມີລາຄາຢູ່ປະມານ 70,000 ກີບ (4 ໂດລາ) ຕໍ່ເປົາ. ແມ່ຍິງທັງສອງຄົນໄດ້ກ່າວວ່າ ການລ້ຽງໝູເປັນວຽກງານທີ່ຍາກ ຍ້ອນພວກເຂົາຕ້ອງໄດ້ຫາຜັກມາໃຫ້ພວກມັນກິນ. ແມ່ຍິງຄົນໜຶ່ງໄດ້ຕັດສິນໃຈປູກຜັກເອງ ເພື່ອເປັນການປະຢັດເວລາໃນການຕ້ອງອອກໄປຊອກຫາຜັກມາເກືອໝູ.

ແມ່ຍິງທັງສອງ, ໃນປັດຈຸບັນ, ໄດ້ຂາຍລູກໝູຂອງພວກເຂົາໄປແລ້ວ. ແມ່ຍິງຄົນໜຶ່ງຂາຍໝູ 1 ໂຕໃນລາຄາ 2 ລ້ານກີບ (ປະມານ 115 ໂດລາ) ແລະ ອີກຄົນຂາຍໝູທັງໝົດເລີຍໃນລາຄາ 4 ລ້ານກີບ (ປະມານ 230 ໂດລາ). ທັງສອງຄົນໃຊ້ເງິນທີ່ໄດ້ມານັ້ນ ເພື່ອປິ່ນປົວສະມາຊິກໃນຄອບຄົວທີ່ເຈັບປ່ວຍ. ແມ່ຍິງຜູ້ທຳອິດຍັງເຫຼືອໝູ 2 ໂຕ, ເຊິ່ງຕໍ່ມາມີ 1 ໂຕຕາຍຈາກການທີ່ຂາຂອງມັນໄປຕິດບານປະຕູຂອງຄອກ. ແມ່ຍິງຄົນທີສອງ ຍັງເຫຼືອເງິນຈາກການຂາຍໝູ 3 ຢູ່ ແລະ ມີແຜນທີ່ຈະຊື້ໝູມາລ້ຽງໃໝ່ ຫຼື ງົວ, ຍ້ອນລາວຄິດວ່າລ້ຽງງົວຄືສິງ່າຍກວ່າ. ເຖິງແມ່ນວ່າຈະມີວຽກເພີ່ມຂຶ້ນຈາກການລ້ຽງສັດກໍ່ຕາມ, ແຕ່ເງິນທີ່ໄດ້ຈາກການລ້ຽງສັດນັ້ນ ກໍ່ສາມາດຊ່ວຍໃຫ້ຄອບຄົວຮັບມືກັບບັນຫາສຸຂະພາບ ແລະ ຈ່າຍຄ່າປິ່ນປົວ, ຄ່າຢາໄດ້. ນອກຈາກນັ້ນ, ພວກເຂົາກໍ່ຍັງເຫຼືອໝູ ແລະ ເງິນທີ່ໄດ້ຈາກການຂາຍໝູຈຳນວນໜຶ່ງ ເພື່ອໄວ້ລົງທຶນເພີ່ມເຕີມໃນອະນາຄົດ.

ແມ່ຍິງຄົນທີສາມ ຍັງບໍ່ທັນເຫັນປະໂຫຍດຫຍັງເທື່ອຈາກການລ້ຽງສັດຂອງລາວ. ລາວໄດ້ຮັບແບ້ 2 ໂຕຈາກໂຄງການ, ເຊິ່ງຕໍ່ມາມີໂຕ 1 ຕາຍກ່ອນໄດ້ຮັບວັກຊີນ. ສ່ວນແບ້ທີ່ເຫຼືອກໍ່ໄດ້ອອກລູກມາໂຕໜຶ່ງ, ແຕ່ຕໍ່ມາພັດຖືກໝາຂອງເພື່ອບ້ານກັດຕາຍອີກ. ແບ້ໂຕດັ່ງກ່າວກໍ່ໄດ້ຖືພາອີກ ແລະ ລາວວາງແຜນວ່າຈະລ້ຽງລູກແບ້ນັ້ນໄວ້ເພື່ອຂາຍ. ແມ່ຍິງຄົນດັ່ງກ່າວເວົ້າວ່າ ການລ້ຽງແບ້ນັ້ນງ່າຍຫຼາຍ ມີແຕ່ເອົາຫຍ້າໃຫ້ມັນກິນ ແລະ ລ້ຽງແບບປ່ອຍເສລີໄດ້ເລີຍ.

ໄດ້ມີການດຳເນີນວຽກງານເກັບກູ້ ລບຕ ໃນທີ່ດິນຂອງຄົວເຮືອນດັ່ງກ່າວ ບ່ອນພວກເຂົາສ້າງຄອກສັດລ້ຽງໄວ້. ແມ່ຍິງກຸ່ມນັ້ນຕໍ່ມາໄດ້ລາຍງານວ່າ ບໍ່ມີການພົບ, ເກັບກູ້ ແລະ ທຳລາຍ ລບຕ ໃດໆເລີຍໃນດິນຂອງພວກເຂົາ. ຍ້ອນຄົນພິການມັກຈະມີຄວາມສ່ຽງສູງຕໍ່ໄພທຸກຍາກ ແລະ ບັນຫາຄວາມບໍ່ເທົ່າທຽມດ້ານສຸຂະພາບ,[74] ການສະໜັບສະໜູນດ້ານການດຳລົງຊີວິດ ພາຍຫຼັງການເກັບກູ້ລະເບີດ ທີ່ແນໃສ່ສະໜອງຕາໜ່າງຄວາມປອດໄພຂະໜາດນ້ອຍ ໃຫ້ພວກເຂົາສາມາດຮັບມືກັບບັນຫາສຸຂະພາບໄດ້ນັ້ນ ອາດສົ່ງຜົນທີ່ກົງກັນຂ້າມ ເຮັດໃຫ້ພວກເຂົາຕ້ອງພົບພໍ້ກັບໄພທຸກຍາກ ແລະ ຄວາມຂາດເຂີນທີ່ຮ້າຍແຮງກວ່າເກົ່າ.

---

70 ສປປ ລາວ, "ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 9 (2021-2025)," ນະຄອນຫຼວງວຽງຈັນ, ມີນາ 2021.

71"ການສະເຫຼີມສະຫຼອງ ທົ່ງໄຫຫີນ ເປັນມໍລະດົກໂລກ ແຫ່ງທີ 3 ຂອງ ລາວ ຢ່າງເປັນທາງການ," ວາລະສານບູຮານຄະດີອາຊີຕາເວັນອອກ, 2 ທັນວາ 2022.

72 ອົງການ UNESCO, "ໄຫຫີນໃນ ແຂວງຊຽງຂວາງ - ທົ່ງໄຫຫີນ," 6 ກໍລະກົດ 2019

73 QLA ລາວ, "ສິ່ງທີ່ພວກເຮົາເຮັດ: ແຜນງານການດຳລົງຊີວິດ ແລະ ການພັດທະນາ," ບໍ່ມີວັນທີ.

74 ອົງການອະນາໄມໂລກ, "ຫ້ອງຂ່າວ: ຄວາມພິການ," 2 ທັນວາ 2022.

## 4.4. ດ້ານທຳມະຊາດ ແລະ ສິ່ງແວດລ້ອມ

ພາຍໃຕ້ຫົວຂໍ້ນີ້, ຜົນໄດ້ຮັບລວມມີວ່າ ການເກັບກູ້ ລບຕ ນັ້ນໄດ້ສົ່ງຜົນກະທົບຕໍ່ຄວາມສາມາດໃນການເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນຕ່າງໆເທົ່າໃດ ແລະ ຊາວກະສິກອນມີການນໍາໃຊ້ທີ່ດິນຄືແນວໃດ, ລວມໄປເຖິງບັນດາໂຕຊີ້ວັດ ກ່ຽວກັບຜົນກະທົບທາງສິ່ງແວດລ້ອມ.

### 4.4.1. ການເຂົ້າເຖິງ ແລະ ການນໍາໃຊ້ທີ່ດິນ

ໃນບັນດາຂົງເຂດທີ່ມີ ລບຕ ຕົກຄ້າງ, ປະຊາຊົນມັກຈະເຂົ້າເຖິງ ແລະ ໄດ້ນໍາໃຊ້ດິນກ່ອນມີການເກັບກູ້ລະເບີດ, ແຕ່ຕ້ອງໄດ້ມີການສ້າງກົນໄກຮັບມືຕ່າງໆຂຶ້ນ ເພື່ອໃຫ້ສາມາດເຮັດວຽກໃນດິນຕອນນັ້ນໄດ້, ທີ່ລວມມີການບໍ່ຂຸດຂຸມເລິກເກີນໄປ, ການດຳເນີນກິດຈະກຳອ້ອມຮອບເຂດທີ່ມີການຕົກຄ້າງ, ເອົາງ່າໄມ້ປັກເພື່ອໝາຍ ລບຕ ທີ່ພົບເຫັນ, ຫຼື ເຄື່ອນຍ້າຍ ລບຕ ດັ່ງກ່າວອອກໄປເອງ.

ໃນລະຫວ່າງການຄົ້ນຄວ້າ, ສິ່ງທີ່ຍາກແມ່ນການທຳຄວາມເຂົ້າໃຈເຖິງ ຄວາມປ່ຽນແປງຕ່າງໆທີ່ເກີດຂຶ້ນ ດ້ານເຕັກນິກກະສິກຳ ຫຼື ການນໍາໃຊ້ທີ່ດິນ, ຍ້ອນຊາວກະສິກອນມັກຈະມີແນວຄິດທີ່ແຕກຕ່າງກັນໄປ ກ່ຽວກັບວ່າຈະນໍາໃຊ້ເຕັກນິກໃດ ເພື່ອໃຫ້ສາມາດດຳເນີນການປູກຝັງໄດ້ຢ່າງປອດໄພ ໃນພື້ນທີ່ທີ່ມີ ລບຕ ຕົກຄ້າງຢູ່. ຜູ້ຕອບບົດສຳຫຼວດຄົນຕ່າງປະເທດທີ່ໄດ້ຮັບການສຳພາດ ໄດ້ສະທ້ອນໃຫ້ເຫັນວ່າໃນອະດີດຢູ່ເມືອງບົວລະພາ, ແຂວງຄຳມ່ວນ, ມີການດຳເນີນກິດຈະກຳປູກຝັງຢ່າງຈຳກັດ ເນື່ອງຈາກບັນຫາການຕົກຄ້າງຂອງ ລບຕ, ແຕ່ຫຼັງຈາກເກັບກູ້ລະເບີດແລ້ວ, ສັງເກດວ່າປະຊາຊົນ ຫັນມາໃຊ້ເວລາ ແລະ ຊັບພະຍາກອນເພີ່ມຂຶ້ນ ໃນການດຳເນີນກິດຈະກຳປູກຝັງເທິງດິນຂອງຕົນ. ຍ້ອນການຄົ້ນຄວ້ານີ້ ບໍ່ແມ່ນການຄົ້ນຄວ້າທີ່ກວມໄລຍະເວລາຍາວນານ, ຈຶ່ງເຮັດໃຫ້ເກີດຂໍ້ຫຍຸ້ງຍາກ ໃນການປະເມີນຄວາມປ່ຽນແປງທີ່ເກີດຂຶ້ນຕະຫຼອດຊ່ວງເວລາທີ່ຜ່ານມາ, ແລະ ດັ່ງນັ້ນ, ທາງເລືອກດຽວກໍ່ຄື ຕ້ອງໄດ້ອາໄສຄວາມຈື່ຈຳຂອງຜູ້ຕອບບົດສຳຫຼວດເອງ ໃນການທຳຄວາມເຂົ້າໃຈເຖິງການປ່ຽນແປງດ້ານການນໍາໃຊ້ທີ່ດິນ ນັບຕັ້ງແຕ່ກ່ອນການເກັບກູ້ເປັນຕົ້ນມາ.

ການເກັບກູ້ ລບຕ ສາມາດຊ່ວຍເພີ່ມຈຳນວນທີ່ດິນ ທີ່ຄົວເຮືອນຈະສາມາດນໍາໃຊ້ໄດ້, ແລະ ແນ່ນອນວ່າຊາວກະສິກອນ ແມ່ນບໍ່ກ້າບຸກເບີກທີ່ດິນ ທີ່ພວກເຂົາບໍ່ເຄີຍນໍາໃຊ້ມາກ່ອນ ຖ້າມີການສົງໄສ ຫຼື ຮັບຮູ້ມາວ່າມີການຕົກຄ້າງຂອງ ລບຕ. ລູກບ້ານຍັງໄດ້ລາຍງານວ່າ ພວກເຂົາບໍ່ມັກນໍາໃຊ້ການເຜົາເພື່ອບຸກເບີກທີ່ດິນ, ຍ້ອນສິ່ງນີ້ອາດເຮັດໃຫ້ເກີດການລະເບີດຂຶ້ນໄດ້. ໃນບ້ານຍອດພຽງ, ລູກບ້ານມີດິນປູກຊາຂອງພວກເຂົາໄດ້ຮັບການເກັບກູ້ໂດຍ ຄກລ ໃນປີ 2021. ພວກເຂົາໄດ້ລາຍງານວ່າຢາກເສີມຂະຫຍາຍດິນປູກຊາດັ່ງກ່າວອອກຕື່ມອີກ ແລະ ດັ່ງນັ້ນຈຶ່ງອາດຈຳເປັນຕ້ອງໄດ້ມີການເກັບກູ້ ລບຕ ຕື່ມອີກ, ເຖິງແມ່ນວ່າຈະມີ 5 ຄອບຄົວທີ່ໄດ້ດຳເນີນການ ເສີມຂະຫຍາຍທີ່ດິນຂອງພວກເຂົາໄປແລ້ວ ໂດຍປາສະຈາກການເກັບກູ້ ລບຕ ກໍ່ຕາມ. ໃນບ້ານນາເຜິ້ງ, ຊາວກະສິກອນຜູ້ໜຶ່ງໄດ້ກ່າວວ່າ ລາວຢາກເສີມຂະຫຍາຍທີ່ດິນຂອງຕົນ. ລາວມີດິນ 1.2 ເຮັກຕ້າ, ແຕ່ດຳເນີນການປູກຝັງໄດ້ພຽງແຕ່ເຮັກຕ້າດຽວ. ຍ້ອນຕອນລາວລິເລີ່ມເກັບກູ້ຜືດຜັກອອກຈາກທີ່ດິນ 0.2 ເຮັກຕ້າທີ່ເຫຼືອນັ້ນ, ລາວໄດ້ພົບເຫັນ ລບຕ 1 ລູກ, ລາວຈຶ່ງໄດ້ຢຸດນໍາໃຊ້ດິນຕອນດັ່ງກ່າວ. ລາວກ່າວວ່າລາວບໍ່ຢາກນໍາໃຊ້ທີ່ດິນຕອນດັ່ງກ່າວ ໃນຂະນະທີ່ຍັງມີ ລບຕ ຕົກຄ້າງຢູ່, ແຕ່ຫຼັງຈາກເກັບກູ້ແລ້ວ, ລາວກໍ່ຈະນໍາເອົາລົດໄຖ ເຂົ້າໄປໄຖຝຸ່ມໄມ້ອອກຕື່ມ.

ດັ່ງທີ່ໄດ້ໂອ້ລົມກັນໄວ້ໃນພາກທີ່ຜ່ານມາ, ໃນບາງກໍລະນີ, ລູກບ້ານໄດ້ມີການລາຍງານວ່າ ພວກເຂົາປ່ຽນໄປປູກພືດແນວໃໝ່ ເທິງດິນທີ່ໄດ້ຮັບການເກັບກູ້ແລ້ວ. ດັ່ງທີ່ກ່າວມາແລ້ວນັ້ນ, ການເລືອກແນວພັນພືດມາປູກ ແມ່ນອີງໃສ່ປັດໄຈຕ່າງໆທີ່ກ່ຽວຂ້ອງກັບລາຄາຕະຫຼາດ ແລະ ການສະໜັບສະໜູນນອກຂະແໜງການກະສິກຳ ຫຼາຍກວ່າການເກັບກູ້ ລບຕ ອອກຈາກທີ່ດິນ. ຍົກຕົວຢ່າງ, ຄອບຄົວໜຶ່ງໃນ ບ້ານໂພນແພງ ໃນ ເມືອງຄຳເກີດ ໄດ້ກ່າວວ່າ ພວກເຂົາໄດ້ລ້ຽງງົວເທິງດິນທີ່ຢູ່ໃກ້ກັບນາປູກເຂົ້າຂອງຕົນ, ແຕ່ທັນທີທີ່ດິນດັ່ງກ່າວໄດ້ຮັບການເກັບກູ້ ລບຕ ແລ້ວ, ພວກເຂົາກໍ່ໄດ້ຈ້າງລົດໄຖເຂົ້າມາໄຖ ແລະ ພວນດິນເພື່ອກຽມປູກມັນຕົ້ນ. ພວກເຂົາກ່າວວ່າຮູ້ສຶກໝັ້ນໃຈຫຼາຍຂຶ້ນ ໃນການບຸກເບີກ ແລະ ພວນດິນຫຼັງການເກັບກູ້ລະເບີດແລ້ວ, ແລະ ເຫດຜົນທີ່ບໍ່ລ້ຽງງົວຕໍ່ນັ້ນ, ແມ່ນຍ້ອນດິນດັ່ງກ່າວມີຂະໜາດນ້ອຍ ເຊິ່ງບໍ່ເໝາະກັບການລ້ຽງສັດ, ແຕ່ເໝາະກັບການປູກມັນຕົ້ນໄວ້ຂາຍຫຼາຍກວ່າ.

### 4.4.2. ຄວາມປ່ຽນແປງດ້ານຫຼັກການປູກຝັງ

ຄວາມປ່ຽນແປງດ້ານຫຼັກການປູກຝັງ ແມ່ນສາມາດເຫັນໄດ້ຊັດເຈນໃນຫຼາຍໆບ້ານ ທີ່ໄດ້ໄປຢ້ຽມຢາມມາ, ເຖິງແມ່ນວ່າຄວາມປ່ຽນແປງເຫຼົ່ານີ້ ອາດບໍ່ໄດ້ເກີດຂຶ້ນຍ້ອນວ່າມີການເກັບກູ້ ລບຕ ຈາກທີ່ດິນໃນບ້ານດັ່ງກ່າວກໍ່ຕາມ. ກົນໄກການປູກຝັງທີ່ເພີ່ມຂຶ້ນ, ແນວພັນເຂົ້າໃໝ່ໆ, ການປູກພືດເສດຖະກິດ ແລະ ການລ້ຽງສັດທີ່ເພີ່ມຂຶ້ນ ລວມໄປເຖິງການກະກຽມເດີ່ນຫຍ້າທີ່ລ້ອມຮົ້ວໄວ້ ແມ່ນບາງຄວາມປ່ຽນແປງທີ່ສັງເກດເຫັນໄດ້ ແລະ ໄດ້ຮັບການລາຍງານໂດຍຜູ້ຕອບບົດສຳຫຼວດ. ເຖິງແມ່ນວ່າການເກັບກູ້ ລບຕ ອອກຈາກທີ່ດິນ ຈະສາມາດຊ່ວຍຍົກສູງຄວາມເຊື່ອໝັ້ນໄດ້ກໍ່ຕາມ, ແຕ່ກໍ່ຍັງຄົງມີຄວາມກັງວົນໃຈ ກ່ຽວກັບຄວາມເລິກຂອງການເກັບກູ້ ລບຕ ຢູ່ດີ.



*ການເກັບກ່ຽວເຂົ້າຢູ່ ບ້ານລາດບວກ, ເມືອງແປກ*

ລູກບ້ານບາງຄົນໄດ້ລາຍງານວ່າ ພວກເຂົາໄດ້ມີການປັບປ່ຽນເຕັກນິກການປູກຝັງຂອງຕົນ ຫຼັງການເກັບກູ້ລະເບີດ, ເຖິງແມ່ນວ່າຈະເປັນການປັບປ່ຽນແບບເລັກນ້ອຍກໍ່ຕາມ. ກ່ອນການເກັບກູ້ ລບຕ, ປະຊາຊົນມັກເວົ້າວ່າ ພວກເຂົາຕ້ອງໄດ້ເຮັດວຽກຢ່າງຊ້າໆ ແລະ ລະມັດລະວັງ, ຫຼື ຕ້ອງໄດ້ເບົາມືໃນເວລາຂຸດຂຸມ. ຫຼັງຈາກການເກັບກູ້ແລ້ວ, ປະຊາຊົນໄດ້ລາຍງານວ່າ ພວກເຂົາຮູ້ສຶກໝັ້ນໃຈຫຼາຍຂຶ້ນ ໃນການຂຸດຂຸມ ແລະ ພວນດິນເພື່ອເປັນການປັບປຸງຄຸນນະພາບຂອງດິນ.

ລູກບ້ານຫຼາຍຄົນໃນ ແຂວງຊຽງຂວາງ ແລະ ບໍລິຄໍາໄຊ ແມ່ນນໍາໃຊ້ລົດໄຖນາເດີນຕາມ ເພື່ອກະກຽມດິນປູກຝັງຂອງຕົນ, ສ່ວນບາງຄົນກໍ່ນໍາໃຊ້ (ສ່ວນໃຫຍ່ເຊົ່າ) ລົດໄຟນາຂະໜາດໃຫຍ່. ເຖິງຢ່າງໃດກໍ່ຕາມ, ພວກເຮົາບໍ່ເຫັນເຖິງຄວາມເຊື່ອມໂຍງທີ່ຊັດເຈນ ລະຫວ່າງການລົງທຶນ ແລະ ການນໍາໃຊ້ເຄື່ອງຈັກກະສິກໍາທີ່ເພີ່ມຂຶ້ນ ກັບການເກັບກູ້ ລບຕ ຈາກດິນປູກຝັງ, ຍ້ອນວ່າປະຊາຊົນ ກໍ່ມີການນໍາໃຊ້ລົດໄຖນາຢູ່ແລ້ວ ບໍ່ວ່າຈະຢູ່ໃນທີ່ດິນກ່ອນການເກັບກູ້ ລບຕ ລວມໄປເຖິງທີ່ດິນທີ່ມີການເກັບກູ້ໄປແລ້ວກໍ່ຕາມ.

ຊາວກະສິກອນໄດ້ລາຍງານວ່າ ການນໍາໃຊ້ເຄື່ອງຈັກໄດ້ຊ່ວຍໃຫ້ພວກເຂົາສາມາດ ດໍາເນີນການພວນດິນໄດ້ໄວຂຶ້ນ ທັງຍັງຊ່ວຍໃຫ້ສາມາດປັບປຸງຄຸນນະພາບຂອງດິນໄດ້ນໍາອີກ ຍ້ອນການພວນດິນຊ່ວຍໃຫ້ຮັກສາຄວາມຊຸ່ມ ແລະ ອາກາດໃນດິນໄວ້, ທີ່ຈະຊ່ວຍໃຫ້ພືດທີ່ປູກໃນດິນນີ້ ສາມາດງອກເງີຍ ແລະ ເຕີບໃຫຍ່ໄດ້ດີຂຶ້ນ. ປະຊາຊົນໄດ້ກ່າວວ່າ ລົດໄຖນາເດີນຕາມນີ້ ແມ່ນມີປະໂຫຍດຫຼາຍ ຍ້ອນຍັງສາມາດນໍາໃຊ້ຂົນສິ່ງຄົນ, ພືດ ແລະ ຜົນຜະລິດໄດ້ນໍາອີກ.

ມີຫຼາຍມຸມມອງປົນເປກັນໄປ ກ່ຽວກັບຄວາມສ່ຽງຂອງການນໍາໃຊ້ລົດໄຖນາ ໃນທີ່ດິນທີ່ມີ ລບຕ ຕົກຄ້າງຢູ່. ຜູ້ຕອບບົດສໍາຫຼວດບາງຄົນກ່າວວ່າ ພວກເຂົາຮູ້ສຶກວ່າລົດໄຖນາອາດເກີດຄວາມເສຍຫາຍໄດ້ຖ້າຖືກ ລບຕ ແຕກໃສ່. ຜູ້ຕອບບົດສໍາຫຼວດຄົນອື່ນໆກ່າວວ່າ ພວກເຂົາຮູ້ສຶກວ່າການນໍາໃຊ້ລົດໄຖນາ ແມ່ນມີຄວາມປອດໄພກວ່າການກະກຽມດິນປູກຝັງດ້ວຍມື ຍ້ອນພວກເຂົາບໍ່ຈໍາເປັນຕ້ອງໄດ້ຂຸດດິນດ້ວຍສຽມ, ແຕ່ໃຊ້ລົດໄຖໄຖດິນແທນ ແລະ ຍັງອາດຂຸດເອົາ ລບຕ ຂຶ້ນມາເທິງໜ້າດິນໃຫ້ເລີຍ ເພື່ອນໍາໄປກໍາຈັດຕໍ່ໄປ.

ເຖິງແມ່ນວ່າຈະມີການນໍາໃຊ້ລົດໄຖເປັນສ່ວນໃຫຍ່ກໍ່ຕາມ, ແຕ່ກໍ່ມີບາງວຽກໃນນາປູກເຂົ້າ, ເຊັ່ນ: ການຕັດຫຍ້າ ແລະ ການຂຸດຮ່ອງ ຫຼື ຄອງລະບາຍນໍ້າ, ທີ່ບໍ່ສາມາດໃຊ້ລົດໄຖເຮັດໄດ້, ແລະ ຕ້ອງເຮັດດ້ວຍມືເທົ່ານັ້ນ. ນີ້ແມ່ນບັນດາກິດຈະກໍາທີ່ປະຊາຊົນມັກເວົ້າວ່າ ພວກເຂົາຮູ້ສຶກບໍ່ປອດໄພທີ່ຈະຕ້ອງເຮັດໃນດິນທີ່ມີ ລບຕ ຕົກຄ້າງຢູ່, ແລະ ແນ່ນອນວ່າພວກເຂົາຈະຮູ້ສຶກໝັ້ນໃຈຂຶ້ນ ກໍ່ຕໍ່ເມື່ອດິນດັ່ງກ່າວໄດ້ຮັບການເກັບກູ້ແລ້ວ. ຊາວກະສິກອນບາງຄົນກໍ່ມີທີ່ດິນ ທີ່ປະກອບດ້ວຍດິນຕອນນ້ອຍໆທີ່ບໍ່ພຽງກັນ ແລະ ຕ້ອງໄດ້ດໍາເນີນວຽກງານກະກຽມດ້ວຍມືເທົ່ານັ້ນ.

ໜ່ວຍງານເສີມຂະຫຍາຍການກະສິກໍາ ແລະ ອົງການພັດທະນາຕ່າງໆ ລ້ວນແລ້ວແຕ່ສົ່ງເສີມໃຫ້ມີການດໍາເນີນວຽກງານຕ່າງໆຢ່າງປອດໄພ. ພະນັກງານປະຈໍາ ເມືອງຄໍາ ກ່າວວ່າໃນຂະນະທີ່ຕ້ອງສົ່ງເສີມໃຫ້ລູກບ້ານ ດໍາເນີນການປູກຝັງ ແລະ ທົດລອງເຕັກນິກກະສິກໍາໃໝ່ໆ ແລະ ປູກແນວພັນໃໝ່ໆນັ້ນ, ກໍ່ຕ້ອງຮັບປະກັນບໍ່ໃຫ້ມີ ລບຕ ມາກີດຂວາງພວກເຂົານໍາອີກ.

### 4.4.3. ຄວາມເລິກຂອງການເກັບກູ້

ເຖິງແມ່ນວ່າຈະມີລູກບ້ານລາຍງານວ່າ ພວກເຂົາຮູ້ສຶກປອດໄພຂຶ້ນຫຼັງການເກັບກູ້ແລ້ວກໍ່ຕາມ, ແຕ່ຫຼາຍບ້ານກໍ່ຍັງມີຄວາມກັງວົນໃຈ ກ່ຽວກັບຄວາມເລິກຂອງການເກັບກູ້ ແລະ ທີ່ດິນຕອນນັ້ນແມ່ນມີຄວາມປອດໄພ ແລະ ສາມາດນໍາໃຊ້ໄດ້ໃນທຸກຈຸດປະສົງ ຫຼື ບໍ່, ເຊັ່ນ: ສ້າງເຮືອນ, ຂຸດໜອງ ຫຼື ຮ່ອງລະບາຍນໍ້າເຂົ້ານາ, ຫຼື ປູກພືດບາງຊະນິດ ທີ່ຈໍາເປັນຕ້ອງໄດ້ຂຸດຂຸມເລິກ, ຍົກຕົວຢ່າງ, ຊາ, ສາລີ, ແລະ ມັນຕົ້ນ.

ມາດຕະຖານການເກັບກູ້ ລບຕ ແຫ່ງຊາດລາວ, ໝວດທີ 7, ໄດ້ກ່າວວ່າ ຄວາມເລິກຂອງການເກັບກູ້ລະເບີດນັ້ນ ຈະຕ້ອງຖືກກໍານົດໃຫ້ແທດເໝາະກັບຈຸດປະສົງຂອງການນໍາໃຊ້ທີ່ດິນ ແລະ ປະເພດຂອງ ລບຕ ທີ່ມີໂອກາດຄົ້ນພົບ. ຄວາມເລິກມາດຕະຖານໃນປັດຈຸບັນແມ່ນ 25 ຊມ, ໂດຍອີງໃສ່ຈຸດປະສົງການນໍາໃຊ້ທີ່ດິນທົ່ວໄປ, ເຊັ່ນ: ການປູກເຂົ້າ.

ລູກບ້ານໄດ້ກ່າວວ່າ ມີພືດບາງຊະນິດທີ່ພວກເຂົາປູກນັ້ນ ຈໍາເປັນຕ້ອງໄດ້ຂຸດຂຸມເລິກກວ່າການປູກເຂົ້າ - ພືດດັ່ງກ່າວປະກອບມີ: ມັນຕົ້ນ, ຊາ ແລະ ສາລີ. ໃນບ້ານຍອດພຽງ, ຊາວກະສິກອນໄດ້ກ່າວວ່າພວກເຂົາ ຂຸດຂຸມເລິກ 15 ຊມ ສໍາລັບການປູກເຂົ້າ, ແຕ່ຕ້ອງຂຸດເລິກກ່ວານັ້ນ ເພື່ອປູກ

ຊາ, ເລິກຮອດ 25 ຊມ. ເມື່ອມີການນໍາໃຊ້ລົດໄຖນາຫຼາຍຂຶ້ນ, ຊາວກະສິກອນແມ່ນຕ້ອງການໃຫ້ນາຂອງພວກເຂົາແຫ້ງກ່ອນ ຈຶ່ງສາມາດກະກຽມ ແລະ ພວນດິນໄດ້, ແລະ ດັ່ງນັ້ນຈຶ່ງຕ້ອງໄດ້ຂຸດຮ່ອງ ເພື່ອລະບາຍນໍ້າອອກຈາກນາ, ເຊິ່ງການຂຸດຮ່ອງນັ້ນ ກໍ່ເປັນອີກໜຶ່ງຂໍ້ກັງວົນໃຈ ທີ່ກ່ຽວຂ້ອງກັບ ລບຕ. ລູກບ້ານຢູ່ ບ້ານນາເຜິ້ງ ແລະ ບ້ານລາດບອກ ໄດ້ກ່າວວ່າພວກເຂົາມີຄວາມກັງວົນໃຈ ກ່ຽວກັບການຂຸດຂຸມຢູ່ດິນນາ ເພື່ອຊອກຫານົກ ແລະ ປູ ເພາະຢ້ານຂຸດເຈີ ລບຕ ທີ່ຝັງຢູ່ເລິກລົງໄປ. ໃນຊ່ວງລະດູແລ້ງ, ນົກສາມາດນໍາໄປຂາຍໄດ້ໃນລາຄາ 100 ລ້ານກີບຕໍ່ກິໂລ (ປະມານ 5,700 ໂດລາ).

ເມື່ອມີການລ້ຽງສັດ ແລະ ການອ້ອມຮົ້ວເດີ່ນຫຍ້າຫຼາຍຂຶ້ນ, ຊາວກະສິກອນສ່ວນໜຶ່ງກໍ່ມີຄວາມກັງວົນໃຈກ່ຽວກັບ ການຂຸດຂຸມຝັງເສົາຮົ້ວ. ນີ້ແມ່ນບັນຫາໜ້າກັງວົນໃຈສະເພາະໃນ ແຂວງຊຽງຂວາງ ບ່ອນທີ່ມີປັດໄຈຊຸກຍູ້ໃຫ້ເກີດການລ້ຽງຄວາຍ, ງົວ ແລະ ມ້າຫຼາຍຂຶ້ນ ເພື່ອສົ່ງອອກໄປຍັງ ຈີນ ແລະ ຫວຽດນາມ. ໃນບາງກໍລະນີ, ປະຊາຊົນໄດ້ກ່າວວ່າ ພວກເຂົາຕ້ອງການຢາກສ້າງເຮືອນເທິງດິນນາເກົ່າ, ແຕ່ກັງວົນໃຈວ່າຈະສາມາດຂຸດຂຸມຝັງເສົາເຂັມໄດ້ ຫຼື ບໍ່.

### 4.4.4. ຄວາມປ່ຽນແປງດ້ານສິ່ງແວດລ້ອມ

ບໍ່ມີຄວາມປ່ຽນແປງດ້ານສິ່ງແວດລ້ອມໃດໆ ເກີດຂຶ້ນຈາກການເກັບກູ້ ລບຕ, ເຖິງແມ່ນວ່າໃນບາງບ້ານ ຈະສັງເກດເຫັນເຖິງຄວາມປ່ຽນແປງຕໍ່ລະດູການ ອັນສົ່ງຜົນກະທົບຕໍ່ກໍາລັງການຜະລິດກະສິກໍາກໍ່ຕາມ. ມີປັດໄຈບາງອັນຊີ້ໃຫ້ເຫັນວ່າ ການເກັບກູ້ ລບຕ ຈາກທີ່ດິນນັ້ນ ອາດພາໃຫ້ມີການບຸກລຸກພື້ນທີ່ປ່າຫຼາຍຂຶ້ນ ເນື່ອງຈາກປະຊາຊົນພະຍາຍາມເສີມຂະຫຍາຍດິນປູກຝັງຂອງຕົນ ເພື່ອປູກພືດເສດຖະກິດຕື່ມອີກ. ໂດຍສະເພາະການເກັບກູ້ທີ່ດິນເພື່ອປູກມັນຕົ້ນ, ມີບາງກໍລະນີພົບເຫັນການບຸກລຸກພື້ນທີ່ປ່າ ເພື່ອເສີມຂະຫຍາຍທີ່ດິນປູກຝັງໃຫ້ແກ່ພືດດັ່ງກ່າວ, ເຖິງແມ່ນວ່າຈະຍັງບໍ່ທັນມີຂໍ້ສະຫຼຸບທີ່ຊັດເຈນ ວ່າການເກັບກູ້ ລບຕ ປະກອບສ່ວນຕໍ່ການບຸກລຸກພື້ນທີ່ປ່າ ຫຼື ບໍ່ກໍ່ຕາມ. ໃນເມືອງຄໍາເກີດ, ພະແນກກະສິກໍາ ໄດ້ກ່າວວ່າພວກເຂົາມີແຜນຢຸດເຊົາສົ່ງເສີມການປູກມັນຕົ້ນ ເນື່ອງຈາກວ່າການປູກພືດດັ່ງກ່າວ ເຮັດໃຫ້ດິນມີສະພາບເຊື່ອມໂຊມລົງ ແລະ ປະຊາຊົນມີການຕັດໄມ້ທໍາລາຍປ່າ ເພື່ອບຸກເບີກດິນປູກຝັງເພີ່ມຕື່ມ.

## 4.5. ດ້ານກາຍະພາບ

ໃນພາກນີ້, ພົບໄດ້ຮັບຕ່າງໆຊີ້ໃຫ້ເຫັນວ່າ ວຽກງານເກັບກູ້ ລບຕ ນັ້ນປະກອບສ່ວນຕໍ່ການປັບປຸງທຶນກາຍະພາບຄືແນວໃດ. ສິ່ງນີ້ປະກອບມີພື້ນຖານໂຄງລ່າງ ທີ່ຈໍາເປັນຕໍ່ການສະໜັບສະໜູນການດໍາລົງຊີວິດ, ລວມທັງການກໍ່ສ້າງ ຫຼື ການບູລະນະຮັກສາຫົນທາງ, ການເຂົ້າເຖິງຕະຫຼາດ, ແລະ ການສະໜອງນໍ້າ. ການຂາດຄວາມເຊື່ອມໂຍງກັນລະຫວ່າງ ຂະບວນການວາງແຜນການລົງທຶນພາກລັດ, ໂຄງການພັດທະນາ ແລະ ວຽກງານເກັບກູ້ ລບຕ ກໍ່ຈະຖືກເວົ້າເຖິງເຊັ່ນດຽວກັນ.

### 4.5.1. ຖະໜົນ ແລະ ພື້ນຖານໂຄງລ່າງ

ລູກບ້ານຫຼາຍຄົນໄດ້ເວົ້າເຖິງປະໂຫຍດທີ່ໄດ້ຮັບ ຈາກພື້ນຖານໂຄງລ່າງດ້ານຖະໜົນພາຍໃນບ້ານ ທີ່ໄດ້ຮັບການປັບປຸງດີຂຶ້ນ, ທັງຖະໜົນສາຍຫຼັກ ແລະ ຖະໜົນເຂົ້າເຖິງດິນນາ ລວມໄປເຖິງສະຖານທີ່ທ່ອງທ່ຽວຕ່າງໆ. ຖະໜົນຕ່າງໆລ້ວນແລ້ວແຕ່ໄດ້ຮັບການປູໜ້າທາງ ໂດຍຖະໜົນສາຍຫຼັກແມ່ນຖືກປູດ້ວຍຢາງໝາກຕອຍ, ສ່ວນຖະໜົນສາຍຮອງແມ່ນຖືກປູໜ້າທາງດ້ວຍຫີນຂົບ. ໃນເມືອງແປກ, ອໍານາດການປົກຄອງຂັ້ນເມືອງ ໄດ້ຊີ້ໃຫ້ເຫັນວ່າບ້ານກວມ 99 ສ່ວນຮ້ອຍມີຖະໜົນເຂົ້າເຖິງ, ເຖິງແມ່ນວ່າລາວຈະບໍ່ຮູ້ວ່າ ໄດ້ມີການດໍາເນີນການເກັບກູ້ ລບຕ ອອກຈາກຖະໜົນດັ່ງກ່າວໄປແລ້ວ ໃນເວລາດໍາເນີນການບູລະນະຮັກສາ ຫຼື ບໍ່ກໍ່ຕາມ.

ໃນບ້ານແສນອຸດົມ, ຖະໜົນຫາ ເມືອງຄໍາເກີດ ແມ່ນໄດ້ຮັບການບູລະນະຄືນໃໝ່ໃນປີ 2014. ໃນເວລານັ້ນ, ໄດ້ມີການຄົ້ນພົບລູກບົ່ມຂະໜາດໃຫຍ່ທີ່ມີນໍ້າໜັກ 500 ປອນ ແລະ ຕ້ອງໄດ້ຖືກກໍາຈັດເພື່ອໃຫ້ສາມາດສ້າງຖະໜົນໄດ້. ໃນປັດຈຸບັນ, ຖະໜົນດັ່ງກ່າວຖືເປັນເສັ້ນທາງການຄ້າທີ່ສໍາຄັນ, ທີ່ເຊື່ອມຈອດບ້ານດັ່ງກ່າວກັບ ເມືອງຄໍາເກີດ, ຊາຍແດນ ຫວຽດນາມ ແລະ ແຂວງຄໍາມ່ວນ ເຂົ້າກັນ. ມີການລາຍງານວ່າໄດ້ມີການດໍາເນີນວຽກງານເກັບກູ້ ລບຕ ຢູ່ ບ້ານຊ້າງ ນໍາອີກ, ເພື່ອສະໜັບສະໜູນການປັບປຸງ ເສັ້ນທາງເຂົ້າຫາບ້ານດັ່ງກ່າວ ແລະ ສະຖານທີ່ທ່ອງທ່ຽວຕ່າງໆ, ເຊັ່ນ: ທົ່ງໄຫຫີນ ແລະ ບໍ່ນໍ້າຮ້ອນ.

### 4.5.2. ຕະຫຼາດ

ໃນບ້ານລາດບອກ, ອໍານາດການປົກຄອງບ້ານ ໄດ້ຮຽກຮ້ອງໃຫ້ມີການເກັບກູ້ ລບຕ ອອກຈາກເຂດຕະຫຼາດ. ເຖິງແມ່ນວ່າຕະຫຼາດຈະເປີດແຕ່ສອງມື້ຕໍ່ອາທິດກໍ່ຕາມ, ແຕ່ໃນມື້ຕະຫຼາດເປີດ, ຈະມີລູກບ້ານ ແລະ ພໍ່ຄ້າແມ່ຄ້າມາໂຮມໂຕກັນໜາແໜ້ນ. ການເກັບກູ້ລະເບີດອອກຈາກພື້ນທີ່ຕະຫຼາດ ຈຶ່ງຖືເປັນວຽກງານທີ່ສໍາຄັນ ຍ້ອນເປັນຂົງເຂດທີ່ຕັ້ງຢູ່ໃຈກາງຂອງບ້ານ ແລະ ເປັນສະຖານທີ່ຮັບໃຊ້ປະຊາຊົນຈໍານວນຫຼາຍ.

### 4.5.3. ນ້ຳ ແລະ ຊົນລະປະທານ

ໃນບາງບ້ານ, ການເກັບກູ້ລະເບີດເພື່ອສ້າງຊົນລະປະທານ ໄດ້ກໍ່ໃຫ້ເກີດປະໂຫຍດຕໍ່ການຜະລິດກະສິກຳ, ລວມທັງຄວາມສາມາດໃນການຜະລິດເຂົ້ານາແຊງ. ໃນບາງຈຸດແມ່ນໄດ້ຮັບການເກັບກູ້ ລບຕ ກ່ອນທີ່ຈະຕິດຕັ້ງລະບົບນ້ຳລິນ, ເພື່ອຊ່ວຍໃຫ້ສະໜອງນ້ຳສະອາດໃຫ້ແກ່ບ້ານຕ່າງໆ, ເຊັ່ນ : ບ້ານຫີນ.

ໃນແຂວງຊຽງຂວາງ, ຄກລ ຈະດຳເນີນວຽກງານເກັບກູ້ ລບຕ ໃຫ້ແກ່ໂຄງການຂອງ ອົງການ IFAD ທີ່ມີຊື່ວ່າ: “ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ),” ທີ່ໄດ້ຮັບການສະໜັບສະໜູນດ້ານເງິນທຶນຈາກ IFAD, ທະນາຄານພັດທະນາອາຊີ ແລະ GIZ. ໂຄງການດັ່ງກ່າວແນໃສ່ສະໜອງແຜນງານຊົນລະປະທານ ອັນເປັນພາກສ່ວນໜຶ່ງຂອງໂຄງການຂະໜາດໃຫຍ່ ທີ່ເຊື່ອມໂຍງກັບຕະຫຼາດ ແລະ ການບໍລິການຕ່າງໆ.[75] ຄາດໝາຍວ່າການເກັບກູ້ ລບຕ ແມ່ນຈະຖືກລິເລີ່ມຂຶ້ນໃນເດືອນທັນວາ 2022.

### 4.5.4. ການກຳນົດແຜນການເກັບກູ້ ລບຕ ເພື່ອຈຸດປະສົງດ້ານພື້ນຖານໂຄງລ່າງ ແລະ ການພັດທະນາ

ເຖິງຈະມີການໂຮມເອົາແຜນງານດ້ານ ລບຕ ເຂົ້າໃນນະໂຍບາຍການພັດທະນາ ແລະ ປພຍ ແຫ່ງຊາດຂອງ ສປປ ລາວ ເພື່ອແກ້ໄຂຜົນກະທົບຂອງການຕົກຄ້າງຂອງ ລບຕ ແລ້ວກໍ່ຕາມ, ແຕ່ຍັງຄົງມີການໂຮມເອົາວຽກງານເກັບກູ້ ລບຕ ຢ່າງຈຳກັດ ເຂົ້າໃນແຜນງານການພັດທະນາຂັ້ນແຂວງ ແລະ ຂັ້ນເມືອງ ລວມໄປເຖິງແຜນງານການພັດທະນາຂອງອົງການຈັດຕັ້ງຕ່າງໆ. ໃນລະຫວ່າງການຄົ້ນຄວ້າ, ທີມງານໄດ້ດຳເນີນການສຳພາດພະແນກແຜນການ ແລະ ການລົງທຶນທັງຂັ້ນແຂວງ ແລະ ຂັ້ນເມືອງ, ລວມທັງພະແນກກະສິກຳ ແລະ ການພັດທະນາຊົນນະບົດ, ແລະ ພະແນກແຮງງານ ແລະ ສະຫວັດດີການສັງຄົມ. ຈາກການສຳພາດພົບວ່າ ເຖິງແມ່ນວ່າແຕ່ລະຂະແໜງການໃນຂັ້ນແຂວງ ແລະ ຂັ້ນເມືອງຈະມີຂັ້ນຕອນການວາງແຜນປະຈຳປີຂອງໃຜລາວກໍ່ຕາມ, ການກຳນົດແຜນເກັບກູ້ ລບຕ ແມ່ນຍັງບໍ່ທັນມີການເຊື່ອມໂຍງກັນຢ່າງເປັນລະບົບ, ແລະ ຖ້າມີຄວາມຕ້ອງການໃຫ້ດຳເນີນວຽກງານເກັບກູ້ ລບຕ, ຈະຕ້ອງໄດ້ດຳເນີນການຮຽກຮ້ອງໃນພາຍຫຼັງອີກ ແລະ ຕ້ອງໄດ້ເພີ່ມເຂົ້າໃນແຜນວຽກຂອງຜູ້ດຳເນີນການເກັບກູ້ ລບຕ ໃຫ້ເປັນ “ວຽກງານສຸກເສີນ.” ແຜນວຽກເກັບກູ້ ລບຕ ປະຈຳປີອາດສາມາດດັດແກ້ເປັນວຽກງານສຸກເສີນໄດ້, ແຕ່ສິ່ງນີ້ອາດກໍ່ໃຫ້ເກີດຄວາມລ່າຊ້າ ແລະ ອາດເຮັດໃຫ້ວຽກງານເກັບກູ້ ລບຕ ອື່ນໆຖືກລຶບອອກຈາກແຜນວຽກ.

ເຖິງຈະມີການເຮັດວຽກໃນຂົງເຂດທີ່ມີ ລບຕ ຕົກຄ້າງຢູ່ກໍ່ຕາມ, ອົງການພັດທະນາສາກົນ ແລະ ທ້ອງຖິ່ນຫຼາຍແຫ່ງ ຍັງບໍ່ທັນສາມາດກຳນົດແຜນເກັບກູ້ ລບຕ ໄດ້ເທື່ອ. ອົງການ LuxDev ໄດ້ແບ່ງປັນປະສົບການໃນການເຮັດວຽກຢູ່ ເມືອງບົວລະພາ ໃນ ແຂວງຄຳມ່ວນ. ໃນການດຳເນີນໂຄງການພັດທະນາຊຸມຊົນ ລວມທັງການກໍ່ສ້າງພື້ນຖານໂຄງລ່າງນີ້, ອົງການ LuxDev ບໍ່ໄດ້ຄຳນຶງເຖິງຄວາມຈຳເປັນໃນການເກັບກູ້ ລບຕ ກ່ອນຈະລິເລີ່ມໂຄງການ, ແລະ ວຽກງານການເກັບກູ້ນັ້ນ ຈະຕ້ອງໄດ້ຖືກລວມເຂົ້າພາຍໃນ ໃນຂະນະທີ່ໂຕງການກຳລັງຖືກດຳເນີນການຢູ່. ໃນເບື້ອງຕົ້ນ, ອົງການ LuxDev ອາໄສບໍລິສັດເອກະຊົນ ເປັນຜູ້ດຳເນີນການເກັບກູ້, ໂດຍນຳໃຊ້ງົບປະມານຈາກການປະມູນໂຄງການ. ຕໍ່ມາ, ພາຍຫຼັງຈັດຕັ້ງປະຕິບັດໂຄງການໄປໄລຍະໜຶ່ງແລ້ວ, ພວກເຂົາຈຶ່ງໄດ້ມີການຮ່ວມມືກັນກັບ ອົງການແມັກ ເພື່ອດຳເນີນວຽກງານເກັບກູ້, ໂດຍຕ້ອງໄດ້ຮັບປະກັນກ່ອນວ່າ ຈະມີງົບປະມານພຽງພໍ ຫຼື ບໍ່ໃນການດຳເນີນວຽກງານດັ່ງກ່າວ. ດ້ວຍການຮ່ວມມືໃນຄັ້ງນີ້, ພື້ນທີ່ຂອງໂຄງການກະສິກຳ ແລະ ພື້ນຖານໂຄງລ່າງ 32 ແຫ່ງທີ່ຖືກວາງແຜນໄວ້ ກໍ່ໄດ້ຮັບການເກັບກູ້ ລບຕ, ໂດຍມີຜູ້ໄດ້ຮັບຜົນປະໂຫຍດ 6,000 ຄົນ. ອົງການ LuxDev ໄດ້ຊີ້ໃຫ້ເຫັນວ່າ ການຮ່ວມມືກັບ ອົງການແມັກ ໄດ້ຊ່ວຍຍົກສູງປະສິດທິພາບ ໃຫ້ແກ່ຂັ້ນຕອນການເກັບກູ້ລະເບີດຢ່າງໃຫຍ່ຫຼວງ, ຊ່ວຍໃຫ້ພວກເຂົາມີສ່ວນຮ່ວມກັບຊຸມຊົນ ແລະ ມີຄວາມສາມາດໃນການປັບໂຕຕໍ່ການປ່ຽນແປງດ້ານການກຳນົດແຜນງານໄດ້ດີຂຶ້ນ.

ຜູ້ດຳເນີນວຽກງານເກັບກູ້ ລບຕ ໄດ້ຊີ້ໃຫ້ເຫັນວ່າ ການເຮັດວຽກຮ່ວມມືກັບອົງການພັດທະນາ ແມ່ນມີຄວາມທ້າທາຍຢູ່ສະເໝີ ເນື່ອງຈາກຂັ້ນຕອນການສ້າງ ບົດບັນທຶກຄວາມເຂົ້າໃຈ (MoU) ໃນປັດຈຸບັນ ທີ່ບໍ່ເອື້ອອຳນວຍໃຫ້ມີການກຳນົດແຜນວຽກຫຼາຍປີ ຫຼື ດຳເນີນໂຄງການແບບຮຸ້ນສ່ວນ. ດັ່ງນັ້ນ, ຈຶ່ງບໍ່ຄ່ອຍພົບເຫັນການຮ່ວມມືກັບອົງການພັດທະນາ, ເຖິງແມ່ນວ່າການສະໜັບສະໜູນດ້ານການພັດທະນາ ແລະ ການກະສິກຳພາຍຫຼັງການເກັບກູ້ລະເບີດນັ້ນ ອາດຊ່ວຍຍົກສູງຜົນກະທົບຈາກການເກັບກູ້ ລບຕ ແລະ ຜົນໄດ້ຮັບຈາກພັດທະນາໃຫ້ໄດ້ສູງສຸດກໍ່ຕາມ. ການສ້າງໂຮງຮຽນ, ວັດ, ຫໍປະຊຸມຂັ້ນບ້ານ ແລະ ສຸກສາລາຕ່າງໆ ເທິງດິນທີ່ໄດ້ຮັບການເກັບກູ້ ລບຕ ແລ້ວນັ້ນ ໄດ້ຊ່ວຍສະໜອງຜົນປະໂຫຍດອັນມີຄ່າ ໃຫ້ແກ່ຊຸມຊົນທ້ອງຖິ່ນດັ່ງທີ່ໄດ້ອະທິບາຍໄວ້ ໃນບົດລາຍງານສະບັບນີ້, ແລະ ການສ້າງຖະໜົນເຂົ້າບ້ານ ລວມໄປເຖິງພື້ນຖານໂຄງລ່າງອື່ນໆ, ເຊັ່ນ : ຫ້ອງນ້ຳ ຫຼື ນ້ຳສ້າງ ກໍ່ອາດຊ່ວຍສະໜອງຜົນປະໂຫຍດທາງບວກໃນລັກສະນະທີ່ຄ້າຍຄືກັນໄດ້. ການເສີມຂະຫຍາຍກະສິກຳ ໄດ້ຊ່ວຍສະໜັບສະໜູນຊາວກະສິກອນຢ່າງຊັດເຈນ ເພື່ອໃຫ້ສາມາດຍົກສູງການຜະລິດຂອງພວກເຂົາ ແລະ ການຖ່າຍທອດຄວາມຮູ້ດ້ານວຽກງານກະສິກຳ, ແລະ

ຖ້າມີການຈັດຕັ້ງປະຕິບັດໃນຊຸມຊົນທີ່ມີຄວາມທຸກຍາກ ໃນທີ່ດິນທີ່ໄດ້ຮັບການເກັບກູ້ ລບຕ ແລ້ວນັ້ນ, ກໍ່ຈະຊ່ວຍໃຫ້ສາມາດປັບປຸງຊີວິດການເ ປັນຢູ່ ແລະ ລາຍຮັບໃຫ້ແກ່ພວກເຂົາໄດ້ເຊັ່ນກັນ. ຈະມີການໂອ້ລົມລາຍລະອຽດຕື່ມໃນພາກຕໍ່ໄປ.

75 ອີງການ IFAD, "ການດໍາເນີນງານ: ປະເທດ: ລາວ: ໂຄງການ ແລະ ແຜນງານ," ບໍ່ມີວັນທີ.

# 5. ຍົກສູງຜົນໄດ້ຮັບຂອງການພັດທະນາໃຫ້ໄດ້ສູງສຸດ

ການຄົ້ນຄວ້າໄດ້ພົບວ່າ ເຖິງແມ່ນວ່າຊີວິດການເປັນຢູ່ຂອງປະຊາຊົນໃນບາງຈຸດ ຈະໄດ້ຮັບການປັບປຸງດີຂຶ້ນຢ່າງຊັດເຈນ ອັນເປັນຜົນມາຈາກ, ຫຼື ໄດ້ຮັບການເອື້ອອໍານວຍໂດຍ, ການເກັບກູ້ ລບຕ ກໍ່ຕາມ, ຍັງອາດສາມາດຍົກສູງ ຜົນຂອງການພັດທະນາທີ່ໄດ້ຮັບຈາກການເກັບກູ້ ລບຕ ຕື່ມອີກໄດ້ ໂດຍຜ່ານການສ້າງຄວາມເຂັ້ມແຂງໃຫ້ແກ່ ຂັ້ນຕອນການກໍານົດບຸລິມະສິດ, ໂດຍຜ່ານການປັບປຸງ ແລະ ການເຊື່ອມໂຍງຂັ້ນຕອນການວາງແຜນຕ່າງໆເຂົ້າກັນ, ໂດຍຜ່ານການລວມເອົາວຽກງານເກັບກູ້ ລບຕ ເຂົ້າໃນຂັ້ນຕອນການກໍານົດແຜນງານຂັ້ນແຂວງ ແລະ ຂັ້ນເມືອງ, ແລະ ໂດຍຜ່ານການຮັບປະກັນການສະໜັບສະໜຸນຫຼັງການເກັບກູ້ ໃຫ້ແກ່ຊຸມຊົນຕ່າງໆ. ຍ້ອນຜູ້ດໍາເນີນວຽກງານເກັບກູ້ ລບຕ ໄດ້ຫັນປ່ຽນຈາກ ການສໍາຫຼວດສິ່ງເສດເຫຼືອຈາກລະເບີດລູກຫວ່ານ ມາເປັນການເນັ້ນໜັກໃສ່ການເກັບກູ້ ລບຕ ໃນວົງກວ້າງໃນພື້ນທີ່ທີ່ຖືກກໍານົດເປັນ CHA ແທນ, ສິ່ງສໍາຄັນແມ່ນຕ້ອງໄດ້ເພີ່ມທະວີຄວາມພະຍາຍາມ ເພື່ອຍົກສູງຜົນໄດ້ຮັບຂອງການພັດທະນາຈາກວຽກງານເກັບກູ້ ລບຕ ໃຫ້ໄດ້ສູງທີ່ສຸດ. ລຸມນີ້ແມ່ນບາງຂໍ້ສັງເກດການໃນພື້ນທີ່ຕ່າງໆ ທີ່ຈະສາມາດເນັ້ນໜັກໃສ່ໄດ້ ເພື່ອປັບປຸງຜົນຂອງການພັດທະນາໂດຍລວມ.

### 5.1.1. ຮັບປະກັນຄວາມຊັດເຈນດ້ານການກໍານົດບຸລິມະສິດ

ໃນປັດຈຸບັນ, ຂັ້ນຕອນການກໍານົດບຸລິມະສິດ ເພື່ອໃຫ້ຮູ້ວ່າຈະດໍາເນີນການເກັບກູ້ດິນປູກຝັງໃນຕອນໃດກ່ອນ ຍັງຂາດຄວາມຊັດເຈນຕໍ່ລູກບ້ານ ແລະ ອໍານາດການປົກຄອງບ້ານ, ແລະ ລູກບ້ານມັກຈະເປັນຜູ້ໄດ້ຮັບຜົນປະໂຫຍດທາງອ້ອມ ຈາກການເກັບກູ້ ລບຕ. ສິ່ງນີ້ບໍ່ໄດ້ຊ່ວຍດຶງດູດໃຫ້ປະຊາຊົນເກີດຄວາມສົນໃຈ ຫຼື ຢາກມີສ່ວນຮ່ວມເຂົ້າໃນຂັ້ນຕອນດັ່ງກ່າວ, ແລະ ຍັງອາດຫຼຸດຜ່ອນຄວາມສາມາດຂອງປະຊາຊົນ ໃນການວາງແຜນນໍາໃຊ້ທີ່ດິນຂອງພວກເຂົາເອງ ແລະ ໃນການຕັດສິນໃຈໄດ້ຢ່າງຮັດກຸມ ກ່ຽວກັບການດໍາລົງຊີວິດ, ໂດຍສະເພາະໃນພື້ນທີ່ທີ່ມີ ລບຕ ຕົກຄ້າງຢູ່ຢ່າງໜາແໜ້ນ.

ຄຊກລ ໃນປັດຈຸບັນ ກໍາລັງຢູ່ໃນຂັ້ນຕອນດໍາເນີນວຽກງານ, ໂດຍໄດ້ຮັບການສະໜັບສະໜູນຈາກ Tetra Tech ແລະ ອົງການ UNDP, ເພື່ອພັດທະນາຂັ້ນຕອນການກໍານົດບຸລິມະສິດແຫ່ງຊາດ ທີ່ມີຄວາມຊັດເຈນ ແລະ ໂປ່ງໃສ, ທີ່ຈະຊ່ວຍໃຫ້ສາມາດກໍານົດບຸລິມະສິດໃຫ້ແກ່ CHA ທີ່ໄດ້ຮັບການລະບຸໄວ້ແລ້ວ ແລະ ຍັງຈະຊ່ວຍໃຫ້ສາມາດກໍານົດບຸລິມະສິດແກ່ CHA ທີ່ຖືກລະບຸໃໝ່ໄດ້ນໍາອີກ. ຂັ້ນຕອນການກໍານົດບຸລິມະສິດສໍາລັບວຽກງານເກັບກູ້ ລບຕ ນັ້ນ ຈະຕ້ອງຮັບປະກັນບໍ່ພຽງແຕ່ໃຫ້ມີການດໍາເນີນວຽກງານເກັບກູ້ລະເບີດ ໃນພື້ນທີ່ທີ່ມີການຕົກຄ້າງຂອງ ລບຕ ເທົ່ານັ້ນ, ແຕ່ຍັງຕ້ອງຊ່ວຍສະໜັບສະໜູນ ການພັດທະນາກະສິກໍາ ແລະ ເສດຖະກິດ-ສັງຄົມ ພາຍໃນຊຸມຊົນທີ່ໄດ້ຮັບຜົນກະທົບນໍາອີກ. ສິ່ງນີ້ອາດລວມມີການກໍານົດບຸລິມະສິດໃຫ້ແກ່ CHA ພາຍໃນ ຂົງເຂດສໍາຄັນເພື່ອການພັດທະນາ (FDA) ທີ່ກໍານົດໂດຍລັດຖະບານ, ເພື່ອສະໜັບສະໜູນບຸລິມະສິດຂອງລັດຖະບານ ໃນການໃຫ້ການສະໜັບສະໜູນຂົງເຂດເຫຼົ່ານີ້.

ທັນທີທີ່ພັດທະນາລະບົບການກໍານົດບຸລິມະສິດໃໝ່ສໍາເລັດແລ້ວ, ສິ່ງສໍາຄັນແມ່ນ ຄຊກລ ຕ້ອງຮັບປະກັນໃຫ້ອໍານາດການປົກຄອງບ້ານ, ເມືອງ ແລະ ແຂວງຮັບຮູ້ກ່ຽວກັບລະບົບດັ່ງກ່າວ ແລະ ເຂົ້າໃຈວ່າມັນກ່ຽວພັນກັບພວກເຂົາແນວໃດ ໃນແງ່ຂອງການລະບຸບຸລິມະສິດດ້ານການເກັບກູ້ ລບຕ ໃນພື້ນທີ່ CHA. ຄຊກລ ໄດ້ມີການດໍາເນີນວຽກງານໂຄສະນາບາງສ່ວນ ຮ່ວມກັບອໍານາດການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ ແລະ ຮ່ວມກັບບ້ານຕ່າງໆແລ້ວ, ໂດຍຜົນໄດ້ຮັບ ລວມທັງບົດຮຽນຈາກການເຄື່ອນໄຫວວຽກໂຄສະນານີ້ ແມ່ນໄດ້ຖືກບັນທຶກໄວ້ ແລະ ນໍາໃຊ້ເພື່ອສືບຕໍ່ສະໜັບສະໜູນວຽກງານໂຄສະນາ ແລະ ວຽກງານສົ່ງເສີມການມີສ່ວນຮ່ວມຄັ້ງຕໍ່ໄປໃນອະນາຄົດ.

### 5.1.2. ການສື່ສານດ້ານວຽກງານການເກັບກູ້ ແລະ ການສໍາຫຼວດ

ການປັບປຸງການສື່ສານໃນຂັ້ນບ້ານໃຫ້ດີຂຶ້ນ ກ່ຽວກັບຂັ້ນຕອນການເກັບກູ້ ແລະ ການສໍາຫຼວດ ແມ່ນວຽກງານທີ່ສໍາຄັນຫຼາຍ ເພື່ອຊ່ວຍໃຫ້ຄົວເຮືອນຕ່າງໆ ສາມາດວາງແຜນໄດ້ຢ່າງມີປະສິດທິພາບ ກ່ຽວກັບວິທີໃນການນໍາໃຊ້ທີ່ດິນຂອງຕົນ ແລະ ເພື່ອປ້ອງກັນບໍ່ໃຫ້ເກີດສະຖານະການທີ່ປະຊາຊົນ ບໍ່ມີການນໍາໃຊ້ທີ່ດິນ ຫຼື ຮູ້ສຶກກັງວົນໃຈເວລານໍາໃຊ້ທີ່ດິນ. ການສື່ສານທີ່ຊັດເຈນ, ລຽບງ່າຍ ແລະ ເປັນລະບົບຫຼາຍຂຶ້ນ ເພື່ອໃຫ້ຄົວເຮືອນຕ່າງໆໄດ້ຮັບການສໍາຫຼວດ ຫຼື ເກັບກູ້ລະເບີດອອກຈາກທີ່ດິນຂອງພວກເຂົາ ຈະຊ່ວຍຍົກສູງຄວາມເຂົ້າໃຈຕໍ່ຂັ້ນຕອນຕ່າງໆ ລວມໄປເຖິງຄວາມເຊື່ອໝັ້ນຕໍ່ທີ່ດິນທີ່ໄດ້ຮັບການເກັບກູ້ແລ້ວ. ການສະໜອງຄວາມຊັດເຈນ ກ່ຽວກັບຄວາມເລິກຂອງການເກັບກູ້ ແລະ ຕ້ອງໄດ້ດໍາເນີນວຽກງານໃດແດ່ເພື່ອຮັບປະກັນຄວາມປອດໄພ ໃນທີ່ດິນທີ່ໄດ້ຮັບການເກັບກູ້ແລ້ວນັ້ນ ກໍ່ຖືເປັນອີກໜຶ່ງສິ່ງທີ່ສໍາຄັນ. ອໍານາດການປົກຄອງບ້ານ ຈະຕ້ອງໄດ້ຮັບແຈ້ງຂໍ້ມູນ ກ່ຽວກັບທີ່ດິນພາຍໃນບ້ານຂອງຕົນທີ່ໄດ້ຮັບການສໍາຫຼວດ ແລະ ເກັບກູ້ລະເບີດແລ້ວ. ຄຊກລ ຈະຕ້ອງຮັບປະກັນໃຫ້ຜູ້ດໍາເນີນງານທຸກຝ່າຍ ມີລະບົບສົ່ງເສີມການມີສ່ວນຮ່ວມກັບຊຸມຊົນທີ່ມີປະສິດທິພາບ ເພື່ອໃຫ້ສາມາດສື່ສານກັບລູກບ້ານ, ທັງຜູ້ຊາຍ ແລະ ຜູ້ຍິງ, ໄດ້ຢ່າງພຽງພໍ ໃນບັນຫາທີ່ກ່ຽວຂ້ອງກັບວຽກງານເກັບກູ້ ລບຕ ທີ່ຖືກດໍາເນີນການໃນທີ່ດິນຂອງພວກເຂົາ.

ເອກະສານການເກັບກູ້ ຈະຕ້ອງຖືກສະໜອງໃຫ້ແກ່ທຸກຄົວເຮືອນ ທີ່ມີດິນໄດ້ຮັບການເກັບກູ້ແລ້ວ. ຕ້ອງພະຍາຍາມສື່ສານກັບຜູ້ໃຫຍ່ທຸກຄົນພາຍໃນຄົວເຮືອນ ບໍ່ແມ່ນແຕ່ສະເພາະຫົວໜ້າຄອບຄົວເທົ່ານັ້ນ ເພື່ອໃຫ້ສະມາຊິກຄົນອື່ນໆຮັບຮູ້ກ່ຽວກັບວຽກງານການເກັບກູ້ດັ່ງກ່າວ. ຂະແໜງການດັ່ງກ່າວອາດຕ້ອງໄດ້ພິຈາລະນາ ນໍາໃຊ້ໜ້າປົກເອກະສານທີ່ໃຊ້ພາສາລາວແບບລຽບງ່າຍ ອັນເປັນພາກສ່ວນໜຶ່ງຂອງເອກະສານການເກັບກູ້ທີ່ຈະສະໜອງໃຫ້ປະຊາຊົນ, ໂດຍໃຫ້ລວມເອົາຂໍ້ມູນທີ່ລູກບ້ານມີຄວາມຈໍາເປັນຕ້ອງຮູ້ເທົ່ານັ້ນ. ເຊັ່ນດຽວກັນ, ການໄດ້ຮັບຂໍ້ມູນກ່ຽວກັບ CHA ກໍ່ອາດເປັນປະໂຫຍດຕໍ່ລູກບ້ານ ເພື່ອໃຫ້ພວກເຂົາຮູ້ວ່າດິນຂອງພວກເຂົານັ້ນມີສ່ວນໃດແດ່ ທີ່ຖືກກໍານົດເປັນ CHA, ແລະ ພື້ນທີ່ທີ່ບໍ່ຖືກລວມເປັນ CHA ນັ້ນຍັງມີການຕົກຄ້າງຂອງ ລບຕ ຢູ່ ຫຼື ບໍ່, ແລະ ມັນມີຜົນສະທ້ອນຕໍ່ການປູກຝັງຄືແນວໃດ.

### 5.1.3. ການກໍານົດແຜນການເກັບກູ້ ລບຕ ຢ່າງຮອບດ້ານ

ຈໍານວນຂອງທີ່ດິນທີ່ໄດ້ຮັບການເກັບກູ້ໄປແລ້ວໃນປັດຈຸບັນ ເພື່ອຈຸດປະສົງໃນການດໍາເນີນໂຄງການພັດທະນາ ແມ່ນມີຂອບເຂດທີ່ຂ້ອນຂ້າງນ້ອຍ (20 ສ່ວນຮ້ອຍ), ແຕ່ຍັງອາດຂະຫຍາຍເພີ່ມໄດ້ອີກ ໂດຍຜ່ານການເຊື່ອມໂຍງເຂົ້າໃນຂັ້ນຕອນການວາງແຜນຂອງຂັ້ນເມືອງ ແລະ ຂັ້ນແຂວງ. ການດັດປັບແຜນການພັດທະນາຂັ້ນແຂວງ, ເມືອງ ແລະ ບ້ານໃຫ້ສອດຄ່ອງກັບ ແຜນການເກັບກູ້ ລບຕ ແມ່ນສິ່ງທີ່ສໍາຄັນ ເພື່ອໃຫ້ສາມາດຍົກສູງຜົນກະທົບຂອງການເກັບກູ້ ລບຕ ໃຫ້ໄດ້ສູງທີ່ສຸດ.

ໃນປັດຈຸບັນໃນຂັ້ນແຂວງ ແລະ ຂັ້ນເມືອງ, ເຖິງແມ່ນວ່າຈະມີຂັ້ນຕອນການວາງແຜນປະຈໍາປີທີ່ຂ້ອນຂ້າງລະອຽດ ໃນລະດັບຂະແໜງການທີ່ສະໜັບສະໜູນ ແຜນການພັດທະນາເສດຖະກິດ-ສັງຄົມໃນລະດັບຊາດ ຢູ່ແລ້ວກໍ່ຕາມ, ຍັງຄົງຂາດການໂຮມເອົາຂັ້ນຕອນການກໍານົດແຜນການເກັບກູ້ ລບຕ ຢູ່. ວຽກງານການເກັບກູ້ລະເບີດເພື່ອການພັດທະນາສ່ວນໃຫຍ່ ແມ່ນຕ້ອງໄດ້ຍື່ນຄໍາຮ້ອງຕ່າງຫາກໃນພາຍຫຼັງ ໃນເວລາທີ່ແຜນວຽກການເກັບກູ້ລະເບີດມີການຈັດຕັ້ງປະຕິບັດໄປແລ້ວ, ແລະ ດັ່ງນັ້ນວຽກງານການພັດທະນາເຫຼົ່ານີ້ ກໍ່ຈະຖືກລວມເຂົ້າໃນແຜນວຽກການເກັບກູ້ໃນຖານະຂອງ "ວຽກງານສຸກເສີນ." ຕ້ອງມີຂັ້ນຕອນການວາງແຜນ ທີ່ເອື້ອອໍານວຍໃຫ້ຂະແໜງການຕ່າງໆ ສາມາດພິຈາລະນາວຽກງານການເກັບກູ້ ລບຕ ໄດ້ກ່ອນທີ່ແຜນວຽກດັ່ງກ່າວຈະໄດ້ຮັບການຮັບຮອງ, ແລະ ເພື່ອຮັບປະກັນໃຫ້ມີງົບປະມານພຽງພໍ. ຂັ້ນຕອນການວາງແຜນຂັ້ນບ້ານເອງ ກໍ່ຈໍາເປັນຕ້ອງໄດ້ຮັບການສະໜັບສະໜູນ ເພື່ອໃຫ້ລວມມີຂັ້ນຕອນການພິຈາລະນາວຽກງານເກັບກູ້ ລບຕ ເຂົ້ານໍາ.

ຮ່າງຍຸດທະສາດ ເສັ້ນທາງກ້າວສູ່ຄວາມປອດໄພ III ໄດ້ຊີ້ໃຫ້ເຫັນວ່າ ມີການສະໜອງການຝຶກອົບຮົມ ເພື່ອສ້າງຄວາມເຂັ້ມແຂງດ້ານວຽກງານການຄຸ້ມຄອງ ລບຕ ໃຫ້ແກ່ອໍານາດການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອໃຫ້ສາມາດໂຮມເອົາວຽກງານ ລບຕ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງທັງ 15 ແຂວງ.[76] ນັບແຕ່ປີ 2019 ເປັນຕົ້ນມາໃນ ແຂວງຊຽງຂວາງ, ໄດ້ມີການຈັດຕັ້ງກອງປະຊຸມປະຈໍາປ. ຂຶ້ນໃນເດືອນກັນຍາເພື່ອໃຫ້ ຄຊກລ ແລະ ຄະນະກໍາມະການເກັບກູ້ ລບຕ ຂັ້ນແຂວງ ໄດ້ພົບປະກັບພະແນກຕ່າງໆໃນຂັ້ນແຂວງ ເພື່ອໂອ້ລົມກ່ຽວກັບບຸລິມະສິດດ້ານການພັດທະນາຕ່າງໆ ແລະ ຄວາມຈໍາເປັນໃນການດໍາເນີນວຽກງານເກັບກູ້ ລບຕ. ນີ້ເບິ່ງຄືວ່າແມ່ນລະບົບທີ່ດີ ທີ່ອາດເສີມຂະຫຍາຍຕື່ມ ແລະ ຮັບຮອງໃຫ້ມີການນໍາໃຊ້ໃນວົງກວ້າງ ເພື່ອຮັບປະກັນໃຫ້ວຽກງານເກັບກູ້ ລບຕ ຖືກລວມເຂົ້າໃນແຜນສິ່ງເສີມໂຄງການພັດທະນາ ແລະ ຮັບປະກັນໃຫ້ມີງົບປະມານພຽງພໍ ເພື່ອສະໜັບສະໜູນແຜນການດັ່ງກ່າວ.

ໂຄງການຍົກສູງຂີດຄວາມສາມາດທີ່ ຄຊກລ ວາງແຜນໄວ້ ເພື່ອສະໜັບສະໜູນຄະນະກໍາມະການເກັບກູ້ ລບຕ ຂັ້ນເມືອງ ກໍ່ອາດຊ່ວຍສະໜັບສະໜູນໃຫ້ເກີດຂັ້ນຕອນການວາງແຜນ ແລະ ການເຊື່ອມໂຍງກັບຂະແໜງການອື່ນໆໄດ້ດີຂຶ້ນ.

### 5.1.4. ການເຊື່ອມໂຍງກັບທຶນຊ່ວຍເຫຼືອເພື່ອການພັດທະນາ

ທີ່ປຶກສາເຊື່ອວ່າການເຊື່ອມໂຍງວຽກງານເກັບກູ້ ລບຕ ໂດຍສະເພາະກັບການສະໜັບສະໜູນດ້ານການພັດທະນາຫຼັງການເກັບກູ້ນັ້ນ ຈະຊ່ວຍໃຫ້ໄດ້ຮັບຜົນປະໂຫຍດສູງສຸດ ຈາກວຽກງານການເກັບກູ້ ລບຕ ແລະ ສະໜັບສະໜູນການຫຼຸດຜ່ອນຄວາມທຸກຍາກ ແລະ ການພັດທະນາເສດຖະກິດ-ສັງຄົມ. ໃນບັນດາບ້ານທີ່ໄດ້ໄປຢ້ຽມຢາມ, ໄດ້ພົບເຫັນການສະໜັບສະໜູນດ້ານການພັດທະນາຫຼັງການເກັບກູ້ ລບຕ ຕໍ່ທີ່ດິນປູກຝັງພຽງບາງກໍລະນີເທົ່ານັ້ນ, ເຖິງແມ່ນວ່າຊາວກະສິກອນ ທີ່ໄດ້ຮັບການສະໜັບສະໜູນດ້ານແນວພັນພືດ, ການຝຶກອົບຮົມ, ການສະໜອງແນວພັນເຂົ້າ ຫຼື ພືດເສດຖະກິດ, ແລະ ການຊ່ວຍເຫຼືອດ້ານກະສິກໍາອື່ນໆ ຈະສາມາດປັບປຸງການຜະລິດ ແລະ ສ້າງລາຍຮັບໃນຄົວເຮືອນໄດ້ສູງຂຶ້ນ ພ້ອມທັງຍົກສູງຄວາມທົນທານໂດຍລວມໄດ້ຕື່ມອີກຕໍ່ຕາມ. ການສ້າງໂຮງຮຽນ, ສຸກສາລາ ແລະ ພື້ນຖານໂຄງລ່າງອື່ນໆໃນຊຸມຊົນ ໄດ້ຊ່ວຍສະໜອງໂອກາດອັນໃໝ່ໃຫ້ແກ່ລູກບ້ານ ໃນດ້ານການເຂົ້າເຖິງບໍລິການ ແລະ ຂໍ້ມູນຂ່າວສານ. ຖ້າຂັ້ນຕອນການວາງແຜນຂອງຂັ້ນແຂວງ ແລະ ຂັ້ນເມືອງ ສາມາດເຊື່ອມໂຍງເຂົ້າກັບຂັ້ນຕອນການວາງແຜນວຽກງານເກັບກູ້ ລບຕ ໄດ້ດີຂຶ້ນ, ກໍ່ຈະຊ່ວຍໃຫ້ໄດ້ຮັບຜົນປະໂຫຍດຈາກວຽກງານດັ່ງກ່າວໄດ້ສູງສຸດ.

ນອກເໜືອຈາກການປັບປຸງການເຊື່ອມໂຍງວຽກງານເກັບກູ້ ລບຕ ເຂົ້າໃນຂັ້ນຕອນການວາງແຜນຂອງຂະແໜງການໃນຂັ້ນແຂວງ ແລະ ຂັ້ນເມືອງແລ້ວນັ້ນ, ສິ່ງສໍາຄັນຕໍ່ມາແມ່ນການສ້າງສາຍພົວພັນຮ່ວມມືທີ່ມີຄວາມເຂັ້ມແຂງ ລະຫວ່າງຈະແໜງການ ລບຕ ແລະ ອົງການພັດທະນາ ແລະ ບໍລິການເສີມຂະຫຍາຍຕ່າງໆ ທີ່ສາມາດຊ່ວຍສະໜອງການສະໜັບສະໜູນດ້ານການດໍາລົງຊີວິດ ເພື່ອຊ່ວຍໃຫ້ປະຊາຊົນສາມາດນໍາໃຊ້ທີ່ດິນ ທີ່ໄດ້

ຮັບການເກັບກູ້ໄດ້ດີທີ່ສຸດ. ສິ່ງນີ້ອາດຈຳເປັນຕ້ອງໄດ້ຮັບການສະໜັບສະໜູນຈາກອົງການພັດທະນາຕ່າງໆ ເພື່ອສ້າງຄວາມຕື່ນໂຕກ່ຽວກັບບັນຫາການຕົກຄ້າງຂອງ ລບຕ ແລະ ແຜນການເກັບກູ້ພື້ນທີ່ CHA. ໃນຈຸດທີ່ເປັນໄປໄດ້, ສາຍພົວພັນການຮ່ວມມືແບບເປັນທາງການ ຈະໄດ້ຮັບການສ້າງຕັ້ງຂຶ້ນຮ່ວມກັບຂະແໜງການໃນລະດັບຊາດ ແລະ ຂັ້ນແຂວງ ເພື່ອສົ່ງເສີມການສະໜັບສະໜູນໃນບັນດາເຂດ ທີ່ໄດ້ຮັບການເກັບກູ້ ລບຕ ແລ້ວ. ຖ້າເປັນໄປໄດ້, ຄວາມປ່ຽນແປງຕໍ່ຂັ້ນຕອນການສ້າງ MoU ຈະຕ້ອງໄດ້ຮັບການພິຈາລະນາ ເພື່ອຊ່ວຍໃຫ້ໜ່ວຍງານ ລບຕ ແລະ ຄູ່ຮ່ວມພັດທະນາ ສາມາດປະສານສົມທົບກັນໄດ້, ຍົກຕົວຢ່າງໂດຍຜ່ານໂຄງການຫຼາຍປີ ຫຼື ໂຄງການແບບຮຸ້ນສ່ວນ. ທີ່ຈຳເປັນຕ້ອງໄດ້ມີຂັ້ນຕອນການສ້າງ MoU ທີ່ຂ້ອນຂ້າງຍືດຢຸ່ນ.

ໃນຂະນະດຽວກັນ, ອາດມີວິທີທາງທີ່ງ່າຍດາຍກວ່ານີ້ ໃນການຍົກສູງຜົນປະໂຫຍດຈາກວຽກງານເກັບກູ້ ລບຕ ໃຫ້ໄດ້ສູງສຸດ, ເຊັ່ນ: ແນວທາງໃນການນຳໃຊ້ຄວາມຊຳນິຊຳນານຂອງອົງການຈັດຕັ້ງຕ່າງໆ ທີ່ເຮັດວຽກໃນບັນດາຂະແໜງການດຽວກັນ, ຫຼາຍກວ່າຈະນຳໃຊ້ແນວທາງທີ່ມີການເຊື່ອມໂຍງກັນຢ່າງຮອບດ້ານ.[77] ການປຶກສາຫາລືກັນຢ່າງຫ້າວຫັນຂຶ້ນຕື່ມ ກັບບັນດາພະແນກກະສິກຳຕ່າງໆ ມາດຊ່ວຍໃຫ້ສາມາດສົ່ງເສີມການສະໜັບສະໜູນດ້ານການກະສິກຳ ໃຫ້ແກ່ພື້ນທີ່ຕ່າງໆທີ່ໄດ້ຮັບການເກັບກູ້ ລບຕ ແລ້ວ. ຜູ້ດຳເນີນວຽກງານເກັບກູ້ ຍັງສາມາດດັດແກ້ແຜນວຽກຕ່າງໆ ເພື່ອຊ່ວຍໃຫ້ມີການດຳເນີນວຽກງານເກັບກູ້ ໃນທີ່ດິນເພື່ອການພັດທະນາໄດ້ເພີ່ມຂຶ້ນ. ຍົກຕົວຢ່າງ, ໃນປີ 2023, ຄກລ ຈະລວມເອົາໂຄງການພັດທະນາປະມານ 20 ເຮັກຕ້າ ທີ່ນອນຢູ່ນອກພື້ນທີ່ CHA ເຂົ້າໃນແຜນງານຂອງຕົນ ເພື່ອຊ່ວຍໃຫ້ມີການເກັບກູ້ລະເບີດອອກຈາກພື້ນທີ່ຊົນລະປະທານ, ພື້ນທີ່ການສະໜອງນ້ຳ, ສຸກສາລາ ຫຼື ຫ້ອງນ້ຳຂອງໂຮງຮຽນ.

76 ຄຊກລ, "ແຜນຍຸດທະສາດແຫ່ງຊາດສຳລັບຂະແໜງການ ລບຕ ໃນ ສປປ ລາວ 2021-2030: ເສັ້ນທາງກ້າວສູ່ຄວາມປອດໄພ III," ນະຄອນຫຼວງວຽງຈັນ, ມິຖຸນາ 2022, ຮ່າງສະບັບປແຜາສາອັງກິດ.

77 ນີ້ແມ່ນແນວທາງທີ່ກຳລັງຖືກນຳໃຊ້ໂດຍ ອົງການເພື່ອມະນຸດສະທຳ ແລະ ການຮ່ວມມື ປະຈຳ ແຂວງຫົວພັນ.

# 6. ພາກສະຫຼຸບ ແລະ ຂໍ້ແນະນຳ

ການສຳຫຼວດຄວາມຊັບຊ້ອນຂອງການດຳລົງຊີວິດ ໃນເຂດຊົນນະບົດຂອງ ສປປ ລາວ ເພື່ອໃຫ້ເຂົ້າໃຈວ່າວຽກງານເກັບກູ້ ລບຕ ມີການປະກອບສ່ວນແນວໃດຕໍ່ການພັດທະນາ ແລະ ການກະສິກຳນັ້ນ ແມ່ນວຽກງານທີ່ມີຄວາມທ້າທາຍ. ເຖິງຢ່າງໃດກໍ່ຕາມ, ໂດຍຜ່ານການສຳພາບແບບລົງເລິກ ແລະ ການສົນທະນາແບບກຸ່ມສະເພາະ, ການຄົ້ນຄວ້າຄັ້ງນີ້ໄດ້ພົບວ່າ ວຽກງານເກັບກູ້ ລບຕ ໄດ້ປະກອບສ່ວນຕໍ່ການປັບປຸງຊີວິດການເປັນຢູ່ໃຫ້ແກ່ປະຊາຊົນໃນຫຼາຍຂົງເຂດ.

ການເກັບກູ້ລະເບີດຊ່ວຍຫຼຸດຜ່ອນຄວາມສ່ຽງ ທີ່ປະຊາຊົນຕ້ອງພົບພໍ້ໃນຊີວິດປະຈຳວັນ ໂດຍສະເພາະຜູ້ທີ່ອາໄສຢູ່ໃນເຂດມີ ລບຕ ຕົກຄ້າງ. ການເກັບກູ້ທີ່ດິນເພື່ອຈຸດປະສົງໃນການສ້າງພື້ນຖານໂຄງລ່າງຊຸມຊົນ ໄດ້ຊ່ວຍໃຫ້ປະຊາຊົນສາມາດເຂົ້າເຖິງໂຮງຮຽນ ແລະ ສຸກສາລາໄດ້ດີຂຶ້ນ, ແລະໄດ້ສະໜອງໂອກາດໃຫ້ເກີດມີການພົວພັນກັນໃນຊຸມຊົນຫຼາຍຂຶ້ນ, ມີການແບ່ງປັນຂໍ້ມູນ, ແລະ ຈັດຕັ້ງພິທີກຳສຳຄັນຕ່າງໆທາງວັດທະນະທຳ. ວຽກງານເກັບກູ້ລະເບີດອອກຈາກສະຖານທີ່ທ່ອງທ່ຽວ ໄດ້ຊ່ວຍອຳນວຍຄວາມສະດວກໃຫ້ແກ່ການທ່ອງທ່ຽວ ແລະ ສະໜອງໂອກາດໃຫ້ລູກບ້ານໄດ້ມີລາຍຮັບຈາກການຂາຍເຄື່ອງຫັດຖະກຳ ຫຼື ອາຫານແກ່ນັກທ່ອງທ່ຽວ. ບາງຄົວເຮືອນຍັງໄດ້ຮັບຜົນປະໂຫຍດຈາກການລ້ຽງສັດ ໃນທີ່ດິນທີ່ໄດ້ຮັບການເກັບກູ້ ລບຕ ແລ້ວ. ວຽກງານເກັບກູ້ມີການປະກອບສ່ວນທີ່ບໍ່ຄ່ອຍຊັດເຈນປານໃດ ຕໍ່ການປັບປຸງກຳລັງການຜະລິດກະສິກຳ ແລະ ລາຍຮັບ, ຍ້ອນມີປັດໄຈອື່ນໆທີ່ມີການປະກອບສ່ວນຊັດເຈນກວ່າ. ການເສີມຂະຫຍາຍການກະສິກຳ, ໂດຍຜ່ານການນຳເອົາເຕັກນິກ ແລະ ແນວພັນພືດໃໝ່ໆມານຳໃຊ້, ໄດ້ຊ່ວຍຍົກສູງກຳລັງການຜະລິດ, ພ້ອມດຽວກັນນັ້ນຄວາມຕ້ອງຂອງການຕະຫຼາດທີ່ເພີ່ມຂຶ້ນ ແລະ ໂຮງງານປຸງແຕ່ງອາຫານ ກໍ່ເປັນອີກປັດໄຈໜຶ່ງທີ່ປະກອບສ່ວນຊ່ວຍໃຫ້ຊາວກະສິກອນ ສາມາດຂາຍຜົນປະລິດຂອງພວກເຂົາໄດ້. ເຖິງຢ່າງໃດກໍ່ຕາມ, ຊາວກະສິກອນໄດ້ລາຍງານວ່າ ພວກເຂົາຮູ້ສຶກໝັ້ນໃຈຫຼາຍຂຶ້ນ ໃນການເຮັດວຽກໃນທີ່ດິນທີ່ໄດ້ຮັບການເກັບກູ້ລະເບີດແລ້ວ, ແລະ ການເກັບກູ້ລະເບີດນັ້ນ ຍັງໄດ້ຊ່ວຍໃຫ້ຊາວກະສິກອນສາມາດຂະຫຍາຍທີ່ດິນຂອງພວກເຂົາໄດ້. ເຖິງແມ່ນວ່າລູກບ້ານບາງຄົນໄດ້ລາຍງານວ່າ ການເກັບກູ້ ລບຕ ນັ້ນສະໜອງໂອກາດ ຫຼື “ຊ່ອງທາງເປີດກວ້າງ” ໃນຫແກ່ພວກເຂົາໄດ້ລົງທຶນເພີ່ມ, ແຕ່ກໍ່ບໍ່ມີຫຼັກຖານອັນໃດ ຊີ້ໃຫ້ເຫັນວ່າມີການລົງທຶນເກີດຂຶ້ນ ຍ້ອນການເກັບກູ້ ລບຕ ໂດຍສະເພາະ, ແຕ່ແມ່ນຍ້ອນປັດໄຈອື່ນໆຫຼາຍກວ່າ. ກົນໄກການປູກຝັງ ແລະ ລົດໄຖນາ ແມ່ນໄດ້ຖືກນຳໃຊ້ຢູ່ແລ້ວ ບໍ່ວ່າຈະມີການເກັບກູ້ ລບຕ ຫຼື ບໍ່ ຫຼື ຈະມີຄວາມກັງວົນໃຈກ່ຽວກັບຄວາມປອດໄພ ຫຼື ບໍ່ກໍ່ຕາມ, ລວມໄປເຖິງບາງກິດຈະກຳທີ່ຕ້ອງໄດ້ຂຸດຂຸມເລິກກວ່າປົກກະຕິ. ການກໍ່ສ້າງ ແລະ ການບູລະນະພື້ນຖານໂຄງລ່າງທີ່ເປັນຖະໜົນ, ລະບົບ. ນ້ຳປະປາ, ຊົນລະປະທານ ແລະ ຕະຫຼາດ ໄດ້ປະກອບສ່ວນຕໍ່ການປັບປຸງ ຊີວິດການເປັນຢູ່ໂດຍລວມ ແລະ ການເຊື່ອມໂຍງກັນລະຫວ່າງ. ບ້ານຕ່າງໆ, ແລະ ການເກັບກູ້ ລບຕ ເອງກໍ່ຊ່ວຍໃຫ້ວຽກງານດັ່ງກ່າວ ມີຄວາມສະດວກ ແລະ ສາມາດດຳເນີນການໄດ້.

ເຖິງຢ່າງໃດກໍ່ຕາມ, ໃນບັນດາຂົງເຂດທີ່ມີ ລບຕ ຕົກຄ້າງຢູ່, ຄົນສ່ວນໃຫຍ່ຍັງດຳເນີນກິດຈະກຳສ່ຽງຢູ່. ປະຊາຊົນທີ່ໄດ້ຮັບການສຳພາດ ມັກເວົ້າວ່າເມື່ອວພວກເຂົາພົບເຫັນ ລບຕ ໃນດິນນາຂອງຕົນ, ພວກເຂົາກໍ່ຈະເຄື່ອນຍ້າຍລະເບີດລູກນັ້ນ ໄປວາງໄວ້ທີ່ທາງຂ້າງຂອງດິນນາ ເພື່ອໃຫ້ສາມາດສືບຕໍ່ດຳເນີນການປູກຝັງໄດ້. ນີ້ແມ່ນສິ່ງທີ່ປະຊາຊົນມັກຈະເຮັດ ເຖິງແມ່ນວ່າສຸດທ້າຍແລ້ວຈະເອີ້ນໃຫ້ທີມານ ລບຕ ມາຊ່ວຍເກັບກູ້ໃນພາຍຫຼັງກໍ່ຕາມ. ການຂາດຂໍ້ມູນ ຫຼື ຄວາມເຂົ້າໃຈກ່ຽວກັບຂັ້ນຕອນການສຳຫຼວດ ແລະ ການເກັບກູ້ ແລະ ວຽກງານການເກັບກູ້ ມີການກຳນົດບຸລິມະສິດຄືແນວໃດນັ້ນ ໄດ້ເຮັດໃຫ້ປະຊາຊົນເກີດຄວາມຫງຸດຫງິດ ແລະ ອາດເປັນອຸປະສັກກີດຂວາງ ບໍ່ໃຫ້ພວກເຂົາສາມາດວາງແຜນການນຳໃຊ້ທີ່ດິນໄດ້ດີຂຶ້ນ ແລະ ສາມາດເຂົ້າຮ່ວມຂັ້ນຕອນການເກັບກູ້ລະເບີດໄດ້ຢ່າງຫ້າວຫັນຂຶ້ນ. ອີກຫຼາຍຢ່າງທີ່ຈະຖືກປັບປຸງໃຫ້ດີຂຶ້ນ ແລະ ຜົນໄດ້ຮັບຂອງການເກັບກູ້ ລບຕ ຈະຖືກເພີ່ມທະວີໄດ້ສູງສຸດ ກໍ່ຕໍ່ເມື່ອມີການສື່ສານ ແລະ ການເຂົ້າເຖິງປະຊາຊົນໄດ້ດີຂຶ້ນ, ຂັ້ນແຂວງ ແລະ ຂັ້ນເມືອງມີການປະສານຂັ້ນຕອນວາງແຜນເຂົ້າກັນ ໂດຍສະເພາະໃນວຽກງານກຳນົດບຸລິມະສິດ, ລວມໄປເຖິງການສ້າງຄວາມເຂັ້ມແຂງ ດ້ານການເຊື່ອມໂຍງກັບອົງການພັດທະນາ ແລະ ໂຄງການໂຄສະນາວຽກງານກະສິກຳ.

ຂໍ້ແນະນຳຈາກການຄົ້ນຄວ້າຄັ້ງນີ້ ແມ່ນແນໃສ່ສະໜັບສະໜູນວຽກງານຂອງ ຄຊກລ ແລະ ອົງການ UNDP ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການ ລບຕ ແລະ ເພື່ອຊ່ວຍໃຫ້ສາມາດເພີ່ມທະວີ ຜົນຂອງການພັດທະນາທີ່ໄດ້ຮັບຈາກການເກັບກູ້ລະເບີດ ໃຫ້ໄດ້ສູງທີ່ສຸດ. ຂໍ້ແນະນຳຕ່າງໆມີເນື້ອໃນດັ່ງຕໍ່ໄປນີ້:

- ເພື່ອໃຫ້ສອດຄ່ອງກັບວຽກງານທີ່ກຳລັງດຳເນີນການຢູ່, ລະບົບການກຳນົດບຸລິມະສິດແຫ່ງຊາດ ໃຫ້ແກ່ວຽກງານເກັບກູ້ ລບຕ ທີ່ມີຄວາມຊັດເຈນ ຈະຕ້ອງຖືກພັດທະນາຂຶ້ນ ແລະ ຈັດຕັ້ງປະຕິບັດໂດຍຜູ້ດຳເນີນງານທຸກຝ່າຍ. ລະບົບດັ່ງກ່າວຈະຕ້ອງສະໜັບສະ ໜູນວຽກງານເກັບກູ້ລະເບີດ ໃນພື້ນທີ່ຢັ້ງຢືນວ່າເປັນອັນຕະລາຍ(CHA) ທີ່ຈະຊ່ວຍໃຫ້ສາມາດປະກອບສ່ວນຕໍ່ ຄາດໝາຍການຫຼຸດຜ່ອນຄວາມ

ທຸກຍາກ. ຕ້ອງມີການສື່ສານຂັ້ນຕອນການຈັດລຽງບຸລິມະສິດຢ່າງຊັດເຈນ ໃຫ້ອໍານາດການປົກຄອງບ້ານ, ເມືອງ ແລະ ແຂວງຊາບ ເພື່ອຊ່ວຍໃຫ້ພວກເຂົາສາມາດປະກອບສ່ວນ ແລະ ເຂົ້າຮ່ວມຂັ້ນຕອນການວາງແຜນເກັບກູ້ ລບຕ ໄດ້ຢ່າງຫ້າວຫັນ.

- ທົບທວນຄືນວ່າລູກບ້ານໄດ້ຮັບແຈ້ງຂ່າວກ່ຽວກັບຂັ້ນຕອນການເກັບກູ້ ແລະ ການສໍາຫຼວດຄືແນວໃດ ເພື່ອຮັບປະກັນໃຫ້ເຈົ້າຂອງດິນ ແລະ ປະຊາຊົນທີ່ດໍາເນີນການປູກຝັງໃນດິນຕອນນັ້ນ ມີຄວາມຮັບຮູ້ຢ່າງຄົບຖ້ວນ ກ່ຽວກັບປະຕິບັດການເກັບກູ້ ລບຕ ທີ່ດໍາເນີນການໃນດິນຂອງພວກເຂົາ ແລະ ຮູ້ວ່າວຽກງານດັ່ງກ່າວ ຈະສົ່ງຜົນກະທົບຕໍ່ຄວາມສາມາດໃນການເຮັດວຽກຂອງພວກເຂົາແນວໃດ ໃນທີ່ດິນຕອນດັ່ງກ່າວ. ສ້າງຄວາມເຂັ້ມແຂງໃຫ້ແກ່ຂັ້ນຕອນການມີສ່ວນຮ່ວມກັບຊຸມຊົນ ເພື່ອປັບປຸງການສື່ສານໃນບັນຫາເຫຼົ່ານີ້, ໂດຍຮັບປະກັນໃຫ້ທັງຜູ້ຊາຍ ແລະ ຜູ້ຍິງມີສ່ວນຮ່ວມ ແລະ ໄດ້ຮັບການແຈ້ງຂໍ້ມູນຄົບຖ້ວນ.
- ເພື່ອເປັນພາກສ່ວນໜຶ່ງຂອງເອກະສານ ທີ່ສະໜອງໃຫ້ແກ່ເຈົ້າຂອງດິນ ແລະ ນາຍບ້ານ, ພິຈາລະນາສະໜອງເອກະສານສັງລວມທີ່ຈະແຈ້ງທີ່ຂຽນເປັນພາສາລາວເພີ່ມເຕີມ ຕິດຄັດໄປກັບຊຸດເອກະສານທີ່ສົ່ງໃຫ້ແຕ່ລະຄົວເຮືອນ ເພື່ອອະທິບາຍຂໍ້ມູນສໍາຄັນ ທີ່ກ່ຽວຂ້ອງກັບແຕ່ລະວຽກງານເກັບກູ້. ຮັບປະກັນໃຫ້ຕ້ອງສະໜອງເອກະສານດັ່ງກ່າວ ໃຫ້ທຸກຄົວເຮືອນທີ່ມີດິນໄດ້ຮັບການເກັບກູ້ແລ້ວ.
- ພິຈາລະນາໂອ້ລົມບັນຫາກ່ຽວກັບຄວາມເລິກຂອງການເກັບກູ້ ລວມໄປເຖິງໃນບາງກໍລະນີວ່າຄວນເກັບກູ້ໃຫ້ເລິກກວ່ານີ້ ຫຼື ບໍ່ ເພື່ອຈຸດປະສົງຂອງການນໍາໃຊ້ທີ່ດິນອັນສະເພາະ, ເຊັ່ນ: ເພື່ອຂຸດໜອງ ແລະ ຕັ້ງເສົາຮົ້ວ, ແລະ ຫຼືຕື່ມຂຶ້ນເພື່ອຊ່ວຍໃຫ້ປະຊາຊົນໄດ້ນໍາໃຊ້ດິນໄວຂຶ້ນ ສໍາລັບການຜະລິດຂອງພວກເຂົາ.
- ສະໜັບສະໜູນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຂັ້ນຕອນການວາງແຜນຂອງຂັ້ນເມືອງ ແລະ ຂັ້ນແຂວງ ໃຫ້ມີການລວມເອົາເງື່ອນໄຂການເກັບກູ້ ລບຕ ແລະ ບັນຫາດ້ານງົບປະມານເຂົ້າໃນຂັ້ນຕອນການວາງແຜນແຕ່ຫົວທີ, ແລະ ເພື່ອຮັບປະກັນໃຫ້ວຽກງານການພັດທະນາ ສາມາດນໍາໄປລວມເຂົ້າໄວ້ໃນແຜນວຽກການເກັບກູ້ປະຈໍາປີໄດ້, ຫຼາຍກວ່າຈະຕື່ມເຂົ້າເປັນວຽກງານສຸກເສີນໃນພາຍຫຼັງ. ພິຈາລະນາວິທີທາງໃນການເພີ່ມທະວີ ຈໍານວນວຽກງານການພັດທະນາ ທີ່ຜູ້ດໍາເນີນງານສາມາດຈັດຕັ້ງປະຕິບັດໄດ້ໃນແຕ່ລະປີ, ໂດຍຮັບປະກັນໃຫ້ວຽກງານດັ່ງກ່າວ ແມ່ນວຽກງານການພັດທະນາເພື່ອມະນຸດສະທໍາ ແລະ ຖືກດໍາເນີນການໃນບັນດາບານ ແລະ ເມືອງທຸກຍາກ.
- ໃນບັນດາແຂວງ ແລະ ເມືອງທີ່ມີ ລບຕ ຕົກຄ້າງຢູ່ ທີ່ຖືກກໍານົດໃຫ້ເປັນ CHA, ຄຊກລ ຈະຕ້ອງໄດ້ສະໜັບສະໜູນ ແລະ ປະສານງານກັບອົງການພັດທະນາຕ່າງໆ, ຫຼື ຊຸກຍູ້ໃຫ້ຜູ້ດໍາເນີນງານປະຕິບັດວຽກງານດັ່ງກ່າວແທນ, ເພື່ອຍົກສູງໂອກາດໃຫ້ແກ່ໂຄງການເກັບກູ້ ລບຕ ແລະ ໂຄງການພັດທະນາແບບຮອບດ້ານ. ສະໜັບສະໜູນໃຫ້ອົງການ ລບຕ ເຮັດວຽກຮ່ວມກັບໜ່ວຍງານບໍລິການກະສິກໍາຂັ້ນເມືອງ ແລະ ຫົວໜ່ວຍບໍລິການອື່ນໆ ທີ່ສາມາດຊ່ວຍສະໜັບສະໜູນ ຂະບວນການປັບປຸງການດໍາລົງຊີວິດ ໃຫ້ແກ່ປະຊາຊົນໃນຂົງເຂດທີ່ຈະມີການເກັບກູ້ ລບຕ. ພິຈາລະນາ ແລະ ໂອ້ລົມໂອກາດອື່ນໆ ໃນການຊຸກຍູ້ ແລະ ປັບປຸງສາຍພົວພັນຮ່ວມມືລະຫວ່າງຜູ້ດໍາເນີນວຽກງານເກັບກູ້ ລບຕ ແລະ ຄູ່ຮ່ວມພັດທະນາໃຫ້ດີຂຶ້ນ.
- ສະໜັບສະໜູນຜູ້ດໍາເນີນວຽກງານສຶກສາອົບຮົມດ້ານຄວາມສ່ຽງໄພຈາກ ລບຕ ເພື່ອຕອບໂຕ້ຕໍ່ການກະທໍາທີ່ເປັນຄວາມສ່ຽງຂອງປະຊາຊົນ ໃນການເຄື່ອນຍ້າຍ ລບຕ ໃນເວລາທີ່ພວກເຂົາພົບເຫັນ ເພື່ອໃຫ້ສາມາດສືບຕໍ່ດໍາເນີນການປູກຝັງໄດ້, ແລະ ດັດປັບຂໍ້ຄວາມຕ່າງໆເພື່ອສະທ້ອນໃຫ້ເຫັນຄວາມປ່ຽນແປງດ້ານການປູກຝັງ, ລວມທັງການນໍາໃຊ້ລົດໄຖ.